ພຣະຣາຊອານາຈັກລາວ

# ໄວຍາກອນລາວ

ສບັບຣາຊບັນດິຕສະພາລາວ

UNHCR

1984

# ໄວຍາກອນລາວ

## ພາກ ໑

# ອັກຂະວິທີ




ສັບພຣຸທັມດິກສະພາລາວ

SOU PHIN. INTHIRAT

# ສາລະບານ


ເລື່ອງ | ໜ້າ

ບົດທີ ໑

ອັກສອນ-ໝວດທີ ໑ ພະຍັນຊະນະ .......... ໑
ພະຍັນຊະນະຈັດເປັນໝູ່ .......... ໒
ໝວດທີ ໒ ສະຫຼະ .......... ໔

ບົດທີ ໒

ພະຍາງ .......... ໔
ອົງປະກອບພະຍາງ .......... ໗
ພະຍັນຊະນະຕົ້ນພະຍາງ - ແມ່ ອະ - ອາ .......... ໗
ພະຍັນຊະນະຕົ້ນພະຍາງຕົວດຽວ .......... ໘
ພະຍັນຊະນະຕົ້ນພະຍາງສອງຕົວ .......... ໙
ພະຍັນຊະນະປະສົມ .......... ໙
ພະຍັນຊະນະຄວບ .......... ໑໐
ພະຍັນຊະນະຈູງ .......... ໑໐
ແມ່ສະກົດ .......... ໑໒

ບົດທີ ໓

ວັນນະຍຸດ .......... ໒໒
ກົດລະບຽບໃນການໃຊ້ວັນນະຍຸດ .......... ໒໓
ພະຍາງຕາຍ .......... ໒໓
ພະຍາງເປັນ .......... ໒໔
ບູດມີເສດ .......... ໒໕
ຟອງຄຳ ແລະ ຢາຍຄຳ .......... ໓໐

ຄົນຊາດດຽວກັນ ທີ່ໂຮມກັນຢູ່ໃນປະເທດນຶ່ງ ຕ້ອງມີພາສາເວົ້າ ແລະ ພາສາຂຽນ ໃຫ້ເຂົ້າໃຈກັນ ຈຶ່ງຈະນັບວ່າເປັນຄົນຊາດນັ້ນ ຫລື ເປັນຜູ້ຮູ້ພາສາຂອງຊົນຊາດນັ້ນໄດ້.

ພາສາໃດ ພາສານຶ່ງ ກໍຕ້ອງມີໄວຍາກອນ ເພື່ອໃຫ້ທຸກຄົນເວົ້າ ແລະ ຂຽນພາສານັ້ນຕາມກົດຣະບຽບດຽວກັນ.

ໄວຍາກອນແບ່ງອອກເປັນ ໔ ພາກ ຄື:

ພາກທີ ໑.- ອັກຂະຣະວິທີ ແມ່ນກົດຣະບຽບກ່ຽວກັບຕົວໜັງສື ເພື່ອຂຽນ ແລະ ອ່ານໃຫ້ຖືກຕ້ອງ ຕາມສຽງອັກຂະຣະ (ອັກສອນ).

ພາກທີ ໒.- ວະຈີວິພາກ ແມ່ນກົດຣະບຽບການແບ່ງຄຳເວົ້າເປັນສ່ວນ ຄື ຄຳນາມ ຄຳກິຣິຍາ ຄຳວິເສດ ດັ່ງນີ້ເປັນຕົ້ນ.

ພາກທີ ໓.- ວາກຍະສັມພັນ ແມ່ນກົດຣະບຽບເອົາຄຳຕ່າງໆ ປະກອບເຂົ້າກັນເປັນປະໂຍກ.

ພາກ ໔.- ສັນທະລັກສນະ ແມ່ນກົດຣະບຽບການແຕ່ງ ກາພ ກອນ ໂຄງ ສັນ.

ໄວຍາກອນແຕ່ລະພາກ ພຽງແຕ່ບັນຍັດ ກົດຣະບຽບສຳລັບແຕ່ລະພາກເທົ່ານັ້ນ ບໍ່ແມ່ນແບບຮຽນສຳລັບນັກຮຽນ ຊັ້ນໃດ ຊັ້ນນຶ່ງ.

ແມ່ນຄູຜູ້ຮູ້ ແລະ ຊຳນານວິທີສອນ ໃຫ້ເໝາະສົມກັບຄວາມຮູ້

ຂອງນັກຮຽນແຕ່ລະຊັ້ນ ໂດຍຢູ່ໃນຫລັກໄວຍາກອນດັ່ງກ່າວມາແລ້ວ.

ຜູ້ໃດຫາກປະດິດຄິດແຕ່ງແບບຮຽນອັນເຫມາະສົມ ສຳລັບນັກຮຽນແຕ່ລະຊັ້ນ ໃນຂອບເຂດໄວຍາກອນແລ້ວ ກໍເປັນອັນດີ ສຳລັບການສຶກສາ ແລະ ຣາຊບັນດິດສະພາ ຂໍສົ່ງເສີມອະນຸໂມທນານຳດ້ວຍ,

## ອັກຂຣະວິທີ

ອັກຂຣະວິທີ ແມ່ນກົດຣະບຽບບັນຍັດທີ່ໃຊ້ "ອັກຂຣະ" ຊຶ່ງແມ່ນຄຳບາລີ, ຫລື ອັກສອນເຊິ່ງແມ່ນຄຳ ສັນສະກິດ ຊຶ່ງແມ່ນຄຳນູນ.

ອັກຂຣະ ຫລື ອັກສອນ ຫລື ຕົວຫນັງສື ແມ່ນເຄື່ອງຫມາຍສົມມຸດໃຊ້ຂຽນພາສາເວົ້າຢ່າງຫມົດບໍ່ເປັນ.

ຫນັງສືລາວໃຊ້ຂຽນຄຳພາສາອື່ນ ຊຶ່ງມາເປັນພາສາເວົ້າໃນພາສາລາວແລ້ວນັ້ນກໍໄດ້ບໍ່ຂັດຂ້ອງ.

# ບົດທີ ໑ ອັກສອນ

ອັກສອນລາວມີ ໓ ໝວດ ຄື:

໑.- ພຍັນຊນະ

໒.- ສຣະ

໓.- ວັນນະຍຸດ

ໝາຍເຫດ: ຖ້າກ່າວເຖິງເຄື່ອງໝາຍສົມມຸດ ໃຫ້ໄດ້ຄົບຖ້ວນ ກໍຕ້ອງ ນັບເອົາ ເປັນໝວດທີ່ໄວ້ໃນອັກສອນລາວຕື່ມອີກ ເລກມີ ໑໐ ຮູບ ດັ່ງນີ້:

| | | | | | | | | | |
|---|---|---|---|---|---|---|---|---|---|
| ໑ | ໒ | ໓ | ໔ | ໕ | ໖ | ໗ | ໘ | ໙ | ໐ |
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 0 |

ການໃຊ້ເລກນິວຕິສເໝາະ ຈຶ່ງບໍ່ກ່າວເຖິງຢູ່ໃນອັກຂຣະວິທີ.

## ໝວດທີ 1 ພຍັນຊນະ

ພຍັນຊນະລາວມີ ໒໗ ຕົວລຽງລຳດັບຕາມປະເພນີດັ່ງນີ້:

| | | | | | | | | |
|---|---|---|---|---|---|---|---|---|
| ກ | ຂ | ຄ | ງ | ຈ | ສ | ຊ | ຍ | ດ |
| ຕ | ຖ | ທ | ນ | ບ | ປ | ຜ | ຝ | ພ |
| ຟ | ມ | ຢ | ຣ | ລ | ວ | ຫ | ອ | ຮ |

ຕົວເປື້ອງ: ຕົວເປື້ອງບໍ່ໃຊ້ໃນການພິມ ແຕ່ຈະໃຊ້ໃນການຂຽນກໍໄດ້.

ວິທີອ່ານ ພຍັນຊນະ ແມ່ນເຄື່ອງໝາຍໝວດນຶ່ງໃນ ພາສາລາວ ສົມມຸດກັບອ່ານເປັນຄຳດັ່ງປະກອບດ້ວຍ ສຣະ ໍ ຄື:

ກໍ ຂໍ ຄໍ ງໍ ຈໍ ສໍ

ວິທີຂຽນ ພຍັນຊນະທຸກຕົວ ມີຫົວ ຕົນຕົວ ແລະ ບາງຕົວ ກໍມີຫາງ ເມື່ອຂຽນຕ້ອງຕັ້ງຕົ້ນຫົວກ່ອນ ບາງຕົວ ຫົວຢູ່ເທິງ ຕົວຢ່າງ:

ງ ນ ໝ ບ......

ບາງຕົວ ຫົວຢູ່ລຸ່ມ ຕົວຢ່າງ: ກ ດ ຕ ຖ........

ບາງຕົວ ຫົວຢູ່ແຖວ ຕົວຢ່າງ: ຈ.....

ບາງຕົວ ຫາງກາຍເທິງເຄິ່ງຕົວ ຕົວຢ່າງ: ປ ຝ .....

ບາງຕົວຫາງກາຍແຖວລົງລຸ່ມ ຕົວຢ່າງ: ຖ ຊ.......

## <u>ພຍັນຊນະ ຈັດເປັນໝູ່</u>

ພຍັນຊນະ ຈັດເປັນ ໓ ໝູ່ ດັ່ງນີ້:

ໝູ່ ໑- ອັກສອນກາງມີ ໘ ຕົວ

ກ ຈ ດ ຕ ບ ປ ຢ ອ

| ໝູ່ ໔- ອັກສອນສູງ ມີ ໖ ຕົວ | ໝູ່ ໕- ອັກສອນຕ່ຳ ມີ ໑໓ ຕົວ | |
|---|---|---|
| ຂ | ຄ | ອັກສອນຕ່ຳຄູ່ |
| ສ | ຊ | |
| ຖ | ທ | |
| ຜ | ພ | |
| ຝ | ຟ | |
| ຫ | ຮ | |
| | ງ | ອັກສອນຕ່ຳຄິກ |
| | ຍ | |
| | ນ | |
| | ມ | |
| | ຣ | |
| | ລ | |
| | ວ | |

<u>ໝາຍເຫດ:</u> ໑- ການຈັດສັບຈະເປັນອັກສອນກາງ ສູງ ຕ່ຳ ນັ້ນໄດ້ໝາຍ ຄວາມວ່າ ອັກສອນເຫຼົ່ານັ້ນມີສຽງ ກາງ ສູງ ຕ່ຳ ຫຼື ມີສຽງອອກຈາກ ຄໍ ລີ້ນ ແຂ້ວ ແຕ່ຢ່າງໃດ ເຊັ່ນ:

ການ ນານ ມີສຽງບໍ່ແຕກຕ່າງກັນ

ກາດ ສາດ ມີສຽງບໍ່ແຕກຕ່າງກັນ

ຜູ້ຊ່ຽວຊານໃນການອະທິບາຍສຽງ ຈະໄດ້ບອກໃຫ້ຊາບ ແລະ ເພື່ອຜົນປະໂຍດອັນໃດ.

໒- ການຈັດພຍັນຊນະເປັນ ໓ ໝູ່ ເພື່ອຈະໄດ້ເຂົ້າໃຈການປະກອບອັກສອນນຳ ແລະ ການໃຊ້ວັນນະຍຸດ.

໓- ອັກສອນຕ່ຳຄູ່ ແມ່ນອັກສອນຕ່ຳຊຶ່ງມີຄູ່ຢູ່ໃນໝູ່ອັກສອນສູງ.

ອັກສອນຕ່ຳຄີກ ແມ່ນອັກສອນຊຶ່ງບໍ່ມີຄູ່ໃນໝູ່ອັກສອນສູງ.

## ໝວດທີ 2 ສຣະ

ຮູບສົມມຸດກັນວ່າ " ສຣະ " ນັ້ນມີ ໒ຝັກຄື: ສຽງສັ້ນ (ຣັສສຣະ)

ສຽງຍາວ (ທີຄະສຣະ)

| ສຽງສັ້ນ | | ສຽງຍາວ | |
|---|---|---|---|
| ×ະ | ເ×າະ | ×າ | ×ໍ |
| ×ິ | ເ×ິ | ×ີ | ເ×ີ |
| ×ຶ | ເ×ັຽະ | ×ື | ເ×ັຽ |
| ×ຸ | ×ົວະ | ×ູ | ×ົວ |
| ເ×ະ | ເ×ຶອ | ເ× | ເ×ືອ |
| ແ×ະ | | ແ× | |
| ໂ×ະ | | ໂ× | |

ໝາຍເຫດ: ໑. ສຣະ ເປັນພຽງແຕ່ຮູບສົມມຸດໃຊ້ກັນ ອອກສຽງບໍ່ໄດ້ ແຕ່ອ່ານວ່າ ສົມມຸດວ່າມີພຍັນຊນະ " ອ " ເປັນພຍັນຊນະຕົ້ນພຍາງ ຂຽນແທນ " x " ແລ້ວຈຶ່ງອ່ານວ່າ:

ສຣະ ອະ ອາ ອິ ອີ...ເອຶອ ເອືອ

໒- ສ່ວນສຣະທີ່ເອີ້ນວ່າ ສຣະພິເສດ ໄx ໃx xຳ ເxົາ ນັ້ນແມ່ນສຽງ xະ ໃນແມ່ສະກົດ ຈຶ່ງຈະກ່າວໄວ້ໃນແມ່ສະກົດຕໍ່ໄປ.

# ບົດທີ໒ ພຍາງ

ວັນນະຍຸດ ແມ່ນອັກສອນໝວດນຶ່ງ ຈຶ່ງເປັນເຄື່ອງໝາຍ ສຳຣັບປ່ຽນສຽງພຍາງໄປຕາມຣະບຽບຂອງພຍັນຊນະ ຕົ້ນ ກາງ ສູງ ຕ່ຳ ພຍາງຕາຍ ພຍາງເປັນ ສຣະສັ້ນ ຫລື ສຣະຍາວ.

ວັນນະຍຸດ ຈຶ່ງມັກເອີ້ນກັນວ່າໄມ້ ມີ ໔ ຮູບຄື:

x່ x້ x໊ x໋

ເອີ້ນວ່າໄມ້ ເອກ ໂທ ຕຣີ ຈັຕວາ ຄືໄມ້ ນຶ່ງ ສອງ ສາມ ສີ່

ໝາຍເຫດ: ໑. ວັນນະຍຸດ ຫລື ໄມ້ຕ້ອງຂຽນຢູ່ເທິງພຍັນຊນະຕົ້ນພຍາງ ສເໝີ ຕົວຢ່າງ: ບ່ອນພ້ານ ບ້ານ

໒. ຖ້າພຍັນຊນະຕົ້ນພຍາງ ຫາກມີຮູບສຣະຢູ່ເທິງ ວັນນະຍຸດ ຫລື ໄມ້ ກໍຕ້ອງຂຽນໃສ່ເທິງສຣະ ຫລື ແປະຂ້າງຂວາສຣະເທິງນັ້ນ.

ຕົວຢ່າງ: ສົ່ນ ສົ້ນ ນຶ່ງ ຕ່ຳ ບຶ່ງ

໓.- ຖ້າພຍັນຊນະຕົ້ນພຍາງ ຫາກແມ່ນອັກສອນນຳ ວັນນະຍຸດ ຫລື ໄມ້ ຕ້ອງໃສ່ເທິງພຍັນຊນະຕົວທີສອງສເມີ ຕົວຢ່າງ:

ສວ່າງ ຕຳແຫນ່ງ ຄົ້ນຄວ້າ.

ພຍາງ ແມ່ນສຽງນຶ່ງໃນຄຳ ຈະມີຄວາມຫມາຍ ຫລື ບໍ່ມີກໍ່ຕາມ ອາດມີພຍາງດຽວ ຫລື ຫລາຍພຍາງ ເຊັ່ນ:

| | | |
|---|---|---|
| ບ້ານ | ແມ່ນຄຳຊຶ່ງມີ | ພຍາງດຽວ |
| ກະຕ່າຍ | ແມ່ນຄຳຊຶ່ງມີ | ສອງພຍາງ |
| ກະດັນງາ | ແມ່ນຄຳຊຶ່ງມີ | ສາມພຍາງ |
| ສຸຂາພິບານ | ແມ່ນຄຳຊຶ່ງມີ | ສີ່ພຍາງ |

<u>ຫມາຍເຫດ</u>: ຄຳໃຊ້ໃນກາບກອນ ຊຶ່ງພຍັນຊນະຕົ້ນພຍາງແມ່ນ ອັກສອນຊູງ ຫລື ພຍັນຊນະສະກົດ ແມ່ນຕົວສະກົດມິເສດ ນັ້ນຈະເປັນພຍາງດຽວ ຫລື ສອງພຍາງ ກໍໄດ້ສຸດແລ້ວແຕ່ກົດຣະບຽບຂອງກາບກອນ

ຕົວຢ່າງ: ພຍາ ມີສອງພຍາງ (ພະຍາ)

ຣັຖບານ ມີສາມພຍາງ (ຣັດຖະບານ)

ພ (ພະ) ຖ (ຖະ) ແມ່ນພຍາງມິເສດ.

## ວິທີປະກອບ ພຍາງ

* ພຍາງນຶ່ງ ອາດປະກອບໄດ້ດ້ວຍ *

໑.- ພຍັນຊນະ ແລະ ສຣະ ເອີ້ນວ່າພຍາງໃນແມ່ ອະ-ອາ ຕົວຢ່າງ:

ກະ ກາ ກິ ກີ..........

໒.- ພຍັນຊນະ ສຣະ ແລະ ພຍັນຊນະສະກົດເອີ້ນວ່າພຍາງໃນແມ່ ສະກົດ ຕົວຢ່າງ: ກັກ ກາກ ກິກ ກີກ.......

໓.- ພຍາງໃນແມ່ ອະ-ອາ ແລະ ແມ່ສະກົດປະກອບກັບວັນນະຍຸດ ຕົວຢ່າງ: ກ້າ ກີ່ ກ້າງ ຂ່າງ

### ພຍັນຊນະ ຕົ້ນພຍາງ

ພຍັນຊນະຕົ້ນພຍາງ ໝາຍເຖິງພຍັນຊນະຊຶ່ງຂຽນໃສ່ບ່ອນ ໝາຍ "x" (ໄຂວ່າງ) ໃນຮູບສຣະແລ້ວອ່ານອອກເປັນພຍາງ.

໑.- ພຍັນຊນະຕົ້ນພຍາງຕົວດຽວ ຄືພຍັນຊນະ ໒໗ ຕົວ ເປັນໄດ້ທຸກຕົວ

໒.- ພຍັນຊນະຕົ້ນພຍາງສອງຕົວເອີ້ນວ່າ ພຍັນຊນະນຳ.

### ແມ່ ອະ - ອາ

ແມ່ ອະ - ອາ ແມ່ນພຍາງທີ່ປະກອບດ້ວຍ ພຍັນຊນະຕົ້ນ ແລະ ສຣະ ໑໒ ຮູບ.

ພຍັນຊນະຕົ້ນ ປະກອບກັບ ສຣະພິເສດ ໄx ໃx xຳ ເxົາ ກໍ່ນັບເປັນພຍາງໃນແມ່ ອະ - ອາ ດ້ວຍວ່າສຣະພິເສດມີຮູບສະເພາະ

ແຕ່ຄວາມຈິງແລ້ວສຣະນິເສດແມ່ນ ສຣະ ×ະ ໃນແມ່ສະກົດ
ດັ່ງຈະເຫັນໄດ້ຕໍ່ໄປນີ້.

## ໑. <u>ພຍັນຊນະຕົ້ນພຍາງຕົວດຽວ</u>

ຕົວຢ່າງ: " ກ " ເປັນພຍັນຊນະຕົ້ນພຍາງໃນແມ່ ອະ - ອາ ດັ່ງນີ້:

| | | | |
|---|---|---|---|
| ×ະ | ກະ | ×າ | ກາ |
| ×ິ | ກິ | ×ີ | ກີ |
| ×ຶ | ກຶ | ×ື | ກື |
| ×ຸ | ກຸ | ×ູ | ກູ |
| ເ×ະ | ເກະ | ເ× | ເກ |
| ແ×ະ | ແກະ | ແ× | ແກ |
| ໂ×ະ | ໂກະ | ໂ× | ໂກ |
| ເ×າະ | ເກາະ | ×ໍ | ກໍ |
| ເ×ິ | ເກິ | ເ×ີ | ເກີ |
| ເ×ັຍະ | ເກັຍະ | ເ×ັຽ | ເກັຽ |
| ×ົວະ | ກົວະ | ×ົວ | ກົວ |
| ເ×ຶອ | ເກຶອ | ເ×ືອ | ເກືອ |

ໄ× ໃ× ×ໍາ ເ×ົາ

ໄກ ໃກ ກໍາ ເກົາ

## ໒. <u>ພຍັນຊນະຕົ້ນພຍາງສອງຕົວ ເອີ້ນວ່າ ພຍັນຊນະນຳ</u>

ພຍັນຊນະນຳ ແມ່ນພຍັນຊນະຕົ້ນພຍາງສອງຕົວປະກອບກັບສຣະດຽວ ໂດຍບໍ່ມີສຣະ ×ະ ຂັນ ແຕ່ສຣະອື່ນຂັນໄດ້ເພື່ອບໍ່ໃຫ້ລົງໃນການອ່ານ. ຕົວຢ່າງທີສອງຂອງພຍັນຊນະນຳ ມີແຕ່ອັກສອນຕ່ຳຄີກ ໗ ຕົວ ເຫົ່ານັ້ນເປັນໄດ້ຄື: ງ ຍ ນ ມ ຣ ລ ວ

ສຣະໃນພຍາງ ປະກອບກັບຕົວທີສອງຂອງພຍັນຊນະນຳສເມີ

ພຍັນຊນະນຳຈັດເປັນ ສາມພວກຄື:

໑) ພຍັນຊນະປະສົມ

໒) ພຍັນຊນະຄວບ

໓) ພຍັນຊນະຈູງ

<u>ພວກທີນຶ່ງ ພຍັນຊນະປະສົມ.</u>

ຕົວຫນ້າຂອງພຍັນຊນະປະສົມ ແມ່ນແຕ່ (ຫ) ແຕ່ ຫ ບໍ່ອອກສຽງ ຕົວຫລັງອອກສຽງເປັນອັກສອນສູງດັ່ງນີ້:

ຂຽນຕາມບູຮານ

| ໃຊ້ຮວມກັນໄປກໍໄດ້ | ຂຽນປັດຈຸບັນ | ອັກສອນຕ່ຳຄີກ |
|---|---|---|
| ຫງ | ຫງ | ງ |
| ຫຍ | ຫຍ | ຍ |
| ໜ | ຫນ | ນ |
| ໝ | ຫມ | ມ |

| | | |
|---|---|---|
| | ຫຣ | ຣ |
| | ຫລ | ລ |
| | ຫວ | ວ |

ພວກທີ ໖ ພຍັນຊນະຄວບ.

ພຍັນຊນະຄວບ ແມ່ນພຍັນຊນະຕົ້ນພຍາງສອງຕົວ ອອກສຽງພ້ອມກັນ ແຕ່ສ່ວນຫລາຍອອກສຽງແຕ່ຕົວຫນ້າເທົ່ານັ້ນ.

ຕົວທີສອງຂອງພຍັນຊນະຄວບແມ່ນແຕ່ ຣ ລ ວ ຫົ້ນ

ຕົວຢ່າງ: ພຣະຄຣູ ປລັງ ບລັງຊາ ກວາງ

ພວກທີ ໗ ພຍັນຊນະຈູງ

ພຍັນຊນະທຸກຕົວນອກຈາກ " ຫ " ແລະ ອັກສອນຕ່ຳຄິກ ອາດເປັນຕົວຫນາໃນພຍັນຊນະຈູງ ແລະ ຄວບໄດ້.

ຕົວຫນ້າອັກສອນຈູງອອກສຽງຄືກັບມີ ສຣະ ອະ ປະກອບນຳແຕ່ສຣະ ອະ ບໍ່ຂຽນຮູບ.

ຕົວທີສອງ ແມ່ນອັກສອນຕ່ຳຄິກ ໗ ຕົວຄື:

ງ ຍ ນ ມ ຣ ລ ວ ເທົ່ານັ້ນເປັນໄດ້ ແລະ ອອກສຽງກັບສຣະຂອງພຍາງເປັນ ກາງ ສູງ ຕ່ຳ ໄປຕາມຕົວນຳ ຕົວຢ່າງ: ສນາມ (ສະຫນາມ) ຕລາງ (ຕະລາງ) ຕລາດ (ຕະຫລາດ) ຊນະ (ຊະນະ)

ຕົວຢ່າງພຍາງໃນແມ່ ອະ -ອາ ຊຶ່ງພຍັນຊນະຕົ້ນແມ່ນພຍັນຊນະນຳ

| | ປະສົມ | ຄວບ | ຈູງ | | ປະສົມ | ຄວບ | ຈູງ |
|---|---|---|---|---|---|---|---|
| ×ະ | ຫງະ | ກວະ | ສນະ | ×າ | ຫງາ | ກວາ | ສນາ |
| ×ິ | ຫງິ | ກວິ | ສນິ | ×ີ | ຫງີ | ກວີ | ສນີ |
| ×ຶ | ຫງຶ | ກວຶ | ສນຶ | ×ື | ຫງື | ກວື | ສນື |
| ×ຸ | ຫງຸ | ກວຸ | ສນຸ | ×ູ | ຫງູ | ກວູ | ສນູ |
| ເ×ະ | ເຫງະ | ກເວະ | ສເນະ | ເ× | ເຫງ | ກເວ | ສເນ |
| ແ×ະ | ແຫງະ | ກແວະ | ສແນະ | ແ× | ແຫງ | ກແວ | ສແນ |
| ໂ×ະ | ໂຫງະ | ກໂວະ | ສໂນະ | ໂ× | ໂຫງ | ກໂວ | ສໂນ |
| ເ×າະ | ເຫງາະ | ເກວາະ | ສເນາະ | ×ໍ | ຫງໍ | ກວໍ | ສນໍ |
| ເ×ິ | ເຫງິ | ກເວິ | ສເນິ | ເ×ີ | ເຫງີ | ກເວີ | ສເນີ |
| ເ×ັຍະ | ເຫງັຍະ | ເກວັຍະ | ສເນັຍະ | ເ×ັຍ | ເຫງັຍ | ເກວັຍ | ສເນັຍ |
| ×ົວະ | ຫງົວະ | ກວົວະ | ສນົວະ | ×ົວ | ຫງົວ | ກວົວ | ສນົວ |
| ເ×ຶອ | ເຫງຶອ | ເກວຶອ | ສເນຶອ | ເ×ືອ | ເຫງືອ | ເກວືອ | ສເນືອ |
| | ໄ× | | ໄຫງ | | ໄກວ | | ສໄນ |
| | ໃ× | | ໃຫງ | | ໃກວ | | ສໃນ |
| | ×ຳ | | ຫງຳ | | ກວຳ | | ສນຳ |
| | ເ×ົາ | | ເຫງົາ | | ເກວົາ | | ສເນົາ |

<u>ຫມາຍເຫດ</u>: ຂຽນ ແລະ ອ່ານ ພຍັນຊນະຕົ້ນ ປະສົມ ດັ່ງນີ້:

ຂຽນ

ເຫວະ ເຫວ ແຫວະ ແຫວ ໂຫວະ ໂຫວ

ເຫວະ ເຫວ ແຫວະ ແຫວ ໂຫວະ ໂຫວ

ຫເວະ ຫເວ ຫແວະ ຫແວ ຫໂວະ ຫໂວ

ອ່ານ

ຫວ + ເ×ະ ຫວ + ເ× ຫວ + ແ×ະ ຫວ + ແ×

ຫວ + ໂ×ະ ຫວ + ໂ×

## ແມ່ສະກົດ

ຫຼກພຍາງໃນແມ່ ອະ - ອາ ຈຶ່ງປະກອບດ້ວຍສະຣະ ໑໒ ຄູ່ ນັບຕົ້ນພຍັນຊນະໃສ່ທ້າຍໄດ້ ພຍັນຊນະຢູ່ທ້າຍພຍາງນີ້ ມີຫນ້າທີ່ເປັນ ພຍັນຊນະສະກົດ.

ພຍັນຊນະສະກົດມີ ໘ ຕົວຄື: ກ ງ ຍ ດ ນ ມ ວ ບ ພຍາງຈຶ່ງມີພຍັນຊນະສະກົດ ຈຶ່ງໄດ້ຊື່ວ່າແມ່ທັງ ໘.

## ສະກົດພິເສດ.

ຢູ່ກາງຄຳຈຶ່ງມີຫລາຍພຍາງ ໃຊ້ຕົວສະກົດພິເສດແທນຕົວສະກົດ ທັມມະດາໄດ້.

ສະກົດພິເສດແທນ ສະກົດ ກ ໄດ້ມີ ຂ ຄ

ສະກົດພິເສດແທນ ສະກົດ ດ ໄດ້ມີ ຈ ສ ຊ ຕ ຖ ທ

ສະກົດພິເສດແທນ ສະກົດ ນ ໄດ້ມີ ຣ ລ

ສະກົດພິເສດແທນ ສະກົດ ບ ໄດ້ມີ ປ ພ ຟ

ສະກົດພິເສດອອກສຽງທັມມະດາສຳລັບພຍາງ ແລະ ອອກສຽງດັ່ງປະກອບ ສຣະ ×ະ ຈຶ່ງບໍ່ມີຣູບເປັນພຍາງພິເສດ ຕົວຢ່າງ:

| | | |
|---|---|---|
| ສຸຂິທຍາ | ອ່ານ | ສຸກຂະວິດທະຍາ |
| ຣາຊການ | -"- | ຣາດຊະການ |

<u>ໝາຍເຫດ</u>: ໑. ໃນກົດຣະບຽບການແຕ່ງກາບກອນ ຈະນັບສະກົດພິເສດ ທີ່ອອກສຽງສຣະ ×ະ ຕື່ມເປັນພຍາງນຶ່ງອີກບໍ່ໄດ້.

໒. ພຍາງທີ່ປະກອບດ້ວຍສຣະພິເສດ ໄ× ໃ× ×ຳ ເ×ົາ ນັ້ນ ຈະຕື່ມພຍັນຊນະສະກົດໃສ່ທ້າຍອີກບໍ່ໄດ້.

໓) ໃຫ້ຣະວັງການວາງສຣະເທິງ ແລະ ສຣະລຸ່ມ ຖ້າຜິດບ່ອນ ກໍເປັນຄຳອື່ນໄປ ເຊັ່ນ:

ກົວກ ແມ່ນ ກ ສຣະ ×ົວ (×ົວະ) ສະກົດ ກ

ກວັກ ແມ່ນ ກວ ສຣະ ×ັ (×ະ) ສະກົດ ກ

## ໔.- <u>ແມ່ ອັງ = ງ ສະກົດ</u>

| ສຳລັບສຽງສັ້ນ | ສຳລັບສຽງຍາວ |
|---|---|
| ×ັງ | ×າງ |
| ×ິງ | ×ີງ |

| | |
|---|---|
| ×ໍງ | ×ໍງ |
| ×ຸງ | ×ຸງ |
| ເ×ັງ | |
| | ເ×ງ |
| ແ×ັງ | ແ×ງ |
| ×ິງ | ໂ×ງ |
| ×ອັງ | ×ອງ |
| ເ×ິງ | ເ×ິງ |
| ×ັຽງ | ×ຽງ |
| ×ັວງ | ×ວງ |
| ເ×ືອງ | ເ×ືອງ |

ໝາຍເຫດ: ● ພຍັນຊນະ ງ ແມ່ນອັກສອນຕ່ຳຄິກ ໃຊ້ເປັນຕົວທີສອງ ຂອງພຍັນຊນະນຳ ທັງໃຊ້ເປັນພຍັນຊນະສະກົດໃນແມ່ ອັງ ອີກດ້ວຍ.

໔) ໃຫ້ຣະວັງການຂຽນ ສຣະໃນພຍາງ ຖ້າບໍ່ແມ່ນບ່ອນກໍອ່ານເປັນ ຢ່າງອື່ນໄດ້ ຕົວຢ່າງ:

ເຫິງ ແມ່ນພຍັນຊນະຕົ້ນ ຫ ສຣະ ເ×ິ ສະກົດ ງ

ເສິງ ແມ່ນພຍັນຊນະຕົ້ນ ສ ສຣະ ເ×ິ ສະກົດ ງ

ສເງິ ແມ່ນພຍັນຊນະຕົ້ນ ສງ ສຣະ ເ×ິ

ມ. ແມ່ ອັຍ ຍ ສະກົດ

| ສຳຣັບສຣວສັ້ນ | ສຳຣັບສຣວຍາວ |
| --- | --- |
| ໄx ໃx ×ັຍ | ×າຍ |
| ×ິຍ | ×ີຍ |
| ×ຶຍ | ×ືຍ |
| ×ຸຍ | ×ູຍ |
| ເ×ັຍ | ເ×ຍ |
| ແ×ັຍ | ແ×ຍ |
| ໂ×ັຍ | ໂ×ຍ |
| ×ັອຍ | ×ອຍ |
| ເ×ິຍ | ເ×ີຍ |
| ×ັຽຍ | ×ຽຍ |
| ×ັວຍ | ×ວຍ |
| ເ×ຶອຍ | ເ×ືອຍ |

<u>ໝາຍເຫດ</u>: ໑. ສຣະພິເສດ ໃx ໄx ແມ່ນສຣວ ×ະ ສະກົດ ຍ

໒. ຮູບ ×ຽ ໃຊ້ປະສົມເປັນສຣະ ເ×ັຽະ ( ×ັຽ)ແລະ ສຣະ ເ×ັຍ (×ຽ) ທ່ນ້ນ.

໓. ຈະຂຽນ ພຍັນຊະນະແທນ ສຣະ ເ×ັຽ (×ຽ) ເຊັ່ນ ເສັຍສຽງ ຈະອ່ານວ່າ (ເສັຍສຣວນ້ມຂໄດ)

## ໔. ແມ່ອັດ ດ ສະກົດ

ຢູ່ກາງຄຳນີ້ຕົວສະກົດມີເສດ ຈ ສ ຊ ຕ ທ ສ ສະກົດແທນ ດ ໄດ້.

| ສຳລັບສຽງສັ້ນ | ສຳລັບສຽງຍາວ |
|---|---|
| ×ັດ | ×າດ |
| ×ິດ | ×ີດ |
| ×ຶດ | ×ືດ |
| ×ຸດ | ×ູດ |
| ເ×ັດ | ເ×ດ |
| ແ×ັດ | ແ×ດ |
| ×ົດ | ໂ×ດ |
| ×ອັດ | ×ອດ |
| ເ×ິດ | ເ×ີດ |
| ×ຽັດ | ×ຽດ |
| ×ວັດ | ×ວດ |
| ເ×ຶອດ | ເ×ືອດ |

ໝາຍເຫດ: ໑. ສະກົດພິເສດຢູ່ກາງຄຳ ບໍ່ໄດ້ກ່ຽວກັບຂໍ້ມູນຂອງຄຳແຕ່ຢ່າງໃດ ຫາກແມ່ນວິທີຂຽນຕາມສຽງຂອງພາສາລາວໂດຍສະເພາະ.

໒. ຄຳເວົ້າ ຈະແມ່ນ ວັຈນານຸກົມບັນຍັດການຂຽນໄດ້.

## ໔- ແມ່ອັນ ນ ສະກົດ

ຢູ່ກາງຄຳມີສະກົດພິເສດ ຣ ລ ສະກົດແທນ ນ ໄດ້.

| ສຳລັບສຽງສັ້ນ | ສຳລັບສຽງຍາວ |
|---|---|
| ×ັນ | ×ານ |
| ×ິນ | ×ີນ |
| ×ຶນ | ×ືນ |
| ×ຸນ | ×ູນ |
| ເ×ັນ | ເ×ນ |
| ແ×ັນ | ແ×ນ |
| ×ົນ | ໂ×ນ |
| ×ອັນ | ×ອນ |
| ເ×ິນ | ເ×ີນ |
| ×ັຽນ | ×ຽນ |
| ×ັວນ | ×ວນ |
| ເ×ຶອນ | ເ×ືອນ |

<u>ໝາຍເຫດ</u>: ໑. ພຍັນຊນະ ນ ແມ່ນອັກສອນຕ່ຳຄີກ ໃຊ້ເປັນຕົວທີສອງ ຂອງພຍັນຊນະນຳ ທັງໃຊ້ເປັນພຍັນຊນະສະກົດໃນແມ່ ອົນ ອີກດ້ວຍ.

໒. ໃຫ້ຣະວັງການຂຽນ ສຣະໃນພຍາງ ຖ້າບໍ່ແມ່ນບ່ອນກໍ່ອ່ານເປັນຢ່າງອື່ນໄດ້ ຕົວຢ່າງ:

ເຫິນ ແມ່ນພຍັນຊນະຕົ້ນ ຫ ສຣະ ເ×ິ ສະກົດ ນ.

ເຫນິ ແມ່ນສອງພຍາງ ເຫ - ນິ

໓- <u>ແມ່ອົບ ບ ສະກົດ</u>

ຢູ່ກາງຄຳ ມີສະກົດພິເສດ ປ ພ ຟ ແທນ ບ ໄດ້

| ສຳຣັບສຽງສັ້ນ | ສຳຣັບສຽງຍາວ |
|---|---|
| ×ັບ | ×າບ |
| ×ິບ | ×ີບ |
| ×ຶບ | ×ືບ |
| ×ຸບ | ×ູບ |
| ເ×ັບ | ເ×ບ |
| ແ×ັບ | ແ×ບ |
| ×ົບ | ໂ×ບ |
| ×ັອບ | ×ອບ |
| ເ×ິບ | ເ×ີບ |

| ສຳຣັບສຽງສັ້ນ | ສຳຣັບສຽງຍາວ |
|---|---|
| ×ັຽບ | ×ຽບ |
| ×ັວບ | ×ວບ |
| ເ×ຶອບ | ເ×ືອບ |

<u>ຕົວຢ່າງສະກົດພິເສດ</u>: ສຸຂວິທຍາ (ສຸກຂະວິດທະຍາ)

ອັຄນະເຕສີ (ອັກຄະນະເຕສີ)

ຣາຊການ (ຣາດຊະການ)

ຣັຖບານ (ຣັດຖະບານ)

ສຸຈຣິດ (ສຸດຈະຣິດ)

ອັຕໂນມັດ (ອັດຕະໂນມັດ)

ຈິຕວິທຍາ (ຈິດຕະວິດທະຍາ)

ສັຣເສີນ (ສັນຣະເສີນ)

ພົລເມືອງ (ພົນລະເມືອງ)

ອຸປກອນ (ອຸບປະກອນ)

ອົພຍົບ (ອົບພະຍົບ)

ອັຟການິສຕັງ (ອັບຟະການິດສະຕັງ)

## ກ- <u>ແມ່ອັນ ມ ສະກົດ</u>

| | ສຳລັບສຽງສັ້ນ | ສຳລັບສຽງຍາວ |
|---|---|---|
| ×ຳ | ×ັມ | ×າມ |
| | ×ິມ | ×ີມ |
| | ×ຶມ | ×ືມ |
| | ×ຸມ | ×ູມ |
| | ເ×ັມ | ເ×ມ |
| | ແ×ັມ | ແ×ມ |
| | ×ົມ | ໂ×ມ |
| | ×ອັມ | ×ອມ |
| | ເ×ິມ | ເ×ີມ |
| | ×ັຽມ | ×ຽມ |
| | ×ັວມ | ×ວມ |
| | ເ×ຶອມ | ເ×ືອມ |

<u>ໝາຍເຫດ</u>: ໑. ສຣະ ×ຳ ແມ່ນສຽງ ×ະ ສະກົດ ມ ແຕ່ເປັນຮູບນຶ່ງ ຕ່າງຫາກ ຈຶ່ງເອີ້ນວ່າສຣະພິເສດ.

໒. ພຍາງປະກອບດ້ວຍສຣະພິເສດ ໄ× ໃ× ×ຳ ເ×ົາ ຈະມີພຍັນຊນະ ສະກົດຕື່ມອີກບໍ່ໄດ້.

ສ. ຢ່າງນ້ອຍພຍາງນຶ່ງ ຕ້ອງມີພຍັນຊະນະຕົ້ນຕົວດຽວ ຫລື ສອງຕົວ (ພຍັນຊະນະນຳ) ແລະ ສຣະຈຶ່ງນັບເປັນພຍາງໄດ້ ເວັ້ນແຕ່ພຍາງພິເສດ.

ຊ- <u>ແມ່ກົວ (ເxົາ) ວ ສະກົດ</u>

| ສຳລັບສຣະສັ້ນ | ສຳລັບສຣະຍາວ |
|---|---|
| (xົວ) ເxົາ | xາວ |
| xິວ | xີວ |
| xຶວ | xືວ |
| xຸວ | xູວ |
| ເxັວ | ເxວ |
| ແxັວ | ແxວ |
| ໂxັວ | ໂxວ |
| xັອວ | xອວ |
| ເxິວ | ເxີວ |
| xັຽວ | xຽວ |
| xັວວ | xວວ |
| ເxຶອວ | ເxືອວ |

ໝາຍເຫດ: ໑. ແມ່ນແທ້ ×ະ ສະກົດຕົວ ວ ຄວນຂຽນ ×ົວ ແຕ່ຮູບ ບໍ່ໃຊ້ໃນພາສາລາວ ຈຶ່ງໃຊ້ສຣະມິເສດ ເ×າ ແທນ.

໒. ×ວວ ຕົວ ວ ທີ່ນຶ່ງແມ່ນສຣະ ×ົວ ຕົວ ວ ທີ່ສອງແມ່ນ ຕົວສະກົດ.

໓. ງ ຍ ນ ມ ວ ແມ່ນພຍັນຊນະຕ່ຳຄຶກ ໃຊ້ເປັນຕົວ ທີ່ສອງຂອງພຍັນຊນະນຳ ແລະ ໃຊ້ເປັນພຍັນຊນະສະກົດອີກດ້ວຍ.

ສະນັ້ນ ຈຶ່ງຣະວັງການວາງສຣະໃຫ້ຖືກສຽງຕາມສຽງຊຶ່ງປະສົງ.

# ບົດທີ ໑ ວັນນະຍຸດ

ພຍາງໃນແມ່ ອະ -ອາ ແລະ ໃນແມ່ສະກົດ ບໍ່ມີທັງສຽງໃນ ພາສາເວົ້າ ຈຶ່ງໄດ້ໃຊ້ ວັນນະຍຸດ ຫລືໄມ້ໝາຍສຽງຕື່ມອີກ. ວັນນະຍຸດ ຫລືໄມ້ພັນສຽງ ຈຶ່ງນັບເປັນສ່ວນນຶ່ງຂອງແມ່ ອັກຂຣະ. ວັນນະຍຸດມີ ໔ ຮູບຄື: ×່ ×້ ×໊ ×໋

ເອກ ໂທ ຕຣີ ຈັດວາ

ວັນນະຍຸດນີ້ເວົ້າກັນອີກວ່າ ໄມ້ ຄື: ໄມ້ເອກ (ນຶ່ງ) ໄມ້ໂທ (ສອງ) ໄມ້ຕຣີ (ສາມ) ໄມ້ຈັດວາ (ສີ່)

## * ກົດຣະບຽບການໃຊ້ວັນນະຍຸດ *
*********************

໑. ການໃຊ້ວັນນະຍຸດ ມີກົດຣະບຽບຕ້ອງເບິ່ງວ່າ

ກ. ພຍາງ ແມ່ນພຍາງຕາຍ ຫລືພຍາງເປັນ.

ຂ. ພຍັນຊນະຕົ້ນພຍາງ ແມ່ນອັກສອນກາງ ສູງ ຫລື ຕ່ຳ.

ຄ. ສຣະ ແມ່ນສຽງສັ້ນ ຫລືສຽງຍາວ.

໒. ວັນນະຍຸດຂຽນໄວ້ເທິງພຍັນຊນະຕົ້ນພຍາງສເມີ ຖ້າພຍັນຊນະຕົ້ນພຍາງ ແມ່ນອັກສອນນຳ ໃຫ້ຂຽນວັນນະຍຸດໃສ່ເທິງຕົວທີສອງ.

### * <u>ພຍາງຕາຍ</u> *

| ແມ່ອະ | ແມ່ອາ | ແມ່ ອັກ | | ແມ່ ອັດ | | ແມ່ ອັບ | |
|---|---|---|---|---|---|---|---|
| xະ | | xັກ | xາກ | xັດ | xາດ | xັບ | xາບ |
| xິ | | xິກ | xີກ | xິດ | xີດ | xິບ | xີບ |
| xຶ | | xຶກ | xືກ | xຶດ | xືດ | xຶບ | xືບ |
| xຸ | | xຸກ | xູກ | xຸດ | xູດ | xຸບ | xູບ |
| ເxະ | | ເxັກ | ເxກ | ເxັດ | ເxດ | ເxັບ | ເxບ |
| ແxະ | | ແxັກ | ແxກ | ແxັດ | ແxດ | ແxັບ | ແxບ |
| ໂxະ | | xົກ | ໂxກ | xົດ | ໂxດ | xົບ | ໂxບ |
| ເxາະ | | xັອກ | xອກ | xັອດ | xອດ | xັອບ | xອບ |

| | | | | | | | |
|---|---|---|---|---|---|---|---|
| ເxິ | | ເxິກ | ເxີກ | ເxິດ | ເxີດ | ເxິບ | ເxີບ |
| ເxັຽະ | | xັຽກ | xຽກ | xັຽດ | xຽດ | xັຽບ | xຽບ |
| xົະ | | xັວກ | xວກ | xັວດ | xວດ | xັວບ | xວບ |
| ເxືອ | | ເxຶອກ | ເxືອກ | ເxຶອດ | ເxືອດ | ເxຶອບ | ເxືອບ |

ລະບຽບທີ ໑. ພຍາງຕາຍ ຊຶ່ງພຍັນຊນະຕົ້ນແມ່ນອັກສອນກາງ ແລະ ສຣະສັ້ນ, ໃຊ້ວັນນະຍຸດໄດ້ແຕ່ໄມ້ ຕຣີ ( x໊ )

ຕົວຢ່າງ: ເກາະ ເກ໊າະ ກັກ ກິ໊ກ ກອັດ ກອ໊ດ ກົບ ກົ໊ບ.

ລະບຽບທີ ໒. ພຍາງຕາຍ ຊຶ່ງພຍັນຊນະຕົ້ນແມ່ນອັກສອນກາງ ແລະ ສຣະຍາວ ໃຊ້ວັນນະຍຸດໄດ້ແຕ່ໄມ້ ໂທ ( x້ )

ຕົວຢ່າງ: ກາກ ກ້າກ ກາດ ກ້າດ ກາບ ກ້າບ

ລະບຽບທີ ໓. ພຍາງຕາຍ ຊຶ່ງພຍັນຊນະຕົ້ນແມ່ນອັກສອນສູງ ຫລື ອັກສອນຕ່ຳ ໃຊ້ວັນນະຍຸດບໍ່ໄດ້ ເພາະທັງສອງໂຮມກັນ ມີສຽງໄດ້ບໍ່ທໍ່ກັນກັບອັກສອນກາງ.

ຕົວຢ່າງ: ສະ ຊະ ສັກ ຊັກ ສາກ ຊາກ ສັດ ຊັດ ສາດ ຊາດ ສັບ ຊັບ ສາບ ຊາບ.

* ພຍາງເປັນ *

| ແມ່ອະ | ແມ່ອາ | ແມ່ອັງ | | ແມ່ອັຍ | | ໝາຍເຫດ |
|---|---|---|---|---|---|---|
| | ×າ | ×ັງ | ×າງ | ໄ× | ໃ× | |
| | ×ີ | ×ິງ | ×ີງ | ×ັຍ | ×າຍ | |
| | ×ື | ×ຶງ | ×ືງ | ×ິຍ | ×ີຍ | |
| | ×ູ | ×ຸງ | ×ູງ | ×ຶຍ | ×ືຍ | |
| | ເ× | ເ×ັງ | ເ×ງ | ×ຸຍ | ×ູຍ | |
| | ແ× | ແ×ັງ | ແ×ງ | ເ×ັຍ | ເ×ຍ | |
| | ໂ× | ×ົງ | ໂ×ງ | ແ×ັຍ | ແ×ຍ | |
| | ×ໍ | ×ອັງ | ×ອງ | ໂ×ັຍ | ໂ×ຍ | |
| | ເ×ື | ເ×ິງ | ເ×ີງ | ×ອັຍ | ×ອຍ | |
| | ເ×ັຽ | ×ັຽງ | ×ຽງ | ເ×ິຍ | ເ×ີຍ | |
| | ×ົວ | ×ັວງ | ×ວງ | ×ັຽຍ | ×ຽຍ | |
| | ເ×ືອ | ເ×ຶອງ | ເ×ືອງ | ×ັວຍ | ×ວຍ | |
| | | | | ເ×ຶອຍ | ເ×ືອຍ | |

## * ພາສາລາວມີ ກ ສຽງ *

ເມື່ອພຍາງຕາຍ ພຍາງເປັນ ພຍັນຊນະຕົ້ນສູງ ພຍັນຊນະຕົ້ນກາງ ພຍັນຊນະຕົ້ນຕ່ຳ ສຣະສັ້ນ ສຣະຍາວ ແລະ ວັນນະຍຸດໂຮມກັນແລ້ວ ພາສາລາວມີ ກ ສຽງ ຄື ພຍາງຕາຍ ສອງສຽງ ພຍາງເປັນ ຫ້າສຽງ ດັ່ງຕົວຢ່າງ:

| ພຍາງຕາຍ | ພຍາງເປັນ |
|---|---|
| ເບາະ ເບ໊າະ | ບໍ ບໍ່ ບໍ້ ບໍ໊ ບໍ໋ |
| ເສາະ ເຊາະ | ສໍ່ ສໍ້ ຊໍ່ ຊໍ້ |

ໝາຍເຫດ: ພຍັນຊນະຕົ້ນສູງ ແລະ ພຍັນຊນະຕົ້ນຕ່ຳໃສ່ໄມ້ ເອກ (x)

ມີສຽງຄ້າຍກັນ ແຕ່ບາງທີຄວາມໝາຍຕ່າງກັນເຊັ່ນ:

ສໍ່ ໝາຍຄວາມວ່າ ເອົາຄວາມຜູ້ນຶ່ງ ໄປເວົ້າໃຫ້ຜູ້ນຶ່ງຟັງ (ສັບສໍ່)

ຊໍ່ ໝາຍຄວາມວ່າ ເປັນເລົ້າຂົນເມືອເຕິງ (ຊໍ່ດອກໄມ້)

ໜຶ່ງ ໝາຍຄວາມວ່າ ຈຳນວນ ໑ ນ໋ແມ່ນສຽງລາວ.

--- ບົດພິເສດ ---
******

໑)- ເຄື່ອງໝາຍວັກ.

ກ. ເຄື່ອງໝາຍກ່ຽວກັບວັກ.

ການຂຽນພາສາລາວບໍ່ມີເຄື່ອງໝາຍວັກ ຄຳເວົ້າຂຽນຕິດໆກັນໄປ ຖ້າຈະໝາຍວັກກໍ່ມີແຕ່ຍະຄຳເຫົ່າບນ ຕໍ່ມາຈຶ່ງໃຊ້ເຄື່ອງໝາຍວັກ.

ເຄື່ອງໝາຍວັກມີ:

໑. , ເອີ້ນວ່າ (ຈຸດ) ໃຊ້ໝາຍຂັ້ນວັກນ້ອຍ ຫລືຂັ້ນຄຳເວົ້າໃນປະໂຍກ.

໒. ; ເອີ້ນວ່າ (ຈຸດເມັດ) ໃຊ້ໝາຍຂັ້ນວັກໃຫຍ່ໃນປະໂຍກ.

໓. . ເອີ້ນວ່າ (ເມັດ) ໃຊ້ຂຽນໄວ້ທ້າຍປະໂຍກ ບອກວ່າ ປະໂຍກນັ້ນສຸດແລ້ວ.

໒)- ເຄື່ອງໝາຍກ່ຽວກັບຄຳເວົ້າ.

ກ. ໆ ເອີ້ນວ່າຊ້ຳຄວາມ ຂຽນໄວ້ທ້າຍຄຳ ເພື່ອໃຫ້ອ່ານຄຳນັ້ນ ສອງເທື່ອ ເຊັ່ນ: ມາໄວໆ ອ່ານວ່າ ມາໄວໄວ.

ຂ. " ເອີ້ນວ່າ(ລ) ໃຊ້ຂຽນກອງຄຳ ເພື່ອໃຫ້ອ່ານຄືຄຳຢູ່ເທິງ ດັ່ງນີ້:

ມ້າຕົວໜຶ່ງ ໒໐.໐໐໐ ກີບ

ຄວາຍຕົວໜຶ່ງ ໓໐.໐໐໐ "

ຄ. ຯລຯ ເອີ້ນວ່າ (ເກາະລະ)ໃຊ້ໝາຍຍັງມີຄວາມອື່ນໆ ເຊັ່ນ: ປາທີ່ຂ້ອຍຮູ້ຈັກ ມີປາດຸກ ປາຄ່ ຯລຯ.

ງ. .... ເອີ້ນວ່າ ( ເມັດລະ) ມີຄວາມໝາຍຄືກັນກັບ ຯລຯ

ຈ. - ເອີ້ນວ່າ(ຂີດຕໍ່) ຂີດຂັ້ນເຊັ່ນ ສັນຍາ ຝຣັ່ງ-ລາວ ແມ່ນ ຂີດຕໍ່ ໝູ-ເປັດ-ໄກ່ ແມ່ນຂີດຂັ້ນ

ສ. _ ເອີ້ນວ່າຂີດກ້ອງໃຊ້ຂີດກ້ອງຄຳເພື່ອເຕືອນວ່າ ຄຳນັ້ນມີຄວາມ

ສຳຄັນຫລາຍເຊັ່ນ ພຸທສາສນາ ແມ່ນຄຳສັ່ງສອນຂອງພຣະພຸທເຈົ້າ.

ຊ. ? ເອີ້ນວ່າ ໝາຍຖາມ ບອກວ່າແມ່ນຄຳຖາມ ພາສາລາວມີຄຳຖາມ ໃນຕົວເຊັ່ນ ແມ່ນຫຍັງ ໄປໃສ ແຕ່ກ່ອນມັກຂອງ ແມ່ນຫຍັງ ? ໄປໃສ.

ຍ. ! ເອີ້ນວ່າ ອັສຈັນ ໝາຍຄວາມວ່າ ອັສຈັນຕື່ນເຕັ້ນ ເຊັ່ນ ໃສ

ດ. " " ເອີ້ນວ່າໄຂ ແລະອັດວົງເລັບຊ້ອນ ໃຊ້ຂັ້ນກ່ອນ ແລະລຸນ ຂໍ້ຄວາມສຳຄັນ ຫລືຍົກມາຈາກບ່ອນອື່ນເຊັ່ນ ຣັຖທັມມະນູນບັນທຶກ ວ່າ "ພຸທສາສນາ ເປັນສາສນາຂອງປະເທດ."

ຕ. ( ) ເອີ້ນວ່າ ໄຂ ອັດວົງເລັບ ໝາຍຄວາມວ່າຖ້ອຍຄຳຢູ່ໃນວົງເລັບ ບໍ່ຢູ່ໃນປະໂຍກ ຕົວຢ່າງ ບ້ານເກີນ (ແຂວງວຽງຈັນ) ນໍ່ເກີດ.

ຖ. : ເອີ້ນວ່າ ສອງເມັດ ໃຊ້ແທນ " ດີ " " ເຊັ່ນ "

* ສຳຄັນຫລາຍທີ່ສຸດໃນປະໂຍກ *
********************

ຕົວຢ່າງ: ສະຂ້ອຍມີ ປາ ດີປາດຸກປາຄໍ່ປາເຂັງ

ສະຂ້ອຍມີປາ ດີ ປາດຸກ ປາຄໍ່ ປາເຂັງ

໓). ຄຳໃຊ້ສຣະ ໄx

(ຄຳປະກອບສຣະ ໄx ມີ ໒໐ ຄຳຖ້ວນ)

໑. ໃກ້ (ໃກ້ຄຽງ) ໓. ໃສ (ຕົວສີໃສ)

໒. ໃດ່ (ເຣັດໜ້າໃດ່ໜ້າມອງ) ໔. ໃຄ່ (ມັກໃຄ່ປຣາຖນາ)

| | |
|---|---|
| ໕. ໃດ້ (ປີໃດ້ ປີກຸນ) | ໖. ໃວ່ (ຂີ້ໃວ່ ຂີ້ຝຸ່ນ) |
| ໗. ໃຍ່ (ໄປນຳກັນໃຍ່ງ) | ໘. ໃດ (ຜູ້ໃດ ອັນໃດ) |
| ໙. ໃຕ (ຕັບໃຕ) | ໑໐. ໃຕ້ (ທິດໃຕ້) |
| ໑໑. ໃບ (ໃບໄມ້ ໃບຕອງ) | ໑໒. ໃບ້ (ຄົນໃບ້ ບ້າໃບ້) |
| ໑໓. ໃຈ (ຫົວໃຈ ໃຈໄມ້) | ໑໔. ໃຈ້ (ປີໃຈ້ ປີຊວດ) |
| ໑໕. ໃສ (ນ້ຳໃສ) | ໑໖. ໃສ (ໄປໃສ) |
| ໑໗. ໃສ່ (ເອົາໃສ່) | ໑໘. ໃສ້ (ປີໃສ້ ປີມະເສັງ) |
| ໑໙. ໃຊ່ (ບໍ່ໃຊ່ວ່າ) | ໒໐. ໃຊ້ (ຄົນໃຊ້) |
| ໒໑. ໃຍ (ໃຍບົວ ຫ່ວງໃຍ) | ໒໒. ໃນ (ໃນເຮືອນ) |
| ໒໓. ໃພ້ (ສາວໃພ້) | ໒໔. ໃໜ (ແໜ່ນໃໜ) |
| ໒໕. ໃຫ້ (ເອົາໃຫ້ ໃຫ້ການ) | ໒໖. ໃຣ່ (ສະເໝາະໃຣ່ນາ) |
| ໒໗. ໃຫຍ່ (ຜູ້ໃຫຍ່) | ໒໘. ໃຫມ (ປັບໃຫມ) |
| ໒໙. ໃຫມ່ (ປີໃຫມ່) | ໓໐. ໃຫລ (ນອນໃຫລ) |

ຄຳອື່ນນອກຈາກ ໓໐ ຄຳນີ້ ໃຊ້ສະຣະ ໄx.

## ໓). ຟ້ອງຄຳ ແລະ ຢາຍຄຳ.

### ກ. ຟ້ອງຄຳ

ຟ້ອງຄຳ ແມ່ນເວົ້າກັບປາກວ່າ ຄຳນັ້ນມີຈັກພຍາງ ແລະ ພຍາງນຶ່ງ ປະກອບໄປດ້ວຍ ພຍັນຊນະຕົ້ນ ສຣະ ສະກົດ ແລະ ວັນນະຍຸດ ຢ່າງໃດ. ຕົວຢ່າງ:

ຕົວຢ່າງ: ເມືອງ - ໃຫ້ວ່າ ມ ເ×ອ ເມືອງ ເມືອງ
ບ້ານ - ໃຫ້ວ່າ ບ ×າ ບານ ບານ × ບ້ານ

### ຂ. ຢາຍຄຳ

ຢາຍຄຳ ແມ່ນການຈາແນກຄຳ ດ້ວຍການຂຽນວ່າຄຳນັ້ນ ມີຈັກພຍາງ ແລະ ພຍາງນຶ່ງປະກອບດ້ວຍຫຍັງແດ່ ຕົວຢ່າງ:

| ຄຳ | ພຍາງ | ພ.ຕົ້ນ | ສຣະ | ສະກົດ | ວັນນະຍຸດ |
|---|---|---|---|---|---|
| ບ້ານ | ໑ | ບ | າ | ນ | ້ |
| ກະຕ່າຍ | ໒ | | | | |
| | ກະ | ກ | ະ | | |
| | ຕ່າຍ | ຕ | າ | ຍ | |
| ຣຖບານ | ໓ | | | | |
| | ຣົຖ | ຣ | ົ(ະ) | ຖ | |

| | | | | |
|---|---|---|---|---|
| | ຖ | ຖ | ບໍ່ມີ | |
| | ບານ | ບ | າ | ນ |
| ສເນີ | ໒ | | | |
| | ສ | ສ | ບໍ່ມີ | |
| | ເນີ | ນ | ເxີ | |

* ອັກສອນກາງ ມີ ໘ ຕົວ *
****************

ຄື: ແກ້ວ ດີ ຕົກ ບຶ່ງ ຈະ ໄປ ຢ່າ ເອົາ

ກ ດ ຕ ບ ຈ ປ ຢ ອ

* ອັກສອນສູງມີ ໖ ຕົວ *
**************

ຄື: ເຂົາ ໃສ່ ຖົງ ໃຜ ຝາກ ໃຫ້

ຂ ສ ຖ ຜ ຝ ຫ

* ອັກສອນກາງມີ ໑໓ ຕົວ *
*****************

ຄື: ຄົນ ງານ ຊ໌ ເຍັຍ ທ໌ ນາ ໝ້າ ຟັນ ໄມ້ ຮົດ

ຄ ງ ຊ ຍ ທ ນ ໝ ຟ ມ ຮ

ແລ່ນ ວົງ ຣິ

ລ ວ ຣ

ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ

# ໄວຍາກອນລາວ

## ພາກທີ່ສອງ

# ວະຈີວິພາກ

ປະກາດໃຊ້ ໂດຍ ດຳລັດລັດຖະມົນຕີ ເລກທີ ໒໑໓/ສສ
ລົງວັນທີ ໗/໓/໗໓(໒໕໑໕)

ພິມເທື່ອທີ່ ໔ ປີ ກ.ສ. ໑໙໗໔

ພຣະຣາຊອານາຈັກລາວ

ກະຊວງ ສຶກສາທິການ ສິລປາກອນ　　　　　　　　ເລກທີ ໒໑໓/ສສ

ແລະ ກິລາ-ຍຸວະຊົນ

# ດຳຣັດ ຣັຖມົນຕີ

## ກະຊວງ ສຶກສາທິການ ສິລປາກອນ ແລະ ກິລາ-ຍຸວະຊົນ

ເຫັນຕາມ ພຣະຣາຊໂອງການເລກທີ ໑໐໐ ລົງວັນທີ ໒ ເມສາ ໑໙໕໒ ວ່າດ້ວຍ ການແຕ່ງຕັ້ງກອງປະຊຸມຄນະຣັຖມົນຕີ;

ເຫັນຕາມ ພຣະຣາຊໂອງການເລກທີ ໒໑໙ ລົງວັນທີ ໒໓ ມິຖຸນາ ໑໙໖໒ ວ່າດ້ວຍ ການແຕ່ງຕັ້ງ ຄນະຣັຖບານປະສົມຊົ່ວຄາວແຫ່ງຊາດ;

ເຫັນຕາມ ພຣະຣາຊໂອງການເລກທີ ໒໑໙, ໑໑໘, ໑໘໕, ໗໓, ໒໘໑ ແລະ ໑໘໐ ລົງວັນທີ ໒໓ ມິຖຸນາ ໑໙໖໒, ໒໒ ພຶສພາ, ໒໗ ກໍຣະກະດາ ໑໙໖໔, ໑໐ ມິຖຸນາ, ໙ ກັນຍາ ໑໙໖໕ ແລະ ໑໒ ມິຖຸນາ ໑໙໖໗ ວ່າດ້ວຍ ການແຕ່ງຕັ້ງ ຄນະຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະ ການປັບປຸງຄນະຣັຖບານໃຫມ່ອີກ;

ເຫັນຕາມ ພຣະຣາຊໂອງການເລກທີ ໗໒ ລົງວັນທີ ໒໓ ກຸມພາ ໑໙໗໐ ວ່າດ້ວຍ ການແຕ່ງຕັ້ງ ຣາຊບັນດິດສະພາລາວ;

ເຫັນຕາມ ພຣະຣາຊໂອງການເລກທີ ໒໒໑ ລົງວັນທີ ໒໑ ມິຖຸນາ ໑໙໗໐ ວ່າດ້ວຍ ການແຕ່ງຕັ້ງ ສະມາຊິກຣາຊບັນດິດສະພາລາວ;

ເຫັນຕາມ ພຣະຣາຊໂອງການເລກທີ ໑໓໒ ລົງວັນທີ ໓໑ ມີນາ ໑໙໖
ແຕ່ງຕັ້ງບຸກຄົນສຳຄັນໃຫ້ເປັນສະມາຊິກຣາຊບັນດິດສະພາລາວ

ເຫັນຕາມ ພຣະຣາຊໂອງການເລກທີ ໓໓໔ ລົງວັນທີ ໗ ສິງຫາ ໑໙໖
ວ່າດ້ວຍ ລະບຽບການຈັດຕັ້ງ ຄນະບໍຣິຫານຣາຊບັນດິດສະພ
ລາວມີກຳນົດສອງປີ;

ເຫັນຕາມ ພຣະຣາຊໂອງການເລກທີ ໑໐ ລົງວັນທີ ໒໗ ມະກະຣາ ໑໙໘
ກ່ຽວກັບ ຫລັກການຂຽນທາງຣາຊການ ຕາມແບ່ອັກຂອະລາວ

ເຫັນຕາມ ດຳຣັດ ຣັຖມົນຕີເລກທີ ໑໔໗/ສສ ລົງວັນທີ ໑໔/໒/໑໙໖໒ ວ່
ດ້ວຍ ອັກຂຣະວິທີ;

ເຫັນຕາມ ຈົດໝາຍບັນທຶກ ເລກທີ ໑໐໔/ຣບສ. ລົງວັນທີ ໑໗/໑໑/໖
ວ່າດ້ວຍ ການປະຊຸມລະມັດຊາ ຂອງຣາຊບັນດິດສະພາ ທີ່ໄ
ຕົກລົງຮັບຮອງເອົາ ໄວຍາກອນລາວພາກ ໒ (ວະຈີວິພາກ) ນີ້

ຕາມ ຄຳສເນີຂອງ ທ່ານປະທານ ຣາຊບັນດິດສະພາລາວ;

ຈຶ່ງດຳຣັດວ່າ:

ມາດຕາ ໑ – ໄວຍາກອນລາວພາກທີ ໒ (ວະຈີວິພາກ) ຊຶ່ງໄດ້ຄັດຕິດດ
ຣັດນີ້ ໄດ້ຮຽບຮຽງຂຶ້ນໂດຍຣາຊບັນດິດສະພາລາວ;

ລະບຽບການຈຳແນກຖ້ອຍຄຳ ໃນພາສາລາວອອກເປັນປະເພ
ຕ່າງໆ ເຊັ່ນ: ປະເພດຄຳນາມ ຄຳສັພນາມ ຄຳກິຣິຍາ ຄຳກິຣິຍາວິເສດ ແລ
ຣາຊາສັບ (ສັບຣາຊການ) ເປັນຕົ້ນ ດັ່ງໄດ້ບັນຍັດຢູ່ໃນໄວຍາກອນສະບັບ
ໃຫ້ເປັນລະບຽບໄດ້ໂດຍທົ່ວໄປ;

ມາດຕາ ໖ – ອະທິບໍດີ ປະຈຳກະຊວງສຶກສາທິການ ສິລປາກອນ ກິລາ–ບຸວະຊົນ ແລະ ເລຂາປະຈຳຣາຊບັນດິດສະພາ ເປັນຜູ້ປະຕິບັດດຳຣັດສະບັບນີ້ ຕາມໜ້າທີ່ຂອງໃຜລາວ ນັບແຕ່ ວັນອອກດຳຣັດນີ້ເປັນຕົ້ນໄປ.

ວຽງຈັນ, ວັນທີ ໗ ມີນາ ໑໙໗໒

ຣອງນາຍົກຣັຖມົນຕີ ຣັຖມົນຕີກະຊວງສຶກສາ
ທິການ ສິລປາກອນ ກິລາ ແລະ ບຸວະຊົນ

ເຊັນ :

ພຍາ ໄຊນະເພັດຈຳພອນ
(ເຫລື້ອມ ອິນສີຊຽງໃໝ່)

# ຄຳນຳຂອງຣາຊບັນດິດສະພາ

ໄວຍາກອນລາວມີ ໔ ພາກ ຄື: ໑. ອັກຂຣະວິທີ ໒. ວະຈີວິພາກ ໓. ວາກຍະສັມພັນ ໔. ສັນທະລັກສນະ. ໄວຍາກອນລາວ ພາກທີ ໑ (ອັກຂຣະວິທີ) ເຊິ່ງຮັບຮອງຈາກຣາຊບັນດິດສະພາລາວ ໄດ້ຖືກປະກາດໃຊ້ແລ້ວໂດຍຄຳຣັດຖະມົນຕີ ເລກທີ ໑໔໗/ສສ ລົງວັນທີ ໑໕/໒/໗໒

ໄວຍາກອນລາວພາກທີ ໒ ນີ້ ກ່າວເຖິງການຈຳແນກແຍກຄຳເວົ້າໃນພາສາລາວອອກເປັນປະເພດ, ຫລືເປັນສ່ວນໆ ເຊິ່ງແຕ່ລະປະເພດມີລັກສນະ ແລະ ຫນ້າທີ່ຕ່າງກັນ ເຊັ່ນ ຄຳສັພນາມ ຄຳກິຣິຍາ ເປັນຕົ້ນ.

ຄວາມຈິງແລ້ວ ປະເພດ ຫລື ສ່ວນຂອງຄຳເວົ້າ ບໍ່ແມ່ນຂອງໃຫມ່ ເປັນສິ່ງທີ່ມີມາພ້ອມກັບການກຳເນີດຂອງພາສາ ເປັນຮາກເຫງົ້າຂອງພາສາມາແຕ່ດັ້ງເດີມ.

ພາສາ ເປັນພາຫະນະອັນສຳຄັນຍິ່ງ ທີ່ພາຊາດໄປສູ່ຄວາມຈະເລີນທຸກໆດ້ານ. ມີ "ພາສາເວົ້າ" ແລ້ວກໍຍັງບໍ່ພໍ ຕ້ອງມີ "ພາສາຂຽນ" ທີ່ໃຊ້ຕົວຫນັງສືອີກດ້ວຍ ເພື່ອບັນທຶກຄຳເວົ້າໄວ້ ສະນັ້ນ ຈຶ່ງຄົ້ນຄວ້າຫາຈຳແນກແຍກຄຳເວົ້າອອກເປັນປະເພດໃຫ້ຄົບຖ້ວນ ເພື່ອຕັ້ງຫລັກການຮຽບຮຽງປໂຍກຄຳເວົ້າໃຫ້ເຫມາະສົມ. ຫລັກການຈຳແນກຄຳນີ້ ເອີ້ນວ່າ "ວະຈີວິພາກ" ແຕ່ການຄົ້ນຄວ້ານີ້ ຈະຕ້ອງດຳເນີນໄປເລື້ອຍໆ ຕາມຄວາມຈະເລີນກ້າວຫນ້າຂອງພາສາສາດທົ່ວໂລກ. ການຊອກຄົ້ນຄວ້າຄືການຊອກຫາດັ

ແປງຂອງເກົ່າໃຫ້ດີຂຶ້ນ ແລະຫາຂອງໃຫມ່ມາຕື່ມເຕີມ ຫລືປະດິດຄິດໃຫມ່ ເພື່ອໃຫ້ມີວັທນາການ.

ເຖິງຢ່າງໃດກໍດີ ໄວຍາກອນລາວສະບັບນີ້ ເປັນພຽງຫລັກການແ ຄໍາເວົ້າເຊິ່ງເປັນຜົນຂອງການຄົ້ນຄວ້າຕ່າງຫາກ ບໍ່ແມ່ນແບບຮຽນ. ໄວ ກອນພາກນີ້ ຖືກຮັບຮອງຈາກກອງປະຊຸມສະມັດຊາຣາຊບັນດິດສະ ລາວຄັ້ງທີ ປີ ສົກ ໑໙໗໒ ວັນທີ ໑໓ ເດືອນພຶສຈິກາ ແລະປະກາດໃຊ້ ໃ ດໍາຣັດຣັຖມົນຕີກະຊວງສຶກສາທິການ ເລກທີ ໒໑໓/ສສ ລົງວັນທີ ເດືອນ ມີນາ ໑໙໗໓.

ຣາຊບັນດິດສະພາລາວ

ພ.ສ. ໒໕໑໕

# ໄວຍາກອນລາວ ພາກ ໒

## ໑໑ ວະຈີວິພາກ

## ບົດທີ ໑

*ລັກສນະຄຳເວົ້າ ໃນພາສາລາວ*

໑. <u>ຄຳເວົ້າ</u> – ຄຳເວົ້າແມ່ນສຽງທີ່ດັງອອກມາຈາກປາກ ມີຄວາມໝາຍໃຫ້ຜູ້ຟັງເຂົ້າໃຈໄດ້ ຈະມີຈັກພຍາງກໍຕາມ ດັ່ງຄຳວ່າ ບ້ານ ເມືອງ ກິນ ສັດ ພໍ່ ແມ່ ປະເທດ ສາສນາ ກິນ ນອນ ດຳ ແດງ ສູງ ຕ່ຳ ເປັນຕົ້ນ

໒. <u>ພຍາງ</u> – ພຍາງແມ່ນສ່ວນນຶ່ງຂອງຄຳເວົ້າ ຄຳເວົ້າລາງຄຳອອກສຽງດຽວ ລາງຄຳກໍອອກຫລາຍສຽງ ສຽງທີ່ດັງອອກມາເທື່ອນຶ່ງໃນເວລາເວົ້ານັ້ນເອງ ຮຽກວ່າ "ພຍາງ" ຄຳເວົ້າລາງຄຳມີພຍາງດຽວກໍອອກສຽງດຽວ ລາງຄຳກໍມີຫລາຍພຍາງ ກໍອອກຫລາຍສຽງ ດັ່ງຕົວຢ່າງດັ່ງນີ້:

| | | | |
|---|---|---|---|
| ເມືອງ | ເປັນຄຳນຶ່ງ | ມີ | ນຶ່ງພຍາງ |
| ບ້ານ | " | " | ນຶ່ງພຍາງ |
| ນະຄອນ | " | " | ສອງພຍາງ |
| ນາລິກາ | " | " | ສາມພຍາງ |
| ຣາຊການ | " | " | ສາມພຍາງ |
| ວັນນະຄະດີ | " | " | ສີພຍາງ |
| ຣັຖທັມມະນູນ | " | " | ຫ້າພຍາງ |

໓. ຄຳມູນ – ຄຳມູນແມ່ນຄຳເວົ້າຄຳນຶ່ງ ທີ່ມີຄວາມໝາຍຢ່າງນຶ່ງ
ມາແຕ່ດັ້ງເດີມ ແມ່ນຄຳທີ່ເປັນມໍຣະດົກຕົກທອດມາຈາກບັນພະບຸຣຸດຂອງ
ເຮົາ ດັ່ງຄຳວ່າ ເຂົ້າ ນ້ຳ ລົມ ໄຟ ເປັນຕົ້ນ. ຄຳມູນນີ້ ອອກສຽງຄືກັນ ແຕ່
ຄວາມໝາຍຕ່າງກັນ ດັ່ງຄຳວ່າ "ຂັນ" ມີຄວາມໝາຍຕ່າງກັນ ດັ່ງນີ້:

ຂັນ – ແມ່ນກິຣິຍາຂອງໄກ່ ເຮັດສຽງຢ່າງນຶ່ງດ້ວຍຄວາມມ່ວນຂອງ
ມັນ

ຂັນ – ເປັນຊື່ຂອງພາຊນະແບບນຶ່ງ ຮູບແອວກິ່ວ ດັ່ງຂັນເງິນເປັນ
ຕົ້ນ.

ຄຳມູນ ໃນພາສາລາວດັ້ງແຕ່ເດີມ ສ່ວນຫລາຍເປັນຄຳມີພຍາງ
ດຽວ ເມື່ອໄດ້ຄຳບາລີ ແລະສັນສະກຣິດມາໃຊ້ ພາສາລາວຈຶ່ງເປັນຄຳມີ
ຫລາຍພຍາງ.

໔. ຄຳປະສົມ – ຄຳປະສົມແມ່ນຄຳທີ່ເອົາຄຳມູນ ຊຶ່ງມີຄວາມໝາຍ
ຕ່າງກັນຫລືຊ້ຳກັນ ມາປະສົມເຂົ້າກັນໃຫ້ເປັນຄຳນຶ່ງ ດັ່ງຄຳວ່າ "ຫູກວາງ"
ຫູ ເປັນຄຳມູນຄຳນຶ່ງ ມີຄວາມໝາຍຢ່າງນຶ່ງ ກວາງ ກໍເປັນຄຳມູນຄຳນຶ່ງ
ມີຄວາມໝາຍຢ່າງນຶ່ງຕ່າງຫາກ ເມື່ອເອົາຄຳ ໒ ຄຳນີ້ປະສົມກັນເປັນ "ຫູ
ກວາງ" ເລີຍເປັນຊື່ຂອງຕົ້ນໄມ້ແບບນຶ່ງ ຮຽກວ່າ ຕົ້ນຫູກວາງ ແລະ ກໍ
ຄວາມໝາຍຕ່າງອອກໄປຈາກຄຳເດີມ ລັກສນະຂອງຄຳປະສົມນັ້ນມີ
ຢ່າງດັ່ງນີ້:

໔.໑ ເອົາຄຳມູນຫລາຍຄຳ ທີ່ມີຄວາມໝາຍຕ່າງກັນ ມາປະ
ສົມກັນເປັນຄຳນຶ່ງ ແລ້ວມີຄວາມໝາຍຕ່າງອອກໄປ ຈາກຄຳເດີມ ດັ່ງ:

+ ກວາງ ເປັນ ທູກວາງ (ຕົນທູກວາງ); ແຂ້ວ + ໄກ້ ເປັນ ແຂ້ວໄກ້ (
ແຂ້ວໄກ້) ເປັນຕົ້ນ.

໔.໒– ເອົາຄຳມູນ ທີ່ມີຄວາມຫມາຍຊ້ຳກັນ ມາປະສົມກັນເພື່ອໃ
ຄວາມຫມາຍຫນັກແຫນ້ນເຂົ້າ ດັ່ງ: ດຳ + ດຳ ເປັນ ດຳດຳ; ແດ
ແດງ ເປັນ ແດງແດງ; ໄວ + ໄວ ເປັນ ໄວໄວ ເປັນຕົ້ນ.

໔.໓ – ເອົາຄຳມູນ ທີ່ມີຄວາມຫມາຍໃກ້ກັນ ຫລື ຕ່າງກັນ ມາປະສົມກັ
ເປັນຄຳດຽວ ແຕ່ວ່າເມື່ອປະສົມແລ້ວກໍມີຄວາມຫມາຍໃກ້ຄວາມເດີມຢູ່

| | | | | |
|---|---|---|---|---|
| ບາດ | ປະສົມກັບ | ຊີງ | ເປັນ | ບາດຊີງ |
| ສົມ | " | ສູ່ | " | ສົມສູ່ |
| ຍິນ | " | ດີ | " | ຍິນດີ |
| ວ່າ | " | ກ່າວ | " | ວ່າກ່າວ |
| ສັ່ງ | " | ສອນ | " | ສັ່ງສອນ |
| ແຂ່ງ | " | ຂັນ | " | ແຂ່ງຂັນ |

໔.໔– ຄຳປະສົມ ທີ່ຫຍໍ້ມາຈາກຄຳຫລາຍຄຳ ຫລື ຂໍ້ຄວາມບາ
ໂດຍໃຊ້ຄຳນຶ່ງແທນໄວ້ຂ້າງຫນ້າ. ຄຳປະສົມແບບນີ້ ໃນພາສາບາລີ ຮຽ
"ຄຳຕັດທິດ" ຄື ຄຳທີ່ໃຊ້ປັດຈັຍແທນ ໂຕຢ່າງຄຳປະສົມຄຳລາວແບບນີ້

| | | |
|---|---|---|
| ຊາວບ້ານ | ຫຍໍ້ມາຈາກ | ຄົນພວກຢູ່ໃນບ້ານ |
| ຫມໍລຳ | " | ຜູ້ຊຳນານໃນທາງລຳ |
| ຊ່າງຄຳ | " | ຄົນຜູ້ມີສີມືໃນການຕີຄຳ |

ເປັນຕົ້ນ.

ຄຳວ່າ ຊາວບ້ານ ຫມໍລຳ ຊ່າງຄຳ ເຫລົ່ານີ້ ແມ່ນຄຳປະສົ
ຄຳສຳລັບໃຊ້ປະສົມ ຫລື ໃຊ້ແທນຂໍ້ຄວາມທີ່ຍາວໆນັ້ນ ແມ່ນຄຳຕໍ່ໄປນີ້:

| | | | | | |
|---|---|---|---|---|---|
| ຊາວ | ໂຕຢ່າງ | ຊາວນາ | ຊາວບ້ານ | ຊາວເມືອງ | ຯລ |
| ໄທ | " | ໄທນາ | ໄທເມືອງ | ໄທເຫນືອ | ຯລ |
| ຊ່າງ | " | ຊ່າງຄຳ | ຊ່າງເຫລັກ | ຊ່າງໄມ້ | ຯລ |
| ນັກ | " | ນັກປຣາດ | ນັກຮົບ | ນັກເລງ | ຯລ |
| ຜູ້ | " | ຜູ້ດີ ຜູ້ຊົ່ວ | ຜູ້ນັ້ນ ຜູ້ນີ້ | ຜູ້ໃດ | ຯ |
| ຫມໍ | " | ຫມໍລຳ | ຫມໍປາ | ຫມໍມົນ | ຯ |
| ຂອງ | " | ຂອງໃຊ້ | ຂອງກິນ | ຂອງຫລິ້ນ | ຯລ |
| ເຄື່ອງ | " | ເຄື່ອງມື | ເຄື່ອງຂອງ | ເຄື່ອງໃຊ້ | ຯລ |
| ຄວາມ | " | ຄວາມຕາຍ | ຄວາມກິນ | ຄວາມນອນ | ຯລ |
| ທີ່ | " | ທີ່ນັ້ນ | ທີ່ນີ້ | ທີ່ນອນ | ຯ |

ຄຳສຳລັບໃຊ້ປະສົມ ຫລື ໃຊ້ແທນ ເຫລົ່ານີ້ ຕ້ອງປະສົມໄວ້ທາງຫນ້າສະ
ແລະ ຄຳຈຳພວກນີ້ ຈະແຍກໃຊ້ແຕ່ຄຳດຽວໂດຍລຳພັງບໍ່ໄດ້ ເຫມືອນດັ່ງ
ເວົ້າວ່າ "ຂ້ອຍເຫັນຊາວ ຂ້ອຍເຫັນຜູ້" ດັ່ງນີ້ຍ່ອມບໍ່ໄດ້ຄວາມຫມາຍເລີຍ

໔.໕– ຄຳປະສົມທີ່ໄດ້ມາຈາກ ຄຳເກົ່າ ໃນພາສາບາລີ ຫລື ສັນ
ກຣິດ ນັ້ນເອີ້ນວ່າ ຄຳສມາດ. ໂຕຢ່າງ : ຣາຊການ ຣັຖບານ ຣັຖມົນຕີ ຣ
ໂອຣົດ ສຸຂພາບ ວິທຍາສາດ ວິທຍາລັຍ ຯລຯ.

# ບົດທີ ໖

## *ວິທີແຜງອັກສອນ ແລະ ແຜງຄຳເວົ້າ*

໑. <u>ວິທີແຜງອັກສອນ</u> – ວິທີແຜງອັກສອນ ແມ່ນການປ່ຽນສຣະ ຫລື ພະຍັນຊນະໃນຄຳບາລີ ແລະສັນສະກຣິດ ມາເປັນຕົວໃຫມ່ໃນຄຳລາວ ເພື່ອໃຫ້ສະດວກ ແລະ ຖືກຕ້ອງຕາມສຳນຽງຂອງເຮົາ. ສຣະທີ່ແຜງໄດ້ນັ້ນ ມີ:

ສຣະ x ະ xາ xິ xີ xຸ xູ ເx ໂx ໄx ໂດຢ່າງ:

| ສຣະ | ຄຳເກົ່າ | ຄຳລາວ |
|---|---|---|
| xິ ແຜງເປັນ xີ ເx | ສິລາ | ສີລາ ເສລາ |
| xິ " xີ ໄx | ດິ | ດີ ໄດ |
| ເx " ໄx | ເວຍຍາກະຣະນະ | ໄວຍາກອນ |
| xຸ " xູ ໂx | ປຸຣານະ | ບູຣານ ໂບຣານ |

ເມື່ອເອົາຄຳບາລີ ຫລື ສັນສະກຣິດ ມາໃຊ້ເປັນຄຳລາວ ພະຍັນຊນະບາງໂຕ ອາດແຜງໄປຢ່າງອື່ນໄດ້ ເຊັ່ນ:

| ພຍັນຊນະ | ຄຳເກົ່າ | ຄຳລາວ |
|---|---|---|
| ຕ ແຜງເປັນ ດ | ຕາຣາ | ດາຮາ |
| ວ " ພ | ວິທີ | ພິທີ |
| ປ " ບ | ປັນດິຕະ | ບັນດິດ |
| ປ " ຜ | ປາສາທະ | ຜາສາດ |
| ຮ " ຣ | ປຸຮານະ | ບູຣານ |

໖.–ຄຳແຜງ – ຄຳແຜງ ແມ່ນຄຳທີ່ປ່ຽນແປງດ້ວຍວິທີຕ່າງໆຈາ ຄຳມູນ ຈາກຄຳຕ່າງປະເທດ ຫລືຄຳເກົ່າ ໃຫ້ຜິດຈາກຮູບເດີມຂອງຄຳ ເພື່ ໃຊ້ໃນການແຕ່ງບົດປະພັນ ຫລືຮຽບຮຽງຄຳເວົ້າ ໃຫ້ມ່ວນ ແລະ ເໝາະສ ໂຕຢ່າງ :

| ຄຳເດີມ | ຄຳແຜງ |
|---|---|
| ເດີນ | ດຳເນີນ |

ເມື່ອຄຳເດີມຂຍາຍອອກ ເປັນຄຳແຜງແລ້ວ ພຍາງທ້າຍມັກມີສ ດຽວກັບສຽງຂອງຄຳເດີມ.

| ຄຳເດີມ | ຄຳແຜງ |
|---|---|
| ເກີດ | ກຳເນີດ (ພຍາງທ້ |

ອ່ານວ່າ ເຫນີດ ຫລື ເນີດ) ແຕ່ມີຂໍ້ຍົກເວັ້ນ ເຊັ່ນ: ສຽງ ຄຳແຜງຂຽນແ ອ່ານວ່າ ສຳນຽງ ບໍ່ອ່ານວ່າ ສຳຫນຽງ ຄຳເດີມສ່ວນຫລາຍ ແມ່ນຄຳ ຖ້າແມ່ນຄຳເກົ່າ ກໍຕ້ອງດັດແປງມາເປັນຄຳລາວເສັຽກ່ອນ ແລ້ວຈຶ່ງແ ເປັນຄຳແຜງ ອີກຕໍ່ນຶ່ງ.

| ຄຳເດີມ | ຄຳແຜງ | ຄວາມຫມາຍ |
|---|---|---|
| ກິດ | ກຳນົດ | ຂີ້ບັງຄັບ |
| ຈົງ (ຈົ່ງ) | ຈຳນົງ | ຫມາຍ, ຕັ້ງໃຈ |
| ຈອງ | ຈຳນອງ | ຜູກ |
| ແຈກ | ຈຳແນກ | ປາຍ, ແບ່ງ |
| ຈ່າຍ | ຈຳຫນ່າຍ | ແຈກ, ຂາຍ |
| ເສັດ | ສຳເຣັດ | ແລ້ວ |
| ສະແດງ | ສຳແດງ | ເຣັດໃຫ້ເຫັນ |
| ແຕ່ງ | ຕຳແຫນ່ງ | ຕັ້ງ,ຈັດໃຫ້ງາມ, ຫນ້າທີ່ |
| ອາດ | ອຳນາດ | ກ້າ, ສິດ |
| ອວຍ | ອຳນວຍ | ໃຫ້ |
| ລຸດ | ຊຳລຸດ | ເພ, ໂປດເປ່ |
| ຊານ (ປ. ຊັບບະ) | ຊຳນານ | ເຄີຍຮູ້ຢ່າງລັກແນ່ |

ຟ – ການແຜງຄຳ – ເພື່ອແຜງຄຳເວົ້າໃຫ້ກ່າງອອກໄປ ເຣົາຕ້ອງອາສັບ ຄຳອຸປສັກ ຄຳປັດຈັບ ແລະ ຄຳສົນທິ:

ຟ.໑– ຄຳອຸປສັກ (Préfixes) – ຄຳອຸປສັກ ແມ່ນຄຳທີ່ປະກອບຫນ້າສັບ ເພື່ອຂຍາຍຄວາມຫມາຍຂອງສັບນັ້ນໃຫ້ກ່າງອອກໄປ ແຕ່ບໍ່ນັບເປັນຄຳນຶ່ງຕ່າງຫາກ ຄຳອຸປສັກທີ່ໃຊ້ນຳຫນ້າຄຳບາລີ ແລະ ສັນສະກຣິດມີດັ່ງຕໍ່ໄປນີ້:

ສຸ ແຜງເປັນ ໂສ ສຸວະ ເສົາວະ ສຸອະ ສ໋ອະ ແປວ່າ ດີ ງາມ ງ່າຍ

ສະດວກ ໂດຍ່າງ:

ສຸພາວະ ແປງເປັນຄຳລາວ ສຸພາບ ໃສພາບ (ຮຽບຮ້ອຍ)

ສຸຄັນທະ ແປງເປັນຄຳລາວ ສຸຄັນທາ ສຸຄັນໂທ ສຸຄັນ ສຸຄົນ ສຸ

ຄົນ ເສົາວະຄົນ (ເຄື່ອງຫອມ).

ສຸຈຣິຕະ ແປງເປັນຄຳລາວ ສຸຈຣິດ (ສັດຊື່)

ສຸເລຂະ " ສ່ຣະເລກ (ຜູ້ຂຽນຫນັງສື)

ທຸ ແປງເປັນ ທໍຣະ ທຸຣະ ທຸຈະ ທຸພະ ແປວ່າ ຊົ່ວ ບາກ ລຳບ

ໂດຍ່າງ:

| | | | |
|---|---|---|---|
| ທຸຊນະ | ແປງເປັນ | ທຸຊົນ | ທໍຣະຊົນ (ຄົນຊົ່ວ) |
| ທຸບສະ | " | ທໍຣະບົດ | (ຫັກຫລັງ) |
| ທຸວິສະ | " | ທໍຣະພິດ | (ພິດຮ້າຍ) |
| ທຸຄມະ | " | ທຸຣະຄົມ | (ທາງລຳບາກ) |
| ທຸຈຣິຕະ | " | ທຸຈຣິດ | (ບໍ່ສັດຊື່) |

ທຸພລະ + ພາວະ ແປງເປັນ ທຸບພົລພາບ (ອ່ອນແອ)

ນິ ແປງເປັນ ນິຣະ ເນຣະ ນິທະ ນະຣື ແປວ່າ ບໍ່ ບໍ່ມີ ປາສະ

ໂດຍ່າງ:

ນິທຸກຂະ ແປງເປັນ ນິຣະທຸກ (ປາສຈາກຄວາມທຸກ)

ນິໂທສະ " ນິຣະໂທດ (ຍົກໂທດໃຫ້)

ນິຄຸນະ ແປງເປັນ ເນຣະຄຸນ (ບໍ່ຮູ້ບຸນຄຸນ)

ນິພານະ " ນິພານ ນິບພານ (ບໍ່ເສດບໍ່ເຫລືອ ຫມາຍ ຄວາມວ່າ ຕາຍ ສໍາລັບພຣະພຸທເຈົ້າ)

ສໍ (ສນິຄຫິດ) ແປງເປັນ ສັງ ສັນ ສັມ ສົງ ສົນ ສົມ ແປວ່າ ຮ່ວມ ເອງ ພ້ອມ ດີ ໂດຍ່າງ:

ສໍຄມະ ແປງເປັນ ສັງຄົມ (ປູ່ຮ່ວມກັນ)

ສໍອາຄມະ " ສະມາຄົມ (ໄປມາຫາສູ່ກັນ)

ສໍຄຫະ " ສົງເຄາະ (ຊ່ວຍເຫລືອກັນ)

ສໍຈຣະ " ສັນຈອນ ສົນຈອນ (ການທ່ຽວໄປມາຮ່ວມກັນ)

ສໍພາສະ " ສົນພາດ (ການເວົ້າກັນ)

ວິ ແປງເປັນ ພິ ແປວ່າ ຕ່າງ ວິເສດ ຜິດທັມມະດາ ໂດຍ່າງ

ວິວິທະ+ພັນດະ ແປງເປັນ ພິເນິທພັນ (ເຄື່ອງຕ່າງໆທີ່ແປກປລາດ).

ອພິ ແປວ່າ ຍິ່ງ ໃຫຍ່ ສະເພາະ ໂດຍ່າງ: ອພິປາລະ ແປງເປັນ ອະພິບານ (ຄຸ້ມກອງ).

ອຕິ ແປວ່າ ຍິ່ງ ເກີນ ລ່ວງ ໂດຍ່າງ: ອຕິຕະ ແປງເປັນ ອະດີດ (ທີ່ລ່ວງໄປແລ້ວ)

ອນຸ ແປວ່າ ນ້ອຍ ຕາມ ພາຍຫລັງ ໂດຍ່າງ: ອນຸຊະ ແປງ ເປັນ ອະນຸຊາ (ເກີດລຸນຫລັງຫມາຍເຖິງນ້ອງຊາຍ).

ອຸປ ແປວ່າ ຮອງ ໃກ້ ໂດຍ່າງ: ອຸປຣາຊະ ແປງເປັນ ອຸປຣາດ

(ຮອງຄໍພຣະຣາຊາ); ອຸປຮາດ (ຮອງຄໍເຈົ້າເມືອງ).

ອາ ໃຊ້ສຳລັບ ປີ້ນຄວາມຫມາຍ (ກົງກັນຂ້າມ) ໂດຍ່າງ:

ຄມະ ແປວ່າ ໄປ; ອາຄມະ ແປວ່າ ມາ.

ອະ (ຄຳປະດິເສດ) ແປວ່າ ບໍ່ ບໍ່ມີ ບໍ່ເປັນ ໂດຍ່າງ:

ອທັມມະ ແຜງເປັນ ອະທັມ (ບໍ່ມີສິລທັມ).

ປ.໒– ຄຳປັດຈັບ (Suffixes) – ຄຳປັດຈັບແມ່ນຄຳທີ່ໃຊ້ປະກອ ທ້າຍສັບ ບາງທີ ກໍ່ຕໍ່ທ້າຍສັບ ແຕ່ບໍ່ນັບເປັນຄຳນຶ່ງຕ່າງຫາກ ຄຳປັດຈ ທີ່ໃຊ້ຕໍ່ທ້າຍຄຳບາລີ ແລະສັນສະກຣິດ ມີດັ່ງຕໍ່ໄປນີ້:

ກ ແປວ່າ ຜູ້ ໂດຍ່າງ:

| | | | | |
|---|---|---|---|---|
| ຈຣກ | ແຜງເປັນ | ຄຳລາວ | ຈໍຣະກາ | (ຜູ້ທ່ຽວ) |
| ທາຍກ | " | " | ທາຍົກ | (ຜູ້ໃຫ້) |
| ນາຍກ | " | " | ນາຍົກ | (ຫົວຫນ້າ, ຜູ້ນຳ |
| ທາຣກ | " | " | ທາຣະກາ ທາຣົກ | (ເດັກນ້ອຍອ່ອ |

ນ ແປວ່າ ການ ຄຳ ຄວາມ ໂດຍ່າງ:

| | | | | |
|---|---|---|---|---|
| ຄມນ | ແຜງເປັນ | ຄຳລາວ | ຄະມະນະ | (ການໄປ) |
| ສາສນ | " | " | ສາສນາ | (ຄຳສອນ) |
| ມຣະນ | " | " | ມໍຣະນາ | (ຄວາມຕາຍ) |

ຕາ ແປວ່າ ການ ຄວາມ ໂດຍ່າງ:

ກຕັນຍຸຕາ ແຜງເປັນ ຄຳລາວ ກະຕັນຍຸຕາ (ການຮູ້ບຸນຄຸ

ອນິບ ແປວ່າ ຄວນ ເພິ່ງ ເປັນຕາ ຕົວຢ່າງ:

ກຣອນິບ ແຜງເປັນ ຄຳລາວ ກ່ຣະນິບະ ກ່ຣະນີ (ຄວນເຮັດ)

ທັສສອນິບ ແຜງເປັນ ຄຳລາວ ທັສນິບະ ທັສນີ (ເປັນຕາເບິ່ງ

ເປສອນິບ " " ໄປສະນີ (ຄວນສົ່ງໄປ ຫມາຍ

ເຖິງ ໂຮງສານ ທີ່ມີຫນ້າທີ່ຮັບສົ່ງຫນັງສື ຫລື ສິ່ງຂອງໄປເຖິງບ່ອນຕ່າງໆ

ສລັກຫລັງ).

໓.໓ ວິທີສົນທິ – ສົນທິ ແປວ່າ ຕໍ່ ວິທີສົນທິ ແມ່ນການເອົາຄຳ

ເຄົ້າບາລີ ຫລື ສັນສະກຣິດສອງຄຳ ຫລື ຫລາຍຄຳມາປະກອບເຂົ້າກັນໃຫ້

ເປັນຄຳດຽວ ຄຳທີ່ປະກອບເຂົ້າກັນດັ່ງນີ້ ເອີ້ນວ່າ "ຄຳສມາດ" ຄຳໃດຄຳ

ນຶ່ງ ທີ່ປະກອບເຂົ້າກັນເປັນຄຳປະສົມນັ້ນ ເອີ້ນວ່າ "ສມາດ".

ເພື່ອຈະຕໍ່ຄຳເຄົ້າ ເພິ່ນເອົາສຣະຫນ້າ ກັບ ສຣະຫລັງ ມາສົນ

ກັນ. ສຣະຫນ້າ ແມ່ນສຣະທ້າຍຂອງຄຳຕົ້ນ; ສຣະຫລັງ ແມ່ນ ສຣະຕົ້ນ

ຂອງຄຳຫລັງ. ສຣະຫລັງ ຕ້ອງປະກອບກັບ ອ ຈຶ່ງຈະມີການປ່ຽນແປງ

ຕາມວິທີສົນທິໄດ້.

ວິທີສົນທິ ມີລະບຽບດັ່ງຕໍ່ໄປນີ້:

ຫມວດ ໑- ສຣະຫນ້າ ແມ່ນ ສຣະ xະ ຫລື xາ

໑.໑- ອະ ຫລື ອາ= xາ

ໂດຍ່າງ: ສຸຂະ + ອພິປາລະ = ສຸຂາພິບານ (ການຮັກສາໃຫ້ປູດີມີແຮ

໑.໒- ອັ = xັx

ໂດຍ່າງ: ມະຫາ + ອັສຈັອບະ = ມະຫັສຈັບ (ງິດງ້ຢ່າງໃຫຍ່ຫລວງ)

໑.໓- ອິ = xິ ຫລື ເx

ໂດຍ່າງ: ບຣະ + ອິນທະ= ບະອິນ ບໍອິນ (ພຣະອາຊາ)

ມຫາ + ອິສີ = ມະເຫສີ (ພຣະອາຊີນີ)

໑໔ – ອຸ=xຸ ຫລື xູ ຫລື ໂx

ໂດຍ່າງ: ອາຊະ + ອຸປັດຖັມພະ=ອາຊູປະຖັມ (ການຄ້ຳຊູຂອງພຣະອາ

ບບະ + ອຸປາບະ= ບະໂບບາບ (ວິທີກຳເນີນການເມືອງ)

໑໕ – ເອ ໄອ ໂອ ເອົາ ໂຮມເຂົ້າກັນເປັນໂວດງວການສຣະຫ

ໂດຍ່າງ: ມະຫາ + ໂອສດຸະ = ມະໂຫ ອິດ (ປາສັກສິດ)

## ຫມວດ ໒ – ສຣະຫນ້າ ແມ່ນ xິ ຫລື xີ

໒໑ – ອິ ຫລ ອີ ໂຮມເຂົ້າກັນເປັນໂດວງວດານສຣະເດີມ.

ໂດຍ່າງ: ມຸນີ+ອິນທະ =ມຸນິນ (ຈອມນັກປຣາດ ຫມາຍເຖິງພຣະພຸທ

໒.໒ – ສຣະອື້ນ ສຣະຫນ້າປ່ງນເປັນດົວ ບ

ໂດຍ່າງ: ມຕິ + ອທິປາບະ = ມຕບ + ອທິປາທະ =ມັຕບາທິບານ (ອ

ບາບຄວາມເຫັນ).

## ໝວດ ໗ – ສຣະໜ້າ ແມ່ນ ×ຸ ຫລື ×ູ

໗.໑ – ອຸ ຫລື ອູ ໂຮມເຂົ້າກັນເປັນໂດຽວຕາມສຣະເດີມ ໂຕຢ່ ຄຣຸ + ອຸປັຕຖັມພະ = ຄຣູປະຖັມ (ຄວາມເບິງແຍງຂອງຄຣູບາອາຈານ).

໗.໒ – ສຣະອື່ນ ສຣະໜ້າປ່ຽນເປັນໂຕ ວ

ໂຕຢ່າງ: ທນຸ + ອາຄມ = ທນວ + ອາຄມ = ທັນວາຄົມ (ຕັດຄົມອ ເປັນ ທັນວາ = ຊື່ ເດືອນຊີ້ງຣາສີແມ່ນທະນູ).

# ບົດທີ່ ໓

## *ປະເພດຂອງຄໍາເວົ້າແປດຢ່າງ*

ຄໍາເວົ້າທັງຫລາຍ ໃນພາສາລາວ ແບ່ງເປັນ ໘ ຈໍາພວກ
**( Les huit parties du discours)**

໑ ຄໍານາມ (Le nom)

໒. ຄໍາສັພນາມ (Le pronom)

໓. ຄໍາຄຸນສັບ (L'adjectif)

໔. ຄໍາກິີຣິຍາ (Le verbe)

໕. ຄໍາກິຣິຍາວິເສດ (L'adverbe)

໖. ຄໍາບຸພບົດ (La préposition)

໗. ຄໍາສັນທານ (La conjonction)

໘. ຄໍາອຸທານ (L'interjection)

ຄໍານາມ ແມ່ນ ຄໍາທີ່ເປັນຊື່ຄົນ ສັດ ແລະ ສິ່ງຂອງທົ່ວໄປ.

ຄໍາສັພນາມ ແມ່ນ ຄໍາແທນຊື່

ຄໍາຄຸນສັບ ແມ່ນຄໍາທີ່ສະແດງລັກສນະອາການຂອງຄໍານາມ ແລ ຄໍາສັພນາມ.

ຄໍາກິຣິຍາ ແມ່ນ ຄໍາທີ່ສະແດງກິຣິຍາອາການຂອງນາມ ແລ ສັພນາມ.

ຄຳກິລິຍາວິເສດ ແມ່ນ ຄຳປະກອບຄຳກິລິຍາ ຫລື ຄຳກິລິຍາ ດ້ວຍກັນ.

ຄຳບຸພບົດ ແມ່ນ ຄຳປະກອບຫນ້າ ຄຳນາມ ຫລື ຄຳກິລິ

ຄຳສັນທານ ແມ່ນ ຄຳທີ່ໃຊ້ຕໍ່ຄຳກັບຄຳ, ປໂຍກກັບປໂຍກ ຂໍ້ຄວາມນຶ່ງ ກັບຂໍ້ຄວາມນຶ່ງ.

ຄຳອຸທານ ແມ່ນ ຄຳນຶ່ງທີ່ສະແດງເຖິງສຽງຜິດປົກກະຕິ.

# ຫມວດທີ່ ໑

## ຄຳນາມ

ຄຳນາມ ແມ່ນຄຳຈຳພວກທີ່ໃຊ້ເປັນຊື່ທົ່ວໄປ ຄື ຄົນ ສັດ ຂອງ ທີ່ມີຮູບ ຫລື ບໍ່ມີຮູບກໍຕາມ ດັ່ງຄຳວ່າ ຄົນ ນົກ ມ້າ ດິນ ນ້ຳ ລົມ ເມືອງ ຈິດ ວິນຍານ ເປັນຕົ້ນ.

ຄຳນາມ ມີສອງຈຳພວກ ຄື ສາມັນຍະນາມ ແລະ ວິສາມັນຍະ

໑. ສາມັນຍະນາມ (le nom commun)

ສາມັນຍະນາມ ແມ່ນ ຄຳທີ່ເປັນຊື່ຂອງ ຄົນ ສັດ ຫລື ສິ່ງ ທົ່ວໄປບໍ່ມີຈຳກັດ ດັ່ງຄຳວ່າ ປະເທດ ບ້ານ ເມືອງ ຄົນ ສັດ ພຶກ ຫມູ ເປັນຕົ້ນ ຄຳສາມັນຍະນາມ ແບ່ງອອກເປັນ ៤ ຈຳພວກ:

໑ ໑ – ປົກຕິນາມ ແມ່ນ ຄຳຈຳພວກທີ່ເປັນຊື່ທັມມະດາ ດັ່ງ ປະເທດ ບ້ານ ເມືອງ ຄົນ ສັດ ເປັນຕົ້ນ.

໑.໖ – ສມຸຫະນາມ ແມ່ນ ຄຳຈຳພວກທີ່ເປັນຊື່ໃຊ້ຮ່ວມ ເຊິ່ງໃດ້ແກ່:

ເຫລົ່ານີ້: ກອງ ຫມວດ ຫມູ່ ພັກ ພວກ ຄນະ ບໍຣິສັດ ສົງ ຝູງ ...
ຊຸມ ເຫຼົ່າ ກໍ ໂຄດ ວົງ ນິກາຍ ຣັຖບານ ສະໂມສອນ ສັງຄົມ ...
ກະຊວງ ເປັນຕົ້ນ.

໑໗ – ລັກສນະນາມ ແມ່ນ ຄຳຈຳພວກ ປົກຕິນາມ ແລະ ສມຸຫະນາມ ນັ້ນເອງ ແຕ່ເອົາມາໃຊ້ບອກລັກສນະຂອງຄຳນາມທີ່ຢູ່ຂ້າງຫນ້າ ... ຄຳວ່າ ມ້າສາມໂຕ ຫມາກແຕງຫ້າຫນ່ວຍ ເຮືອນສອງຫລັງ ຄຳວ່າ ... ຫນ່ວຍ ຫລັງ ນີ້ ຮຽກວ່າ ລັກສນະນາມ.

ຄຳລັກສນະນາມ ຕ້ອງຢູ່ຫນ້າຄຳນິບົມຄຸນສັບ ຫລື ຢູ່ທ້າຍ ... ສັງຂຍາວິເສດ ຕັ້ງແຕ່ສອງຂຶ້ນໄປສເມີ ຖ້າຫາກວ່າ ຄຳສັງຂຍາວິເສດ ... ແມ່ນ ຈຳນວນນຶ່ງ ຄຳທີ່ເປັນ ລັກສນະນາມ ຕ້ອງຢູ່ຂ້າງຫນ້າ ຄຳສັງຂ... ດັ່ງຄຳວ່າ: ຄວາຍໂຕນຶ່ງ ເຮືອນຫລັງນຶ່ງ ຄົນຜູ້ດຽວ ສໍແທ່ງດຽວ ດັ່ງ... ເປັນຕົ້ນ ນອກຈາກນີ້ ຈະໃຊ້ຄຳສາມັນຍະນາມຊື່ດຽວກັນເປັນລັກສນະນາມ ກໍໄດ້ ດັ່ງຄຳວ່າ ວັດສາມວັດ ບ້ານສາມບ້ານ ເມືອງສາມເມືອງ ຄຳ... ວັດ ບ້ານ ເມືອງ ທີ່ຢູ່ຂ້າງທ້າຍ ນີ້ເປັນ ລັກສນະນາມ ຄຳລັກສນະນາມ... ສຳຄັນຫລາຍ ຕ້ອງສັງເກດໃຫ້ຄັກແນ່ ຖ້າໃຊ້ບໍ່ຖືກລະບຽບ ເອົາໄປປົນ... ກໍບໍ່ເປັນຫນ້າຟັງ ດັ່ງຈະໃຊ້ວ່າ ຄວາຍສາມຮູບ ຖ້ວຍສາມອັນ ຄົນສາມ... ດັ່ງນີ້ ກໍບໍ່ສົມຄວນ ດັ່ງນັ້ນຈຶ່ງຄວນຮູ້ລັກສນະນາມເປັນຫມວດໆຕາມທີ່ກ... ໃຊ້ ດັ່ງນີ້:

## ຕອນທີ ໑ – ລັກສນະນາມບອກຊນິດ

| ລັກສນະນາມບອກຊນິດ | ໂຕຢ່າງ |
|---|---|
| ພຣະອົງ | ພຣະພຸທເຈົ້າສອງພຣະອົງ |
| ອົງ | ເທວະດາສາມອົງ |
| ຮູບ ຕົນ | ພິກຂຸສາມຮູບ ຫລື ສາມຕົນ |
| ໂຕ ຕົວ | ນົກສອງໂຕ ຫລື ສອງຕົວ |
| ໃບ | ຖ້ວຍສອງໃບ, ຖ້ວຍໃບນີ້ |
| ເບື້ອງ | ຂອງສາມເບື້ອງ |
| ເຣືອງ | ນິທານຫ້າເຣືອງ |
| ຢ່າງ ສິ່ງ ອັນ | ຂອງສອງຢ່າງ, ຂອງຢ່າງນັ້ນ |
| ຫນ່ວຍ | ຫມາກແຕງສິບຫນ່ວຍ, ຫມາກແຕງຫນວ |
| ແນວ | ຂອງສອງແນວ, ຂອງແນວນີ້ |
| ບອກ | ປືນສາມບອກ, ປືນບອກນີ້ |
| ເຫລັ້ມ ລຳ | ກວຽນສອງເຫລັ້ມ, ເຮືອສອງລຳ |
| ຫົວ | ປື້ມສາມຫົວ |
| ຕົ້ນ | ຕົ້ນໄມ້ສາມຕົ້ນ, ຕົ້ນໄມ້ຕົ້ນນີ້ |
| ຄູ່ | ງົວຄູ່ນຶ່ງ |
| ກອງ | ຫີນຫ້າກອງ, ຫີນກອງນີ້ |
| ພວກ | ຄົນສອງພວກ |
| ຫມູ່ ຫມວດ | ທະຫານສາມຫມວດ |
| ຝູງ | ນົກສອງຝູງ, ນົກຝູງນີ້ |

| | |
|---|---|
| ຄນະ | ຄນະກັມມະການສອງຄນະ |
| ນິກາຍ | ສົງສອງນິກາຍ |
| ສຳລັບ | ເຄື່ອງນຸ່ງສອງສຳລັບ |
| ຕັບ | ເຈັ້ງສອງຕັບ |
| ແບກ | ຟືນສອງແບກ |
| ຯລຯ | ຯລຯ |

ຕອນທີ ໖ – ລັກສນະນາມບອກສັນຖານ

| ລັກສນະນາມບອກສັນຖານ | ໂຕຢ່າງ |
|---|---|
| ວົງ | ແຫວນສອງວົງ |
| ຫລັງ | ເຮືອນສອງຫລັງ, ເຮືອນຫລັງພຸ້ນ |
| ແຜ່ນ | ແປ້ນສອງແຜ່ນ |
| ຜືນ | ຜ້າສອງຜືນ, ຜ້າຜືນນີ້ |
| ແທ່ງ | ສໍຂາວສາມແທ່ງ, ສໍດຳສາມແທ |
| ກ້ອນ | ຫີນສອງກ້ອນ |
| ຄັນ | ຄັນຮົ່ມສອງຄັນ |
| ລຳ | ໄມ້ໄຜ່ຫ້າລຳ, ໄມ້ໄຜ່ລຳນີ້ |
| ເສັ້ນ | ເຊືອກສອງເສັ້ນ |
| ກອກ | ປາສາມກອກ |
| ຯລຯ | ຯລຯ |

໑.໔ – <u>ອາກາຣະນາມ</u> ແມ່ນ ຄຳກິຣິຍາ ຫລື ຄຳກິຣິຍາ ໃຊ້ຄຳວ່າ ການ ຄຳ ຫລື ຄວາມ ນຳໜ້າ ໂດຍ່າງ ຄຳວ່າ ການ ມາ ການຢູ່ ການນອນ ຄວາມກິນ ຄວາມຄຶດ ຄວາມດີ ຄວາມຊົ່ວ

໒. <u>ວິສາມັນຍະນາມ</u> (le nom propre)

ວິສາມັນຍະນາມ ແມ່ນຄຳຈຳພວກທີ່ເປັນຊື່ຈຳເພາະຂອງ ຫລື ສິ່ງຂອງອັນໃດອັນນຶ່ງ ດັ່ງຄຳວ່າ ທ້າວຄຳແພງ ນັກດ່າງ ຈັນ ຣາຊອານາຈັກລາວ ແມ່ນ້ຳຂອງ.

## <u>ເຄື່ອງໝາຍຂອງຄຳນາມ</u>

ຕາມທັມມະດາ ຄຳໃນພາສາລາວ ເກືອບທຸກປະເພດ ໝາຍແຕ່ຢ່າງໃດຢ່າງນຶ່ງພາຍໃນຄຳ ເພື່ອບອກໃຫ້ຮູ້ຈຳນວນ ຂອງຄຳນັ້ນ ໆ ໂດຍ່າງ "ຄົນ" ບໍ່ມີອັນໃດບອກໃຫ້ຮູ້ເລີຍວ່າຄົນນີ້ ເປັ ຫລື ເພດຊາຍ ແລະ ມີຈຳນວນໜ້ອຍ ຫລື ຫລາຍ ຖ້າຢາ "ຄົນ" ເປັນຍິງ ຫລື ຊາຍຕ້ອງຫາຄຳອື່ນມາປະກອບວ່າ ຄົນຊາຍ

ສ່ວນໃນພາສາບາລີມີເຄື່ອງໝາຍໃນຄຳເອງ ໂດຍ່າງ ຄຳ: ຖ້າເປັນຄົນຊາຍຜູ້ດຽວ ເປັນ "ນະໂຣ" ຖ້າເປັນຄົນຊາຍຫລາຍຄົ "ນະຣາ" ຖ້າເປັນຄົນຍິງຄົນດຽວ ເປັນ "ນາຣີ" ຫລາຍຄົນ ເປັນ " ດັ່ງນີ້ເປັນຕົ້ນ.

ເຄື່ອງໝາຍສຳລັບບອກໃຫ້ຮູ້ຈັກຈຳນວນ ແລະ ເພດນີ້ ພ

ຮຽກວ່າ ວິພັດຕິ ຫລື ວິພັດ ສ່ວນໃນພາສາລາວເຮົາ ບໍ່ມີວິພັດເຫມືອນດັ່
ຄຳບາລີ ຕ້ອງອາສັຍຄຳປະເພດອື່ນ ມາປະກອບຫມາຍໃຫ້ຮູ້ໄດ້ ຫລື ອາສັ
ຄວາມຫມາຍຂອງຄຳນັ້ນໆບອກໃຫ້ຮູ້ເອງ ກໍມີ ເຄື່ອງຫມາຍຂອງຄຳນາ
ນີ້ມີ ໒ ຢ່າງ ຄື ເພດ ແລະ ວັຈນະ ຫລື ພົດ ດັ່ງຕໍ່ໄປນີ້:

໑. ເພດ (genre) ເອີ້ນຕາມບາລີວ່າ ລິງ (ລິງຄະ) ເພດ ແມ່ນຄວາ
ຫມາຍແນວນຶ່ງ ສຳລັບບອກໃຫ້ຮູ້ວ່າ ຄຳນາມນັ້ນໆເປັນ ຊາຍ ຫລື ຍິງ ຫ
ບໍ່ແມ່ນຊາຍ ບໍ່ແມ່ນຍິງ.

ຄຳນາມລາງພວກ ສະແດງຄວາມເປັນເພດຍິງ ຫລື ຊາຍ ຢູ່ພາ
ໃນຄຳເອງ ບໍ່ຕ້ອງມີຄຳອື່ນມາປະກອບກໍໄດ້ ໃດຢ່າງ:

ປຸງລິງ ແມ່ນ ເພດຊາຍ (genre masculin): ພໍ່ ອ້າຍ ເຂີຍ ປູ່ ລຸ
ອາວ ບ່າວ ບ້າບ່າວ.

ອິດຖີລິງ ແມ່ນ ເພດຍິງ (genre féminin): ແມ່ ເອື້ອຍ ຍ່າປ້າ ໃ
ສາວ ບ້າສາວ ແວ່ ລາງພວກ ຕ້ອງມີຄຳອື່ນມາປະກອບຫມາຍໃຫ້
ໃດຢ່າງ:

ຄຳຫມາຍ ເພດຊາຍ : ຜູ້ ເຖິກ ບັກ ດັ່ງ: ໄກ່ຜູ້ ມ້າເຖິກ ບັກແ
ຄຳຫມາຍ ເພດຍິງ : ແມ່ ອີ ນາງ ສາວ ດັ່ງ: ໄກ່ແມ່ ນາງແ
ລາວສີ ເປັນຕົ້ນ.

ເພດຂອງຄຳນາມມີ ໔ ຢ່າງ:

ກ. ປຸງລິງ ແມ່ນ ຄຳນາມທັງຫລາຍທີ່ບອກໃຫ້ຮູ້ວ່າ ເປັນຊາ
ຄຳນາມ ທີ່ເປັນເພດຊາຍນີ້ມີ ໒ ຈຳພວກ:

ກ.໑ – ຈຳພວກເພດຊາຍໃນໂຕເອງ ໄດ້ແກ່ຄຳດັ່ງຕໍ່ໄປນີ້:

ຄຳລາວແທ້: ປູ່ ພໍ່ ລຸງ ອາວ ອ້າຍ ເຂີຍ ຜົວ ຈົວ ພຣະ.

ຄຳບາລີ: ພິກຂຸ ສາມະເນນ ບັກ ຄະຫັດ ຫັດຖີ ຣາຊາ ກະ
ອິນ ເສດຖີ ພຣາມ ໂຈນ ກິນນະຣອນ ກຸມານ ທາບົກ ອຸປາສົກ ສາ
ທາຣົກ ຯລຯ

ກ.໒ – ຈຳພວກໃຊ້ຄຳໝາຍໃຫ້ເປັນຊາຍ ໄດ້ແກ່ຄຳດັ່ງຕໍ່ໄ

ສຳລັບຄົນ: ບາ ບັກ ນາຍ ຊຽງ ທິດ ຈານ ທ້າວ ຂຸນ ໝື່ນ ແ
ຫລວງ ເພັ້ງ ພຍາ ຊາຍ ບ່າວ.

ສຳລັບສັດ: ຜູ້ ເຖິກ ພາຍ (ຊ້າງພາຍ) ງໍ (ຊ້າງງໍ) ທ
(ໝູທອກ) ບາ (ງົວບາ).

ຂ. ອິດຖີລິງ ແມ່ນ ຄຳນາມທັງຫລາຍທີ່ບອກໃຫ້ຮູ້ວ່າ ເປັນ
ຄຳນາມທີ່ເປັນເພດຍິງນັ້ນມີ ໒ ຈຳພວກ:

ຂ.໑ – ຈຳພວກບອກເພດຍິງໃນໂຕເອງ ໄດ້ແກ່ຄຳດັ່ງຕໍ່ໄປນີ້

ຄຳລາວແທ້: ຍ່າ ແມ່ ປ້າ ອາ ໃພ້ ເອື້ອຍ ເມັຽ ຯລຯ

ຄຳບາລີ: ພິກຂຸນີ ສາມະເນຣີ ບັກຂີນີ ກິນນະຣີ ກຸມາຣີ ທາບິ

ຂ.໒ – ຈຳພວກໃຊ້ຄຳໝາຍໃຫ້ເປັນຍິງ ໄດ້ແກ່ຄຳດັ່ງຕໍ່ໄປນີ້

ສຳລັບຄົນ: ອີ ນາງ ສາວ

ສຳລັບສັດ: ແມ່ ພັງ (ຊ້າງພັງ)

ຄ. ນະປຸງສະກະລິງ ແມ່ນ ຄຳບໍ່ມີເພດ ຄຳນາມທັງຫລາຍ ທີ່ເປັນພາສາລາວແທ້ ນອກຈາກຄຳບອກເພດຊາຍ ແລະ ເພດຍິງ ດັ່ງກ່າວມາແລ້ວໃນຂໍ້ ໑ ແລະ ຂໍ້ ໒ ນັ້ນ ເປັນຄຳບໍ່ມີເພດທັງມວນດັ່ງຄຳວ່າ: ບ້ານ ເມືອງ ເງິນ ຄຳ ໃຈ ເຂົ້າຂອງ ດິນ ນົກ ມ້າ ຄວາຍ ເຮືອນ ເປັນຕົ້ນ.

໒ ພົດ (ວັຈນະ) (nombre) ແມ່ນ ເຄື່ອງຫມາຍແນວນຶ່ງ ສຳລັບໃຫ້ຮູ້ຈຳນວນຫນ້ອຍ ແລະ ຫລາຍຂອງນາມ. ຄຳທຸກຄຳ ທີ່ເປັນພາສາລາວແທ້ ບໍ່ມີເຄື່ອງຫມາຍສຳລັບບອກຈຳນວນພາຍໃນຄຳເອງ ຕ້ອງອາສັຍຄຳອື່ນຫມາຍໃຫ້ຮູ້ ໂດຍຢ່າງວ່າ: ຄົນ ສັດ ບ້ານ ເມືອງ ເປັນຕົ້ນ ຄຳດັ່ງກ່າວນີ້ ເຮົາບໍ່ຮູ້ວ່າ ມີຈຳນວນເທົ່າໃດ ແຕ່ຖ້າຢາກຮູ້ຈຳນວນ ຕ້ອງເຕີມຄຳອື່ນເຂົ້າດັ່ງນີ້:

ຄົນດຽວ ຝູງດຽວ ບ້ານທັງຫລາຍ ເມືອງນຶ່ງ ຄຳວ່າ "ດຽວ ຝູງ ທັງຫລາຍ ນຶ່ງ" ນັບເປັນວັຈນະຂອງຄຳນາມ. ວັຈນະ ຫລື ພົດຂອງຄຳນາມ ມີ ໓ ຢ່າງ:

ກ. ເອກພົດ (ເອກວັຈນະ) (singulier) ແມ່ນຄຳບອກຈຳນວນດຽວ ຄຳທີ່ໃຊ້ເປັນ ເອກວັຈນະ ຫລື ເອກພົດ ນັ້ນແມ່ນ ຄຳ: ດຽວ ນຶ່ງ ຫມູ່ນຶ່ງ ຂອງຫນ້ອຍ ເງິນຫນ້ອຍ ຯລຯ

ຂ. ພະຫຸພົດ (ພະຫຸວັຈນະ) (pluriel) ແມ່ນ ຄຳບອກຈຳນວນຫລາຍ ຕັ້ງແຕ່ "ສອງ" ຂຶ້ນໄປ ຄຳທີ່ໃຊ້ເປັນພະຫຸວັຈນະ ຫລື ພະຫຸພົດ ນັ້ນ ແມ່ນຄຳດັ່ງຕໍ່ໄປນີ້:

ຂ.໑ – ຄຳສັງຂະຍາ ແຕ່ສອງຂຶ້ນໄປ.

ຂ.໒ – ຄຳ: ມາກ ຫລາຍ ບັນດາ ພວກ ຫມູ່ ກອງ ຝູງ ທັງຫລາຍ ທັງມວນ ທັງປວງ ທັງຫມົດ ທັງສິ້ນ ເຫລົ່ານີ້ ເຫລົ່ານັ້ນ

ຄ. <u>ອະວັຈນະ ຫລື ອະພົດ</u> ແມ່ນ ຄຳບໍ່ບອກຈຳນວນ ຫລື ບໍ່ກຳນົດຈຳນວນໃນຄຳເອງດັ່ງກ່າວມາແລ້ວ ສະນັ້ນ ຄຳລາວທຸກຄຳ ນອກຈາກຄຳທີ່ໃຊ້ເປັນ ເອກວັຈນະ (ເອກພົດ) ແລະ ພະຫຸວັຈນະ (ພະຫຸພົດ) ແລ້ວ ນັບເປັນ ອະວັຈນະ (ອະພົດ) ທັງມວນ ໂດຍ່າງ: ຄົນ ບ້ານ ເມືອງ ນົກ ຕົ້ນໄມ້ ປ່າ ດິນ ຟ້າ ເປັນຕົ້ນ.

# ຫມວດທີ່ ໒

## *ຄໍາສັພນາມ*

ຄຳສັພນາມ ແມ່ນ ຄຳທີ່ໃຊ້ແທນນາມໄດ້ທຸກຢ່າງ ສະນັ້ນ ສັພນາມຈຶ່ງແປວ່າ ແທນຊື່ ຄຳເວົ້າທຸກພາສາຕ້ອງມີຄຳສັພນາມ ສຳລັບໃຊ້ແທນຄຳນາມ ທີ່ໄດ້ເວົ້າມາແລ້ວ ເພື່ອບໍ່ໃຫ້ຊ້ຳຄວາມເກົ່າ ໂດຍ່າງ ໃນປໂຍກວ່າ <u>ທ້າວສອນ</u> ເຫັນ <u>ທ້າວໃບ</u> <u>ທ້າວສອນ</u>ຈຶ່ງຖາມ <u>ທ້າວໃບ</u> ວ່າ <u>ທ້າວໃບ</u> ໄປໃສ ບໍ່ເຫັນມາຢາມ<u>ທ້າວສອນ</u> ດັ່ງນີ້ ຍ່ອມມີຄຳຊ້ຳກັນຫຼາຍຄຳ ຟັງແລ້ວ ບໍ່ມ່ວນເລີຍ ຖ້າໃຊ້ ຄຳສັພນາມ ແທນ ກໍຈະໄດ້ຄວາມດັ່ງນີ້:

ທ້າວສອນ ພົບ ທ້າວໃບ <u>ຜູ້ນີ້</u> ຈຶ່ງຖາມ <u>ລາວ</u> ວ່າ <u>ເຈົ້າ</u>ໄປໃສ

ບໍ່ເຫັນມາປານຂ້ອຍແດ່ ຄຳວ່າ ຜູ້ນີ້ ລາວ ເຈົ້າ ຂ້ອຍ ເປັນສັພນາມແນ ຄຳວ່າ ຫ້າວສອນ ແລະ ຫ້າວໃບ ດັ່ງນີ້ ເປັນຕົ້ນ.

ຄຳສັພນາມ ແບ່ງເປັນ ໗ ຈຳພວກ: ບຸຣຸດສັພນາມ ປະນ ທະສັພນາມ ນິຍົມສັພນາມ ອະນິຍົມສັພນາມ ສັມພັນທະສັພນ· ປຸດສາສັພນາມ ແລະ ວິພາກສັພນາມ.

໑. ບຸຣຸດສັພນາມ (le pronom personnel)

ບຸຣຸດສັພນາມ ແມ່ນ ຄຳທີ່ໃຊ້ແທນຊື່ ຄົນ ສັດ ຫລື ສິ່ງຂອງ ເວລາເວົ້າກັນ ບຸຣຸດສັພນາມ ມີ ໓ ຢ່າງ:

ກ. ປະຖົມບຸຣຸດ (ປະຖະມະບຸຣຸດ) (1ère personne)

ແມ່ນ ຄຳທີ່ໃຊ້ແທນຊື່ຂອງຜູ້ເວົ້າເອງ (ບຸກຄົນທີ ໑) ໄດ້ແກ່ຄຳເຫລົ່ານີ້: ຂ້ອຍ ຂ້ານ້ອຍ ຂ້າບາດ ຂ້າພຣະບາດ ກູ ຕູ ເຮົາ ເຜືອ ເຜືອະ ຕູຂ້າ ຂ້າພະເຈົ້າ ເປັນຕົ້ນ.

ຂ. ມັທຍົມບຸຣຸດ (ທຸຕິຍະບຸຣຸດ) (2è personne) ແມ່ນ ຄຳທີ່ແທນຊື່ຂອງຜູ້ທີ່ເຮົາເວົ້ານຳ (ບຸກຄົນທີ ໒) ໄດ້ແກ່ຄຳເຫລົ່ານີ້: ເຈົ້າ ມຶ ທ່ານ ອາດຍາ ພຣະອົງ ສູ ສູເຈົ້າ ເຂືອເຈົ້າ ເປັນຕົ້ນ

ຄ. ອຸດົມບຸຣຸດ (ຕະຕິຍະບຸຣຸດ) (3è personne) ແມ່ນ ຄຳສຳ ໃຊ້ແທນຊື່ຂອງຜູ້ທີ່ເຮົາເວົ້າຮອດ (ບຸກຄົນທີ ໓) ໄດ້ແກ່ຄຳເຫລົ່ານີ້: ມ ລາວ ເພິ່ນ ເຂົາ ຂາເຈົ້າ ເຂືອເຈົ້າ ເປັນຕົ້ນ.

໖. <u>ປະພັນທະສັພນາມ</u> (le pronom relatif) ປະພັນທະສັພ

ແມ່ນ ຄຳສຳລັບໃຊ້ແທນຄຳນາມ ຫລື ຄຳສັພນາມ ທີ່ຢູ່ຖັດກັນໄປ ໂດ ຄຳປໂຍກຕໍ່ໄປນີ້:

"ຂ້ອຍມັກມ້າ <u>ມ້າ</u>ແລ່ນຫັນ ຂ້ອຍມັກຄົນ <u>ຄົນ</u>ເວົ້າມ່ວນ ເຈົ້າ ກິນຂອງ<u>ຂອງ</u>ແຊບ" ຄຳວ່າ ມ້າ ຄົນ ຂອງ ຢູ່ຂ້າງຫລັງ ຖັດກັ "ມ້າ ຄົນ ຂອງ" ທີ່ຢູ່ຂ້າງໜ້ານັ້ນ ຕ້ອງໃຊ້ ຄຳສັພນາມແທນ ຈຶ່ ມ່ວນ ດັ່ງນີ້: ຂ້ອຍມັກມ້າ<u>ທີ່</u>ແລ່ນຫັນ ຂ້ອຍປາກກິນຂອງ<u>ອັນ</u>ແຊບ ຂ ມັກຄົນ<u>ເຊິ່ງ</u>ເວົ້າມ່ວນ ເຮືອນຫລັງໃຫຍ່ <u>ຊຶ່ງ</u>ເຮົາເຫັນຢູ່ແມ່ນຂອງໃຜ?

| | | | | |
|---|---|---|---|---|
| ຄຳວ່າ | ທີ່ | ແທນຄຳນາມ | ມ້າ | ທີ່ຢູ່ຕໍ່ຫນ້າ |
| " | ອັນ | " | ຂອງ | " |
| " | ເຊິ່ງ | " | ຄົນ | " |
| " | ຊຶ່ງ | " | ເຮືອນ | " |

ຄຳທີ່ໃຊ້ເປັນ ຄຳປະພັນທະສັພນາມ ນັ້ນ ແມ່ນຄຳ ທີ່ ອັນ ເຊິ່ງ ນີ້ ຕ້ອງລຽນຢູ່ຂ້າງຫລັງ ຄຳນາມ ຫລື ຄຳສັພນາມ ສເມີ.

໗. <u>ນິຍົມສັພນາມ</u> (le pronom défini ou démonstratif)

ນິຍົມສັພນາມ ແມ່ນ ຄຳສຳລັບໃຊ້ແທນ ນາມ ທີ່ກຳນົດໃຫ້ຮູ້ ນອນ ໂດຍຢ່າງ: <u>ນີ້</u>ຂອງຂ້ອຍ <u>ນັ້ນ</u>ຂອງເຈົ້າ <u>ພຸ້ນ</u>ຂອງເພິ່ນ. ຄຳວ່າ "ນີ້ ພຸ້ນ" ແມ່ນຄຳນິຍົມສັພນາມ.

ຄຳທີ່ໃຊ້ເປັນ ນິຍົມສັພນາມ ນັ້ນ ແມ່ນຄຳເຫລົ່ານີ້:

ນີ້ ໂດຍຢ່າງ: ໃຊ້ແທນຂອງຢູ່ໃກ້ ດັ່ງຄຳວ່າ ນີ້ຂອງເຈົ້າ.
ນັ້ນ " ໃຊ້ແທນຂອງຢູ່ໄກໄປອີກ ດັ່ງຄຳວ່າ ນັ້ນຂອງເຈົ້
ໜັ້ນ " ໃຊ້ແທນຂອງຢູ່ໄກຈັກໜ່ອຍ ດັ່ງຄຳວ່າ ໜັ້ ຂອງເພິ່ນ.
ພຸ້ນ " ໃຊ້ແທນຂອງຢູ່ໄກຫລາຍ ດັ່ງຄຳວ່າ ພຸ້ນຂອ ເຂົາ.

ໝາຍເຫດ–ຄຳນິບົມສັພນາມ (pronom défini) ແມ່ນຄຳຈຳພວກດຽວກັ ກັບ ຄຳນິບົມສັພນາມ (adjectif démonstratif) ແຕ່ມີຂໍ້ຕ່າງເກດຕ່າງກັນ ຄື

ກ ຖ້າປະກອບ ຄຳນາມ ດັ່ງຄຳວ່າ ຄົນນີ້ ບ້ານນັ້ນ ເຮືອນພຸ້ ຄຳວ່າ ນີ້ ນັ້ນ ພຸ້ນ ເປັນຄຳນິບົມຄຸນສັບ.

ຂ. ຖ້າບໍ່ມີ ຄຳນາມ ປຸ່ນຳ ຈຶ່ງເປັນ ນິບົມສັພນາມ ໂດຍຢ່າ ນີ້ຂອງເຈົ້າ ນັ້ນຂອງຂ້ອຍ ພຸ້ນຂອງເພິ່ນ ຄຳ ນີ້ ນັ້ນ ພຸ້ນ ໃນທີ່ນີ້ ເປັ ຄຳນິບົມສັພນາມ

໔. ອະນິບົມສັພນາມ (le pronom indéfini)

ອະນິບົມສັພນາມ ແມ່ນ ຄຳສຳລັບໃຊ້ແທນ ນາມ ທີ່ບໍ່ ກຳນົດແນ່ນອນ ໂດຍຢ່າງ: "ຂ້ອຍບໍ່ເຫັນໃຜ ພໍເປັນທີ່ເພິ່ງ ເຈົ້າຈະໄປໃ ກໍຕາມເຈົ້າ" ຄຳວ່າ ໃຜ ໃສ ໃນທີ່ນີ້ ແມ່ນ ຄຳອະນິບົມສັພນາມ.

ຄຳທີ່ໃຊ້ເປັນ ອະນິບົມສັພນາມ ນັ້ນ ແມ່ນຄຳເຫລົ່ານີ້: ຜູ້ອື່ ຜູ້ນຶ່ງ ຜູ້ນຶ່ງອີກ ບາງ ລາງ ພ່ອງ ລາງພ່ອງ ອັນໃດອັນນຶ່ງ.

ໃຜ ໃດຢ່າງ: ໃຜເຮັດກໍໄດ້ ໃຜເວົ້າກໍຕາມ

ຜູ້ໃດ ທີ່ໃດ ໃດຢ່າງ: ຜູ້ໃດເຮັດກໍໄດ້ ຈະໄປທີ່ໃດກໍໄດ້

ໃສ ອັນໃດ " ຈະໄປໃສກໍຕາມ ເອົາອັນໃດ

ຜູ້ໃດຜູ້ນຶ່ງ " ໃຫ້ຜູ້ໃດຜູ້ນຶ່ງ ໄປກໍໄດ້

ສິ່ງໃດສິ່ງນຶ່ງ " ເອົາສິ່ງໃດສິ່ງນຶ່ງກໍໄດ້

ທັງປວງ " ທັງປວງພັງງ ພລັບສານຊ້າງ

ທັງມວນ " ທັງມວນມາ ຢູ່ໂຮງພຍາເຈົ້າ

ທັງຫມົດ " ທັງຫມົດໃຫ້ ມາໂຮງພ້ອມພໍ່

໕. ສັມພັນທະສັພນາມ (le pronom possessif)

ສັມພັນທະສັພນາມ ແມ່ນ ຄໍາແທນນາມທີ່ບອກໃຫ້ຮູ້ວ່າ ຂອງຜູ້ໃດ ໃດຢ່າງ: ຫມວກຫນ່ວຍນີ້ແມ່ນ ຂອງເຈົ້າ ຂອງຂ້ອຍ ບໍ່ໄດ້ເອົາມາ ຂອງເຈົ້າ ຂອງຂ້ອຍ ແມ່ນ ສັມພັນທະສັພນາມ ເຈົ້າຂອງ.

໖. ປຸດສາສັພນາມ (le pronom interrogatif)

ປຸດສາສັພນາມ ແມ່ນ ຄໍາສໍາລັບໃຊ້ເປັນຄໍາຖາມ ໃດ ໃຜເວົ້າ? ເສື້ອຂອງຂ້ອຍຢູ່ໃສ? ຜູ້ໃດມາຫັ້ນ? ຄໍາວ່າ ໃຜ ໃສ ຜູ້ໃດ ຄໍາປຸດສາສັພນາມ ເພາະໃຊ້ແທນນາມທີ່ຍັງບໍ່ທັນຮູ້ຈັກ.

ຄໍາທີ່ໃຊ້ເປັນ ຄໍາປຸດສາສັພນາມ ນັ້ນ ແມ່ນຄໍາເຫລົ່ານີ້

ໃຜ ໂດຍ່າງ: ໃຜມາ ໃຜຢູ່ຫັ້ນ ອັນນີ້ຂອງໃຜ?
ຜູ້ໃດ " ຜູ້ໃດເວົ້າ ຜູ້ໃດມາຫັ້ນ?
ໃສ ຫນັງ " ເພິ່ນຢູ່ໃສ ແມ່ນຫຍັງ?

ຖ. ວິພາກສັພບານ (pronom partitif)

ວິພາກສັພບານ ແມ່ນ ຄຳສັພບານ ທີ່ໃຊ້ບອກການແບ່ງສ່ວ ການແຕກຕ່າງກັນ ຫລື ການກະທຳແກ່ກັນ ແລະ ກັນ ຄື ຕ່າງ ບາງພ່ອ ກັນ ເປັນຕົ້ນ.

ໂດຍ່າງ: ຊາວສວນ ຕ່າງກໍພາກັນປູກຕົ້ນໄມ້; ຊາວນາ ບາງພ່ອ ກໍໄຖນາ ບາງພ່ອງກໍຄຳນາ; ຊາວລາວມັກຊິດຊ່ວຍກັນ.

ຄຳສັພບານ: ຕ່າງ ບາງພ່ອງ ແລະ ກັນ ຊຶ່ງໃຊ້ແທນຄຳນາ: ທີ່ນຳຫນ້າ "ຊາວສວນ ຊາວນາ ແລະ ຊາວລາວ" ແມ່ນ ວິພາ ສັພບານ.

ຫມາຍເຫດ – ຄຳອະນິຍົມສັພບານ (pronom indéfini) ໃຜ ຜູ້ໃ ທີ່ໃດ ໃສ ແມ່ນ ຄຳດຽວກັນກັບປຸດສາສັພບານ (pronom interrogatif ແຕ່ໃຊ້ຕ່າງກັນ ຄື ຖ້າໃຊ້ເປັນຄຳຖາມ ແມ່ນ ປຸດສາສັພບານ ຖ້າໃຊ້ເປັ ຄຳທີ່ບໍ່ມີກຳນົດ ແມ່ນ ຄຳອະນິຍົມສັພບານ.

## ເຄື່ອງຫມາຍຂອງຄຳສັພບານ

ເຄື່ອງຫມາຍຂອງຄຳສັພບານ ມີແຕ່ພົດ (ວັຈນະ) ຢ່າງດຽ ແລະ ພົດນັ້ນ ກໍໃຊ້ແຕ່ ໒ ຢ່າງ: ເອກພົດ ແລະ ພະຫຸພົດ ດັ່ງຕໍ່ໄປນີ້:

໑. ເອກພົດ (ເອກວັຈນະ)– ຄຳສັພນາມ ທັງຫມົດ ທີ່ເປັນ ເອກພົດ (ເອກວັຈນະ) ບໍ່ມີເຄື່ອງຫມາຍແນວໃດບອກໃຫ້ຮູ້ ແຕ່ຫາກເປັນເອກພົດ ຢູ່ພາຍໃນຄຳເອງ ດັ່ງຄຳວ່າ ຂ້ອຍ ຂ້າພະເຈົ້າ ກູ ມຶງ ໃຜ ນີ້ ນັ້ນ ພຸ້ນ ເປັນຕົ້ນ.

໒. ພະຫຸພົດ (ພະຫຸວັຈນະ)–ຄຳສັພນາມ ທີ່ເປັນ ພະຫຸພົດ ນັ້ນມີ ໒ ຈຳພວກ ຄື:

ກ. ຈຳພວກເປັນ ພະຫຸພົດ ພາຍໃນຄຳເອງ ໄດ້ແກ່ຄຳດັ່ງຕໍ່ໄປນີ້:
ປະຖົມບຸຣຸດ (ປະຖະມະບຸຣຸດ) ເຮົາ ເພິ່ນ ດູ
ມັທທົມບຸຣຸດ (ທຸຕິຍະບຸຣຸດ) ສູ ສູເຈົ້າ ເຂົາເຈົ້າ
ອຸດົມບຸຣຸດ (ຕະຕິຍະບຸຣຸດ) ເຂົາ ຂາເຈົ້າ ກັນ (ຄົນຕິກັນ)

ຂ. ຈຳພວກຄຳອື່ນ ທີ່ໃຊ້ຫມາຍ ພະຫຸພົດນັ້ນ ຄື:
ພວກ ຫມູ່ ຝູງ ຊຸມ ຈຸ້ມ ຯລຯ ໂດຍຢ່າງ: ພວກເຈົ້າ ຫມູ່ຂ້ອຍ ຊຸມໃຜ ຯລຯ.

# ຫມວດທີ່ ໓

## ຄຳຄຸນສັບ (l'adjectif)

ຄຳຄຸນສັບ ແມ່ນ ຄຳທີ່ສະແດງລັກສນະອາການຂອງຄຳນາມ ແລະ ຄຳສັພນາມ ແບ່ງເປັນ ກ ຈຳພວກ:

໑. ລັກສນະຄຸນສັບ (Adjectif qualificatif)

໒. ສັນພັນທະຄຸນສັບ (adjectif possessif)

໓. ນິທິນຄຸນສັບ (adjectif démonstratif)

໔ ອະນິທິນຄຸນສັບ (adjectif indéfini)

໕ ປຸດສາຄຸນສັບ (adjectif interrogatif)

໖. ສັງຂຍາຄຸນສັບ (adjectifs numéraux)

໗. ປະມານຄຸນສັບ (adjectif quantitatif)

໑ ລັກສນະຄຸນສັບ ແມ່ນ ຄຳຈຳພວກທີ່ໃຊ້ບອກລັກສນະຕ່າງ ຂອງນາມ ແລະສັພນາມ ເພື່ອໃຫ້ຮູ້ວ່າ ນາມ ຫລື ສັພນາມ ນັ້ນ ແ ປ່າງໃດ ໂດຢ່າງ: ຄົນດີ ຕົ້ນໄມ້ໃຫຍ່ ເຮືອນສູງ ຜ້າແດງ ຄຳວ່າ ໃຫຍ່ ສູງ ແດງ ແມ່ນ ລັກສນະຄຸນສັບ.

ລັກສນະຄຸນສັບ ບອກລັກສນະ ອາການຕ່າງໆ ດັ່ງນີ້:

໑.໑ – ຂນາດ: ກວ້າງ ໃຫຍ່ ສັ້ນ ແຄບ ຍາວ ຮີ ຯລຯ

໑.໒ – ຊີວິດ: ດີ ຊົ່ວ ອ່ອນ ແກ່ ຫນຸ່ມ ສາວ ຯລຯ

໑.໓ - ສັນຖານ: ກົມ ແບນ ແຄບ ແປ ສູງ ຕ່ຳ ຯລຯ

໑.໔ – ສີ: ແດງ ຂາວ ດຳ ເຫລືອງ ແຫລ້ ມຸ່ບ ຯລຯ

໑.໕ – ກິ່ນ: ເຫມັນ ຄາວ ກຸບ ຂີວ ຫອມ ຯລຯ

໑.໖ – ສຽງ: ມ່ວນ ຄ່ອຍ ແຮງ ແຫບ ຄິບ ຯລຯ

໑.໗ – ຣົດ: ເຄັມ ເຜັດ ຫວານ ສົ້ມ ຈາງ ຯລຯ

໑.໘ – ສັມຜັດ: ອຸ່ນ ຮ້ອນ ຫນາວ ເຢັນ ຄາຍ ຯລຯ

໑.໙ – ອາການ: ໄວ ຊ້າ ສລາດ ໂງ່ ຈ້າ ຯລຯ

໖. ສັມພັນທະຄຸນສັບ ແມ່ນ ຄຳຈຳພວກທີ່ຫມາຍເຖິງເຈົ້າຂ
ບອກວ່າ ຄົນ ສັດ ຫລື ສິ່ງຂອງ ເຊິ່ງເຮົາເວົ້າຮອດນັ້ນ ແມ່ນ ຂອງຜູ້ໃ
ເຊັ່ນ:

ເສື້ອຂ້ອຍ ພໍ່ຂ້ອຍ ບິດາຂ້າພະເຈົ້າ ຫມວກມຶງ ສົ້ງເຈົ້າ ປຶ້ມຂ
ເຈົ້າ ສໍເຮົາ ຮູບມັນ ຄັນຮົ່ມລາວ ສີສະເພິ່ນ ໄມ້ຄ້ອນເຂົາເຈົ້າ ຖົງແ
ພວກເພິ່ນ.

ໂຕຢ່າງ. ພໍ່ຂ້ອຍ ແມ່ຂ້ານ້ອຍ ພໍ່ລາວ ຄຳວ່າ "ຂ້ອຍ ຂ້ານ້
ລາວ" ແມ່ນ ສັມພັນທະຄຸນສັບ.

ຖ້າຄຳເຫລົ່ານັ້ນ ຫາກໃຊ້ແທນ ຄຳນາມ ທີ່ກ່າວແລ້ວ ເຮົາກໍເ
ວ່າ ສັມພັນທະສັພນາມ

ໂຕຢ່າງ: ເສື້ອເຈົ້າ ງາມກວ່າຂອງຂ້ອຍ ເຈົ້າ ແມ່ນ ສັມພັນ
ຄຸນສັບ ຂອງຂ້ອຍ ແມ່ນ ສັມພັນທະສັພນາມ.

໗. ນິບັນຄຸນສັບ ແມ່ນ ຄຳດຽວກັນກັບນິບັນສັພນາມ" ນີ້ ນັ້ນ ພຸ່
ແຕ່ຫາກໃຊ້ປະກອບກັບ ຄຳນາມ ໂຕຢ່າງ: ເຮືອນຫລັງນີ້ ຈານໃບ
ບ່ອນຫັ້ນ ບ່ອນຫນີ້ ຟາກພຸ້ນ ຄຳວ່າ ນີ້ ນັ້ນ ຫັ້ນ ຫນີ້ ພຸ້ນ ແມ່ນ
ນິບັນຄຸນສັບ.

໘. ອະນິບັນຄຸນສັບ ແມ່ນ ຄຳທີ່ສະແດງວ່າ ນາມຊຶ່ງປະກອບເ
ນັ້ນໃຊ້ຢ່າງລອຍໆບໍ່ຄັກແນ່ ໂຕຢ່າງ: ບໍ່ມີຄົນໃດ ບໍ່ມີຈັກຄົນ ລາງຄົນ :

ບາງຈຳພວກ ສິງໃດສິງນຶງ ສິງອືນ ນັກຮຽນທຸກຄົນ ຫມົດທັງຫມູ່ ຄຳທີ່ ຂີດກ້ອງເຫລົ່ານີ້ ແມ່ນ ອະນິຍົມຄຸນສັບ.

໕. ປຸດສາຄຸນສັບ ແມ່ນ ຄຳທີໃຊ້ເປັນຄຳຖາມ ເຊັ່ນ: ຈັກ ຫຍັງ ໂຕຢ່າງ: ເຈົ້າມີລູກຈັກຄົນ? ເຈົ້າຄຶດຮອດຫຍັງ? ຄຳວ່າ ຈັກ ຫຍັງ ແມ່ນ ປຸດສາຄຸນສັບ.

໖. ສັງຂຍາຄຸນສັບ (adjectifs numéraux) ແມ່ນ ຄຳທີ່ຫມາຍເຖິງ ຈຳນວນ ຊຶ່ງເຮົາໃຊ້ນັບ ຄົນ ສັດ ຫລື ສິ່ງຂອງ. ສັງຂຍາຄຸນສັບ ແບ່ງເປັນ ໒ ພວກ. ປົກຕິສັງຂຍາ (adjectif numéral cardinal) ແລະ ປຸຣະນະສັງຂຍາ (adjectif numéral ordinal).

ປົກຕິສັງຂຍາ ໄດ້ແກ່ ຈຳນວນເລກທັມມະດາ ຄື: ໑ ໒ ໓ ໔ ໕ ໖ ໗ ໘ ໙ ໑໐ ໑໑ ໑໒ ໒໐ ໓໐ ໕໐ ໑໐໐ ໕໐໐ ໑໐໐໐... ໂຕຢ່າງ: ຊາວນາ ໔໐ ຄົນ ມ້າ ໕ ຕົວ ເງິນ ໒໐໐໐ ກີບ ຈຳນວນກ່າວມານີ້ ແມ່ນ ປົກຕິສັງຂຍາ.

ປຸຣະນະສັງຂຍາ ໄດ້ແກ່ ເລກລຳດັບທີ ລຳດັບຊັ້ນ ເຊັ່ນ: ທີ ໑ ທີ ໒, ທີ ໓, ທີ ໔, ທີ ໕, ທີ ໑໐, ທີ ໒໐,...

ໂຕຢ່າງ: ລູກຊາຍຂອງຂ້ອຍສອບໄລ່ໄດ້ທີ ໑ ລູກຊາຍເຈົ້າຮຽນຢູ່ ຊັ້ນມັທຍົມປີທີ ໒ ວັນທີ ໖ ເດືອນມິຖຸນາ ແມ່ນວັນຣະລຶກເຖິງວັນເກີດ ຂອງຂ້ອຍ ເລກເຊິ່ງຫມາຍລຳດັບທີ ແລະລຳດັບຊັ້ນເຫລົ່ານີ້ ແມ່ນ ປຸຣະນະສັງຂຍາ.

໗. ປະມານຄຸນສັບ (adjectif quantitatif)

ປະມານຄຸນສັບ ແມ່ນຄຳຄຸນສັບ ທີ່ໝາຍເຖິງຈຳນວນບໍ່ຈຳກັດ ມາກ ນ້ອຍ ຫລາຍ ທັງຫລາຍ ທັງປວງ ເປັນຕົ້ນ.

ໂຕຢ່າງ: ເຈົ້າມີລູກຫລາຍຄົນ ເຈົ້າມີຊັບສິນບັດມາກ ຊາວບ້ ທັງປວງພາກັນດຳນາ ນີ້ເປັນເພັບແກ່ຄົນທັງຫລາຍ ຄຳ "ຫລາຍ ມ ທັງປວງ ແລະ ທັງຫລາຍ" ແມ່ນ ປະມານຄຸນສັບ.

## ໝວດທີ່ ໔

## ຄຳກິຣິຍາ

ຄຳກິຣິຍາ ແມ່ນ ຄຳທີ່ສະແດງກິຣິຍາອາການຂອງ ຄຳນາມ ແ ຄຳສັພນາມ ໂຕຢ່າງ: ມ້າແລ່ນ ຄວາຍນອນ ນົກບິນ ຄົນນັ່ງ ຄຳ ແລ່ນ ນອນ ບິນ ນັ່ງ ເປັນ ຄຳກິຣິຍາ ເພາະສະແດງກິຣິຍາອາການຂ ຄຳນາມ ຄື ມ້າ ຄວາຍ ນົກ ຄົນ. ຄຳກິຣິຍາ ມີ ໔ ຈຳພວກ:

໑ ອະກັມກິຣິຍາ ແມ່ນ ຄຳກິຣິຍາ ຈຳພວກທີ່ມີໃຈຄວາມແ ແລ້ວ ບໍ່ມີຄຳທີ່ເປັນກັມເຂົ້າມາຮັບຮອງກໍ່ໄດ້ຄວາມ ໂຕຢ່າງ: ນົກ ຄວາຍນອນ ມ້າແລ່ນ ຄຳກິຣິຍາ ບິນ ນອນ ແລ່ນ ໃນທີ່ນີ້ມີໃຈຄວ ບໍຣິບູນແລ້ວ ບໍ່ຕ້ອງຖາມຫາວ່າ ບິນຫຍັງ ແລ່ນຫຍັງ ແລະ ນອນຫ ກໍ່ໄດ້ຄວາມ. ຄຳກິຣິຍາພວກນີ້ຈິ່ງເອີ້ນວ່າ ອະກັມກິຣິຍາ.

໒. ສະກັມກິຣິຍາ ແມ່ນ ຄຳກິຣິຍາ ຈຳພວກທີ່ມີໃຈຄວາມຍັງບໍ່ແ ບໍຣິບູນ ຕ້ອງມີຄຳທີ່ເປັນກັມເຂົ້າມາຕື່ມອີກ ຈຶ່ງໄດ້ຄວາມເຕັມ ໂຕຢ່າ

ຂ້ອຍເຫັນ ມ້າປາກ ຄວາຍຊົນ ນາຍພານຍິງ ຄຳວ່າ ເຫັນ ປາກ ຊົນ ຍິງ ໃນທີ່ນີ້ຍັງບໍ່ໄດ້ຄວາມ ຕ້ອງມີ ຄຳນາມ ທີ່ເປັນກັມເຂົ້າມາຕື່ມ ຈຶ່ງ ໄດ້ຄວາມເຕັມວ່າ: ຂ້ອຍເຫັນລົດ ມ້າປາກເບົ່າ ຄວາຍຊົນກັນ ນາຍພານ ຍິງນົກ ສະນັ້ນ ຄຳ ເຫັນ ປາກ ຊົນ ຍິງ ໃນທີ່ນີ້ ຈຶ່ງເປັນສະກັມກິຣິຍາ.

ໝາຍເຫດ ຄຳກິຣິຍາ ລາງຄຳ ເປັນທັງ ອະກັມກິຣິຍາ ແລະ ສະກັມກິຣິຍາ ໂດຢ່າງ: "ອັດ" ຖ້າເວົ້າວ່າ ປະຕູອັດ ກໍເປັນ ອະກັມກິຣິຍາ ຖ້າເວົ້າວ່າ ກິນອັດປະຕູ ກໍເປັນສະກັມກິຣິຍາ.

໓. ວິກະຕັຖກິຣິຍາ ແມ່ນ ຄຳກິຣິຍາ ຈຳພວກທີ່ບໍ່ມີໃຈຄວາມ ໃນໂຕເອງ ຕ້ອງອາສັຍ ຄຳນາມທີ່ຢູ່ຂ້າງທ້າຍ ຈຶ່ງໄດ້ຄວາມ. ຄຳທີ່ໃຊ້ເປັນ ວິກະຕັຖກິຣິຍານັ້ນ ແມ່ນ ຄຳຕໍ່ໄປນີ້:

| | | | |
|---|---|---|---|
| ມີ | ໂດຢ່າງ: | ຂ້ອຍມີເງິນ | ເພິ່ນມີຄວາມຮູ້ |
| ເປັນ | " | ເພິ່ນເປັນນາຍ | ຂ້ອຍເປັນສມຽນ |
| ຄື | " | ເຈົ້າຄືເດັກນ້ອຍ | |

໔. ຄຳກິຣິຍານຸເຄາະ ແມ່ນ ຄຳກິຣິຍາ ຈຳພວກນຶ່ງ ສຳລັບປະກອບເຂົ້າກັບ ຄຳກິຣິຍາພວກອື່ນ ເພື່ອຊ່ວຍຄຳກິຣິຍາ ພວກອື່ນໆ ໃຫ້ໄດ້ຄວາມເຕັມ ໂດຢ່າງ: ຂ້ອຍຕ້ອງນອນ ເພິ່ນຈະໄປ ຂ້ອຍໄດ້ເຫັນປາບຶກ ເປັນວົ້ນ. ຄຳວ່າ "ຕ້ອງ ຈະ ໄດ້" ນັ້ນ ແມ່ນ ຄຳກິຣິຍານຸເຄາະ ເພາະວ່າ "ຕ້ອງ" ມີໜ້າທີ່ຊ່ວຍ ຄຳວ່າ "ນອນ"; ຄຳວ່າ "ຈະ" ຊ່ວຍຄຳວ່າ

[illegible]

| | | |
|---|---|---|
| ຄົງ | ໂດຍ່າງ: | ຄົງໄດ້ |
| ເພິ່ງ ກອນ | " | ເພິ່ງທຳ ກອນທຳ |
| ຈິງ | " | ຈິງກິນ ຈິງທຳ |
| ກຳລັງ ພວມ | " | ກຳລັງມາ ພວມມາ |
| ບ່ອນ | " | ບ່ອນເຫັນ |
| ຢ່າ | " | ຢ່າຟ້າວ ຢ່າເຮັດ |
| ຈະ ຈັກ ຊິ | " | ຈະໄປ ຈັກກິນ ຊິໄປ |
| ຕ້ອງ | " | ຂ້ອຍຕ້ອງເຮັດວຽກ |
| ໄດ້ | " | ຂ້ອຍໄດ້ເຫັນ |
| ໃຫ້ | " | ເພິ່ນໃຫ້ຂ້ອຍໄປ |
| ຖືກ | " | ເດັກນ້ອຍຖືກຂ້ຽນ |
| ບັງ | " | ເຂົາເຈົ້າບັງບໍ່ເຮັດ |
| ຢູ່ | " | ເຂົາກິນຢູ່ |
| ເຄີຍ | " | ລາວເຄີຍເຫັນ |
| ແລ້ວ | " | ຂ້ອຍກິນແລ້ວ |

# ເຄື່ອງຫມາຍຂອງ ຄຳກິຣິຍາ

## ມາລາ ( Modes )

ມາລາ ແປວ່າ ລະບຽບ ໃນທີ່ນີ້ ຫມາຍເຖິງລະບຽບການໃຊ້ຄຳກິຣິຍາໃຫ້ເປັນໄປຕາມອາການ ມີຢູ່ ໕ ມາລາ ຄື:

໑ <u>ນິເທດມາລາ</u> (mode indicatif). ແມ່ນລະບຽບຄຳກິຣິຍາທີ່ໃຊ້ບອກເລົ່າຕາມເຣື່ອງທີ່ເກີດຂຶ້ນ ຫລື ແຈ້ງຄວາມປະສົງຄວາມຄິດຄວາມເຫັນຂອງຕົນ

ກ. <u>ຄວາມບອກເລົ່າ</u> ລະບຽບ ຄຳກິຣິຍາ ທີ່ໃຊ້ໃນຄວາມບອກບໍ່ຕ້ອງມີຄຳໃດຄຳໜຶ່ງປະກອບ ໂດຍ່າງ. "ແດດ<u>ອອກ</u> ຝົນ<u>ຕົກ</u> ນົກ<u>ຮ້ອງ</u> ຄົນ <u>ຟັນ</u>ໄມ້" ເປັນຕົ້ນ.

ຂ. <u>ຄວາມແນະນຳ</u> ລະບຽບ ຄຳກິຣິຍາ ທີ່ໃຊ້ໃນຄວາມແນະນຳໃຊ້ຄຳກິຣິຍາບຸເຄາະ "ຄວນ ເພິ່ງ ຫນ້າ ຫລື ເປັນຕາ" ເປັນຕົ້ນ ເຂົ້າປະກອບຂ້າງຫນ້າ ຄຳກິຣິຍາ ເພື່ອໃຫ້ໄດ້ຄວາມບໍຣິບູນ ໂດຍ່າງ: "ເຈົ້າ<u>ຄວນ</u>ເຮັດ ເຂົາເຈົ້າ<u>ເພິ່ງ</u>ຮູ້ວ່າ <u>ຄວນ</u>ເຮັດແນວໃດ ສິ່ງທີ່<u>ຫນ້າ</u>ຊົມ ຂອງນີ້<u>ເປັນຕາ</u>ເບິ່ງ" ດັ່ງນີ້ ເປັນຕົ້ນ.

໒ <u>ປຣິກັປມາລາ</u> (mode conditionnel) ແມ່ນ ລະບຽບ ຄຳກິຣິຍາ ທີ່ໃຊ້ບອກ <u>ຄວາມຄາດຄະເນ</u> <u>ຄວາມກະຕວງ</u> ຫລື <u>ຄວາມແບ່ງຮັບ</u> ມີດັ່ງນີ້:

ກ. <u>ບອກຄວາມຄາດຄະເນ</u> ໃຊ້ຄຳກິຣິຍາບຸເຄາະຈຳນວກ "ຮອບວ່າ"

ຫລື ຄຳວ່າ "ບາງທີ ບາງເທື່ອ ລາງເທື່ອ" ເຂົ້າປະກອບ ໂດຍ່າງ: ຣະ
ເພິ່ນໄປແລ້ວ ລາງເທື່ອເພິ່ນບໍ່ຢູ່ ດັ່ງນີ້ເປັນຕົ້ນ.

໒. ບອກຄວາມແບ່ງຮັບ ໃຊ້ຄຳວ່າ "ຖ້າ ຖ້າວ່າ ຜິວ່າ ຫາກ
ເຂົ້າປະກອບ ໂດຍ່າງ: ຖ້າເຈົ້າບໍ່ມາຂ້ອຍກໍບໍ່ໄປ; ຜິວ່າສາວບໍ່ເອື້ອ ໂດ
ກໍບໍ່ແລ ດັ່ງນີ້ເປັນຕົ້ນ.

໓. ອານັດຕິມາລາ (mode impératif) ແມ່ນ ລະບຽບຄຳກິ
ທີ່ໃຊ້ບັງຄັບ ຫລື ຮ້ອງຂໍ ເຊື້ອເຊີນ ວິງວອນ ຈຳພວກນີ້ ໃຊ້ຄຳກິ
ບຸເຄາະ "ຈົ່ງ ຂໍຈົ່ງ ຢ່າ" ປະກອບຂ້າງໜ້າ ... ໃຊ້ ຄຳ "ລາ
ແມ ເຖີດ ທ້ອນ ຖ້ອນ" ປະກອບຂ້າງຫລັງກິຣິຍາ ໂດຍ່າງ: ຈົ່ງ
ທ້ອນ ຂໍຈົ່ງຈະເຣີນ ເຮັດລະແມ ຢ່າຟ້າວໄປ ນອນສາ ໄປເທາະ ເປັ

໔. ສັກກິມາລາ ( mode subjonctif ) ແມ່ນ ລະບຽບ ຄຳກິ
ທີ່ໃຊ້ຄວາມຄັກແນ່ ໃຊ້ຄຳກິຣິຍາບຸເຄາະ "ຕ້ອງໃຫ້ ຄວນໃຫ້" ປະກອ
ໂດຍ່າງ: ຕ້ອງໃຫ້ເຈົ້າມາ ຄວນໃຫ້ຫມົດທຸກຄົນເຂົ້າປະຊຸມ

໕. ສະພາວະມາລາ (mode infinitif) ແມ່ນ ລະບຽບ ຄຳກິ
ທີ່ໃຊ້ບອກຄວາມເລື່ອນລອຍ ໂດຍ່າງ: ນອນຫລາຍ ເປັນໄຂ້ ໃຫ້ທ...
ເປັນໄອ ຄຳກິຣິຍາ "ນອນ" ແລະ "ໃຫ້" ຮຽກວ່າ ກິຣິຍາສະພາວະມ...

ຫມາຍເຫດ.– ຖ້າມີ ຄຳບຸພບົດນຳໜ້າ ຄຳກິຣິຍາ ຄຳກິ
ກໍເປັນສະພາວະມາລາ ຫລື ຖ້າມີ ກິຣິຍາສອງຄຳລຽນກັນ ຄຳ
ກໍນັບວ່າເປັນສະພາວະມາລາ ໂດຍ່າງ: ຂ້ອຍອອກຈາກບ້ານເພື່ອ
ອາກາດ ຂ້ອຍຢາກຮູ້ຄວາມຈິງ ດາກ ແລະ ຮູ້ ເປັນສະພາວະມາ

# ການ (ກາລະ) temps

ເຄື່ອງຫມາຍເວລາຂອງຄຳກິຣິຍານັ້ນ ແມ່ນ ການ ມາຈາກພາສາບາລີວ່າ ກາລ (ກາລະ) ແປວ່າ ເວລາ. ຄຳກິຣິຍາ ທັງຫລາຍ ໃນພາສາລາວ ບໍ່ມີເຄື່ອງຫມາຍບອກ "ການ" ພາຍໃນຄຳເອງ ຕ້ອງອາສັຍຄຳອື່ນບອກໃຫ້ຮູ້ ແລະ ການ ນັ້ນ ມີ ໔ ປາງ:

໑. ປັດຈຸບັນການ ແມ່ນ ເວລາດຽວນັ້ນ ຫລື ເວລາປັດຈຸບັນ ປັດຈຸບັນການ ມີ ໓ ພວກ:

ກ. ປັດຈຸບັນແທ້ ຄຳທີ່ຫມາຍບອກປັດຈຸບັນການແທ້ ແມ່ນຄຳຕໍ່ໄປນີ້: ກຳລັງ ພວມ ຢູ່ ຍັງ ໃດປາງ: ເຂົາເຈົ້າກຳລັງມາ ເພິ່ນພວມມາ ລາວພວມເຮັດຢູ່ ເພິ່ນນອນຢູ່ ຂ້ອຍຍັງບໍ່ນອນ.

ຂ. ປັດຈຸບັນໃກ້ອະດີດ - ປັດຈຸບັນໃກ້ອະດີດ ໃຊ້ຄຳວ່າ ແລ້ວ ຕໍ່ຄຳບອກປັດຈຸບັນແທ້ ໃດປາງດັ່ງນີ້: ເຂົານອນຢູ່ແລ້ວ ເຂົາເຮັດຢູ່ແລ້ວເປັນຕົ້ນ.

ຄ. ປັດຈຸບັນໃກ້ອະນາຄົດ – ປັດຈຸບັນໃກ້ອະນາຄົດ ໃຊ້ຄຳບອກອະນາຄົດການ: ຈະ ຈັກ ຊິ ປະກອບຂ້າງຫນ້າ ຄຳກິຣິຍາ ແລະ ໃຊ້ຄຳບອກ ປັດຈຸບັນແທ້ ປະກອບຂ້າງທ້າຍ ດັ່ງນີ້: ເຂົາເຈົ້າຈະໄປຢູ່ດອກເຂົາເຈົ້າຊິເຮັດຢູ່ດອກ ຯລຯ

໒. ອະດີດການ ອະດີດການ ແມ່ນ ຄຳທີ່ບອກເວລາ ທີ່ລ່ວງໄປແລ້ວ ຄຳທີ່ໃຊ້ຫມາຍອະດີດການນັ້ນ ແມ່ນ ຄຳດັ່ງຕໍ່ໄປນີ້: ໄດ້ ເຄີຍ

ແລ້ວ ສຳເຣັດ ເສັດແລ້ວ ໂດຍ່າງ: ລາວໄດ້ດີແທ້ ຂ້ອຍເຄີຍກິນ ເນ໌ ທຳສຳເຣັດ ເຂົາເຈົ້າທຳເສັດແລ້ວ. ຯລຯ

ປ. ອະນາຄົດກາລ – ອະນາຄົດກາລ ແມ່ນ ຄຳບອກເວລາທີ່ ທັງມາເຖິງ ອະນາຄົດກາລນັ້ນ ມີ ໒ ຢ່າງ:

ກ. ອະນາຄົດກາລແທ້ – ຄຳທີ່ໃຊ້ຫມາຍບອກ ອະນາຄົດກາລແ ນັ້ນ ແມ່ນ ຄຳຕໍ່ໄປນີ້: ຈະ ຈັກ ຊິ ໂດຍ່າງ: ຂ້ອຍຈະກິນ ເພິ່ນຈັກໄ ເຂົາເຈົ້າຊິເຣັດດອກ ຯລຯ

ຂ. ອະນາຄົດກາລໃກ້ອະດີດ – ອະນາຄົດກາລໃກ້ອະດີດ ໃຊ້ "ແລ້ ດໍທ້າຍຄຳກິຣິຍາ ດັ່ງນີ້: ເພິ່ນຈະໄປແລ້ວ ເຂົາຊິເຣັດແລ້ວ ຯລຯ

໔. ອະນຸກາລ – ແມ່ນ ຄຳບອກເວລາທີ່ບໍ່ມີກຳນົດ ຄຳກິຣິຍ ທັງຫລາຍ ທີ່ບໍ່ມີຄຳບອກປັດຈຸບັນກາລ ອະດີດກາລ ແລະ ອະນາຄົດກາ ປຸ່ນຳ ເປັນຄຳກິຣິຍາອະນຸກາລ ທັງນອນ ໂດຍ່າງ: ເຂົາກິນສເມີ ເພິ ໄປເຣັດການ ຂ້ອຍນອນ ດັ່ງນີ້ ເປັນຕົ້ນ ນອກຈາກນີ້ ຍັງໃຊ້ຄຳວ່າ "ບ່ອຍ ຫມາຍເປັນ ອະນຸກາລ ໄດ້ອີກ ເຊັ່ນ: ຄົນຊົ່ວບ່ອຍທຳບາບ ເປັນຕົ້ນ.

## ວາຈົກ (la voix)

໑ "ວາຈົກ" (la voix) ເປັນເຄື່ອງຫມາຍຂອງຄຳກິຣິຍາ ທີ່ສະແດ ວ່າຄຳນາມ ຫລື ຄຳສັພນາມ ເປັນຜູ້ກະທຳເອງ (ກັດຕຸວາຈົກ) (vo active) ຫລື ຖືກກະທຳ (ກັມມະວາຈົກ) (voix passive).

ໂດຍ່າງ: ຄົນຖືໄມ້ຄ້ອນ ໄມ້ຄ້ອນຖືກຄົນຖື ຄຳກິຣິຍາ ຖືເປັນກັດ

ວາຈົກ ຖືກຖື ເປັນກັມມະວາຈົກ.

ໃນການໃຫ້ກະທຳ ຫລື ຖືກໃຫ້ກະທຳ ເພິ່ນເອີ້ນກັດຕຸວາຈົກ ຫລື ກັມມະວາຈົກ ການິດກັດຕຸວາຈົກ (voix active du causatif) ແລະ ການິດກັມມະວາຈົກ. (voix passive du causatif).

ໂດຍ່າງ: ຂ້ອຍໃຫ້ຄົນຖືໄມ້ຄ້ອນ ໄມ້ຄ້ອນຖືກ ຂ້ອຍ ໃຫ້ຄົນຖື ຄຳກິລິຍາ ໃຫ້ຖື ເປັນການິດກັດຕຸວາຈົກ. ຖືກໃຫ້ຖື ເປັນການິດກັມມະວາຈົກ.

໖. ການົກ - ສ່ວນຄຳນາມ ຫລື ສັພນາມທີ່ກະທຳ ຫລື ຖືກກະທຳ ທີ່ ໃຫ້ກະທຳ ຫລື ຖືກໃຫ້ກະທຳນັ້ນ ເປັນ "ການົກ" ໃນປໂຍກ ຄົນຖືໄມ້ຄ້ອນ ແລະ ໄມ້ຄ້ອນຖືກຄົນຖື, ຄົນ ເປັນ ກັດຕຸການົກ ຄື ເປັນຜູ້ກະທຳ; ໄມ້ຄ້ອນ ເປັນ ກັມມະການົກ ຄືເປັນຂອງທີ່ຖືກກະທຳ; ໃນປໂຍກ ຂ້ອຍ ໃຫ້ຄົນ ຖືໄມ້ຄ້ອນແລະໄມ້ຄ້ອນຖືກຂ້ອຍໃຫ້ຄົນຖື, ຂ້ອຍ ເປັນ ການິດກັດຕຸການົກ ຄື ເປັນຜູ້ໃຫ້ກະທຳ ຄົນ ເປັນການິດກັມມະການົກ ຄື ເປັນຜູ້ຖືກໃຫ້ກະທຳ ດັ່ງກ່າວມາແລ້ວນັ້ນ ວາຈົກ ແລະ ການົກ ເປັນເຄື່ອງໝາຍຂອງຄຳກິລິຍາທີ່ສະແດງຄວາມສັມພັນລະຫວ່າງຄຳນາມ ຫລື ຄຳສັພນາມ ແລະຄຳກິລິຍາ.

໗. ໜ້າທີ່ຂອງຄຳ ສ່ວນໜ້າທີ່ຂອງຄຳນາມ ຫລື ຄຳສັພນາມ ຕໍ່ຄຳກິລິຍາໃນປໂຍກນຶ່ງໆ ນັ້ນເປັນດັ່ງນີ້:

ມ.໑ – ປະທານ (sujet) ຄຳນາມ ຫລື ຄຳສັພນາມໃດທີ່ເປັນເຈົ້າຂອງຄຳກິຣິຍາ (sujet du verbe) ຈະເປັນກັດຕຸວາຈົກ ຫລື ກັມມະວາຈົກກໍດີ (forme active ou passive) ມີໜ້າທີ່ເປັນປະທານ (sujet) ຂອງຄຳກິຣິຍານັ້ນ ແລະ ນຳໜ້າຄຳກິຣິຍາສເມີ. ໂຕຢ່າງ: "ຄົນຖືໄມ້ຄ້ອນ" ໃນປໂຍກນີ້ "ຄົນ" ເປັນປະທານຂອງ ຄຳກິຣິຍາ "ຖື" ໃນປໂຍກ ກິຣິຍາ "ໄມ້ຄ້ອນຖືກຄົນຖື". ໄມ້ຄ້ອນເປັນປະທານຂອງຄຳ "ຖືກຖື".

ມ.໒ – ກັມ (complément) ຄຳນາມ ຫລື ຄຳສັພນາມທີ່ມີໜ້າທີ່ເປັນກັມນັ້ນ ແມ່ນ ສັບທີ່ນຳຫລັງຄຳກິຣິຍາ ສະແດງວ່າເປັນຜູ້ຮັບກັມຈາກຄຳກິຣິຍານັ້ນ. ໂຕຢ່າງ: ແມ່ຕີລູກ ແມ່ຕີຂ້ອຍ ຄຳນາມ "ລູກ" ແລະ ຄຳສັພນາມ "ຂ້ອຍ" ເປັນກັມຂອງຄຳກິຣິຍາ "ຕີ". ໜ້າທີ່ຂອງກັມມີຢູ່ຫລາຍຢ່າງ ເປັນຕົ້ນ ຄື

ກ. ກັມມະກາຣົກ (complément direct) ດັ່ງກ່າວມາແລ້ວ.

ຂ. ອຸປໂຍຄກັມ (complément indirect) ເປັນກັມທີ່ມີອຸປໂຍກບຸພບົດນຳໜ້າກໍ່ຈາກ ຄຳກິຣິຍາ ຄື ແມ່ເອົານຳລູກ ຂ້ອຍໄປເຖິງທີ່ນັ້ນ ຄຳນາມ ລູກ ແລະ ຄຳສັພນາມ ທີ່ນັ້ນ ເປັນອຸປໂຍຄກັມ ຂອງຄຳກິຣິຍາ ເອົາ ແລະ ໄປ ດ້ວຍວ່າມີ ອຸປໂຍກບຸພບົດ ນຳ ແລະ ເຖິງ ນຳໜ້າ ຂັ້ນກັບຄຳກິຣິຍາ.

ຄ. ອະທິກະຣະນະກັມ (complément circonstanciel) ມີ ອະທິກະຣະນະບຸພບົດນຳໜ້າບອກບ່ອນຢູ່ ເວລາ ຫລື ອາການ ຄື "ທີ່ ນີ້ ເມື່ອ ລົນ".

ໂດຍ່າງ: ຂ້ອຍເຂົ້າໄປຫາໂຮງຮຽນ ເພິ່ນມາຮອດນີ້ເຊົ້ານີ້ ຜົນຕົກລົນ ໂຮງຮຽນ ເຊົ້ານີ້ ລົນ ແມ່ນ ອະທິກະຣະນະກັມ.

ຫມາຍເຫດ – ກັມຂອງນາມ ເອີ້ນວ່າ ສັມພັນທະກັມ (complément d'objet ou complément déterminatif). ໂດຍ່າງ: "ເຮືອນນາຍສີ" "ນາຍສີ" ເປັນສັມພັນທະກັມຂອງຄຳນາມ "ເຮືອນ".

## ຫມວດທີ່ ៥

### ຄຳກິຣິຍາວິເສດ

ຄຳກິຣິຍາວິເສດ (adverbe) ແມ່ນ ຄຳປະກອບ ຄຳກິຣິຍາ ຫລື ຄຳກິຣິຍາວິເສດ ດ້ວຍກັນ ໂດຍ່າງ:

໑. ປະກອບ ຄຳກິຣິຍາ: ເຮັດດີ ແລ່ນໄວ ບິນສູງ ກິນຫລາຍ ໄປຊ້າ ດຶນເດີກ ບ່າງກ່ອນ ໄປໄກ ຂຶ້ນເທິງ ລົງລຸ່ມ ເອົາໂລດ ຄຳທີ່ ຂີດກ້ອງເຫລົ່ານີ້ ແມ່ນ ຄຳກິຣິຍາວິເສດ.

ຫມາຍເຫດ: ຈົ່ງສັງເກດວ່າ ຄຳດຽວກັນ ອາດເປັນທັງຄຳຄຸນສັບ ແລະ ຄຳກິຣິຍາວິເສດ ໄດ້ ສຸດແລ້ວແຕ່ຈະປະກອບ ຄຳນາມ ຫລື ປະກອບຄຳກິຣິຍາ ເຊັ່ນ:

| | | | |
|---|---|---|---|
| ຄົນດີ | ດີ | ແມ່ນ | ຄຳຄຸນສັບ |
| ເຮັດດີ | ດີ | " | ຄຳກິຣິຍາວິເສດ |
| ເຮືອນສູງ | ສູງ | " | ຄຳຄຸນສັບ |

ບິນສູງ ສູງ ແມ່ນ ຄຳກິຣິຍາວິເສດ

໖. ປະກອບ ຄຳກິຣິຍາວິເສດ ດ້ວຍກັນ: ດີແທ້ ຫລາຍໃ່ ເຫລືອເກີນ ຄຳວ່າ ແທ້ ໂພດ ເກີນ ແມ່ນ ຄຳກິຣິຍາວິເສດ

ຄຳຊ້ຳກັນ ເຊັ່ນ: ໄວໆ ຊ້າໆ ເປັນຕົ້ນ ຄຳທີ ໖ ກໍແມ່ນ ຄຳກິຣິວິເສດ.

ຄຳກິຣິຍາວິເສດມີຫລາຍຊນິດ ເປັນຕົ້ນ ຄື:

໖.໑ – ປະຕິເສດກິຣິຍາວິເສດ (adverbe de négation) ແມ່ນ ຄຳສັບບອກຫ້າມ ຫລື ບໍ່ຮັບ ໄດ້ແກ່ຄຳວ່າ: ບໍ່ ເບິາ ໄປ່ ມິ ບໍ່ໃຊ່ ຈັ່ງວ່າ ບໍ່ນາ........ໂດຢ່າງ: ນ້ອງນີ້ ມິໃຊ່ ຫັມມະຊາດເຊື້ອ ພີປ່າປະນາ; ດາວດິນພາງ ເບິາ ສິນສເນີນ້ອງ; ບໍ່ໄດ້ດອກ ບໍ່ມີນາ ບໍ່ໃຊ່ແມ່ນະໂງ່ນາ....

໖.໖ – ປະຕິບານກິຣິຍາວິເສດ (adverbe d'affirmation) ແມ່ນ ຄຳສັບບອກຮັບ ແລະ ຂານຕອບດັ່ງນີ້:

ກ. ບອກຮັບ: ໂດຍ ຂ້ານ້ອຍ ເຈົ້າ ເຈົ້າຂ້ານ້ອຍ ອື ເອີ ແແ ແມ່ນແລ້ວ.....

ຂ. ຂານຕອບ: ໂດຍ ໂດຍຂ້ານ້ອຍ ເຈົ້າ ເຈົ້າຂ້ານ້ອຍ (ໃຊ້ແຄຳບອກຮັບກໍໄດ້) ເຮີຍ ເຮີ້ຍ ຮື ກູ....

ໂດຢ່າງ: ໂດຍ ຂ້ານ້ອຍບິນດີຮັບເອົາ

| | | |
|---|---|---|
| ອີນ້ອງເອີຍ | ຂານຕອບ: | ເຮີ້ຍ |
| ໄດ້ບໍ່ | " | ບໍ່ |

# ຫມວດທີ່ ៣

## *ຄຳບຸພບົດ*

ຄຳບຸພບົດ (préposition) ແມ່ນ ຄຳທີ່ໃຊ້ຕໍ່ສອງຄຳ ໃຫ້ຜູກພັນກັນ ແລະ ຄວາມຫມາຍປ່າງແຈ່ມແຈ້ງ ໂດຍປ່າງ: ຂ້ອຍມາ ທີ່ນະຄອນວຽງຈັນ ທີ່ ແມ່ນ ຄຳບຸພບົດເຊື່ອງຕໍ່ຄຳກິຣິບາ ມາ ກັບ ຄຳນາມ ນະຄອນ.

ຄຳບຸພບົດຢູ່ຫນ້າ:

໑. ຄຳນາມ: ປາຢູ່ໃນນ້ຳ
໒. ຄຳສັພນາມ ເຊີນໄປນຳຂ້ອຍ
໓. ຄຳກິຣິບາ ເພິ່ນມາເພື່ອບອກສອນ

ໃນ ນຳ ເພື່ອ ແມ່ນ ຄຳບຸພບົດ.

ຄຳບຸພບົດ ມີໂດຍປ່າງ ດັ່ງຕໍ່ໄປນີ້:

ເຂົາເຈົ້າໄປທາງເຮືອ ເງິນຢູ່ໃນຖົງ ດູຣາທ່ານພອານ ຂ້າແດ່ພຣະອົງຜູ້ປະເສີດ ໄປສູ່ບ້ານ ເຂົ້າຮອດເມືອງ ເຣັດວລອດຄືນ ລຳຈົນແຈ້ງ ຂ້ອຍເຫັນກັບຕາ ຈົ່ງໄປໂດຍສວັດດີ ຣິວເວີນຕາມທາງ ໄດ້ກິນບ້ອນລາວ ຜົວເປັນເພັ່ງຄອບເມັ່ງພາຣູ້ ເພິ່ນໃຫ້ເງິນແກ່ເຈົ້າ ພວກເພິ່ນຖວາບທານແດ່ສົງ ເຂົາເຈົ້າພ້ອງວ່າສານ ທະຫານຕາບເພື່ອຊາດ ເສື້ອຜືນນີ້ສຳລັບຂ້ອຍ ຂ້ອຍໃຫ້ຈຳເພາະເຈົ້າ ເຂົາເຈົ້າມາແຕ່ປ່າ ເຂົາເຈົ້າມາຕັ້ງແຕ່ປີກາຍ ເພິ່ນມາຈາກເມືອງ ນ້ອງງາມກວ່າເອື້ອຍ ຣັຖບານແຫ່ງປະຊາຊົນ ທີ່ປ່າ ໃນປ່າ ນອກບ້ານ ພາຍໃນບ້ານ ເທິງຟ້າ ບົນອາກາດ ເຫນືອເມກ

ຣິມບ້ານ ແຄມທົ່ງນາ ແປະໂຮງການ ຈົມເມືອງ ໃກ້ປ່າ ນ່ບ້ານ ຂອກ ເມືອງ ແຈຣ້ວ ເພິ່ນມານີ້ແລງ ລາວໄປກ່ອນງາຍ ເຂົາເຈົ້າມາລຸນເຈົ້າ ລາວນອນຈົນຄ່ຳ ຝົນຕົກລວດມື້ ຝົນຕົກບັ້ງມື້ ພວກເພິ່ນມາຈົນເຖິງບ້ານ ຂ້ອນນອນຕລອດຄືນ ມີເຂົ້າພໍ່ທານ ຝົກຕົກເທົ້າຄ່ຳ ທຳງານເກືອບຕາຍ ແຕ່ເຊົ້າເທົ້າຄ່ຳ ອາຍຸໄດ້ປະມານ ໑໐ ປີ ຟັງເທດສັງ ຣາຕຣີ ....
ຄຳທີ່ຂີດກ້ອງເຫລົ່ານີ້ ແມ່ນ ຄຳບຸພບົດ.

## ຫມວດທີ່ ໗

### *ຄຳສັນທານ*

ຄຳສັນທານ (conjonction) ແມ່ນ ຄຳທີ່ໃຊ້ຕໍ່ຄຳກັບຄຳ ປໂຍກ ກັບ ປໂຍກ ຫລື ຂໍ້ຄວາມກັບຂໍ້ຄວາມ ໃຫ້ເນື່ອງກັນ ໃດຢ່າງ:

ຕໍ່ຄຳ: ພໍ່ກັບລູກ

ຕໍ່ປໂຍກ: ອ້າຍຫົວແຕ່ນ້ອງໄຫ້

ຕໍ່ຂໍ້ຄວາມ: ທ້າວດີ ຮຽນຫນັງສືດີ ຈົນເສັງຂຶ້ນຊັ້ນມັທຍົມໄດ້ ສ່ວນທ້າວແດງ ນັ້ນຮຽນຫນັງສືບໍ່ດີ ຈິ່ງ ເສັງບໍ່ໄດ້.

ຄຳວ່າ: ກັບ ແຕ່ ຈົນ ສ່ວນ ຈິ່ງ ທີ່ຂີດກ້ອງໄວ້ນັ້ນ ເປັນຄຳ ສັນທານ ຄຳສັນທານນັ້ນ ອາດມີຫລາຍຄຳ ປະກອບເຂົ້າກັນແລະບາງທີ ກໍ່ຢູ່ຫ່າງກັນເຊັ່ນ ກໍ່ຈຶ່ງ; ....ຄັນ....ແລ້ວ....ເມື່ອແລ້ວຈຶ່ງ; ພໍ ກໍ່; ກໍ່ດີ; ກໍ່ໄດ້; ທັງ....ທັງ....ກໍ່ໄດ້.

ເດັກນ້ອຍຜູ້ນີ້ ທັງກິນທັງຫລີ້ນ ເພິ່ນເຮັດຫຍັງ ກໍ່ດີ ກໍ່ມີຄົນຍ້ອງ

ຂ້ອຍອາບນ້ຳແລ້ວຈຶ່ງນອນ ຄັນຂ້ອຍມາແລ້ວ ເຈົ້າຈຶ່ງໄປ ປານີ້ກິນກໍໄດ້ ຫາກໍໄດ້.

ຄຳສຳລັບ ໃຊ້ວ່າຂໍ້ຄວາມທີ່ວ່າງກັນ ຫລື ຂັດກັນ ໄດ້ແກ່ຄຳ ດັ່ງຕໍ່ໄປນີ້: ແຕ່ວ່າ ແຕ່ທີ່ວ່າ ໃດຢ່າງ:

ອ້າຍຫິວ ແຕ່ນ້ອງໄຫ້.

ເຂົາຈະໄປກໍຕາມ ແຕ່ວ່າຂ້ອຍບໍ່ໄປ.

ຄຳສຳລັບ ໃຊ້ວ່າຂໍ້ຄວາມຝ່າຍນຶ່ງ ກັບອີກຝ່າຍນຶ່ງ ໃຫ້ເນື່ອງກັນ ໄດ້ແກ່ຄຳດັ່ງວ່າໄປນີ້ ຝ່າຍ ຝ່າຍວ່າ ສ່ວນ ສ່ວນວ່າອັນນຶ່ງ ອີກປະການນຶ່ງ ອີກຢ່າງນຶ່ງ ໃດຢ່າງ:

ເມື່ອຝົນຕົກ ປູງນົກ ກໍເຂົ້າລີ້ປູ່ໃນຮັງ ຝ່າຍລີງພາກັນນັ່ງຫນາວປູ່ເທິງຕົ້ນໄມ້

ຄຳສຳລັບ ໃຊ້ຕໍ່ຄວາມທີ່ເປັນເຫດ ແລະ ຜົນຂອງກັນ ໄດ້ແກ່ຄຳດັ່ງຕໍ່ໄປນີ້: ເພາະ ເພາະວ່າ ບ້ອນ ບ້ອນວ່າ ດ້ວຍວ່າ ເຫດວ່າ ຈຶ່ງ ສະນັ້ນ ເຫດສະນັ້ນ ໃດຢ່າງ:

ລູກດີ ບ້ອນພໍ່ແມ່ບອກສອນ ເຮົາທຳດີ ເພາະປາກໄດ້ດີ ເຂົາບໍ່ຮຽນ ຈຶ່ງອ່ານບໍ່ອອກ.

ຄຳສຳລັບ ໃຊ້ວ່າຂໍ້ຄວາມທີ່ໃຫ້ເລືອກເອົາໄດ້ແກ່ຄຳ ດັ່ງຕໍ່ໄປນີ້ ຫລື ຫລື ບໍ່ດັ່ງນັ້ນ ໃດຢ່າງ: ເຈົ້າຈະໄປ ຫລື ບໍ່ໄປ ຈົ່ງປ່າເຮັດອີກ ບໍ່ດັ່ງນັ້ນ ເຈົ້າຈະຖືກໂທດ

ຄຳສຳລັບ ໃຊ້ຕໍ່ຂໍ້ຄວາມທີ່ບໍ່ແນ່ ຫລື ເປັນຄວາມຄາດຄະເນ ໄດ້

ແກ່ຄຳ ດັ່ງຕໍ່ໄປນີ້: ຖ້າ ຖ້າວ່າ ຫາກ ຫາກວ່າ ບີ ບີວ່າ ແມ່ນ ແມ່ນວ່າ ເວັ້ນແຕ່ ເວັ້ນໄວ້ແຕ່ ນອກຈາກ ເວັ້ນຈາກ ໂດຍ່າງ:

ຖ້າຝົນຕົກ ຂ້ອຍຈະບໍ່ໄປ ບີວ່າເຈົ້າບໍ່ໃຫ້ ຂ້ອຍກໍ່ບໍ່ຍອມ ຂ້ອຍຈະໄປແທ້ເວັ້ນແຕ່ຝົນຕົກ.

ຄຳສຳລັບ ໃຊ້ຕໍ່ຂໍ້ຄວາມປຽບທຽບ ໄດ້ແກ່ຄຳ ດັ່ງຕໍ່ໄປນີ້: ດຸຈດັ່ງ ດັ່ງວ່າ ພຽງດັ່ງ ພລັງ ພລັງດັ່ງ ເໝືອນ ເໝືອນດັ່ງ ຄື ຄືດັ່ງ ໂດຍ່າງ:

ທັນທີແດງ ກໍແດງປີບັ້ງ ຄືດັ່ງ ນ້ຳດັ່ງໃສ່ໂຕຄຳ ທັງປວງພັງງ ພລັງ ສານຊ້າງໃຫຍ່.

ຄຳດື່ມ ສຳລັບໃຫ້ມ່ວນຂື້ນ ໄດ້ແກ່ຄຳວ່າ: ເຖິງຢ່າງໃດກໍຕາມ ແມ່ນຈັ່ງໃດກໍ່ຊ່າງ ໂດຢ່າງ: ເປັນຢ່າງໃດກໍຕາມທ້ອນ ເກະແບນແຕ່ໄດ້ຮ່ວມ.

# ໝວດທີ່ ໗

## *ຄຳອຸທານ*

ຄຳອຸທານ (interjection) ແມ່ນ ຄຳ ຫລື ສຽງ ທີ່ຮ້ອງອອກມາ ດ້ວຍຄວາມຍິນດີຊື່ນຊົມ ຕົກໃຈ ປລາດໃຈ ງຶມເງິບ ຫລື ຄວາມເສັຽໃຈ ໂດຍ່າງ: ບ໋ະ! ເປ້ອ! ເອ! ນໍ! ເປັນຕົ້ນ ຄຳອຸທານ ມີ ໒ ຢ່າງ ຄື ຄຳອຸທານບອກອາການ ແລະ ຄຳອຸທານ ທ້າຍຄຳ ດັ່ງນີ້:

໑. ບອກອາການຮ້ອງຮຽກ ແມ່ນ ຄຳຈຳພວກ ເຮີ້ຍ! ແນ້! ເອີ້ຍ! ເວີ້ຍ! ເນີ! ໄຜຫັ້ນນາ! ຯລຯ

໒. ບອກອາການປລາດ ແມ່ນ ຄຳຈຳພວກ ເອ! ໂອ! ໂອໂຫ! ໜ໋າ!

ບ່ານໍ! ຯລຯ

໓. ບອກອາການຄຽດ ແມ່ນ ຄໍາຈໍາພວກ ບ່າ! ໂບ້ວ! ຫວ່າ! ປະໄຫ!

໔. ບອກອາການສົງສານ ແມ່ນ ຄໍາຈໍາພວກ ປະໄຫເອີຍ! ເຈົ້າເອີຍ! ຯລຯ

໕. ບອກອາການເຂົ້າໃຈ ແມ່ນ ຄໍາຈໍາພວກ ເອ໊! ເອີ! ອື! ອ໊! ຯລຯ

໖ ບອກອາການເຈັບ ແມ່ນ ຄໍາຈໍາພວກ ອຸ່ບ! ໂອບ! ໂອ່ບ! ຯລຯ

໗. ບອກອາການສົງສັບ ແມ່ນ ຄໍາຈໍາພວກ ຫືີ! ເຫີ! ວ່ະ! ຫວາ! ຯລຯ

໘ ບອກອາການຫ້ວງ ແມ່ນ ຄໍາຈໍາພວກ ເປ໊! ເອີ໊ບ! ຯລຯ

# ບົດທີ ໔

## ວິທີກະຈາຍຄຳ

ກະຈາຍ ຫລື ຈາຣະໄນ (analyse) ໝາຍຄວາມວ່າ– ແຍກອອກ ເປັນສ່ວນ ກະຈາຍປະໂຍກ ແມ່ນ ພິຈາຣະນາ:

໑. ຊນິດຂອງຄຳຕ່າງໆ ຊຶ່ງມີຢູ່ໃນປະໂຍກນັ້ນ ແລະ ໜ້າທີ່ຂອງ ຄຳແຕ່ລະຄຳ.

໒. ໜ້າທີ່ຂອງຄຳເວົ້າ ຊຶ່ງປະກອບເປັນ ອະນຸປະໂຍກ ຫລືປະໂຍກ ຍ່ອຍ.

໓. ຊນິດຂອງປະໂຍກຍ່ອຍຕ່າງໆ ທີ່ປະກອບເຂົ້າເປັນປະໂຍກເຕັມ ດ້ວຍເຫດນີ້ຈຶ່ງມີການກະຈາຍຄຳ ໓ ຢ່າງ:

ກ. <u>ການກະຈາຍຄຳໃນໄວຍາກອນ</u> (analyse grammaticale du mot

ຂ. <u>ການກະຈາຍອະນຸປະໂຍກ</u> (analyse de la proposition).

ຄ. <u>ການກະຈາຍປະໂຍກ</u> (analyse de la phrase).

ການກະຈາຍ ໃນຂໍ້ <u>ຂ</u> ແລະ <u>ຄ</u> ນີ້ ເຮົາເອົາໂຮມກັນເປັນອັນດຽວ ໂດຍໃຊ້ຊື່ວ່າ ການກະຈາຍປະໂຍກ (analyse logique).

## ໝວດທີ ໑

ໃນການຈາຣະໄນຄຳນັ້ນ ເຮົາຄວນບອກໃຫ້ຮູ້:

໑. ຊນິດຂອງຄຳ (ແມ່ນ ນາມ ສັພນາມ ຄຳຄຸນສັບ ກິຣິຍາ

ແລະ ອື່ນໆ).

໒. ພົດ (ເອກພົດ ຫລື ພະຫຸພົດ).

໓. ຫນ້າທີ່ຂອງຄຳ (ແມ່ນ ປະທານ ຫລື ກັມຂອງຄຳກິຣິຍາໃດ).

## ໂຕຢ່າງການກະຈາຍຄຳ

### ໑-ນົກນ້ອຍເຮັດຮັງຢູ່ເທິງງ່າໄມ້

ນົກ ສາມັນຍະນາມ ອະລິງ ອຸດົມບຸຣຸດ ອະພົດ ປະທານ ຂອງກິຣິຍາ ເຮັດ.

ນ້ອຍ ຄຳຄຸນສັບ ປະກອບກັບຄຳນາມນົກ

ເຮັດ ສະກັມກິຣິຍາ ນິເທດມາລາ ອະນຸດການ ສະແດງກິຣິຍາ ອາການຂອງນົກ.

ຮັງ ສາມັນຍະນາມ ນະປຸງສະກະລິງ ອະພົດ ກັມມະການົກ ຂອງກິຣິຍາເຮັດ.

ຢູ່ເທິງ ບຸພບົດ ຕໍ່ ກິຣິຍາເຮັດ ກັບຄຳນາມ ງ່າໄມ້.

ງ່າ ສາມັນຍະນາມ ນະປຸງສະກະລິງ ອະພົດ ອະທິກະຣະນະ ກັມ ບອກບ່ອນຢູ່ຂອງກິຣິຍາເຮັດ.

ໄມ້ ສາມັນຍະນາມ ນະປຸງສະກະລິງ ອະພົດ ສັມພັນທະກັມ ຂອງງ່າ

### ໒ - ຂ້ອຍຈະໄປທີ່ເຮືອນທ່ານຫມໍໃຫຍ່

ຂ້ອຍ ບຸຣຸດສັພນາມ ປະຖົມບຸຣຸດ ນະປຸງສະກະລິງ ເອກພົດ

ປະທານຂອງກິລິຍາໄປ.

ຈະ ກິລິຍານຸເຄາະ ປະກອບ ຄຳກິລິຍາໄປ.

ໄປ ສະກັມກິລິຍາ ນິເທດມາລາ ອະນາຄົດກາລ ສະແດງກິລິຍາອາການຂອງບຸຣຸດສັພນາມຂ້ອຍ.

ທີ່ ບຸພບົດ ຕໍ່ ກິລິຍາໄປ ກັບຄຳນາມ ເຮືອນ.

ເຮືອນ ສາມັນຍະນາມ ນະປຸງສະກະລິງ ເອກພົດ ອະທິກະລະນະກັມ ບອກບ່ອນຢູ່ຂອງກິລິຍາໄປ.

ທ່ານຫມໍ ສາມັນຍະນາມ ປຸງລິງ ເອກພົດ ສັມພັນທະກັມຂອງເຮືອນ (ເຮືອນທ່ານຫມໍ ຫມາຍຄວາມວ່າ ເຮືອນຂອງທ່ານຫມໍ).

ໃຫຍ່ ຄຳຄຸນສັບ ປະກອບ ກັບ ຄຳນາມ ທ່ານຫມໍ.

## ໑ - ກິນຫລາຍໂພດຍ່ອມໃຫ້ໂທດ

ກິນ ສະກັມກິລິຍາ ສະພາວະມາລາ ອະນຸດກາລ ປະທານຂອງກິລິຍາໃຫ້.

ຫລາຍ ກິລິຍາວິເສດ ປະກອບຄຳກິລິຍາກິນ.

ໂພດ ກິລິຍາວິເສດ ປະກອບຄຳກິລິຍາວິເສດຫລາຍ.

ຍ່ອມ ກິລິຍານຸເຄາະ ປະກອບຄຳກິລິຍາໃຫ້.

ໃຫ້ ສະກັມກິລິຍາ ນິເທດມາລາ ອະນຸດກາລ ສະແດງກິລິຍາອາການຂອງຄຳກິລິຍາກິນ.

ໂທດ ສາມັນຍະນາມ ນະປຸງສະກະລິງ ອະພົດ ກັມມະກາລົກ

ຂອງຄຳກິຣິຍາໃຫ້.

## ຫມວດທີ່ ໒

### ໑ – ປໂຍກ (la phrase)

ເມື່ອເວລາເຮົາສະແດງຄວາມຄຶດອອກມາ ກ່ຽວກັບ ຄົນ ສັດ ຫລື ສິ່ງຂອງໃດໆ ເຮົາກໍ ທຳເປັນປໂຍກສັ້ນ ຖ້າເຮົາເອົາປໂຍກສັ້ນຫລາຍປໂຍກ ມາໂຮມເຂົ້າກັນເປັນປໂຍກດຽວ ເຮົາກໍເອີ້ນແຕ່ລະປໂຍກວ່າ ອະນຸປໂຍກ ເປັນປໂຍກນ້ອຍ (la proposition).

ໃນປໂຍກນຶ່ງ ເຮົາຈະຮູ້ໄດ້ວ່າ ມີອະນຸປໂຍກເທົ່າໃດ ປະກອບນຳ ກໍສຸດແລ້ວແຕ່ຈຳນວນຄຳກິຣິຍາ ທີ່ມີປະທານເທົ່ານັ້ນ.

ອະນຸປໂຍກມີສາມຊນິດ:

໑.໑ – ອະນຸປໂຍກດ່ຽວ (la proposition indépendante).

໑ ໒ – ອະນຸປໂຍກນຳ (la proposition principale).

໑ ໓ – ອະນຸປໂຍກຕາມ (la proposition subordonnée).

ອະນຸປໂຍກດ່ຽວ ແມ່ນ ປໂຍກທີ່ມີຄວາມຫມາຍຢ່າງຄົບຖ້ວນ ໂດຍຢ່າງ: ເລືອດເດີນຕາມເສັ້ນໂລຫິດ.

ອະນຸປໂຍກນຳ ແມ່ນ ອະນຸປໂຍກທີ່ສຳຄັນ ຊຶ່ງອະນຸປໂຍກອື່ນ ເຂົ້າປະກອບນຳ.

ອະນຸປໂຍກຕາມ ແມ່ນ ອະນຸປໂຍກທີ່ປະກອບເຂົ້າກັບອະນຸປໂຍກ ນຳເພື່ອໃຫ້ໄດ້ຄວາມຕື່ມເຂົ້າອີກ ໂດຍຢ່າງ: ຄວາມໂສກເສົ້າ ແມ່ນ ພຍາດ ຢ່າງນຶ່ງ ຊຶ່ງວຽກການເປັນຢາແກ້.

ອະນຸປະໂຫຍກນຳ: ຄວາມໂສກເສົ້າ ແມ່ນ ພະຍາດຢ່າງນຶ່ງ;
ອະນຸປະໂຫຍກຕາມ: ຊຶ່ງອາດເກີດຂຶ້ນ ມີອາການ ເປັນປາແກ້.

໒ – ໂຕຢ່າງ ການກະຈາຍປະໂຫຍກ

ອຸດສາຫະກັມ ແລະ ພານິຊກັມ ຊຶ່ງພາໃຫ້ຫລາຍຄົນ ມີງານທຳ
ນັ້ນ ເປັນສົມບັດຂອງປະເທດຊາດ.

ມີອະນຸປະໂຫຍກສອງຢ່າງໂຮມເຂົ້າກັນ:

໒.໑ – ອຸດສາຫະກັມ ແລະ ພານິຊກັມ ເປັນສົມບັດຂອງ
ປະເທດຊາດ. (ອະນຸປະໂຫຍກນຳ).
ປະທານ ແມ່ນ: ອຸດສາຫະກັມ ແລະ ພານິຊກັມ ວິກະຕິ
ກິຣິຍາ ແມ່ນ: ເປັນ.
ກັມມະການິກ ແມ່ນ: ສົມບັດຂອງປະເທດຊາດ.

໒.໒ – ຊຶ່ງພາໃຫ້ຫລາຍຄົນມີງານທຳ (ອະນຸປະໂຫຍກຕາມ).
ປະທານ ແມ່ນ: ຊຶ່ງ (ປະພັນທະສັພນາມ ໃຊ້ແທນນາມ
ອຸດສາຫະກັມ ແລະ ພານິຊກັມ).
ສະກັມກິຣິຍາ ແມ່ນ: ພາ
ກັມມະການິກ ແມ່ນ: ຫລາຍຄົນໃຫ້ມີງານທຳ.

ໝາຍເຫດ – ການຮຽງຄຳເວົ້າ ເຂົ້າເປັນປະໂຫຍກໃຫ້ຖືກຕ້ອງຕາມ
ຫລັກໄວຍາກອນ ຄື ການແຕ່ງປະໂຫຍກ ຫລື ການສັມພັນຄຳໃຫ້ເປັນປະໂຫຍກ
ນີ້ລະບຽບວິທີຊຶ່ງເພິ່ນ ເອີ້ນວ່າ ວິທີສັມພັນປະໂຫຍກ (construction de la phrase

ທີບໍ່ແຕກຕ່າງກັນກັບວິທີກະຈາຍປະໂຍກ (analyse logique) ແຕ່ປະການໃດ. ລະບຽບ ວະຈີວິພາກຂອງ ໄວຍາກອນລາວ ຈຶ່ງໄດ້ຈຳແນກຖ້ອຍຄຳໃນ ພາສາລາວອອກເປັນປະເພດຕ່າງໆ ເພື່ອໃຊ້ສຳລັບບຸກຄົນຊັ້ນສາມັນຊົນມີ ຄົນຖ້ວນ ແລະ ບໍຣິບູນເທົ່ານີ້.

# ບົດພິເສດ

## ວິທີໃຊ້ ສັບຣາຊຠາບ

# ບົດພິເສດ

## ວິທີໃຊ້ ສັບຣາຊາກາມ

ບົດພິເສດນີ້ເປັນລະບຽບຂອງພາສາທີ່ຈະຕ້ອງໃຊ້ໃຫ້ຖືກຕ້ອງ ຈຶ່ງ ຖືຈັດເປັນສ່ວນນຶ່ງຂອງວະຈີວິພາກ ວ່າດ້ວຍ "ສັບຣາຊາການ" ຊຶ່ງເຄີຍນິຍົມ ອີ່ນວ່າ "ຣາຊາສັບ" ຫມາຍຄວາມວ່າ ສັບສຳລັບພຣະຣາຊາ. ແຕ່ໃນ ກີນີ້ "ຣາຊາສັບ" ຫມາຍຄວາມວ່າສັບທີ່ໃຊ້ໃນຣາຊການ (ສັບຫລວງ) ເພາະບາງຄຳບໍ່ກ່າວສະເພາະສຳລັບພຣະມະຫາກະສັດ ແລະ ເຈົ້ານາຍ ເທົ່ານັ້ນ ຍັງກ່າວທົ່ວໄປເຖິງຄຳທີ່ໃຊ້ສຳລັບບຸກຄົນຊັ້ນອື່ນໆ ເຊັ່ນ ຂຸນນາງ ແລະ ພຣະສົງ ເພັ່ນດົນດ້ວຍ.

ດັ່ງນັ້ນ ຈຶ່ງໄດ້ນຳມາກ່າວໃນທີ່ນີ້ ແຕ່ສະເພາະຂໍ້ທີ່ຄວນສັງເກດ ຕາມລັກສນະໂວຫານອນເທົ່ານັ້ນ ບໍ່ກ່າວໃຫ້ພິສດານຕາມຕຳຣາ "ຣາຊາ ສັບ" ເຊິ່ງຈະມີອີກພແນກນຶ່ງຕ່າງຫາກ.

ບຸກຄົນທີ່ຈະຕ້ອງໃຊ້ສັບຣາຊາການຕາມບົດພິເສດ ນີ້ມີຢູ່ ៥ ຊັ້ນ ຄື:

໑ – ພຣະຣາຊາ, ໒ – ເຈົ້ານາຍ, ໓ - ພຣະສົງ, ໔ – ຂຸນນາງ, ໕ – ຄົນສຸພາບ. ຕໍ່ຈາກນີ້ໄປກໍເປັນຊັ້ນສາມັນຊົນ ທີ່ເວົ້າລົມກັນຕາມ ທັມມະດາ ຫລື ທີ່ປາກເວົ້າພາສາຕລາດ

ນອກຈາກສັບຊຶ່ງຈຳພວກຄົນເຫລົ່ານີ້ໃຊ້ແລ້ວ ຍັງມີຄຳອື່ນອີກ ທີ່ຈະກ່າວບັນຍັດເຖິງ ໂດຍຈຳເພາະລະບຽບສັບຣາຊາການໄດ້ແບ່ງອອກ ໔ ຊນິດ ເຫມືອນສັບອື່ນໆໃນພາສາລາວຄື: ໑ - ຄຳນາມ, ໒– ຄຳສັພນາມ,

໓- ຄຳກິຣິຍາ, ໔- ຄຳວິເສດ. ຈະບັກອະທິບາຍແຕ່ລະຊນິດຕັ້ງຕໍ່ໄປນີ້, ເພາະລະບຽບອື່ນນັ້ນໃຊ້ຄືກັນ ເປັນດັ່ງວິທີກະຈາຍຄຳ:

## ໝວດທີ່ ໑- ຄຳນາມທີ່ໃຊ້ເປັນສັບຣາຊກາມ

ລະບຽບສັບຣາຊກາມ ກ່ຽວກັບຄຳນາມ ເປັນລະບຽບບັງຄັບຄຳສາມັນຍະນາມ ອາກາຣະນາມ ແລະ ວິສາມັນຍະນາມ (nom concret, nom abstrait et nom propre). ຄຳນາມບ່ອມປ່ຽນແປງໃຊ້ເປັນສັບຣາຊກາມເກືອບທຸກພວກ ເວັ້ນແຕ່ພວກ ສມຸຫະນາມ (nom collectif) ເຊັ່ນ ສະພາຣາຊນິນດາ.

໑- ຕອນທີ ໑ - ຄຳສາມັນຍະນາມ ແລະ ອາກາຣະນາມ ທີ່ໃຊ້ເປັນສັບຣາຊກາມ.

ຄຳສາມັນຍະນາມ ແລະ ອາກາຣະນາມ ເປັນຄຳນາມທີ່ໃຊ້ມາກ ໃນຣາຊກາມ ແລະ ມີຄວາມແຕກຕ່າງກັນ, ຕາມລຳດັບຊັ້ນ ແລະຄວາມນັບຖືມາກນ້ອຍຕໍ່ບຸກຄົນທີ່ເຮົາຈະໃຊ້ຄຳນາມເຫລົ່ານັ້ນ ເຊັ່ນ ພຣະຣາຊາ ແລະເຈົ້ານາຍເປັນຕົ້ນ.

໑.໑ - ສ່ວນທີ ໑- ສຳລັບຊັ້ນພຣະຣາຊາ

ຄຳທີ່ກ່ຽວກັບພຣະຣາຊາ ແມ່ນຄຳທີ່ກ່ຽວກັບສິ່ງທີ່ເປັນຂອງພຣະຣາຊາ ໂດຍປ່າງ:

- ສ່ວນຕ່າງໆ ແຫ່ງພຣະກາຍຂອງພຣະອົງ ຄື ພຣະຫັດ (ມື) ພຣະບາດ (ຕີນ) ພຣະເນດ (ຕາ) ພຣະສຽນ (ຫົວ) ພຣະເກດ (ຜົມ) ຯລຯ

- ການກະທຳ ແລະກິຈການຕ່າງໆ ຂອງພຣະອົງ ຄື ພຣະຣາຊ

ພິທີການສົມຣົດ (ການແຕ່ງດອງ) ຄວາມຊົງພໍ່ພຣະທັຍ (ຄວາມພໍໃຈ ຄວາມຈົງເຊື່ອພຣະທັຍ (ຄວາມເຊື່ອໃຈ) ຯລຯ

ພຣະບາດີວົງ ແລະ ເຄື່ອງໃຊ້ຂອງພຣະອົງ ກໍ ພຣະຣາຊບິດາ (ພໍ່ ພຣະຣາຊທິດາ (ລູກສາວ) ຯລຯ

- ພຣະຣາຊສົມບັດ ແລະ ສິ່ງຂອງຕ່າງໆຂອງພຣະອົງ ເຊັ່ນພຣະ ບໍຣົມຣາຊວັງ ພຣະໂກດ ພຣະທີ່ນັ່ງ.

ຄຳຕ່າງໆ ເຫລົ່ານັ້ນ ຈັດເຂົ້າໃນລະບຽບດັ່ງແຈ້ງຕໍ່ລົງໄປນີ້:

ກ.- ມີຄຳ "ພຣະບໍຣົມ" ຫລື "ພຣະບໍຣົມຣາຊ" ປະກອບຫນ້າ ສຳລັບບອກວ່າສັບເຫລົ່ານັ້ນສະແດງເຖິງສິ່ງທີ່ຄວນສັກກາຣະບູຊາ ສິ່ງ ບິ່ງໃຫຍ່ ສິ່ງທີ່ຄົນນິບົນຊົມຊອບ ໂດຍ່າງ: ພຣະບໍຣົມມະຫາຣາຊວັງ ພຣະບໍຣົມວົງສານຸວົງ ພຣະບໍຣົມເດຊານຸພາບ ພຣະບໍຣົມຣາຊໂອງການ ພຣະບໍຣົມໂພທິສົມພານ ພຣະບໍຣົມຣາຊູປະຖັມ ຯລຯ

ຂ.- ມີຄຳ "ພຣະຣາຊ" ປະກອບຫນ້າສຳລັບສິ່ງທີ່ມີຄວາມສຳຄັນ ດັ່ງທີ່ກ່າວປູ່ຂ້າງເທິງນີ້ ໂດຍ່າງ: ພຣະຣາຊວັງ (ນ້ອຍກວ່າ ພຣະບໍຣົມ ມະຫາຣາຊວັງ) ພຣະຣາຊຊັບ ພຣະຣາຊພາຫະນະ ພຣະຣາຊບານ ພຣະຣາຊຫະຣືທັຍ ພຣະຣາຊປວັດ ພຣະຣາຊກຸສົນ ຯລຯ

ໂດຍມາກ ຄຳອາການະນາມບ່ອມປະກອບດ້ວຍຄຳ "ພຣະຣາຊ" ນຳຫນ້າສເມີ ໂດຍ່າງ:

ພຣະຣາຊພາຣົບ ພຣະຣາຊດຳຣິ ພຣະຣາຊປະສົງ ຯລຯ

ຄ.- ມີຄຳ "ພຣະ" ປະກອບຫນ້າ ສຳລັບຄຳອື່ນໆ:

-ສິ່ງທີ່ເປັນເຄື່ອງໃຊ້ຂອງພຣະອົງ ເຊັ່ນ ພຣະແສງ ພຣະທີ່ນັ່ງ ຯລຯ

-ສ່ວນຕ່າງໆ ແຫ່ງພຣະກາຍຂອງພຣະອົງ ເຊັ່ນ ພຣະສຽນ (ຫົວ) ພຣະເກດ (ຜົມ) ພຣະໂອດ (ປາກ) ພຣະພັກ (ໃບຫນ້າ) ຯລຯ

ຄຳໃດຫາກມີຄຳ "ພຣະ" ປະກອບຫນ້າແລ້ວ ກໍບໍ່ຈຳເປັນຈະໃຊ້ຄຳ "ພຣະ" ສອງຄຳໃນຄຳປະສົມ ໂດປ່າງ: ສລອງພຣະອົງ ບ້ວນພຣະໂອດ ຣົດພຣະທີ່ນັ່ງ ຣົດບິນພຣະທີ່ນັ່ງ ເຮືອນພຣະທີ່ນັ່ງ ຯລຯ

໗.- ມີຄຳ "ຫລວງ" ປະກອບທ້າຍຄຳ.

ສັບຣາຊການທີ່ປະກອບດ້ວຍຄຳ "ພຣະບໍຣົມຣາຊ ພຣະບໍຣົມ ພຣະຣາຊ ແລະ ພຣະ" ແມ່ນຄຳປາລີ ສັນສະກຣິດ ກັບຄຳຂເມນ ແລະ ຄຳໂບຣານ ບາງຄຳທີ່ນັ້ນ ໂດປ່າງ: ພຣະຂໂນງ ພຣະປາງ ພຣະບັງຄົນຫນັກ ພຣະບັງຄົນເບົາ ສ່ວນຄຳລາວອື່ນໆ ເພີ່ນໃຊ້ຄຳ "ຫລວງ" ປະກອບທ້າຍຄຳເພື່ອໃຫ້ເປັນສັບຣາຊການ ໂດປ່າງ: ສາງຫລວງ ຂອງຫລວງ ສວນຫລວງ ຯລຯ

ຄຳ "ຫລວງ" ໃຊ້ໄດ້ທົ່ວໄປ ສຳລັບປະກອບຄຳນາມບອກຄົນ ສັດ ຫລື ສິ່ງຂອງ ຄຳວ່າ "ຫລວງ" ມີຄວາມຫມາຍວ່າ ໃຫຍ່ ທີ່ນຶ່ງ ແລະ ສຳຄັນອີກດ້ວຍ ໂດປ່າງ: ເນັ້ງຫລວງ ພູເຂົາຫລວງ ແກ້ງຫລວງ ທະເລຫລວງ ຄຳເຫລົ່ານີ້ ບໍ່ມີຄວາມກ່ຽວພັນປ່າງໃດກັບພຣະຣາຊາ.

໑. ໒ – ສ່ວນທີ ໒– ສຳລັບຊັ້ນເຈົ້ານາຍ

ຣາຊາສັບກ່ຽວກັບເຈົ້ານາຍນີ້ ມີຄວາມຫມາຍຕ່າງກັນໄປຕາມລຳດັບຊັ້ນ ແລະ ຖານະຂອງບຸກຄົນທີ່ກ່ຽວຂ້ອງ ເຊັ່ນ ພຣະອາວຸໂສ ແລະ ເຈົ້ານາຍ.

ສັບທີໃຊ້ກ່ຽວກັບພຣະຣາຊາ ໃຊ້ໄດ້ທັງຫມົດ ສຳລັບເຈົ້ານາຍຊັ້ນສູ
ນອກຈາກຄຳ "ພຣະບໍຣົມຣາຊ" ຫລື "ພຣະບໍຣົມ" ປະກອບຫນ້າໄປ

ສັບທີມີຄຳ "ພຣະຣາຊ" ປະກອບຫນ້າ ຈະໃຊ້ສຳລັບພຣະຣາຊີ
ກໍໄດ້ ໂຕຢ່າງ: ພຣະຣາຊສັດທາ ພຣະຣາຊດຳຣິ ພຣະຣາຊພາຣະ
ພຣະຣາຊກຸສົນ.

ສັບອື່ນໆ ຈະມີຄຳ "ພຣະ" ປະກອບຫນ້າ ນອກຈາກຄຳທີເປັ
ສັບຣາຊການປູ່ແລ້ວ.

ສັບບາງຄຳມີຄວາມກ່ຽວພັນກັບບຸກຄົນບາງຈຳພວກທໍ່ນັ້ນ:

ກ - <u>ຄຳສັ່ງ</u> - ເພິ່ນວ່າ:

ພຣະບໍຣົມຣາຊໂອງການ ຫລື ພຣະຣາຊໂອງການ ສຳລັບພຣະຣາຊ
ພຣະຣາຊເສົາວະນີ ສຳລັບພຣະຣາຊີນີ
ພຣະຣາຊບັນຊາ ສຳລັບເຈົ້າຟ້າ
ບັນຊາ ສຳລັບເຈົ້ານາຍຜູ້ໃຫຍ່
ຄຳສັ່ງ ສຳລັບຂຸນນາງ ແລະ ຄົນສຸພາບ

ຂ - <u>ຈົດຫມາຍ</u> - ເພິ່ນວ່າ

ພຣະຣາຊຫັດຖເລຂາ ສຳລັບພຣະຣາຊາ
ລາຍພຣະຣາຊຫັດ ສຳລັບ ພຣະຣາຊີນີ,
ພຣະສະມະນະສານ ສຳລັບພຣະສັງຄະຣາດ,
ລາຍພຣະອັກສອນ ສຳລັບເຈົ້ານາຍຊັ້ນສູງ,
ລິຂິດ ສຳລັບພຣະສົງ,

ຈົດຫມາຍ ຫລື ຫນັງສື ສຳລັບໃຊ້ທົ່ວໄປ.

ຄ. <u>ພັຣຍາ</u> – ເພິ່ນວ່າ

ພຣະອັຄມະເຫສີ, ພຣະຣາຊິນີ (ເມັຽຫລວງ ຂອງພຣະຣາຊາ)
ເຈົ້າຫມ່ອມ, ພຣະສນົມ (ເມັຽນ້ອຍຂອງພຣະຣາຊາ)
ຫມ່ອມ (ເມັຽເຊື້ອໄພ່ຂອງເຈົ້າທຸກຊັ້ນ)
ພັຣຍາ (ເມັຽ) ສຳລັບຄົນສຸພາບ

<u>ຫມາຍເຫດ</u> – ສຳລັບພຣະພຸທເຈົ້າ ແລະເທວະດາ ເພິ່ນໃຊ້ລະບຽບສັບຣາຊການ ກ່ຽວກັບພຣະຣາຊາ ແຕ່ວ່າເພິ່ນໃຊ້ຄຳ "ພຣະພຸດ" ຫລື "ພຸດ" ນຳຫນ້າ ສຳລັບຄຳທີ່ກ່ຽວກັບພຣະພຸທເຈົ້າ ແລະ ຄຳ "ເທວະ" ຫລື "ເທພ" ນຳຫນ້າ ສຳລັບຄຳທີ່ກ່ຽວກັບ ເທວະດາ ໂດຢ່າງ: ພຣະພຸທບໍຣິຂານ, ພຸທພຍາກອນ, ເທວະໂອງການ, ເທວະບັນຊາ, ເທວະບໍຣິວານ, ເທພເຈົ້າ ຯລຯ

໖ – <u>ຕອນທີ</u> ໖ – ວິສາມັນຍະນາມ (nom propre) ທີ່ໃຊ້ເປັນສັບຣາຊການ ທີ່ເປັນສາມັນຍະນາມ ມີລະບຽບວິທີໃຊ້ຕ່າງກັນກັບຄຳສາມັນຍະນາມ ແລະ ອາກາຣະນາມ ລະບຽບກ່ຽວກັບວິສາມັນຍະນາມ (nom propre) ເປັນລະບຽບບັງຄັບຄຳນາມເດີມທີ່ເປັນຊື່ເດີມ ຫລື ຊື່ນ້ອຍ ແລະ ນາມສະກຸນກັບນາມບັດ ຫລື ຣາຊທິນນາມ.

໖.໑ – <u>ສ່ວນທີ ໑</u> – ນາມເດີມ (nom d'origine ou prénom) ທີ່ໃຊ້ເປັນສັບຣາຊການ ນາມເດີມ ແມ່ນຊື່ນ້ອຍຂອງຄົນທີ່ໄດ້ຮັບຕັ້ງແຕ່ເກີດມາ ໂດຢ່າງ: ສີຈັນ ວັນດີ ສີສຸພັນ ຯລຯ

ລະບຽບກ່ຽວກັບນາມເດີມ ມີດັ່ງຕໍ່ໄປນີ້:

ກ. <u>ສຳລັບຊັ້ນພຣະຣາຊາ</u>

ເພິ່ນໃຊ້ຄຳດັ່ງຕໍ່ໄປນີ້ ປະກອບໜ້ານາມເດີມ:

ສົມເດັດພຣະເຈົ້າ, ສົມເດັດພຣະ ຫລື ພຣະເຈົ້າ ໃດປ່າງ: ພະ ເຈົ້າອະໄສກ ຄຳນຳໜ້າທີ່ໄດ້ປ່ຽນແປງມາແຕ່ສມັຍບູຮານ ແຕ່ກ່ອນເພິ່ນ ຄຳວ່າ "ຂຸນ, ທ້າວ, ພຍາ" ຯລຯ ແລ້ວແຕ່ສມັຍ.

ເມື່ອກະສັດອົງໃດຫາກສະເດັດຂຶ້ນສເວີຍຣາຊສົມບັດແລ້ວ ເພິ່ ເກີບປ່ຽນຊື່ໃໝ່ ເພິ່ນເອີ້ນຊື່ໃໝ່ນີ້ວ່າ ພຣະປະຣະມາພິໄທ ຫລື ພະ ບໍຣົມນາມາພິໄທ ຄຳ ພຣະນາມາພິໄທນີ້ ມີຄຳ "ພຣະບາດສົມເດັ ພຣະເຈົ້າ" ນຳໜ້າສເມີ.

ຂ – <u>ສຳລັບຊັ້ນເຈົ້ານາຍ</u>

ເຈົ້ານາຍ ທີ່ໃຊ້ພຣະນາມເດີມ ໂດຍມາກແມ່ນຈຳພວກທີ່ບໍ່ໄດ້ຮັ ບົດເປັນເຈົ້າກຣົມ

ເຈົ້ານາຍທີ່ເປັນເຈົ້າກຣົມ ສ່ວນຫລາຍເອົາຊື່ເຈົ້າກຣົມອອກໜ້າ ເຊັ່ນ ສະເດັດເຈົ້າກຣົມພຣະວັງ (ເຈົ້າເຊດຖາ)

ແຕ່ກໍມີບາງພຣະອົງ ເອົາພຣະນາມເດີມອອກໜ້າ ເຊັ່ນ ສະເດັ ເຈົ້າສຸວັນນະພູມາ (ເຈົ້າກຣົມນາ).

ຄ – <u>ສຳລັບພຣະສົງ</u>

ສຳລັບພຣະສົງທີ່ບໍ່ມີບັດບັນດາສັກ ເພິ່ນໃຊ້ແຕ່ນາມເດີມ ອົງທີ່ ດຳແໜ່ງບັນດາສັກຕັ້ງແຕ່ ພຣະສົມເດັດ, ພຣະຊາ, ພຣະຄຣູ, ພຣ

ຫລັກຄຳ, ພຣະລູກແກ້ວ ຈິນໄປຣອດພຣະຍອດແກ້ວ ບ່ອນໃຊ້ບັດບັນດາສັກ ປະກອບຫນ້ານາມເດີມ.ຖ້າຄຳຣິງຕຳແຫນ່ງຄນະສົງນຳ ກໍໃຊ້ຕຳແຫນ່ງເຈົ້າຄນະສົງນຳດ້ວຍ ຄ ເຈົ້າອະທິການວັດ, ເຈົ້າຄນະຕາແສງ, ເຈົ້າຄນະເມືອງ, ເຈົ້າຄນະແຂວງ, ເຈົ້າຣາຊາຄນະ ຫລື ທີ່ປຶກສາສົງເປັນຕົ້ນ ປະກອບຫນ້ານາມເດີມ ແລະ ນາມສະກຸນ ແລ້ວຈຶ່ງນາມສາຍາໄວ້ຂ້າງທ້າຍໃນວົງເລັບ ໂດຍ່າງ: ພຣະຄຣູ ຈັນທາ ຄູນເມືອງ (ເດໂຊ).

ພຣະຄຣູ ເຈົ້າຄນະຕາແສງ ຈັນທາ ຄູນເມືອງ (ເດໂຊ).

ພຣະສົງ ທີ່ໄດ້ຮັບໃບປະກາສນີຍະບັດຊັ້ນມະຫາປໂຍກໃດ ຫລື ນັກທັມຊັ້ນໃດ ຈະອ້າງເຖິງປະກາສນີຍະບັດລົງໃສ່ທ້າຍນາມເດີມກໍໄດ້ ໂດຍ່າງ: ພຣະຄຣູ ເຈົ້າຄນະຕາແສງຈັນທາ ຄູນເມືອງ (ເດໂຊ) ປ.໙ ຫລື ນັກທັມຊັ້ນເອກ

ສຳລັບພຣະສົງທີ່ບໍ່ມີບັດບັນດາສັກ, ແລະ ຕຳແຫນ່ງຫນ້າທີ່ໃດໆ ເພີ່ນໃຊ້ຄຳ "ພຣະ" ນຳຫນ້ານາມເດີມ ໂດຍ່າງ: ພຣະຄຳແດງ ຈັນດາຣາ ຖ້າເປັນສາມະເນນ ກໍໃຊ້ຄຳ "ສາມະເນນ" ນຳຫນ້ານາມເດີມ ໂດຍ່າງ: ສາມະເນນຄຳມີ ສີຫາຣາດ.

ເຈົ້ານາຍທີ່ຊົງຜນວດເປັນພຣະ ຫລື ເປັນສາມະເນນ ບ່ອນຮັກສານາມທາງຣາຊການຂອງພຣະອົງໄວ້ນຳຫນ້າພຣະນາມເດີມ ແລະພຣະນາມສາຍາ ໂດຍ່າງ: ພຣະເຈົ້າລາງ ເຈົ້າຄຳແດງມະຫາຣາດ (ວີຣະປັນໂຍ) ສາມະເນນນາຍຮ້ອຍໂທ ເຈົ້າຄຳມີ ສີປະເສີດ (ທັມມະປັນໂຍ).

ງ – ສຳລັບຂຸນນາງ

ຜູ້ທີ່ໄດ້ຮັບພຣະຣາຊທານນາມຍົດເປັນ ທ້າວ ຫມື່ນ ແສນ ພຍາ ພຍາຫລວງ ເຈົ້າພຍາຫລວງ ເປັນຜູ້ທີ່ເພິ່ນເອີ້ນວ່າຂຸນນາງ.

ສຳລັບພັຣຍາຂອງພວກຂຸນນາງເຫລົ່ານີ້ ເພິ່ນຮຽກຕາມນາ ຂອງຜົວເພິ່ນ ຕັ້ງແຕ່ຊັ້ນຫມື່ນຂຶ້ນໄປ ວ່າ: ນາງຫມື່ນ ນາງແສນ ເພັ້ງ ນາງພຍາ ນາງພຍາຫລວງ ນາງເຈົ້າພຍາຫລວງ.

ສຳລັບຜູ້ທີ່ມີຍົດຖາບັນດາສັກໃນຣາຊການ ເພິ່ນໃຊ້ນາມຍົດນຳ ຣາຊທິນນາມແລ້ວລົງນາມເດີມໄວ້ໃນວົງເລັບ ໂດຍຢ່າງ: ເພຣະເດຊວິ (ສີຈັນ ວັນເຣືອງ).

ແຕ່ວ່າບາງທີ ເພິ່ນໃຊ້ນາມຍົດນຳຫນ້ານາມເດີມກໍມີ ເຊັ່ນ ພຍ ພິລາວັນ, ພຍາຄຳພັນ ປັນຍາ.

ຈ – ສຳລັບຄົນສຸພາບ

ສຳລັບຜູ້ຊາຍເພິ່ນໃຊ້ຄຳ "ທ່ານ" ນຳຫນ້ານາມເດີມ ໂດຍ ທ່ານຄຳສີ ວັນນະວົງ.

ສຳລັບຜູ້ຍິງບໍ່ທັນມີຜົວ ເພິ່ນໃຊ້ຄຳ "ນາງສາວ" ນຳຫນ້ານາມເ ໂດຍຢ່າງ: ນາງສາວຈັນສີ ສຸວັນນະຣາດ.

ຜູ້ຍິງທີ່ມີຜົວແລ້ວ ເພິ່ນເວົ້າເຖິງໂດຍໃຊ້ຄຳ "ນາງ, ນາຍ ນາແມ່" ນຳຫນ້ານາມເດີມ ໂດຍຢ່າງ: ນາງວັນລີ ສີເມືອງ ຄຳນ ນາມສະກຸນ "ສີເມືອງ" ເປັນນາມສະກຸນຂອງຜົວ "ວັນລີ" ເປັນຊື່ນ ຂອງນາງເອງ.

໒.໒ – ສ່ວນທີ ໒ – ຣາຊທິນນາມແລະນາມບັດທີ່ໃຊ້ເປັນສັບຣາຊ
ການ

ນາມບັດ (titre de mandarinat) ເປັນບັດບັນດາສັກ ຊຶ່ງພຣະມະຫາ
ກະສັດ ພຣະຣາຊທານໃຫ້ກັບທີ່ມີຄຸນວຸດທິ ທຳປໂຍດໃຫ້ແກ່ປະເທດຊາດ
ບ້ານເມືອງ ນາມບັດປະກອບດ້ວຍນາມບອກລຳດັບຊັ້ນ ແລະ ຣາຊທິນນາມ
ໂດຍ່າງ: ພຍາເດຊວິງສາ ປະກອບດ້ວຍຄຳ "ພຍາ" ບອກລຳດັບຊັ້ນບັດ
ບັນດາສັກ ແລະ ຄຳ ເດຊວິງສາຊຶ່ງເອີ້ນວ່າຣາຊທິນນາມ (nom conféré par
le Roi).

ລະບຽບກ່ຽວກັບຣາຊທິນນາມ ແລະ ນາມບັດ ມີວິທີໃຊ້ຕ່າງໆກັນ
ຕາມລຳດັບຊັ້ນຂອງບັດບັນດາສັກ.

໒.໓ – ສ່ວນທີ ໓ – ຕຳແໜ່ງບັດທາງຣາຊການ

ຄຳວ່າ "ບັດ" ໝາຍເຖິງຕຳແໜ່ງບັດທາງຣາຊການ ຄື
ຕຳແໜ່ງຂ້າຣາຊການຝ່າຍທະຫານ ຝ່າຍຕຳຣວດ ຝ່າຍພົລເຮືອນ ແລະ
ຝ່າຍສານ.

ການໃຊ້ຄຳບອກຕຳແໜ່ງບັດນີ້ ເພິ່ນໃຊ້ປະກອບໜ້ານາມເດີມ
ໂດຍ່າງ: ຝ່າຍທະຫານ ຄື ນາຍພັນເອກ ວັນທອງ ສຸດາຣັກ

ຖ້າໄດ້ຮັບພຣະຣາຊທານນາມບັດຊັ້ນຂຸນນາງ ໃຫ້ບອກຊັ້ນຂຸນນາງ
ດັ່ງກ່າວໄວ້ໃນສ່ວນທີ ໑ ວັກ ໔ ໂດຍ່າງ: ພຍາເດຊວິງສາ (ສີຈັນ ວັນເຮືອງ)

໓ ຕອນທີ ໓ – ລັກສນະນາມ (nom numéral) ທີ່ໃຊ້ເປັນສັບ
ຣາຊການ.

ເພື່ອຈະບອກຈຳນວນ ພຣະຣາຊາ ແລະ ເຈົ້ານາຍຊັ້ນສູງ ເພິ່ນ

ໃຊ້ຄຳລັກສນະນາມວ່າ "ພຣະອົງ" ແລະ ໃຊ້ຄຳວ່າ "ອົງ" ສຳລັບເຈົ້ານາຍທົ່ວໄປ ໂດຍຍ່າງ: ພຣະຣາຊາສອງພຣະອົງ ພຣະເຈົ້າດາສາມພຣະອົງ ເຈົ້າຫລັບສີອົງ ຯລຯ

## ຫມວດທີ່ ໒– ຄຳສັພນາມ

ຄຳສັພນາມທີ່ຈັດເຂົ້າລະບຽບຂອງສັບຣາຊການມີແຕ່ບຸຣຸດສັພນາມ (pronom personnel) ທັ່ງນັ້ນ ດັ່ງຈະແຈ້ງຕໍ່ລົງໄປນີ້:

໑ – ປະຖະມະບຸຣຸດ (1ère personne)

ຂ້າພຣະພຸທເຈົ້າ, ຂ້າພຣະບາດ ຫລື ຂ້ານ້ອຍ ສຳລັບຜູ້ນ້ອຍເວົ້ານຳພຣະຣາຊາ.

ອາດມາພາບ ສຳລັບພຣະສົງເວົ້ານຳພຣະຣາຊາ ແລະ ເຈົ້ານາຍທຸກຊັ້ນ.

ອາດມາ ສຳລັບພຣະສົງເວົ້ານຳ ຄະຣືຫັດໂດຍທົ່ວໄປ

ຂ້ານ້ອຍ ສຳລັບຜູ້ນ້ອຍ ເວົ້ານຳພຣະສົງ ເຈົ້ານາຍທຸກຊັ້ນ ແລະຂຸນນາງຕ່າງໆ

ຂ້ອຍ ສຳລັບຜູ້ໃຫຍ່ ເວົ້ານຳຜູ້ນ້ອຍ ຫລື ເວົ້ານຳບຸກຄົນສເມີກັນ

ຂ້າ (ບູຣານ) ສຳລັບຜູ້ນ້ອຍເວົ້ານຳຜູ້ໃຫຍ່

ກູ ສຳລັບຜູ້ໃຫຍ່ເວົ້ານຳຄົນໃຊ້

ເຮົາ (ບູຣານ) ສຳລັບຜູ້ໃຫຍ່ເວົ້ານຳຜູ້ນ້ອຍ

ເຮົາ ສຳລັບຫມູ່ຄົນເວົ້ານຳບຸກຄົນສເມີກັນ

ຂ້າພະເຈົ້າ ສໍາລັບຄົນທົ່ວໄປ ເວົ້ານໍາບຸກຄົນໂດຍທົ່ວໄປ.

໒ – <u>ທຸຕິຍະບຸຣຸດ</u> (2ème personne)

ໃຕ້ຝ່າສຸວັນນະປາທະຈັກຖ້າພຣະບາດ ຫລື ໃຕ້ຝ່າລະອອງທຸລີພຣະບາດ ສໍາລັບພຣະຣາຊາຊຶ່ງຜູ້ນ້ອຍເວົ້ານໍາ

ໃຕ້ຝ່າລະອອງພຣະບາດ ສໍາລັບພຣະຣາຊິນີ ແລະ ອົງຣັຊທາຍາດ ຊຶ່ງຜູ້ນ້ອຍເວົ້ານໍາ

ໃຕ້ຝ່າພຣະບາດສາທຸໃຫຍ່ ຫລື ທຸໃຫຍ່ ສໍາລັບເຈົ້າກຣົມ ຊຶ່ງຜູ້ນ້ອຍເວົ້ານໍາ

ໃຕ້ຝ່າພຣະບາດສາທຸ ສໍາລັບເຈົ້ານາຍຊັ້ນພຣະບໍຣົມວົງສານຸວົງ ຊຶ່ງຜູ້ນ້ອຍເວົ້ານໍາ.

ຝ່າບາດທຸ ສໍາລັບເຈົ້ານາຍທັມມະດາ

ສົມເດັດບໍຣົມບໍພິດພຣະຣາຊສົມພານເຈົ້າ ແມ່ນຄໍາພຣະລົງເວົ້ານໍາພຣະຣາຊາ.

ບໍພິດພຣະຣາຊສົມພານເຈົ້າ ແມ່ນຄໍາພຣະສົງເວົ້ານໍາເຈົ້ານາຍຊັ້ນສູງ.

ບໍພິດ ສໍາລັບເຈົ້ານາຍຊັ້ນຮອງລົງມາ ແລະ ຂຸນນາງຜູ້ໃຫຍ່ ຊຶ່ງພຣະສົງເວົ້ານໍາ.

ພນະທ່ານ ສໍາລັບຂຸນນາງ ທີ່ເປັນປະທານສະພາຣາຊມົນຕີ, ປະທານສະພາຜູ້ແທນຣາສດອນ, ນາຍົກຣັຖມົນຕີ, ເອກອັຄຣາຊທູດ ແລະ ອັຄຣາຊທູດ.

ທ່ານ ສຳລັບຄົນສຸພາບທຸກຊັ້ນທີ່ເວົ້ານຳກັນ

ເຈົ້າ ສຳລັບຜູ້ໃຫຍ່ເວົ້ານຳຜູ້ນ້ອຍ ຫລື ໃນລະຫວ່າງບຸກຄົນສເມີກັນ

ມຶງ ສຳລັບຄົນໃຊ້ ຫລື ຜູ້ນ້ອຍຊຶ່ງຜູ້ໃຫຍ່ເວົ້ານຳ

ງ – ຕະຕິຍະບຸຣຸດ (3ème personne)

ພຣະອົງ ສຳລັບພຣະຣາຊາ ພຣະຣາຊິນີ ແລະ ຣັຊທາຍາດ

ພນະທ່ານ ສຳລັບຂຸນນາງ ທີ່ເປັນປະທານສະພາຣາຊມົນຕີ, ປະທານສະພາຜູ້ແທນຣາສດອນ, ນາຍົກຣັຖມົນຕີ, ເອກອັຄຣາຊທູດ ແລະ ອັຄຣາຊທູດ.

ທ່ານ ສຳລັບຄົນສຸພາບ ແລະ ຜູ້ມີກຽດໂດຍທົ່ວໄປ ທັງຍິງທັງຊາຍ.

ເພິ່ນ ສຳລັບຜູ້ທີ່ເຮົານັບຖື

ລາວ ສຳລັບຄົນສເມີກັນ

ມັນ, ເຂົາ, ສຳລັບເດັກນ້ອຍ ຄົນໃຊ້ ຄົນຊັ້ນຕ່ຳ ຊຶ່ງຜູ້ໃຫຍ່ເວົ້າເຖິງ

## ຫມວດທີ່ ງ– ຄຳກິຣິຍາ ທີ່ໃຊ້ເປັນສັບຣາຊາການ

ຄຳກິຣິຍາສຳລັບພຣະຣາຊາ ແລະ ເຈົ້ານາຍຊັ້ນສູງ ເປັນຄຳທີ່ໃຊ້ຢ່າງດຽວກັນ ນອກນັ້ນຍັງມີ ຄຳກິຣິຍາທີ່ໃຊ້ສຳລັບບຸກຄົນຈຳພວກໃດຈຳພວກນຶ່ງໂດຍຈຳເພາະ ແລະ ມີຄຳກິຣິຍາອີກປະເພດນຶ່ງຊຶ່ງຜູ້ນ້ອຍໃຊ້ສຳລັບເວົ້າກັບຜູ້ໃຫຍ່.

໑ – ຕອນທີ ໑ – ຄຳກິຣິຍາກ່ຽວກັບພຣະຣາຊາ ແລະ ເຈົ້ານາຍຊັ້ນສູງ.

## ໑.໑ - ທີ່ວ່າງກັບກັບຄຳກິຣິຍາທັມມະດາ

| | | |
|---|---|---|
| ພັບທົມ | ແປວ່າ | ນອນ |
| ປະທັບ | " | ນັ່ງ |
| ສະເວີຍ | " | ກິນ |
| ຜນວດ | " | ບວດ |
| ທອດພຣະເນດ | " | ເບິ່ງ |
| ໂປດ | " | ຮັກ, ຊອບ |
| ປະຊວນ | " | ບໍ່ສະບາຍ, ເຈັບປ່ວຍ |
| ຕຣັດ, ດຳຣັດ | " | ເວົ້າ, ແຈ້ງໃຫ້ຊາບ |
| ສະເດັດ | " | ໄປ |
| ສົງ | " | ອາບນ້ຳ |
| ຊົງ | " | ເຮັດ, ກະທຳ, ແປໄດ້ຫລາຍຢ່າງ ແລ້ວແຕ່ ນາມຂ້າງທ້າຍຈະບົ່ງຄວາມ ເຊັ່ນ ຊົງມ້າ (ຂີ່ມ້າ) ຊົງສິນ (ຮັບສິນ) ຯລຯ |

## ໑໒- ຄຳກິຣິຍາທັມມະດາມີຄຳ "ຊົງ ປະກອບຂ້າງໜ້າ

ໂດຍຢ່າງ: ຊົງຟັງ ຊົງຍິນດີ ຊົງຮັບ ຊົງຊຸບລ້ຽງ ຊົງສັ່ງສອນ

ໃຫ້ສັງເກດວ່າ ຄຳກິຣິຍາໃນຂໍ້ ໑ ເທິງນີ້ ເປັນຄຳກິຣິຍາໃຊ້ໂດຍຈຳເພາະ ບໍ່ປະກອບດ້ວຍຄຳນຳໜ້າ "ຊົງ" ດັ່ງຄຳກິຣິຍາທັມມະດາ.

๑.ꪚ - <u>ສັບທີ່ປະກອບດ້ວຍຄຳ "ຊົງ" ນຳໜ້າ</u>

ຄຳກິລິຍາ "ຊົງ" ເປັນສະກັມກິລິຍາ (verbe transitif) ມີຄວາມໝາຍຕ່າງໆໄປຕາມຄຳນາມທີ່ໃຊ້ເປັນກັມ (complément) ຄຳກິລິຍາ "ຊົງ" ນັ້ນ.

ໂຕຢ່າງ :

ຊົງພຣະເມດຕາ ແປວ່າ ມີຄວາມເມດຕາ

ຊົງພຣະກະຣຸນາ " ມີຄວາມກະຣຸນາຫລືມີຄວາມເອັນດູ

ຊົງພຣະອຸດສາຫະ " ມີຄວາມອົດທົນ ຄວາມພາກພຽນ

ຊົງພຣະດຳຣິ " ມີຄວາມດຳຣິພິຈາຣະນາ

ຊົງພຣະບັງຄົນໜັກ " ຖ່າຍອຸດຈາຣະ

ຊົງພຣະບັງຄົນເບົາ " ຖ່າຍປັດສາວະ

໒ - <u>ຕອນທີ່ ໒</u> - ຄຳກິລິຍາກ່ຽວກັບບຸກຄົນຈຳພວກໃດຈຳພວກນຶ່ງໂດຍຈຳກັດ.

໒.໑. - <u>ກິລິຍາ "ຕາຍ" ເພິ່ນວ່າ:</u>

ສວັລຄົດ, ສຸວະຄົດ ສຳລັບພຣະຣາຊາ ພຣະຣາຊີນີ ແລະຣັຊທາຍາດ.

ສິ້ນພຣະຊົນ ສຳລັບເຈົ້ານາຍຊັ້ນສູງ

ມໍຣະນະພາບ ສຳລັບພຣະສົງສາມະເນນ

ເຖິງແກ່ອະສັນຍະກັມ ສຳລັບຂຸນນາງຜູ້ໃຫຍ່

ເຖິງແກ່ອະນິຈກັມ ສຳລັບຂຸນນາງຊັ້ນຮອງລົງມາ

ເຖິງແກ່ກັມ ສຳລັບເພັ່ງລີງມາ ຕລອດຣອດຖິນສຸພາບ

ຕາຍ ສຳລັບຄົນ ແລະ ສັດທົ່ວໄປ.

6.6 – ກິຣິບາ "ສັ່ງ" "ອອກຄວາມສັ່ງ"

ເພີ່ມໃຊ້ຄຳຣາຊາສັບປະກອບ ຫລັງຄຳ "ມີ" ແລະ ໜ້າຄຳ "ສັ່ງ" ໃດບ່າງ:

ມີພຣະບໍຣົມຣາຊໂອງການເໜືອເກົ້າເໜືອຂມ່ອມສັ່ງ ຫລື ມີພຣະບໍຣົມຣາຊໂອງການສັ່ງ ສຳລັບພຣະຣາຊາ.

ມີພຣະຣາຊໂອງການສັ່ງ ມີພຣະຣາຊເສົາວະນີສັ່ງ ສຳລັບພຣະຣາຊີນີ

ມີພຣະຣາຊບັນຊາສັ່ງ ສຳລັບຣັຊທາຍາດ

ມີພຣະບັນຊາສັ່ງ ສຳລັບເຈົ້ານາຍຊັ້ນສູງ

ມີບັນຊາສັ່ງ ສຳລັບຂຸນນາງຜູ້ໃຫຍ່

ມີຄຳສັ່ງ ສຳລັບຂຸນນາງຊັ້ນຣອງລົງມາຕລອດຣອດຖິນສຸພາບ

6.7 – ກິຣິບາອື່ນໆ

ສເວີຍ ແປວ່າ ກິນ ສຳລັບພຣະຣາຊາ ເຈົ້ານາຍ

ສັນ ແປວ່າ ກິນ ສຳລັບພຣະສົງສາມະເນນ

ຊົງພຣະມະຫາກະຣຸນາໂປຣດເກົ້າ ໂປຣດຂມ່ອມ ແປວ່າ ຊອບຮັກ ສຳລັບພຣະຣາຊາ

ໂປຣດເກົ້າໂປຣດຂມ່ອມ ແປວ່າ ຊອບຮັກ ສຳລັບເຈົ້ານາຍຊັ້ນສູງ

ສະເດັດພຣະຣາຊດຳເນີນ ແປວ່າ ເດີນ, ໄປ, ຍ່າງ ສຳລັບ

ພຣະຣາຊາ ພຣະຣາຊິນີ ຣັຊທາຍາດ

ສະເດັດ (ເດີນ ໄປ ຍ່າງ) ສຳລັບເຈົ້ານາຍ

ພຣະບັນທົມ (ນອນ) ສຳລັບພຣະຣາຊາ ພຣະຣາຊິນີ ຣັຊທາຍາດ

ບັນທົມ (ນອນ) ສຳລັບເຈົ້ານາຍ

ຈຳວັດ (ນອນ) ສຳລັບພຣະສົງສາມະເນນ

ຊົງພຣະປະຊວນ (ປ່ວຍເຈັບ) ສຳລັບພຣະຣາຊາ ພຣະຣາຊິນີ ຣັຊທາຍາດ

ປະຊວນ (ປ່ວຍເຈັບ) ສຳລັບເຈົ້ານາຍ

ອາພາດ (ເຈັບໄຂ້) ສຳລັບພຣະສົງສາມະເນນ

ຊົງຊາບໃຕ້ຝ່າລະອອງທຸລີພຣະບາດ (ຊາບຮູ້ຈັກ) ສຳລັບພຣະຣາຊາ

ຊົງຊາບໃຕ້ຝ່າລະອອງພຣະບາດ (ຊາບຮູ້ຈັກ) ສຳລັບພຣະຣາຊິນີ ແລະຣັຊທາຍາດ

ຊົງຊາບໃຕ້ຝ່າພຣະບາດ (ຊາບຮູ້ຈັກ) ສຳລັບເຈົ້ານາຍຊັ້ນສູງ

ຊົງຊາບ (ຊາບຮູ້ຈັກ) ສຳລັບພຣະສັງຄະຣາດ ແລະ ເຈົ້ານາຍ

ຊົງພຣະມະຫາກະຣຸນາໂປດເກົ້າໂປດຂມ່ອມພຣະຣາຊະທານ ຫລືຊົງພຣະຣາຊທານ (ເອົາໃຫ້) ສຳລັບພຣະຣາຊາ.

ຊົງພຣະຣາຊທານ (ເອົາໃຫ້) ສຳລັບພຣະຣາຊິນີ ແລະ ຣັຊທາຍາດ

ຊົງປະທານ (ເອົາໃຫ້) ສຳລັບພຣະສັງຄະຣາດ ແລະ ເຈົ້ານາຍ

ຊົງພຣະຣາຊສົມພົບ (ເກີດ) ສຳລັບພຣະຣາຊາ ຯ. ຯ

៣ - ຕອນທີ ៣ - ຄຳກິລິຍາບອກກິລິຍາອາການຂອງຜູ້ນ້ອຍຕໍ່ຜູ້ໃຫຍ່

ທູນເກົ້າທູນຂມ່ອມຖວາຍ (ຖວາຍສິ່ງຂອງທີ່ຍົກບໍ່ຂຶ້ນໄດ້) ແດ່ພຣະຣາຊາ

ນ້ອມເກົ້ານ້ອມຂມ່ອມຖວາຍ (ຖວາຍສິ່ງຂອງທີ່ຍົກບໍ່ຂຶ້ນບໍ່ໄດ້) ແດ່ພຣະຣາຊາ

ຂໍປະທານຖວາຍ (ຂໍຖວາຍສິ່ງຂອງ) ແດ່ພຣະສັງຄະຣາດ ແລະເຈົ້ານາຍ

ຂໍຖວາຍ (ຂໍເອົາສິ່ງຂອງໃຫ້) ແດ່ພຣະສົງ

ຖວາຍ (ເອົາໃຫ້) ແດ່ພຣະສົງ ແລະ ເຈົ້ານາຍ

ຂໍພຣະຣາຊທານ (ຮ້ອງຂໍ) ຕໍ່ພຣະຣາຊາ ພຣະຣາຊີນີ ແລະຣັຊທາຍາດ

ຂໍປະທານ (ຮ້ອງຂໍ) ຕໍ່ພຣະສັງຄະຣາດ ແລະ ເຈົ້ານາຍ

ຂໍພຣະຣາຊທານພຣະບໍຣົມຣາຊານຸຍາດ (ຂໍອະນຸຍາດ) ຈາກພຣະຣາຊາ

ຂໍພຣະຣາຊທານອະນຸຍາດ (ຂໍອະນຸຍາດ) ຈາກພຣະຣາຊີນີແລະຣັຊທາຍາດ

ຂໍປະທານພຣະອະນຸຍາດ (ຂໍອະນຸຍາດ) ຈາກພຣະສັງຄະຣາດແລະ ເຈົ້ານາຍ

ຂໍປະທານອະນຸຍາດ (ຂໍອະນຸຍາດ) ຈາກເຈົ້າຣາຊາຄນະສົງ ຂຸນນາງຊັ້ນຜູ້ໃຫຍ່

ຖວາຍບັງຄົມ (ພົນນ້ອມໄຫວ້) ແກ່ພຣະຣາຊາ ພຣະຣາຊີນີ ຣັຊທາຍາດ

ນະມັສການ (ໄຫວ້ນົບນ້ອມ) ແດ່ພຣະພຸທເຈົ້າ ພຣະທັມ ພຣະສົງ

ຮັບພຣະຣາຊທານເຮັດສນອງພຣະເດຊພຣະຄຸນ ຮັບພຣະຣາຊທານ ຂຽນສະນອງພຣະເດຊພຣະຄຸນ ຯລຯ ແປວ່າ ຮັບເຮັດ ຮັບທຳ ຮັບຂຽນ ຯລຯ ເພື່ອພຣະຣາຊາ ພຣະຣາຊີນີ ແລະ ຣັຊທາຍາດ.

ຖວາຍຄຳນັບ (ຄຳນັບ) ຕໍ່ເຈົ້ານາຍ

ຂານບັງຄົມທູນພຣະມະຫາກະຣຸນາ (ບອກ) ຕໍ່ພຣະຣາຊາ

ຂານບັງຄົມທູນ (ບອກ) ຕໍ່ພຣະຣາຊີນີ ແລະ ຣັຊທາຍາດ

ຂານທູລອງ (ບອກ) ຕໍ່ເຈົ້ານາຍຊັ້ນສູງ

ທູລອງ (ບອກ) ສຳລັບເຈົ້ານາຍ

ຂານຮຽນ (ບອກ) ຕໍ່ຂຸນນາງຜູ້ໃຫຍ່

ຮຽນ (ບອກ) ຕໍ່ຂຸນນາງ

ຖວາຍພຣະພອນ (ບອກ) ແດ່ພຣະຣາຊາ ພຣະຣາຊີນີ ແລະ ຣັຊທາຍາດ ໂດຍພຣະສົງສາມະເນນ

ຈະເຣີນພອນ (ບອກ) ແດ່ຂຸນນາງ ໂດຍພຣະສົງສາມະເນນ

ຄຳກິຣິຍາ "<u>ຂອບໃຈ</u>" ມີລະບຽບໃຊ້ດັ່ງຕໍ່ໄປນີ້:

ຂໍພຣະຣາຊທານຂອບພຣະມະຫາກະຣຸນາທິຄຸນຢ່າງລົ້ນເກົ້າ ລົ້ນ

ຂນ່ອມ ສະແດງຕໍ່ພຣະຣາຊາ ພຣະຣາຊີນີ ແລະ ຣັຊທາຍາດ.

ຂໍປະທານຂອບພຣະເດດພຣະຄຸນຢ່າງສູງ, ເຈົ້ານາຍຊັ້ນເຈົ້າກຣົມ

ຂໍຂອບພຣະທັຍ ຕໍ່ເຈົ້ານາຍ

ຂໍຂອບພຣະຄຸນ ຕໍ່ຂຸນນາງຊັ້ນສູງ

ຂອບຄຸນ ຂອບໃຈ ຕໍ່ຂຸນນາງຊັ້ນຕໍ່ລົງມາ ແລະ ຄົນສຸພາບ.

## ຫມວດທີ ໔– ຄຳວິເສດ ທີ່ໃຊ້ເປັນສັບຣາຊາພາບ

ຄຳວິເສດຫມາຍເຖິງຄຳຄຸນສັບ (adjectif) ແລະ ຄຳກິຣິຍາວິເສດ (adverbe) ທັງສອງຢ່າງໂຮມກັນ.

ຄຳຄຸນສັບບໍ່ມີຣາຊາສັບຕ່າງຫາກ ໃຊ້ວາງດຽວກັນກັບຄຳຄຸນສັບອື່ນໆ ໃນຄຳເວົ້າທັມມະດາ ໂດຍຢ່າງ: ພຣະຫັດສັ້ນ ແປວ່າ ມືສັ້ນ, ເກດຍາວ ແປວ່າ ຜົມຍາວ

ສ່ວນຄຳກິຣິຍາວິເສດນັ້ນ ມີແຕ່ຄຳປະຕິຍານກິຣິຍາວິເສດ (adverbe d'affirmation) ຈັດເຂົ້າລະບຽບຣາຊາສັບ ໂດຍຢ່າງ:

ຖວາຍພຣະພອນ ສຳລັບພຣະສົງສາມະເນນ ຕໍ່ພຣະຣາຊາ ເຈົ້ານາຍ

ຈະເຣີນພອນ ສຳລັບພຣະສົງສາມະເນນ ຕໍ່ຂຸນນາງ

ໂດຍທານໂທດ ຂ້າພຣະພຸທເຈົ້າ ຂໍຮັບໃສ່ເກົ້າໃສ່ຂມ່ອມ ສຳລັບຜູ້ນ້ອຍຕໍ່ພຣະຣາຊາ ພຣະຣາຊີນີ ແລະ ຣັຊທາຍາດ.

ໂດຍທານໂທດຂ້ານ້ອຍ ສຳລັບຜູ້ນ້ອຍກໍ່ເຈົ້ານາຍ

ໂດຍຂ້ານ້ອຍ ສຳລັບຜູ້ນ້ອຍຕໍ່ຊຸນນາງ

ໂດຍ ສຳລັບຄົນສຸພາບຕໍ່ຜູ້ໃຫຍ່ ແລະ ຄົນສຸພາບດ້ວຍກັນ

ເຈົ້າ ສຳລັບຄົນສຸພາບ

ສຳລັບຜູ້ໃຫຍ່ຕໍ່ຜູ້ນ້ອຍນັ້ນ ບໍ່ມີລະບຽບແນ່ນອນ ແລ້ວແຕ່ຈະໃຊ້ໂດຍ່າງ: ເຈົ້າ ສຳລັບໃຊ້ໂດຍທົ່ວໄປ.

## ຫມວດທີ່ ៥– ຄຳສຸພາບ

ລະບຽບສັນຍາຊາດກ່ຽວກັບຄຳສຸພາບ ຄື ຖ້ອຍຄຳທີ່ບຸກຄົນສຸພາບຄວນໃຊ້ມີດັ່ງຕໍ່ໄປນີ້:

໑ – ເວັ້ນຈາກໃຊ້ຄຳຫຍາບຊ້າ ທີ່ສະແດງວ່າ ເຮົາບໍ່ມີຄວາມນັບຖືຜູ້ອື່ນ ຫລື ຂາດກິລິຍາມາລະຍາດ ທີ່ເປັນສົມບັດຂອງຜູ້ດີ ບໍ່ຄວນໃຊ້ຄຳອຸທານຢ່າງສາມັນຊົນ ຄື ຫື! ຫະ! ເອີ! ເວີຍ! ບໍ່ຄວນໃຊ້ຄຳກິລິຍາວິເສດປະຕິເສດ ຫລື ປະຕິບານບາງຄຳທີ່ບໍ່ສົມຄວນ ຄື ບໍ່ດອກ ອື ເອີ ທັງບໍ່ງຶກຫົວ ຫລື ບໍ່ແກວ່ງຫົວ ເພື່ອບອກວ່າຮັບ ຫລື ບໍ່ຮັບດ້ວຍ.

໒ – ບໍ່ຄວນໃຊ້ຄຳບໍ່ສຸພາບ ເຊັ່ນຄຳວ່າ ບັກ ອີ ກູ ມຶງ ມັນເຂົາ ໃຫ້ໃຊ້ຄຳສຸພາບແທນ ຄື ທ່ານ ຫລື ທ້າວ ນາງ ຂ້ານ້ອຍ ທ່ານ ເພິ່ນ.

ບໍ່ຄວນວ່າ ຂີ້ ຫລື ຍ່ຽວ ໃຫ້ວ່າຖ່າຍຫນັກຫລືຖ່າຍເບົາ ຫລື ຈະວ່າອຸດຈາລະ ຫລື ປັດສາວະ ກໍໄດ້.

໓ – ບໍ່ຄວນໃຊ້ຄຳທີ່ສາມັນຊົນເວົ້າ ເພື່ອສະແດງເຖິງອະວັຍວະລັບຂອງຜູ້ຊາຍ ຫລື ຜູ້ຍິງ ຄື ປາກ ສາກກະເບືອ ສອງກີບປາຍນີ້.

໔ – ບໍ່ຄວນໃຊ້ຄໍາປັ້ນ ເພື່ອປິດບັງ ຄໍາຫຍາບຊ້າລາມົກ ຄື ບົທາຍ ແຂກດີ ຯລຯ

<u>ຫມາຍເຫດ</u>: ວິທີສ້າງຈິດຫມາຍ ແລະ ວິທີຂາບທູນ ຈະໄດ້ກ່າວໄວ້ໃນອາຊາສັບ.

# ເອກສາບຣາຊການ

**ROYAUME DU LAOS**
**ORDONNANCE ROYALE No 10**
**NOUS, SOMDET PHRA CHAO SISAVANG VONG**
**ROI DU LAOS,**

VU le Modus Vivendi provisoire franco-laotien en date du 27 Août 1946 ;

VU la Constitution du Royaume du Laos promulguée par l'Ordonnance Royale du 11 Mai 1947 ;

VU l'arrêté du 27 Août 1948 du Premier Ministre du Gouvernement du Laos portant nomination d'une Commission chargée de fixer l'écriture laotienne d'usage courant ;

VU le procès-verbal en date des 5,6,7 et 9 Octobre 1948 de la Commission précitée ;

Le Conseil des Ministres entendu,

O R D O N N O N S :

ARTICLE 1 ER .— L'alphabet de l'écriture laotienne (consonnes, voyelles et accents), les chiffres, les signes de ponctuation ainsi les règles de formation des syllabes sont fixés conformément au tableau annexé à la présente Ordonnance.

ARTICLE 2.— L'orthographe des mots de la langue laotienne ainsi que des mots d'origine étrangère employés dans la langue laotienne est essentiellement phonétique suivant la prononciation en usage dans le pays.

ARTICLE 3.— L'ecriture «THAM» reste régie par ses règles orthographiques et étymologiques.

ARTICLE 4.— Notre Conseil des Ministres est chargé de l'exécution de la présente Ordonnance.

Fait en Notre Palais Royal
Luangprabang le 27 Janvier 1949
Signé : SISAVANG VONG
Par Sa Majesté le Roi du Laos :
Le Ministre de l'Education Nationale
et de la Santé Publique,
Signé : Kou ABHAY

ແປຈາກພາສາຝຣັ່ງ

ພຣະຣາຊອານາຈັກລາວ

ພຣະຣາຊໂອງການ

ເຮົາ ສົມເດັດພຣະເຈົ້າ ສີສວ່າງວົງ

ພຣະມະຫາກະສັດ ແຫ່ງ ປະເທດລາວ,

ຊົງເຫັນ ຄຳຕົກລົງຊົ່ວຄາວ ລະຫວ່າງ ຝຣັ່ງແລະລາວ ສະບັບ ລົງວັນທີ່ ໒໗ ອາອຸດ ໑໙໔໖;

ຊົງເຫັນ ຣັຖທັມມະນູນ ພຣະຣາຊອານາຈັກລາວ ລົງວັນທີ່ ໑໑ ແມ ໑໙໔໗;

ຊົງເຫັນ ດຳຣັດ ນາຍົກຣັຖມົນຕຣີ ລົງວັນທີ່ ໒໗ ອາອຸດ ໑໙໔໙ ແຕ່ງຕັ້ງຄນະກັມມະການຣຽບຣຽງແລະບັນບັດ ການຂຽນ ຄຳລາວ ທີ່ ເຄີຍໃຊ້ກັນ;

ຊົງເຫັນ ບັນທຶກການປະຊຸມ ເມື່ອວັນທີ່ ໕,໖,໗ ແລະ ໘ ໑໙໔໙ ຂອງຄນະກັມມະການ ທີ່ກ່າວເທິງນີ້;

ກອງປະຊຸມຣັຖມົນຕີ ລົງຄວາມເຫັນດີດ້ວຍ,

ຈຶ່ງຊົງພຣະຣາຊດຳຣັດ ວ່າ:

ມາດຕາ ໑.– ອັກຂຣະລາວ (ພຍັນຊນະ ສຣະ ແລະ ວັນນະຍຸດ), ເລກ, ເຄື່ອງໝາຍວັກ ພ້ອມທັງ ວິທີປະກອບພຍາງ ນັ້ນ ໄດ້ຈັດໄວ້ເປັນ ລະບຽບ ດັ່ງແຈ້ງຢູ່ໃນ ແຜນ ທີ່ຄັດຕິດ ພຣະຣາຊໂອງການ ສະບັບນີ້.

ມາດຕາ ໒.– ວິທີຂຽນຄຳລາວ ແລະ ຄຳທີ່ເອົາມາຈາກພາສາອື່ນ

ແມ່ນ ວິທີສະກົດຕາມສຽງ ທີ່ເຄີຍໃຊ້ກັນປູ່ໃນປະເທດລາວ.

ມາດຕາ ໓.– ຫນັງສື "ທັມ" ໃຊ້ ວິທີຂຽນຕາມລະບຽບທີ່ໃຊ້ກັນມາແລ້ວ.

ມາດຕາ ໔.– ກອງປະຊຸມຣັຖມົນຕີ ເປັນຜູ້ຮັບພາຣະ ເພື່ອໃຫ້ເປັນໄປຕາມພຣະຣາຊໂອງການສະບັບນີ້.

ທຳທີ່ພຣະບໍຣົມມະຫາຣາຊວັງ

ຫລວງພຣະບາງ ວັນທີ ໑໗ ຊັງວິເປ ໑໙໔໙

ຊົງພຣະປາຣະມາພິໄທ: ສີສວ່າງວົງ

ເຊັນຮັບສນອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ :

ຣັຖມົນຕີກະຊວງສຶກສາທິການ ແລະ ສາທາຣະນະສຸກ,

ເຊັນ: ກຸ ອະພັຍ

# ຄນະກັມມະການວັນນະຄະດີ

ຄນະກັມມະການວັນນະຄະດີລາວ ໄດ້ຖືກແຕ່ງຕັ້ງຂຶ້ນແຕ່ປີ ຄ.ສ. ໑໙໕໑ ຕາມດຳຣັດຂອງນາຍົກຣັຖມົນຕີ ສະບັບເລກທີ ໑໐໗ ລົງວັນທີ ໒໗ ສິງຫາ (ອາອຸດ) ໂດຍອາສັຍພຣະຣາຊໂອງການສະບັບເລກທີ ໑໔ ມິຖຸນາ (ຊວງ) ແລະ ເລກທີ ໓໔ ລົງວັນທີ ໒໘ ກຸມພາ (ເຟວຣີເຍ) ໑໙໕໐. ໃນມາດຕາ ໓ ແຫ່ງ ດຳຣັດທີ່ກ່າວນີ້ ໄດ້ກຳນົດຈຳນວນ ຄນະກັມມະການໄວ້ທັງຫມົດ ໒໕ ທ່ານ ແຕ່ວ່າໃນຂັ້ນຕົ້ນນີ້ ໄດ້ແຕ່ງຕັ້ງຂຶ້ນກ່ອນ ພຽງ ໕ ທ່ານ ເພື່ອໃຫ້ເປັນປະຖົມສະມາຊິກ.

ຄນະກັມມະການປະຖົມສະມາຊິກ ໕ ທ່ານນັ້ນ ຄື:

| | | |
|---|---|---|
| ໑. ພນະທ່ານ ກຸ ອະພັຍ | ເປັນ | ປະທານ |
| ໒. ພນະທ່ານ ພຸຍ ປັນຍາ | " | ຮອງປະທານ |
| ໓. ພນະທ່ານ ບົງ ສຸວັນນະວົງ | " | ຮອງປະທານ |
| ໔. ທ່ານ ສົມຈິນ ປີແອ ງິນ | " | ກັມມະການ |
| ໕. ທ່ານ ມະຫາ ສີລາ ວີຣະວົງ | " | ກັມມະການ |

ຕໍ່ນັ້ນມາ ຈົນເຖິງປີ ຄ.ສ. ໑໙໖໐ ທ່ານຜູ້ມີກຽດຫລາຍທ່ານ ໄດ້ຮັບເຊີນເຂົ້າເປັນຄນະກັມມະການຕື່ມອີກຕາມລຳດັບ ຄື ຕໍ່ມາໄດ້ມີ ຄນະກັມມະການເຖິງ ໑໕ ທ່ານ (ໃນຈຳນວນນີ້ ໔ ທ່ານໄດ້ເຖິງອະສັນຍະກັມ ແລະ ໑ ທ່ານໄດ້ລາອອກ) ດັ່ງນີ້:

໑. ພນະທ່ານ ກຸ ອະພັຍ ປະທານກິດຕິມະສັກ (ເຖິງແກ່ອະສັນ**ຍະກັມ**)

໒. ພນະທ່ານ ຜຸຍ ປັນຍາ ຮອງປະທານກິດຕິມະສັກ

໓ ທ່ານ ສົມຈິນ ປີແອ ງິນ ປະທານກັມມະການຈັດການປະຈຳປີ

໔. ພນະທ່ານ ບົງ ສຸວັນນະວົງ ຮອງປະທານກັມມະການຈັດການ ປະຈຳປີ

໕. ມະຫາ ພູມີ ຈິດພົງ ກັມມະການ ແລະ ເລຂາທິການ (ເຖິງແກ່ກັມ)

໖. ພນະທ່ານ ທນຸບ ອະພັຍ ກັມມະການ (ເຖິງແກ່ອະສັນຍະກັມ)

໗. ທ່ານ ເກືອງ ປະທຸມຊາດ ກັມມະການ

໘. ທ່ານ ຄູນ ພິລາວັນ ກັມມະການ

໙. ທ່ານ ພູວົງ ພິມມະສອນ ກັມມະການ

໑໐. ທ່ານ ທນູທັກ ລິດທິມົ່ຣະດາ ກັມມະການ (ເຖິງແກ່ກັມ)

໑໑. ທ່ານ ມະຫາ ສີລາ ວີຣະວົງ (ໄດ້ລາອອກແລ້ວ)

໑໒. ທ່ານ ເກນ ກັມມະການ

໑໓. ທ່ານ ໄຕ ແກ້ວຫລວງໂຄດ ກັມມະການ

໑໔ ທ່ານ ສຸພັນ ບລັງຊາເດີລາບຣິດ ກັມມະການ.

ພຣະຣາຊອານາຈັກລາວ

ພຣະຣາຊໂອງການ ເລກທີ ໗໒

ວັນທີ ໒໓. ໒. ໗໐

ເຮົາພຣະອົງ ບໍຣົມເຊດຖາ ຂັດຕິຍະ ສຸຣິຍະວົງສາ

ພຣະມະຫາ ສີສວ່າງ ວັທນາ

ພຣະເຈົ້າມະຫາຊີວິດລາວ

ເຫັນຕາມ ຣັຖທັມມະນູນແຫ່ງຣາຊອານາຈັກລາວ ລົງວັນທີ ໑໑ ພຶສພາ ໑໙໔໗ ແລະ ຂໍ້ຄວາມທີ່ແກ້ໄຂໃຫມ່;

ເຫັນຕາມ ພຣະຣາຊໂອງການ ເລກທີ ໑໐໐ ລົງວັນທີ ໒ ເມສາ ໑໙໕໒ ກ່ຽວກັບ ການວາງລະບຽບ ຂອງ ກອງປະຊຸມຄະນະຣັຖມົນຕີ;

ເຫັນຕາມ ພຣະຣາຊໂອງການເລກທີ ໒໑໙ ລົງວັນທີ ໒໓ ມິຖຸນາ ໑໙໖໒ ກ່ຽວກັບການຈັດຕັ້ງສະມາຊິກແຫ່ງຄະນະຣັຖບານປະສົມຊົ່ວຄາວແຫ່ງຣາຊອານາຈັກລາວ;

ເຫັນຕາມ ພຣະຣາຊໂອງການເລກທີ ໒໘໓,໑໒໘,໑໘໕,໗໓,໒໘໑ ແລະ ໑໘໐ ລົງວັນທີ ໓໑ ສິງຫາ ໑໙໖໒ ວັນທີ ໒໒ ພຶສພາ ໒໗ ກໍຣະກະດາ ໑໙໖໔ ວັນທີ ໑໑ ມີນາ ໙ ກັນຍາ ໑໙໖໕ ແລະ ວັນທີ ໑໒ ມິຖຸນາ ໑໙໖໗ ກ່ຽວກັບການປັບປຸງຄະນະຣັຖບານປະສົມຊົ່ວຄາວແຫ່ງຣາຊອານາຈັກລາວ;

ເຫັນຕາມ ພຣະຣາຊໂອງການເລກທີ ໑໐ ລົງວັນທີ ໒໗ ມະກະຣາ ໑໙໔໙ ກ່ຽວກັບ ຫລັກການຂຽນທາງຣາຊການ ຕາມແມ່ອັກຂຣະລາວ;

ເຫັນດານ ພຣະຣາຊໂອງການເລກທີ ໓໔ ລົງວັນທີ ໑໒ ກຸມພາ ໑໙໔໗ ແລະ ຂໍ້ຄວາມທີ່ແກ້ໄຂໃໝ່ ກ່ຽວກັບ ການໃຫ້ເບັ້ຽລ້ຽງແກ່ຂ້າຣາຊການ ທີ່ຮັບຕຳແໜ່ງປົກຄອງຣາຊການ;

ເຫັນດານ ດຳຣັດນາບົກຣັດຖມົນຕີເລກທີ ໒໐໗/ປປ໘ ລົງວັນທີ ໒໗ ສິງຫາ ໑໙໕໑ ກ່ຽວກັບ ການຈັດຕັ້ງ ຄນະກັມມະການວັນນະຄະດີ;

ເຫັນດານ ດຳຣັດກະຊວງເລກທີ ໗໒໗/ອ໑໑ ລົງວັນທີ ໑໔ ພຶສຈິກາ ໑໙໖໖ ຈັດຕັ້ງ ຣາງວັນ ທາງວັນນະຄະດີ;

ດານຄຳສເນີ ຂອງ ຣອງນາບົກຣັດຖມົນຕີ ຣັດຖມົນຕີກະຊວງສຶກສາທິການ ສິລປາກອນ ແລະ ກິລາບຸວະຊົນ;

ດານຄວາມຕົກລົງ ຂອງ ຄນະກັມມະການວັນນະຄະດີ ຄັ້ງທີ ໕ ທັນວາ ໑໙໖໙;

ດານຄວາມເຫັນຊອບ ຂອງ ກອງປະຊຸມຄນະຣັດຖບານ ຄັ້ງວັນທີ ໗ ມະກະຣາ ໑໙໗໐ ເວລາ ໑໖ ໂມງກົງ.

ຈິ່ງຊົງພຣະຣາຊດຳຣັດວ່າ:

ມາດຕາ ໑ - ເພື່ອສົ່ງເສີມ ແລະ ປ້ອງກັນ ລັກສນະ ສິລປະກັມ ແລະ ອັກສອນສາດຂອງຊາດໄວ້ ໄດ້ຈັດຕັ້ງສະມາຄົມ ວັນນະຄະດີ ແລະ ສິລປະ ຂຶ້ນນຶ່ງສະມາຄົມ ທີ່ມີຊື່ວ່າ "ຣາຊບັນດິດສະພາລາວ".

ມາດຕາ ໒ - "ຣາຊບັນດິດສະພາລາວ" ຢູ່ໃນຄວາມອຸປຖັມ ຂອງ ກະຊວງສຶກສາທິການແຫ່ງຊາດ "ຣາຊບັນດິດສະພາລາວ" ເປັນອົງການປະກອບອຳນາດນຶ່ງໃຫຍ່ ທາງສິລປະກັມ ວັນນະກັມ ແລະ ພາສາສາດ,

ມີສະມັດຖະພາບທາງສານ ແລະ ສາມາດຮັບເອົາ ຊັບສິນບໍລິຈາກ ແລະ ມໍຣະດົກ ໄດ້.

ມາດຕາ ໓.- ສະມາຊິກຂອງຣາຊບັນດິດສະພາ ໄດ້ຖືກກຳນົດໄວ້ເປັນຈຳນວນ ໒໕ ທ່ານ ເປັນຢ່າງຫລາຍ. ສະມາຊິກຂອງຣາຊບັນດິດສະພານັ້ນຖືກເລືອກເອົາໃນຈຳນວນບຸກຄົນສຳຄັນລາວ ອາຍຸຢ່າງຕ່ຳມີປະສິດທິພາບ ໂດຍສະເພາະ ທາງພາສາສາດ ວັນນະກັມ ແລະ ໔໕ ປີ ສິລປະກັມ.

ສະມາຊິກ ໑໐ ຄົນແຮກ ຈະຖືກເລືອກຕັ້ງຂຶ້ນ ໂດຍ ພຣະຣາຊໂອງການ.

ສະມາຊິກອື່ນໆ ກໍຈະຖືກເລືອກຕັ້ງ ໂດຍ ພຣະຣາຊໂອງການເຊັ່ນດຽວກັນ ຕາມຄຳສເນີ ຂອງ ຣາຊບັນດິດສະພາ ທີ່ປະຈຳການຢູ່ຕາມລະບະເວລາທີ່ມີຜູ້ສມັກເຂົ້າສເນີຕົວເປັນລຳດັບໄປ.

ບັດຖາບັນດາສັກ ຂອງ ສະມາຊິກຣາຊບັນດິດສະພານັ້ນ ເປັນທີ່ໃຫ້ກຽດໂດຍສະເພາະ ແຕ່ສາມາດຈະໄດ້ຮັບເບັ້ຽລ້ຽງຄ່າປ່ວຍການ ເນື່ອງຈາກໄດ້ເຂົ້າຮ່ວມປະຊຸມການ ຊຶ່ງອັດຕາຈະໄດ້ຖືກຈຳກັດໄວ້ໃນດຳຣັດ ຂອງ ຣັຖມົນຕີ ກະຊວງສຶກສາທິການ.

ນອກຈາກ ສິນຊັບບໍຣິຈາກ ແລະ ມໍຣະດົກ ທີ່ຕົນໄດ້ຮັບໄວ້ເປັນລາຍໄດ້ນັ້ນແລ້ວ ຣາຊບັນດິດສະພາ ອາດຈະຮັບພາຫະນະ ທາງວັດຖຸ ແລະ ທາງການເງິນ ອັນຈຳເປັນແກ່ກິຈການດຳເນີນງານຂອງຕົນນັ້ນ ຈາກກະຊວງສຶກສາທິການອີກດ້ວຍ. ການປົກຄອງ ສິນຊັບບໍຣິຈາກ ແລະ

ມໍຣະດົກນັ້ນ ຂຶ້ນແກ່ ຣາຊບັນດິດສະພາ ທັງສິ້ນ.

ຣາຊບັນດິດສະພາ ຈະປະກອບດ້ວຍ ຄນະບໍຣິຫານ ຂຶ້ນ ຄື ປະທານ ນຶ່ງທ່ານ ຮອງປະທານ ນຶ່ງທ່ານ ແລະ ກັມມະການ ສາມທ່ານ ຊຶ່ງໄດ້ຖືກເລືອກຕັ້ງຂຶ້ນມີກຳນົດສອງປີ.

ຣາຊບັນດິດສະພາ ຈະຕັ້ງ ລະບຽບພາຍໃນ ຂຶ້ນເອງ.

ມາດຕາ ໔ - ຣາຊບັນດິດສະພາ ມີປະສິດທິພາບ ໂດຍສະເພາະ ອັນເປັນອຳນາດບໍ່ງໃຫຍ່ ທາງພາສາ ວັນນະກັມ ແລະ ສິລປະກັມ; ຣາຊບັນດິດສະພາເປັນຜູ້ອອກຄວາມເຫັນໃຫ້ອະນຸມັດຣາງວັນ ແກ່ ສິລປະ ຄະດີ ແລະ ວັນນະຄະດີ, ເຫັນຄຸນຄ່າຂອງໜັງສື ແລະ ຂໍ້ພິສູດຕ່າງໆທີ່ ກ່ຽວກັບ :

໑. ໄວຍາກອນ ພາສາ ແລະ ວັນນະຄະດີ ລາວ

໒. ການດັດແປງຮຽບຮຽງໃຫມ່ ຫລື ການແປໜັງສືຈາກຕ່າງ ປະເທດ

໓. ການຮຽບຮຽງ ຫລື ການແກ້ໄຂ ວັຈນານຸກົມລາວ.

ນອກຈາກປະສິດທິພາບໂດຍສະເພາະ ທີ່ລະບຸໄວ້ຂ້າງເທິງນີ້ ຣາຊບັນດິດສະພາ ຍັງເປັນອົງການ ຄວບຄຸມ ແລະ ດູແລ ທົ່ວໄປ ປະຈຳກະຊວງສຶກສາທິການ ອັນກ່ຽວແກ່ຫລັກສະກົດຄຳ ໃນແບບຮຽນ ແລະ ປຶ້ມສອນຕ່າງໆ ອີກດ້ວຍ ເພື່ອໃຫ້ຫລັກການຂຽນໜັງສືລາວ ຖືກຕ້ອງ ຕາມພຣະຣາຊໂອງການເລກທີ ໑໐ ລົງວັນທີ ໒໗ ມະກະຣາ ໑໙໔໙.

ມາດຕາ ໕.- ຄຳຕົກລົງຂອງຣາຊບັນດິດສະພາ ຈະຖືກນຳມາໃຊ້ ໃນດ້ານສາທາຣະນະ ໂດຍກະຊວງສຶກສາທິການເປັນຜູ້ຈັດຂຶ້ນ ຕາມ ປະສິດທິພາບຂອງຣັຖບານ

ເພື່ອໃຫ້ດຳເນີນການໄປໄດ້ ຣັຖມົນຕີກະຊວງສຶກສາທິການ ຈະມອບຂ້າຣາຊການຜູ້ນຶ່ງໃຫ້ແກ່ຣາຊບັນດິດສະພາ, ຜູ້ທີ່ມີບັດເປັນ ຊັ້ນເອກສາມາດທາງພາສາ ແລະ ວັນນະຄະດີ ຊຶ່ງຈະຮັບຕຳແຫນ່ງເປັນ "ເລຂານຸການປະຈຳ" ແລະ ຈະໄດ້ຮັບແຕ່ງຕັ້ງຂຶ້ນ ໂດຍຄວາມເຫັນຊອບຂອງ ຣາຊບັນດິດສະພາ. ຂ້າຣາຊການອື່ນໆອີກ ຈະຖືກມອບຫມາຍໃຫ້ແກ່ຣາຊບັນດິດສະພາ ເພື່ອຮັບຫນ້າທີ່ໃນສຳນັກເລຂານຸການປະຈຳ. ຜູ້ຊ່ຽວຊານຫລາຍຄົນກໍຈະຖືກມອບຫມາຍໃຫ້ແກ່ຣາຊບັນດິດສະພາເຫມືອນກັນ. ກ່ຽວກັບ ການປົກຄອງ ລະບຽບວິນັຍຂ້າຣາຊການສຳນັກເລຂານຸການ ພ້ອມທັງການກຳກັບລາຍໄດ້ລາຍຈ່າຍງົບປະມານທີ່ກະໄວ້ ເພື່ອການດຳເນີນງານໃນງົບປະມານຂອງ ກະຊວງສຶກສາແຫ່ງຊາດນັ້ນ ເລຂານຸການ ຂຶ້ນກັບອະທິບໍດີປະຈຳກະຊວງສຶກສາທິການ.

ຣາຊບັນດິດສະພາ ເປັນຜູ້ຮັບຜິດຊອບຢ່າງເຕັມປ່ຽມ ໃນສິ່ງຊັບບໍຣິຈາກ ແລະ ມໍຣະດົກ ທີ່ຕົນໄດ້ຮັບ ໂດຍກົງ ຫລື ໂດຍຜ່ານທາງຄນະຣັຖບານ ນັ້ນ.

ປະທານ ຄນະຣາຊບັນດິດສະພາ ຕິດຕໍ່ກັບ ຣັຖມົນຕີ ໂດຍກົງກ່ຽວກັບ ບັນຫາທຸກຢ່າງ ຊຶ່ງຕົນເຫັນສົມຄວນຮ້ອງຮຽນຕໍ່ຣັຖບານ ນັ້ນ.

ມາດຕາ ໘.- ເລຂານຸການປະຈຳຣາຊບັນດິດສະພາ ຈະຖືກຈັດເຂົ້າປະເພດ ອາ-໑ ກ່ຽວກັບ ເບັ້ຍລ້ຽງປະຈຳຕຳແຫນ່ງ.

ມາດຕາ ໙.- ເປັນການພາງໄປກ່ອນ ພວກສະມາຊິກ ຄນະກັມມະການ ວັນນະຄະດີ ປັດຈຸບັນ ຈະຖືກຖືວ່າ ເປັນ ສະມາຊິກຣາຊບັນດິດສະພາ ໂດຍສິດທິເສຣີ. ສະມາຊິກເຫລົ່ານີ້ ຈະໂຮມກັນເປັນກອງປະຊຸມເພື່ອສເນີສະມາຊິກຕື່ມຂຶ້ນໃຫມ່ ຕໍ່ຣັຖມົນຕີ ກະຊວງສຶກສາທິການ ຈົນ

ກວ່າຈະຄົບຈຳນວນ ໒໕ ທ່ານ.

ຂ້າຣາຊການທັງຫລາຍ ທີ່ຮັບໃຊ້ຄນະກັມມະການວັນນະຄະດີ ປັດຈຸບັນນີ້ ຈະຖຸກມອບຫມາຍໃຫ້ແກ່ ຣາຊບັນດິດສະພາ.

ມາດຕາ ໗.– ສະເດັດນາຍົກຣັຖມົນຕີ, ທ່ານຮອງນາຍົກຣັຖມົນຕີ ຣັຖມົນຕີກະຊວງສຶກສາທິການ ສິລປາກອນ ແລະ ກິລານຸວະຊົນ ແລະ ຣັຖມົນຕີກະຊວງການຄັງ ເປັນຜູ້ປະຕິບັດພຣະຣາຊໂອງການສະບັບນີ້ ຕາມຫນ້າທີ່ຂອງໃຜລາວ.

ທຳທີ່ພຣະບໍຣົມມະຫາຣາຊວັງ

ຫລວງພຣະບາງ ວັນທີ ໒໖ ກຸມພາ ໑໙໗໐

ເຊັນ ແລະ ປະທັບຕາ: ສີສວ່າງ ວັທນາ

ຜູ້ຮັບສນອງພຣະບໍຣົມຣາຊໂອງການ

ສະເດັດນາຍົກຣັຖມົນຕີ, ປະທານກອງປະຊຸມຄນະຣັຖມົນຕີ,

ເຊັນ ແລະ ປະທັບຕາ: ເຈົ້າສຸວັນນະພູມາ (ເຈົ້າກົມມະບາ)

ຮອງນາຍົກຣັຖມົນຕີ ຣັຖມົນຕີ ກະຊວງສຶກສາທິການ

ສິລປາກອນ ແລະກິລານຸວະຊົນ

ເຊັນ ແລະ ປະທັບຕາ: ພຍາ ໄຊນະເພັດຈຳພອນ

(ເຫລືອມ ອິນສີຊຽງໃຫມ່)

ຣັຖມົນຕີ ກະຊວງການຄັງ

ເຊັນ ແລະ ປະທັບຕາ: ສີສຸກ ນະຈຳປາສັກ

PRESIDENCE DU CONSEIL
FONCTION PUBLIQUE
Secrétar'at Permanent
Visa No 11 du 22-1-70
VISE AU CONTROLE FINANCIER
le 27-1-1970 sous No 241

# ສະມາຊິກ ຣາຊບັນດິຕສະພາ

ສະມາຊິກ ຂອງ ຣາຊບັນດິຕສະພາ ຊຶ່ງຖືກແຕ່ງຕັ້ງ ໂດຍ ພຣະຣາຊໂອງການ ເລກທີ ໒໒໑ ລົງວັນທີ ໒໗/໖/໗໐ ແລະ ພຣະຣາຊໂອງການ ເລກທີ ໑໓໒ ລົງວັນທີ ໓໑/໖/໗໑.

ມີຈຳນວນໃນປັດຈຸບັນນີ້ ໒໑ ທ່ານ ຄື:

໑. ເຈົ້າພຍາຫລວງຫມື່ນລູກທ້າວ (ພຸຍ ປັນຍາ)
໒. ທ່ານ ສິນຈິນ ປີແອ ງິນ
໓. ພຍາ ບໍຣິຫານສຶກສາ (ບົງ ສຸວັນນະວົງ)
໔. ພຍາ ເດຊາປະສິດ (ໄດ ແກ້ວຫລວງໂຄດ)
໕. ພຍາ ຄຸນວາທີ (ຄູນ ພິລາວັນ)
໖. ທ່ານ ເກື້ອງ ປະທຸມຊາດ (ເຖິງແກ່ກັມ)
໗. ພຍາ ພູມີພາກ (ພູວົງ ພິມມະສອນ)
໘. ເພັຍ ກິລວິຫບານຸຣັກ (ເກນ) (ເຖິງແກ່ກັມ)
໙. ເພັຍ ສີຣັກສາ (ທອງດີ ສີຣິສຸກ)
໑໐. ເພັຍ ຈຳນົງພັກດີ (ຈັນທີ ຈັນທະສຸດທີ)
໑໑. ເພັຍ ສີສັດທັມ (ນວນ ອຸເທນສັກດາ)
໑໒. ນະຫາ ບົວໄຫລ ສວ່າງແສງຣຸທັບ
໑໓. ເພັຍ ພິພິດພັກດີ (ພຽກ ຈຸລມຸນີ)
໑໔. ເພັຍ ລັກສນະວິຈານ (ລອດ ກຸສົນ)
໑໕. ທ່ານ ຄຳອ້ວນ ຣັດນະວົງ

໑໖. ພຍາ ສິດທິນະໄບທັນ (ຄຳສີ ສິຣິນະໄບທັນ)

໑໗. ເຈົ້າ ສະຖຽນ ນະຈຳປາສັກ

໑໘. ພ.ທ. ຊຳນານ ປຣິຊາບານ

໑໙. ເພັງ ອະນຸຣັກອັກສອນສາດ (ອ້ວນ ສີສຸພັນທອງ ວິງກິດ ອັດນະ)

໒໐. ທ່ານ ຄຳຟອງ ສຸວັນນະຣາດ

໒໑. ນາງ ພຍາ ບຸນຊູ ຊຸນະນິກອ່ນ

# ວ ະ ຈິ ວິ ພ າ ກ

ຣັບຣອງ ໂດຍ ຣາຊບັນດິດສະພາ

ໃນທີ່ປະຊຸມສະມັດຊາ ຄັ້ງທີ ໓ ສົກປີ ໑໙໗໒
(ແຕ່ວັນທີ ໑໓ ຫາ ໑໕ ພຶສຈິກາ ໑໙໗໒)

ເພື່ອກັດກົດຈົດຫມາຍບັນທຶກ ເລກທີ ໑໐໗/ຣບສ
ລົງວັນທີ ໑໐/໓/໑໙໗໑

ຄນະກັມມະການບໍຣິຫານ ຣາຊບັນດິດສະພາ:
ເຊັ່ນ:

–ປະທານ : ທ່ານ ສິນຈິນ ປີແອ ງິນ
–ຮອງປະທານ : ພຍາ ບໍຣິຫານສຶກສາ (ທົງ ສຸວັນນະວົງ)
–ກັມມະການ : ພຍາ ເດຊາປະສິດ (ໄຕ ແກ້ວຫລວງໂຄດ)
–ກັມມະການ : ນາງ ພຍາ ບຸນຊູ ຊນະນິກອນ

# ສາຣະບານເຣື່ອງ

# ສາຣະບານ


ຫນ້າ

ຄຳອັດຣັຖມົນຕີກະຊວງສຶກສາທິການ ກ

ຄຳນຳຂອງຣາຊບັນດິດສະພາລາວ ງ

ບົດທີ ໑ ລັກສນະຄຳເວົ້າໃນພາສາລາວ

໑. ຄຳເວົ້າ ໑

໒. ພຍາງ ໑

໓. ຄຳມູນ ໒

໔. ຄຳປະສົມ ໒

ບົດທີ ໒– ວິທີແຜງອັກສອນແລະແຜງຄຳເວົ້າ

໑. ວິທີແຜງອັກສອນ ໕

໒. ຄຳແຜງ ໖

໓. ການແຜງຄຳ ໗

ວິທີສົບທິ

ຫມວດ ໑ ສຣະຫນ້າ ແມ່ນ ສຣະ xະ ຫລື xາ ໑໑

ຫມວດ ໒ ສຣະຫນ້າ ແມ່ນ ສຣະ xິ ຫລື xີ ໑໒

ຫມວດ ໓ ສຣະຫນ້າ ແມ່ນ ສຣະ xຸ ຫລື x ໑໓

ບົດທີ ໓–ປະເພດຂອງຄຳເວົ້າແປດຢ່າງ

ຫມວດທີ ໑– ຄຳນາມ

໑. ສາມັນຍະນາມ ໑໕

໑.໑ – ປົກກະຕິບານ ໑໕

໑.໒ – ສມຸຫະບານ ໑໖

໑.໓ – ລັກສນະບານ ໑໖

ຕອນທີ ໑– ລັກສນະບານບອກຊນິດ ໑໗

ຕອນທີ ໒– ລັກສນະບານບອກສັນຖານ ໑໘

໑.໔ – ອາກາຣະບານ ໑໙

໒. ອິສາມັນບະນາມ ໑໙

ເຄື່ອງໝາຍຂອງຄຳບານ ໑໙

໑. ເພດ ໒໐

໒. ພົດ (ວັຈນະ) ໒໒

ໝວດທີ ໒– ຄຳສັພບານ ໒໓

໑. ບຸຣຸດສັພບານ ໒໔

໒. ປະພັນທະສັພບານ ໒໕

໓. ນິບົນສັພບານ ໒໕

໔. ອະນິບົນສັພບານ ໒໖

໕. ສັມພັນທະສັພບານ ໒໗

໖. ປຸດສາສັພບານ ໒໗

໗. ວິພາກສັພບານ ໒໘

ເຄື່ອງໝາຍຂອງຄຳສັພບານ ໒໘

໑. ເອກພົດ (ເອກວັຈນະ) ໒໙

໒. ພະຫຸພົດ (ພະຫຸວັຈນະ) ໒໙

ຫມວດທີ ໓– ຄຳຄຸນສັບ

໑. ລັກສນະຄຸນສັບ ໓໐
໒. ສັມພັນທະຄຸນສັບ ໓໑
໓. ນິບັນຄຸນສັບ ໓໑
໔. ອະນິບັນຄຸນສັບ ໓໑
໕. ປຸດສາຄຸນສັບ ໓໒
໖. ສັງຂບາຄຸນສັບ ໓໒
໗. ປະມານຄຸນສັບ ໓໒

ຫມວດທີ ໔– ຄຳກິຣິບາ

໑. ອະກັມກິຣິບາ ໓໓
໒. ສະກັມກິຣິບາ ໓໓
໓. ວິກະຕັຖກິຣິບາ ໓໔
໔. ຄຳກິຣິບາບຸເຄາະ ໓໔

ເຄື່ອງຫມາບຂອງຄຳກິຣິບາ

ມາລາ

໑. ນິເທດມາລາ ໓໖
໒. ປະຣິກັປມາລາ ໓໖
໓. ອານັດຕິມາລາ ໓໗
໔. ສັກຕິມາລາ ໓໗

໔. ສະພາວະມາລາ ໓໗

ກາບ (ກາລະ)

໑. ປັດຈຸບັນກາບ ໓໘

໒. ອະດີດກາບ ໓໘

໓. ອະນາຄົດກາບ ໓໙

໔ ອະນຸດກາບ ໓໙

ວາຈົກ

໑. ວາຈົກ ໓໙

໒. ກາຣົກ ໔໐

໓. ຫນ້າທີ່ຂອງຄຳ ໔໐

໓.໑ – ປະທານ ໔໑

໓.໒ – ກັມ ໔໑

ກ. ກັມມະກາຣົກ ໔໑

ຂ. ອຸບໃບຄກັມ ໔໑

ຄ. ອະທິກະຣະນະກັມ ໔໑

ຫມວດທີ່ ໕– ຄຳກິຣິບາວິເສດ

໑. ປະກອບຄຳກິຣິບາ ໔໒

໒. ປະກອບຄຳກິຣິບາວິເສດ ໔໓

໒.໑ – ປະດິເສດກິຣິບາວິເສດ ໔໓

໒.໒ – ປະດິບານກິຣິບາວິເສດ ໔໓

ກ. ບອກຮັບ ໔໓
ຂ. ຂານຕອບ ໔໓
ຫມວດທີ ໓– ຄຳບຸພບົດ ໔໔
ຫມວດທີ ໗– ຄຳສັນທານ ໔໕
ຫມວດທີ ໘– ຄຳອຸທານ ໔໗

<u>ບົດທີ ໔ ວິທີກະຈາຍຄຳ</u>

໑. ຊນິດຂອງຄຳຕ່າງໆ ໔໙
໒. ຫນ້າທີ່ຂອງຄຳເວົ້າ ໔໙
໓. ຊນິດຂອງປໂຍກຍ່ອຍຕ່າງໆ ໔໙
ກ. ການກະຈາຍຄຳໃນໄວຍາກອນ ໔໙
ຂ. ການກະຈາຍອະນຸປໂຍກ ໔໙
ຄ. ການກະຈາຍປໂຍກ ໔໙
ຫມວດທີ ໑ - ການຈາຣະໄນຄຳ
໑. ຊນິດຂອງຄຳ ໔໙
໒. ພົດ ໕໐
໓. ຫນ້າທີ່ຂອງຄຳ ໕໐
ໂຕຢ່າງການກະຈາຍຄຳ ໕໐
ຫມວດທີ ໒– ປໂຍກ ໕໒
<u>ບົດພິເສດ</u> ໕໗
ຫມວດທີ ໑ – ຄຳນາມທີ່ໃຊ້ເປັນສັບຣາຊການ ໕໘

໑ ຕອນທີ ໑ ຄຳສາມັນບະນາມແລະອາການະນາມ ໕໘
໑.໑ – ສ່ວນທີ ໑ ສຳລັບຊັ້ນພຣະຣາຊາ ໕໘
໑.໒ – ສ່ວນທີ ໒ ສຳລັບຊັ້ນເຈົ້ານາຍ ໓໐
໒ ຕອນທີ ໒ ວິສາມັນບະນາມທີ່ໃຊ້ເປັນສັບຣາຊການ ໓໒
໒.໑ – ສ່ວນທີ ໑– ນາມເດີມ ໓໒
ກ. ສຳລັບຊັ້ນພຣະຣາຊາ ໓໓
ຂ. ສຳລັບຊັ້ນເຈົ້ານາຍ ໓໓
ຄ. ສຳລັບຊັ້ນພຣະສົງ ໓໓
ງ. ສຳລັບຂຸນນາງ ໓໔
ຈ. ສຳລັບຄົນສຸພາບ ໓໔
໒.໒ – ສ່ວນທີ ໒– ຣາຊທິນນາມແລະນາມຍົດ ໓໔
໒.໓ – ສ່ວນທີ ໓– ຕຳແຫນ່ງຍົດທາງຣາຊການ ໓໓
໓. ຕອນທີ ໓–ລັກສນະນາມທີ່ໃຊ້ເປັນສັບຣາຊການ ໓໓
ຫມວດທີ ໒– ຄຳສັພນາມ ໓໗
໑. ປະຖົມບຸຣຸດ ໓໗
໒. ທຸຕິບະບຸຣຸດ ໓໘
໓. ຕະຕິບະບຸຣຸດ ໓໙
ຫມວດທີ ໓– ຄຳກິຣິຍາທີ່ໃຊ້ເປັນສັບຣາຊການ ໓໙
໑. ຕອນທີ ໑– ຄຳກິຣິຍາກ່ຽວກັບພຣະຣາຊາ
ແລະເຈົ້ານາຍຊັ້ນສູງ ໓໙

໑.໑ – ທີ່ວ່າງກັງກັບຄຳກິຣິຍາທັມມະດາ ໗໐

໑.໒ – ຄຳກິຣິຍາທັມມະດາ "ຊິງ" ປະກອບໜ້າ ໗໐

໑.໓ – ສັບທີ່ປະກອບດ້ວຍຄຳ "ຊິງ" ນຳໜ້າ ໗໑

໒. ຕອນທີ່ ໒– ຄຳກິຣິຍາກ່ຽວກັບບຸກຄົນ

໒.໑ – ກິຣິຍາ "ຕາຍ" ໗໑

໒.໒ – ກິຣິຍາ "ສັ່ງ" ໗໒

໒.໓ – ກິຣິຍາອື່ນໆ ໗໒

໓. ຕອນທີ່ ໓– ຄຳກິຣິຍາບອກກິຣິຍາອາການ
ຂອງຜູ້ນ້ອຍຕໍ່ຜູ້ໃຫຍ່ ໗໔

ໝວດທີ່ ໔–ຄຳວິເສດທີ່ໃຊ້ເປັນສັບຣາຊການ ໗໕

ໝວດທີ່ ໕ ຄຳສຸພາບ ໗໗

ເອກສານຣາຊການ ໗໙

ພຣະຣາຊໂອງການ ເລກທີ່ ໑໐ ທີ່ເປັນພາສາຝຣັ່ງ ໘໑

ພຣະຣາຊໂອງການ ເລກທີ່ ໑໐ ແປຈາກພາສາຝຣັ່ງ ໘໒

ຄນະກັມມະການວັນນະຄະດີ ໘໔

ພຣະຣາຊໂອງການ ເລກທີ່ ໗໒ ລົງວັນທີ່ ໒໓/໒/໗໐ ໘໕

ສະມາຊິກ ຣາຊບັນດິຕສະພາ ໙໒

# ປື້ມຕ່າງໆທີ່ມີຢູ່ໃນຣາຊບັນດິດສະພາລາວ


໑. ບຸນປະເພນີ ແລະບຸນສາສນາ ພາສາຝຣັ່ງ

໒. ນິທານ ທ້າວສັງສິນຊັຍ ພາສາຝຣັ່ງ

໓. ນິທານ ທ້າວກາລະເກດ ພາກ ໑

໔. ນິທານ ທ້າວກາລະເກດ ພາກ ໒

໕. ຊນະສັບທະ

໖. ນິທານ ນາງແດງອ່ອນ ພາກ ໑

໗ ນິທານ ນາງແດງອ່ອນ ພາກ ໒

໘. ນິທານ ທ້າວສຽວສວາດ

໙. ນິທານ ທ້າວສຸຣິວົງ

໑໐ ນິທານ ທ້າວສີທົນ

໑໑ ພື້ນຂຸນບູຣົມຣາຊາທິຣາດ

໑໒. ນິທານ ທ້າວຊຽງໝ້ຽງ

໑໓. ພຣະກົດພຣະພານ

໑໔. ໄວບາກອນ-ຖານດອນ

໑໕. ນິດຄວາມຮ່ຳຮຽນ

໑໖. ຄຳແປສັບພແບກຮ່າຊກາບ

໑໗. ນິທານ ທ້າວລິນທອງ

໑໘. ນິທານ ນົກຈອກ

໑໙. ໄວຍາກອນລາວ ພາກ ໑ (ສະບັບຣາຊບັນດິຕສະພາ)

໒໐. ໄວຍາກອນລາວ ພາກ ໒ ( -"- )

໒໑. ໄວຍາກອນລາວ ພາກ ໓ ( -"- )

໒໒ ໄວຍາກອນລາວ ພາກ ໔ ( -"- )

໒໓. ໄວຍາກອນ ຝຣັ່ງ

໒໔. ຫນອງບົວເຜດ

໒໕. ກາບປູ່ສອນຫລານ

໒໖. ເຣື່ອງອຸປຄຸດເຖຣະ

໒໗. ນິທານ ທ້າວຈັນທະຄາດ ພາສາຝຣັ່ງ

໒໘. ພຣະພຸທຮູບສັກສິດ

໒໙. ນິທານ ທ້າວຈັນທະຄາດ ພາກ ໑

໓໐. ນິທານ ທ້າວຈັນທະຄາດ ພາກ ໒

໓໑. ປະເພນີບູຮານ

໓໒. ບົດອ່ານປະສົມ

໓໓. ອົບຫົບານສອນລູກ

໓໔. ນິທານ ທ້າວກຳສອນ

໓໕. ຄຳພີໂລກນິຕິ

໓໖. ງານເທສການ

໓໗. ສານລືພສູນ

໓໘. ນິທານນາງຕັນໄຕ ພາກ ໑

ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ

ໄວຍາກອນລາວ ພາກ ໓

# ວາກຍະສັມພັນ

ຂອງ

ຄນະກັມມະການວັນນະຄະດີ

ກຸມພາ ພ.ສ. ໒໔໙໓

ພິມເທື່ອທີ ສີ່ ໑.໒໐໐ ສະບັບ

# ຄຳນຳຂອງຄນະກັມມະການວັນນະຄະດີ

ຄນະກັມມະການວັນນະຄະດີລາວ ໄດ້ຖືກແຕ່ງຕັ້ງຂຶ້ນແຕ່ປີ ກ.ສ ໑໙໕໐ ຕາມຄຳຣັດຂອງປາທິກຣັຖມົນຕີ ສະບັບເລກທີ ໒໐໗ ລົງວັນທີ ໒໗ ສິງຫາ (ອຸດ) ໂດຍອາສັຍພຣະຣາຊໂອງການສະບັບເລກທີ ໑໓໒ ລົງວັນທີ ໑໔ ມິຖຸນາ (ຊວງ) ແລະເລກທີ ໓໔ ລົງວັນທີ ໒໘ ກຸມພາ (ເຟວຣີເປ) ໑໙໕໐ ໃນມາດຕາ ໓ ແຫ່ງຄຳຣັດທີ່ກ່າວນີ້ ໄດ້ກຳນົດຈຳນວນ ຄນະກັມມະການໄວ້ທັງຫມົດ ໒໕ ທ່ານ ແຕ່ວ່າໃນຂັ້ນຕົ້ນນີ້ ໄດ້ແຕ່ງຕັ້ງຂຶ້ນກ່ອນແຕ່ພຽງ ໕ ທ່ານ ເພື່ອໃຫ້ເປັນປະຖົມສະມາຊິກ, ຄນະກັມມະການປະຖົມສະມາຊິກ ໕ ທ່ານນັ້ນຄື:

໑. ພນະທ່ານ ກຸ ອະພັຍ ເປັນປະທານ
໒. ພນະທ່ານ ຜຸຍ ປັນຍາ ຮອງປະທານ
໓. ພນະທ່ານ ບົງ ສຸວັນນະວົງ ເປັນກັມມະການ
໔. ທ່ານ ສົມຈິນ ປີແອງິນ ກັມມະການ
໕. ທ່ານ ມະຫາ ສີລາ ວີຣະວົງ ກັມມະການ

ຕໍ່ງ ມາຈົນເຖິງປີ ກ.ສ. ໑໙໓໐ ມີທ່ານຜູ້ມີກຽດຫລາຍທ່ານ ໄດ້ຮັບເຊີນເຂົ້າເປັນກັມມະການຕື່ມອີກຕາມລຳດັບ ຄືປັດຈຸບັນນີ້ ໄດ້ມີຄນະກັມມະການຢູ່ແລ້ວເຖິງ ໑໔ ທ່ານ

໑. ພນະທ່ານກຸ ອະພັຍ ປະທານກິດຕິມະສັກ (ເຖິງແກ່ອະສັນຍະກັມແລ້ວ)
໒. ພນະທ່ານ ຜຸຍ ປັນຍາ ຮອງປະທານກິດຕິມະສັກ
໓. ທ່ານ ສົມຈິນ ປີແອງິນ ປະທານກັມມະການຈັດການປະຈຳປີ
໔. ພນະທ່ານ ບົງ ສຸວັນນະວົງ ຮອງປະທານ

໕. ມະຫາ ສີລາ ວີຣະວົງ ກັມມະການ ແລະ ເລຂານຸການ (ລາອອກແລ້ວ)

໖. ພຣະທ່ານ ກຸຍ ອະພັຍ ກັມມະການ (ເຖິງແກ່ອະສັນຍະກັມແລ້ວ)

໗. ທ່ານ ເກື້ອງ ປະທຸມຊາດ ກັມມະການ

໘. ທ່ານ ຄູນ ພິລາວັນ " "

໙. ທ່ານ ພູວົງ ພິມມະສອນ " " (ປັດຈຸບັນເປັນເລຂາທິການ)

໑໐. ທ່ານ ຫນູຫັກ ສິດທິມໍຣະດາ " " (ເຖິງແກ່ກັມແລ້ວ)

໑໑. ທ່ານ ມະຫາພູມີ ຈິດພົງ " " (ເຖິງແກ່ກັມແລ້ວ)

໑໒. ທ່ານ ເກນ " "

໑໓. ທ່ານ ໄຕ ແກ້ວຫລວງໂຄດ " "

໑໔. ທ່ານ ສຸພັນ ບລັງຊາເດີລາບຣິດ "

ໃນມາດຕາ ໔ ແຫ່ງດຳຣັດ ຈັດຕັ້ງຄນະກັມມະການວັນນະຄະດີ ທີ່ກ່າວມາແລ້ວ ໄດ້ຊີ້ຈຸດຫມາຍສຳຄັນ ແຫ່ງວຽກການຂອງກັມມະການໄວ້ດັ່ງນີ້:

໑. ພິຈາຣະນາ ຮ່າງແບບສອນອ່ານທັງປວງ ແລະວັນນະຄະດີເດີມ ກ່ຽວກັບການສຶກສາ.

໒. ການສຶກສາກ່ຽວກັບໄວຍາກອນ ພາສາ ແລະອັກສອນສາດ

໓. ຮຽບຮຽງເອົາວັນນະຄະດີຕ່າງປະເທດ.

໔. ພິຈາຣະນາການພິມຫນັງສື ວັນນະຄະດີ ທີ່ກ່ຽວກັບພາສາ ແລະ ອັກສອນສາດລາວອອກປາຍ.

໕. ຈັດຕັ້ງລະບຽບການຂຽນອັກສອນລາວ.

໖. ຈັດການແຕ່ງວັຈນານຸກົມຂຶ້ນ.

໗. ກຳນົດຮາງວັນປະຈຳປີ ສຳລັບບຳເຫນັດແກ່ຜູ້ແຕ່ງຫນັງສືລາວ ໄດ້ດີ ຕາມຫົວຂໍ້ທີ່ຄນະກັມມະການກຳນົດໄວ້

ຄນະກັມມະການຈັດການ ທີ່ໄດ້ຖືກຄັດເລືອກສຳຣັບປີ ໑໙໕໐ ແລະ ໑໙໕໒ ນັ້ນ ຄື :

໑/ ພນະທ່ານ ກຸ ອະພັຍ ເປັນປະທານ

໒/ ພນະທ່ານ ຜຸຍ ປັນຍາ ຮອງປະທານ

໓/ ທ່ານມະຫາ ສີລາ ວີຣະວົງ ເລຂານຸການ

ນັບແຕ່ປີ ໑໙໕໓ ເປັນຕົ້ນມາ ຄນະກັມມະການຈັດການ ທີ່ຖືກຄັດເລືອກໃຫ້ດຳເນີນງານ ຕໍ່ມາຈົນເຖິງປັດຈຸບັນນີ້ ແມ່ນ :

໑/ ທ່ານສົມຈີນ ປີແອງົນ ເປັນປະທານ

໒/ ພນະທ່ານ ບົງ ສຸວັນນະວົງ ຮອງປະທານ

໓/ ທ່ານພູວົງ ພົມມະສອນ ເລຂາທິການ

ເພື່ອປະຕິບັດການໃຫ້ໄດ້ຜົນຕາມຈຸດຫມາຍ ແຫ່ງດຳຣັດນີ້ ຄນະກັມມະການວັນນະຄະດີ ຈຶ່ງເຫັນດີພ້ອມກັນ ປົບບົກເອົາຂໍ້ທີ ໕ ແລະທີ ໖ ແຫ່ງມາດຕາ ໔ ຂອງດຳຣັດນີ້ ຄື: ການຕັ້ງລະບຽບຂຽນອັກສອນລາວ ແລະການຈັດແຕ່ງວັຈນານຸກົມລາວ ຂຶ້ນມາພິຈາຣະນາກ່ອນ ເພາະເຫັນວ່າການຈັດແຕ່ງແບບຂຽນແບບອ່ານຕ່ຳງໆໄປກໍດີ ການຊຳຣະແກ້ໄຂຫນັງສືວັນນະຄະດີເກົ່າອອກມາພິມກໍດີ ຈຳເປັນຕ້ອງຂຽນ ແລະພິມໃຫ້ຖືກຕ້ອງເປັນລະບຽບອັນນຶ່ງອັນດຽວກັນ ການສຶກສາຫນັງສືລາວ ແລະພາສາລາວ ຈຶ່ງຈະດຳເນີນໄປໄດ້ ສະນັ້ນ ຄນະກັມມະການຈຶ່ງໄດ້ຟື້ນຟູເອົາພຣະຣາຊໂອງການເລກທີ ໑໐ ລົງວັນທີ ໒໗ ມະກະຣາ ໑໙໔໙ ທີ່ກ່າວດ້ວຍຫລັກການຂຽນຫນັງສືລາວ ຂຶ້ນມາພິຈາຣະນາແກ້ໄຂ ແລ້ວພ້ອມກັນແຕ່ງໄວຍາກອນລາວ ພາກອັກຂຣະວິທີຂຶ້ນ ເປັນສະບັບແຮກ ຫນັງສືນີ້ກາວດ້ວຍອັກຂຣະວິທີລາວຄື ສຣະ ພຍັນຊນະ ແລະວິທີຂຽນສະກົດຄຳ

ຕລອດເຖິງບັນບັດເຄືອງຫມາຍຕ່າງໆ ໄວ້ຄົບຖ້ວນຕາມລັກສນະຂອງພາສາ ລາວ ແລະ ຫນັງສືລາວ, ຫນັງສືໄວຍາກອນລາວ ພາກອັກຂຣະວິທີນີ້ ຄນະກັມມະການໄດ້ປະຊຸມກັນແຕ່ງ ເຖິງ ໑໐ ເທື່ອ ຈຶ່ງສຳເຣັດບໍຣະບວນ ແລະ ໄດ້ຈັດ ພິມຂຶ້ນແຈກຢາຍຄັ້ງແຣກ ແຕ່ປີ ກ.ສ. ໑໙໔໔ ຕໍ່ນັ້ນມາກໍໄດ້ ປະຊຸມກັນແກ້ໄຂເພີ້ມແຖມ ແລະ ຈັດພິມຂຶ້ນໃຫມ່ອີກ ໃນປີ ກ.ສ. ໑໙໕໐ ໃນ ຂນະເມື່ອແຕ່ງແບບໄວຍາກອນພາກອັກຂຣະວິທີຢູ່ນັ້ນ ຄນະກັມມະການກໍ ໄດ້ປະຊຸມກັນ ວາງຫລັກເກນແຕ່ງຫນັງສື ວັຈນານຸກົມລາວຂຶ້ນພ້ອມໆກັນ ຄັ້ງແຣກແຕ່ປີ ໑໙໔໖ ເປັນຕົ້ນມາ ເມື່ອໄດ້ວາງຫລັກເກນແຕ່ງ ແລະ ການ ລຽນລຳດັບໄວ້ແລ້ວຈຶ່ງມອບໃຫ້ ມະຫາສິລາ ວີຣະວົງ ເຊິ່ງເປັນກັມມະການ ວັນນະຄະດີ ແລະ ຫົວຫນ້າຫ້ອງການວັນນະຄະດີ ດ້ວຍ ເປັນຜູ້ເກັບໂຮມ ຄຳ ຈັດວິທີລຽນລຳດັບຄຳໄວ້ເປັນຫມວດໆ ແລ້ວສເນີຕໍ່ຄນະກັມມະການ ໃຫ້ປະຊຸມພິຈາຣະນາແກ້ໄຂ ໃນການປະຊຸມທຸກເທື່ອ ແຕ່ວ່າເນື່ອງຈາກ ກັມມະການຫລາຍທ່ານ ມີພາຣະຫນ້າທີ່ການງານປ່າງອື່ນໆມາກຫລາຍ ທັງພາຍໃນປະເທດ ແລະ ນອກປະເທດ ເປັນເຫດບໍ່ໃຫ້ເຂົ້າມາປະຊຸມໄດ້ ຕາມປົກກະຕິ ເມື່ອເປັນດັ່ງນີ້ ການຈັດແຕ່ງວັຈນານຸກົມ ອັນເປັນຫນັງສືສຳ ຄັນ ແລະໃຫຍ່ນີ້ງກໍຈະເປັນການລ້າຊ້າເສັຽເວລາ ບໍ່ທັນຄວາມຕ້ອງການ ແລະຄວາມຈຳເປັນໃນເວລານີ້ ດັ່ງນັ້ນ ຄນະກັມມະການຈຶ່ງໄດ້ມອບຫມາຍ ໃຫ້ ມະຫາສິລາ ວີຣະວົງ ຈັດທຳໄປ ພ້ອມກັບໃຫ້ແຕ່ງແບບໄວຍາກອນ ລາວ ພາກ ໒ ຄື ວະຈີວິພາກ ພາກ ໓ ວາກຍະສັມພັນ ພາກ ໔ ສັນທະລັກສນະ ໃຫ້ສຳເຣັດບໍຣະບວນເພື່ອໃຫ້ໃຊ້ເປັນຫລັກ ໃນການຮ່ຳຮຽນ ໄວຍາກອນລາວໄປຊານຊາກ່ອນ ບັດນີ້ມະຫາສິລາ ວີຣະວົງ ໄດ້ທ້ອນໂຮມຄຳ ຈັດທຳເປັນຫນັງສືວັຈນານຸກົມ ຕັ້ງແຕ່ ກ. ເຖິງ ຮ. ພ້ອມຫນັງສືໄວຍາກອນ

ລາວອີກ ໓ ພາກ ຄື: ວະຈີວິພາກ ວາກຍະສັມພັນ ແລະ ສັນທະລັກສນະ ຂຶ້ນສຳເຣັດບໍຣະບວນແລ້ວ ຄນະກັມມະການຈຶ່ງໄດ້ເຂົ້າປະຊຸມກັນ ຄັ້ງວັນທີ ໑໖ ກຸມພາ ໑໙໖໑ ນີ້ ເພື່ອພິຈາຣະນາຣັບຮອງເອົາໜັງສືດັ່ງກ່າວນີ້ ແລ້ວໃຫ້ທາງຣາຊການກະຊວງສຶກສາພິມແຜ່ພາຍໄດ້.

ໜັງສືວັຈນານຸກົມນີ້ກໍດີ ໜັງສືໄວຍາກອນລາວທັງ ໔ ພາກ ນີ້ ໄດ້ພິມອອກໃນຄາວນີ້ກໍດີ ຄນະກັມມະການເຊື່ອແນ່ວ່າ ຍັງມີບ່ອນຜິດພາດ ຂາດເຂີນຢູ່ເປັນອັນມາກນຶ່ງໜັກໜາ ເພາະເປັນການຊຳຣະສະສາງຄັ້ງແຮກ ແຕ່ເຖິງດັ່ງນັ້ນ ຄນະກັມມະການກໍເຫລັງເຫັນວ່າ ຄົງຈະເປັນປໂຍດອັນນຶ່ງໃຫຍ່ແກ່ການສຶກສາ ແລະຄົ້ນຄວ້າຕໍ່ໄປ ຈຶ່ງໄດ້ພິມອອກແຜ່ພາຍ ເພື່ອໃຫ້ທ່ານຜູ້ຮູ້ທັງຫລາຍ ໄດ້ຊ່ວຍກັນພິຈາຣະນາ ແກ້ໃຫ້ບໍຣິບູນດີຂຶ້ນ ຄນະກັມມະການມີຄວາມຍິນດີສເມີ ໃນຄວາມດຸກເຕືນຂອງທ່ານຜູ້ຮູ້ ແລະຜູ້ສົນໃຈໃນການ ຈະແກ້ໄຂໜັງສືວັຈນານຸກົມ ແລະໄວຍາກອນລາວນີ້ໃຫ້ຖືກຕ້ອງ ແລະບໍຣິບູນດີໃນພາຍພາກໜ້າ.

ທ້າຍສຸດນີ້ ຄນະກັມມະການຂໍຂອບຄຸນທ່ານ ມະຫາສີລາ ວີຣະວົງ ກັມມະການວັນນະຄະດີ ແລະທິດໜ້າຫ້ອງການວັນນະຄະດີ ຜູ້ໄດ້ພາກພຽນພຍາຍາມ ຈັດທຳໜັງສືວັຈນານຸກົມລາວ ແລະ ໄວຍາກອນລາວນີ້ຂຶ້ນຈົນເປັນຜົນສຳເຣັດ ອັນເປັນຄຸນປໂຍດແກ່ປະເທດຊາດບ້ານເມືອງຢ່າງສຳຄັນນຶ່ງ ນອກນີ້ຄນະກັມມະການ ຂໍຂອບຄຸນ ມ.ລ. ມານິດ ຊູນສາຍ ຜູ້ຊ່ຳນານການສຶກສາແຫ່ງ ຢູເນສໂກ ປະຈຳພຣະຣາຊອານາຈັກລາວ ທີ່ໄດ້ຊ່ວຍຈັດການພິມໜັງສືເຫລົ່ານີ້ ໃຫ້ເປັນຜົນສຳເຣັດດ້ວຍ (ພິມຄັ້ງທີນຶ່ງ).

# ຄຳຊີ້ແຈງ

ໄວຍາກອນລາວ ພາກ ໓ ສະບັບນີ້ ເປັນຜົນງານ ຂອງຄນະ ນະກາມະການວັນນະຄະດີ. ນັບຕັ້ງແຕ່ກົມວັນນະຄະດີ ໄດ້ຖືກສະຖາປະນາ ເປັນຣາຊບັນດິດສະພາລາວ ໂດຍພຣະຣາຊໂອງການເລກທີ ໗໒ ລົງວັນທີ ໒໓ ກຸມພາ ໑໙໗໐ ກອງປະຊຸມສະມາຊິກຣາຊບັນດິດສະພາໄດ້ແກ້ໄຂ ໄວຍາກອນລາວພຽງແຕ່ສອງພາກທີ່ນັ້ນ ຄື ພາກ ໑ (ອັກຂຣະວິທີ) ແລະ ພາກ ໒ (ວະຈີວິພາກ) ໃນຂອບເຂດພຣະຣາຊໂອງການເລກທີ ໑໐ ລົງວັນທີ ໒໗ ມະກະຣາ ໑໙໔໙ ວ່າດ້ວຍຫລັກການຂຽນພາສາລາວ ຕາມແບບ ອັກຂຣະ.

ໄວຍາກອນສອງສະບັບທີ່ກ່າວນີ້ ໄດ້ຈັດພິມແລ້ວ ແລະຈະເຫັນ ໜ້າປົກເບື້ອງລຸ່ມວ່າ "ສະບັບຣາຊບັນດິດສະພາ" ເຊິ່ງໝາຍເຖິງປຶ້ມ ຮັບຮອງ ໂດຍກອງປະຊຸມສະມາຊິກຣາຊບັນດິດສະພາ.

ສ່ວນປຶ້ມວັນນະຄະດີຕ່າງໆ ທີ່ສຳນັກງານຣາຊບັນດິດສະພາພິມ ໂດຍບໍ່ໄດ້ຜ່ານກອງປະຊຸມນັ້ນ ຈະເຫັນປຸ່ຫນ້າປົກເບື້ອງລຸ່ມວ່າ "ຊຸດຣາ ບັນດິດສະພາ". ນອກຈາກນັ້ນແລ້ວ ປຶ້ມຕ່າງໆ ທີ່ພິມອອກຈາກຣາຊບັນ ດິດສະພານັ້ນ ມີໜ້າປົກແບບລາຍດອກໄມ້ ໂດຍມີຮູບພຣະນິບປຸ່ເບື້ອ ເທິງ.

ສ່ວນໄວຍາກອນລາວ ພາກທີ ໓ ແລະ ທີ ໔ ນັ້ນ ກຳລັງສຶກສາ ແກ້ໄຂໃໝ່ ດັ່ງດຽວກັບພາກ ໑ ແລະພາກ ໒.

ວຽງຈັນ, ວັນທີ ໒໒ ກຸມພາ ໑໙໗໓ -

ສຸລັງ ເດຊວົງສາ

ເລຂາປະຈຳຣາຊບັນດິດສະພາລາວ

# ຄນະກັມມະການ ປັດຈຸບັນ

ພນະທ່ານພຸຍ ປັນຍາ ຮອງປະທານກັມມະການ ກິດຕິມະສັກ

ທ່ານສິມຈິນ ປີແອງິນ ປະທານຄນະກັມມະການປະຈຳປີ

ພນະທ່ານບິງ ສຸວັນນະວົງ ຮອງປະທານກັມມະການຈັດການປະຈຳປີ

ທ່ານພູວົງ ພິມມະສອນ ເລຂາທິການ

ພນະທ່ານໄດ ແກ້ວຫລວງໂຄດ ກັມມະການ

ທ່ານສຸພັນ ບລັງຊາ ເດີລາບຣິດ " "

ທ່ານຄູນ ພິລາວັນ " "

ທ່ານເກືອງ ປະທຸມຊາດ " "

ທ່ານເກນ " "

ວຽງຈັນ ວັນທີ ໑໕ ພຶສພາ ໑໙໖໖

ປະທານຄນະກັມມະການວັນນະຄະດີ

ສິມຈິນ ງິນ

# ສາຣະບານ


| | |
|---|---|
| | ຫນ້າ |
| ຄຳອະທິບາຍເບື້ອງຕົ້ນ . . . . . . . . . . . . . . . | ໑ |
| ບົດທີ ໑ ຖ້ອຍຄຳ . . . . . . . . . . . . . . . | ໓ |
| ໂຕຢ່າງຄຳຖາມໃນບົດທີ ໑ . . . . . . . . . . . . | ໔ |
| ບົດທີ ໒ ວະລີ "ຫມວດຄຳເວົ້າ" . . . . . . . . . . | ໕ |
| ໂຕຢ່າງຄຳຖາມໃນບົດທີ ໒ . . . . . . . . . . . . | ໗ |
| ບົດທີ ໓ ປໂຍກ . . . . . . . . . . . . . . . | ໑໐ |
| ໂຕຢ່າງຄຳຖາມໃນບົດທີ ໓ . . . . . . . . . . . . | ໑໕ |
| ບົດທີ ໔ ພາກຂອງປໂຍກ . . . . . . . . . . . . | ໑໗ |
| ກ. ພາກປະທານ . . . . . . . . . . . . . | ໑໗ |
| ຂ. ພາກກິຣິຍາ . . . . . . . . . . . . . | ໒໐ |
| ໂຕຢ່າງຄຳຖາມໃນບົດທີ ໔ . . . . . . . . . . . . | ໒໒ |

# ວາກຍະສັມພັນ

## ຄຳອະທິບາຍເບື້ອງຕົ້ນ

ວາກຍະສັມພັນ ເປັນສັບມາຈາກພາສາບາລີ ແປວ່າ ຄວາມກ່ຽວຂ້ອງກັນຂອງຄຳເວົ້າ ອະທິບາຍວ່າ ຄຳເວົ້າທີ່ແຈກອອກເປັນປະເພດຕ່າງ ໆ ດັ່ງກ່າວມາແລ້ວ ໃນວະຈີວິພາກນັ້ນ ເມື່ອເວົ້າຕິດຕໍ່ກັນໃຫ້ໄດ້ຄວາມຕອນ ນຶ່ງໆທີ່ຮຽກວ່າປໂຍກນັ້ນ ບ່ອມມີຄວາມກ່ຽວຂ້ອງກັນ ດັ່ງເວົ້າວ່າ "ມ້າຂຽວຂອງທິດແດງແລ່ນຫັນດີ" ໃນປໂຍກນີ້ເມື່ອກະຈາຍອອກເປັນຄຳຕາມປະເພດຂອງໃຜມັນດັ່ງກ່າວໄວ້ໃນວະຈີວິພາກນັ້ນ ຈະເຫັນໄດ້ດັ່ງນີ້:

| | | |
|---|---|---|
| ມ້າ | ເປັນຄຳ | ສາມັນນາມ |
| ຂຽວ | " " | ວິເສດ |
| ຂອງ | " " | ບຸພບົດ |
| ທິດແດງ | " " | ວິສາມັນນາມ |
| ແລ່ນ | " " | ກິຣິຍາ |
| ຫັນດີ | " " | ວິເສດ |

ຄຳປະເພດຕ່າງໆໃນປໂຍກທີ່ກ່າວມານີ້ ບ່ອມມີຄວາມກ່ຽວຂ້ອງກັນດັ່ງນີ້:

ຄຳ ມ້າ ເປັນປະທານ ຄື ເປັນເຈົ້າຂອງປໂຍກ ແລະເປັນເຈົ້ ຂອງ ໆ ກິຣິຍາ ແລ່ນ

" ຂຽວ ເປັນຄຳວິເສດ ສະແດງສີຂອງ ມ້າ

" ຂອງທິດແດງ ເປັນສາມີບຸພບົດວະລີ ສະແດງຄວາມເປັນເຈົ້ ຂອງມ້າ

ຣົດ ໄປດ້ວຍມ້າ ຫຍໍ້ເປັນ ຣົດມ້າ

ເດົາຂອງໄຟ " " ເດົາໄຟ

ສັດໃນປ່າ " " ສັດປ່າ

ຄຳມີລັກສນະດັ່ງກ່າວມານີ້ ຮຽກວ່າ ຄຳສມາດ

໔– ຄຳສົນທິ ແມ່ນຄຳທີ່ເອົາສັບ ໒ ສັບ ມາຕໍ່ເຂົ້າກັນໃຫ້ເປັນຄຳດຽວ ເພື່ອແປງຄຳເວົ້າໃຫ້ສັ້ນເຂົ້າ ໂດຍຢ່າງດັ່ງນີ້:

ສັດຈະ X ອະທິດຖານ – ສັດຈາທິຖານ (ການຕັ້ງສັດ)

ອະຣຸນະ X ອຸທັຍ – ອະຣຸໂນທັຍ (ຕາເວັນຂຶ້ນຍາມເຊົ້າ)

ພັດຕະ X ອາຄານ – ພັດຕາຄານ (ເຣືອນອາຫານ)

ນໍຣະ X ອິນທະ – ນໍຣິນທະ (ຈອມຄົນ)

ຖ້ອຍຄຳມີລັກສນະຕ່າງໆດັ່ງກ່າວມານີ້ ໄດ້ແຈກອອກເປັນ ໗ ປະເພດ ຄື ເປັນ ຄຳນາມ ສັພນາມ ກິຣິຍາ ວິເສດ ບຸພບົດ ສັນທານ ແລະອຸທານ ດັ່ງກ່າວແລ້ວ ໃນວະຈີວິພາກ.

## ໂຕຢ່າງຄຳຖາມໃນບົດທີ່ ໑

໑/. ຄຳວ່າ ຖ້ອຍຄຳ ໝາຍຄວາມວ່າຢ່າງໃດ ?

໒/. ລັກສນະຖ້ອຍຄຳໃນພາສາລາວມີຢ່າງໃດແດ່ ຫາໂຕຢ່າງມາຢ່າງລະ ໓ ຄຳ?

໓/. ຄຳພະສົມ ກັບ ຄຳສມາດຕ່າງກັນຢ່າງໃດ ຫາໂຕຢ່າງມາເບິ່ງ ?

໔/. ຄຳສົນທິ ແມ່ນຄຳຊນິດໃດ ຫາໂຕຢ່າງມາເບິ່ງຈັກ ໕ ຄຳ?

# ບົດທີ່ ໒

## ວະລີ "ຫມວດຄຳເວົ້າ"

ຄຳເວົ້າຕ່າງໆ ທີ່ແຈກອອກເປັນ ໗ ປະເພດ ດັ່ງກ່າວມາແລ້ວ ໃນວະຈີວິພາກນັ້ນ ຖ້າເວົ້າຫລືຂຽນເທື່ອລະຄຳ ແລະຄຳນັ້ນຈະມີຈັກພະຍາງກໍຕາມ ແຕ່ຖ້າມີຄວາມຫມາຍຢ່າງດຽວ ຮຽກວ່າຖ້ອຍຄຳ ຫລືຄຳເວົ້າທີ່ກ່າວມາແລ້ວ ດັ່ງໂດຍຢ່າງວ່າ ຄົນ ມະນຸດ ປະເທດ ຣັຖບານ ວິທຍາສາດ ເຫລົ່ານີ້ ຈັດເປັນຄຳເວົ້າຄຳນຶ່ງໆທັ່ງນັ້ນ ສ່ວນວະລີນັ້ນຫມາຍ ເອົາຫມວດທີ່ເວົ້າທີ່ຢູ່ຕິດຕໍ່ກັນ ດັ່ງແຕ່ ໒ ຄຳຂຶ້ນໄປ ເຊິ່ງແຕ່ລະຄຳກໍມີຄວາມຫມາຍຫລືໃຈຄວາມເປັນຄົນລະຢ່າງ ແຕ່ຫາກມີໃຈຄວາມຍັງບໍ່ເຕັມເປັນປໂຍກໄດ້ ດັ່ງເອີ້ກວ່າ "ແມ່ນ້ຳຂອງ ເມືອງວຽງຈັນໃຫຍ່ ໂຮງຮຽນງານ ຄົນໃນເມືອງ" ດັ່ງນີ້ ຮຽກວ່າ ວະລີ ເພາະເປັນຫມວດຄຳເວົ້າຫມວດນຶ່ງໆ ທີ່ບໍ່ເຕັມເປັນປໂຍກ.

ວະລີ ນັ້ນແຈກອອກເປັນ ໗ ປະເພດ ຕາມຈຳນວນປະເພດຂອງຄຳເວົ້າທີ່ກ່າວແລ້ວໃນວະຈີວິພາກ ຄືເປັນ ນາມວະລີ, ສັພນາມວະລີ, ກິຣິຍາວະລີ, ວິເສດວະລີ, ບຸພບົດວະລີ, ສັນທານວະລີ, ອຸທານວະລີ, ຊື່ຂອງວະລີຕ່າງໆ ທີ່ກ່າວມານີ້ ກຳຫນົດເອົາຕາມຄຳທີ່ຢູ່ຫນ້າຄື ຖ້າຄຳຢູ່ຫນ້າເປັນຄຳນາມກໍຮຽກວ່າ ນາມວະລີ ຖ້າຄຳກິຣິຍາຢູ່ຫນ້າກໍຮຽກວ່າ ກິຣິຍາວະລີ ດັ່ງຕໍ່ໄປນີ້:

໑- <u>ນາມວະລີ</u> ຫມາຍເອົາຫມວດຄຳເວົ້າທີ່ມີຄຳນາມຢູ່ຫນ້າ ສ່ວນຄຳທີ່ຢູ່ຂ້າງຫລັງ ຈະເປັນຄຳປະເພດໃດກໍຕາມ ໂດຍຢ່າງດັ່ງນີ້: ນົກເຂົາ

ກໍຕາມ, ແຕ່ເຖິງດັ່ງນັ້ນກໍຊ່າງ, ຫລືຈັ່ງໃດກໍດີ" ເປັນຕົ້ນ

ຄ- ອຸທານວະລີ ຫມາຍເອົາຫມວດຄຳອຸທານປູ່ຫນ້າ ດັ່ງເວົ້າວ່າ

ໂອນໍ! ນ້ອງເອີຍ ປາກໂຫປາກຫາຍກູຄາຍທ່ານີ້, ອົມພຸດໂທ ນະໂມເປັນເກົ້າ, ອະນິຈາໂອນໍສັງເວດ ດັ່ງນີ້ເປັນຕົ້ນ.

ວະລີທັງ ຄ ຈຳພວກດັ່ງກ່າວມານີ້ ມີຫນ້າທີ່ໃຊ້ດັ່ງດຽວກັນກັບຄຳຕ່າງໆ ທີ່ກ່າວໄວ້ໃນວະຈີວິພາກ ຄືໃຊ້ເປັນປະທານຂອງປໂຍກ ເປັນບົດກັມ ເປັນບົດກິຣິຍາ ຫລືບົດວິເສດຕ່າງໆ ໄດ້ດັ່ງດຽວກັບຖ້ອຍຄຳ ໃດຢ່າງດັ່ງນີ້:

ກ. ຄຳ: ນົກ ກິນ ເຫຍື່ອ

ນົກ ເປັນຄຳນາມ ປະທານຂອງປໂຍກ

ກິນ ເປັນຄຳກິຣິຍາ ເປັນກິຣິຍາຂອງປໂຍກ

ເຫຍື່ອ ເປັນຄຳນາມ ເປັນກັມໃນປໂຍກ

ຂ. ວະລີ: ທ້າວສອນ ສີສົມບັດ ນັ່ງອ່ານ ປຶ້ມຄຳສອນ

ທ້າວສອນ ເປັນນາມວະລີ ບົດປະທານຂອງປໂຍກ

ສີສົມບັດ ເປັນວິເສດວະລີ ບົດປະກອບປະທານຄືທ້າວສອນ

ນັ່ງອ່ານ ເປັນກິຣິຍາວະລີ ບົດກິຣິຍາຂອງປໂຍກ

ປຶ້ມຄຳສອນ ເປັນນາມວະລີ ບົດກັມໃນປໂຍກ

ເພາະສະນັ້ນ ເວລາບອກສັມພັນຈຶ່ງຕ້ອງບອກຢ່າງດຽວກັນກັບຖ້ອຍຄຳ ແຕ່ຖ້າເປັນວະລີກໍໃຫ້ບອກວ່າເປັນວະລີນັ້ນໆ ດັ່ງໃດຢ່າງກ່າວມາແລ້ວ.

# ໂຕຢ່າງຄຳຖາມໃນບົດທີ່ ໒

໑/. ຖ້ອຍຄຳ ກັບ ວະລີ ຕ່າງກັນຢ່າງໃດ ຈົ່ງອ້າງໂຕຢ່າງມາເບິງ?

໒/. ວະລີ ມີຈັກປະເພດໃດແດ່ ແລະວະລີແຕ່ລະປະເພດນັ້ນ ຖືເອົາຄຳໃດເປັນຫລັກ?

໓/. ໝວດຄຳຕໍ່ໄປນີ້ ເປັນວະລີປະເພດໃດແດ່? ຄື: ຣັຖບານພຣະຣາຊອານາຈັກລາວ, ເຈົ້າບ່າວນ່ອນ ໃຕ້ຝ່າພຣະບາດ, ຄົງມີແນ່ນອນ ໄປນອນຊຸບຊາຢູ່ເທິງຕຽງ ເຮັດວຽກໜັກຫລາຍເກີນທີ, ດີເລີດລົ້ນ ພົ້ນເພີ່ນທັງຫລາຍ, ເອົາກີຂ້າພະເຈົ້າດ້ວຍກ້ອນ, ແມ່ນຈັ່ງໃດມາໝາ ຕາມມັນແຫລ້ວ, ໂອບໍ່ນ້ອງ

໔/. ຖ້ອຍຄຳກັບວະລີໃຊ້ໄດ້ດັ່ງດຽວກັນຫລືບໍ່ ຫາໂຕຢ່າງມາອ້າງດ້ວຍ?

# ບົດທີ່ ໗

## ປໂຍກ

ຄຳເວົ້າທັງຫລາຍ ທີ່ກ່າວເປັນຄຳໆດັ່ງກ່າວໄວ້ໃນວະຈີວິພາກນັ້ນ ກໍດີ ກ່າວເປັນວະລີກີເປັນຫມວດດັ່ງກ່າວມາແລ້ວໃນບົດທີ ໖ ນີ້ກໍດີ ຍັງບໍ່ໄດ້ ຖ້ອຍຄວາມເຕັມບໍຣິບູນ ເພື່ອໃຫ້ໄດ້ຄວາມເຕັມບໍຣິບູນດີ ຕ້ອງເອົາຄຳຫລືວະ ລີຕ່າງໆເຫລົ່ານັ້ນມາປະກອບກັນເວົ້າໃຫ້ໄດ້ຄວາມ ຖ້ອຍຄຳທີ່ເວົ້າໄດ້ຄວາມ ເຕັມຢ່າງນຶ່ງໆນີ້ແຫລະຮຽກວ່າປໂຍກ ໃນປໂຍກຄຳເວົ້າປໂຍກນຶ່ງໆຢ່າງ ຫນ້ອຍຕ້ອງມີ ຄຳນາມ ແລະ ຄຳກິຣິຍາປະກອບກັນເປັນສ່ວນສຳຄັນ ຖ້າມີ ແຕ່ຖ້ອຍຄຳຫລືວະລີຫມວດໃດຫມວດນຶ່ງ ເຖິງແມ່ນວ່າຈະມີຕໍ່ກັນຫລາຍ ຄຳປານໃດກໍຕາມ ກໍຍັງນັບເປັນປໂຍກບໍ່ໄດ້ ໂດຍຢ່າງຈະເວົ້າວ່າ "ທ້າວມີ ສມຽນ ໂຮງການແຂວງວຽງຈັນ" ດັ່ງນີ້ຍັງນັບເປັນປໂຍກບໍ່ໄດ້ເປັນໄດ້ແຕ່ ນາມວະລີ ຄືຫມວດຄຳທີ່ມີນາມຂຶ້ນຫນ້າເທົ່ານັ້ນ ເພາະຍັງບໍ່ມີຄຳກິຣິຍາ ປະກອບ ເມື່ອເວົ້າວ່າ "ທ້າວມີ ເປັນສມຽນຢູ່ ໂຮງການແຂວງວຽງຈັນ ຫລື ວ່າ ທ້າວມີ ສມຽນໂຮງການແຂວງວຽງຈັນ ເປັນຄົນດີ ຫລືວ່າ ທ້າວມີສມຽນ ໂຮງການແຂວງວຽງຈັນ ຂຽນຫນັງສືງາມ" ດັ່ງນີ້ ຈຶ່ງນັບວ່າເປັນປໂຍກໄດ້ ເພາະມີຄຳກິຣິຍາ ເປັນ-ຂຽນ ປະກອບຢູ່ນຳ.

ປໂຍກຄຳເວົ້າໃນພາສາລາວນີ້ ໄດ້ແບ່ງອອກເປັນ ໕ ຢ່າງຕາມຫລັກ ໄວຍາກອນແຫ່ງພາສາບາລີ ດັ່ງຕໍ່ໄປນີ້:

# ໑- ປໂຍກກັດຕາ

ຄຳ- ກັດຕາ ມາຈາກພາສາບາລີວ່າ ກັດຕຸ ແປວ່າ ຜູ້ເຮັດ ໃນປັຈ ເອົາມາໃຊ້ເປັນຊື່ຂອງປໂຍກ ຄຳເວົ້າທີ່ກ່າວເຖິງຜູ້ເຮັດເອງຂຶ້ນເປັນບົດປະທານຂອງປໂຍກ ຮຽກວ່າ ປໂຍກກັດຕາ ອະທິບາຍວ່າ ຄຳເວົ້າປໂຍກທີ່ກ່າວເຖິງຜູ້ເຮັດເອງ ທີ່ເປັນເຈົ້າຂອງແຫ່ງກິຣິຍາຂຶ້ນເປັນບົດປະທານ ຄືເອົາຂຶ້ນກ່ອນປໂຍກນັ້ນຮຽກວ່າ ປໂຍກກັດຕາ ໂດຍ່າງດັ່ງຕໍ່ໄປນີ້: ຄວາຍກິນຫຍ້າ ທ້າວສາໄປໂຮງຮຽນ ຄຣູຂຽນຫນັງສື ຣັຖບານທຳການບໍຣິຫານປະເທດ ກະຊວງສຶກສາ ຈັດຕັ້ງຫລັກສູດຂອງໂຮງຮຽນປະຖົມສຶກສາໃຫມ່ ຄຳນາມທີ່ມີເສັ້ນຢູ່ກ້ອງໃນປໂຍກເຫລົ່ານີ້ ເປັນເຈົ້າຂອງກິຣິຍາເອງ ແລະເວົ້າຂຶ້ນກ່ອນຈຶ່ງເປັນບົດປະທານຂອງປໂຍກຄື:

| | | |
|---|---|---|
| ຄວາຍ | ເປັນເຈົ້າຂອງຄຳກິຣິຍາ | ກິນ |
| ທ້າວສາ | " " | ໄປ |
| ຄຣູ | " " | ຂຽນ |
| ຣັຖບານ | " " | ທຳການບໍຣິຫານ |
| ກະຊວງສຶກສາ | " " | ຈັດຕັ້ງ |

ສ່ວນຄຳວ່າ "ຫຍ້າ, ໂຮງຮຽນ, ຫນັງສື, ປະເທດ, ຫລັກສູດຂອງໂຮງຮຽນປະຖົມສຶກສາໃຫມ່" ທີ່ຢູ່ຂ້າງຫລັງ ຄຳກິຣິຍາ "ກິນ ໄປ ຂຽນ ທຳການບໍຣິຫານ ຈັດຕັ້ງ" ນັ້ນ ເປັນບົດກັມ.

# ໒- ປໂຍກເຫຕຸກັດຕາ

ປໂຍກເຫຕຸກັດຕາ ຫມາຍເອົາປໂຍກຄໍາເວົ້າທີ່ກ່າວເຖິງ ຜູ້ໃຊ້ໃຫ້ຂຶ້ນເປັນບົດປະທານຂອງປໂຍກ ກໍເອົາຂຶ້ນກ່ອນ ສ່ວນການທໍານັ້ນເປັນກິຣິຍາຂອງຜູ້ໃຊ້ ແມ່ນກິຣິຍາຂອງຜູ້ຖືກໃຊ້ຕ່າງຫາກ ແຕ່ຜູ້ຖືກໃຊ້ບໍ່ໄດ້ບົດປະທານ ໂດຢ່າງດັ່ງຕໍ່ໄປນີ້:

ຄຣູໃຫ້ລູກສິດຮຽນຫນັງສື. ຣັຖບານພຣະຣາຊອານາຈັກລາວ ປະຊາຊົນພົລເມືອງເຮັດວຽກຢ່າງຂບັນຂັນແຂງ, ຫົວຫນ້າຫມວດໂຮງຮຽນຫາດຫລວງ ໃຫ້ນັກຮຽນຄໍານັບທຸງຕອນເຊົ້າ

ຄໍາວ່າ ຄຣູ ກໍດີ ຣັຖບານພຣະຣາຊອານາຈັກລາວ ກໍດີ ຫົວໜ້າຫມວດໂຮງຮຽນຫາດຫລວງ ກໍດີ ເປັນບົດປະທານຂອງປໂຍກ ເພາະວ່າ ຜູ້ໃຊ້ ສ່ວນຄໍາວ່າ ລູກສິດ ກໍດີ, ປະຊາຊົນພົລເມືອງ ກໍດີ ນັກຮຽນ ກໍດີ ຜູ້ຖືກໃຊ້ໃຫ້ທໍາ ເປັນເຈົ້າຂອງກິຣິຍາ "ຮຽນ ເຮັດ ຄໍານັບ" ແຕ່ຫາກບໍ່ໄດ້ບົດປະທານ ເພາະເປັນຜູ້ຖືກໃຊ້ ບໍ່ໄດ້ ຮຽນ, ເຮັດ, ຄໍານັບ ເອງ ດັ່ງນັ້ນ: ໃຊ້ຄືລູກສິດ, ປະຊາຊົນພົລເມືອງ, ແລະນັກຮຽນນີ້ນັບເປັນ ກາຣິດກັມ - ກັມທີ່ໃຊ້ໃຫ້ທໍາ, ສ່ວນຄໍາວ່າ ຫນັງສື ກໍດີ ວຽກກໍດີ ແລະທຸງ ກໍດີ ເປັນກັມປະກອບຄໍາກິຣິຍາ " ຮຽນ, ເຮັດ, ຄໍານັບ " ຄໍາວ່າ " ຢ່າງຂັນແຂງ" ເປັນບົດວິເສດປະກອບວຽກ, ຄໍາວ່າ "ໃນຕອນເຊົ້າ" ເປັນອະທິບຸພບົດວະລີ ປະກອບກັບ ທຸງ

<u>ຫມາຍເຫດ</u>: ໃນປໂຍກເຫຕຸກັດຕານີ້ ສ່ວນຫລາຍຕ້ອງມີຄໍາ ກິຣິຍານຸໂຍກ " ໃຫ້ " ຫລືຄໍາກິຣິຍານຸໂຍກ ທີ່ເປັນໄປໃນຄວາມບັງຄັບ ດັ່ງ "ບອນ

ຄຳທີໃຊ້ເປັນບົດປະທານ ຂອງປໂຍກກັດວານີ້ ແມ່ນຄຳທີໃຊ້ເປັນກັດຕຸກາຣິກທັງມວນດັ່ງກ່າວແລ້ວໃນວະຈີວິພາກ ໂຣມທັງຄຳທີເປັນນາມວະລີ, ສັພນາມວະລີ ແລະກິຣິຍາສະພາວະມາລາ ກໍໃຊ້ເປັນບົດປະທານໄດ້ດັ່ງດຽວກັນ ໂດຍຢ່າງດັ່ງຕໍ່ໄປນີ້:

ນາມວະລີ: ນາຍກຣູບຸນມາຫມວດໂຣງຣຽນເຈົ້າອະນຸ ສອນຫນັງສືດີ

ຄຳວ່າ "ນາຍກຣູບຸນມາຫມວດໂຣງຣຽນເຈົ້າອະນຸ" ເປັນນາມວະລີ ໃຊ້ເປັນບົດປະທານຂອງປໂຍກ, ຄຳວ່າ "ສອນ" ເປັນກິຣິຍາຂອງ "ນາຍກຣູບຸນມາຫມວດໂຣງຣຽນເຈົ້າອະນຸ" ຫນັງສືເປັນ ບົດ ກັມ ຖືກນາຍກຣູບຸນມາ...ສອນ

ສັພນາມວະລີ: ຂ້າພຣະບາດເຈົ້າ ຄະນິງຣ້ອນຣໍ່ການ.

ຄຳວ່າ ຂ້າພຣະບາດເຈົ້າ ເປັນສັພນາມວະລີ ໃຊ້ເປັນບົດປະທານຂອງປໂຍກ, ຄຳວ່າ ຄະນິງ ເປັນກິຣິຍາ ຂອງ ຂ້າພຣະບາດ ຄຳວ່າ ຣ້ອນຣໍ່ການ ເປັນຄຳວິເສດວະລີ ປະກອບ ກິຣິຍາ ຄະນິງ.

ກິຣິຍາສະພາວະມາລາ: ນອນຫລາຍ ເປັນໄຂ້

ຄຳວ່າ ນອນຫລາຍ ເປັນກິຣິຍາສະພາວະມາລາ ໃຊ້ເປັນບົດປະທານຂອງປໂຍກ, ເປັນໄຂ້ ຄຳວ່າ "ເປັນ" ເປັນ ກິຣິຍາຂອງຄຳວ່າ ນອນຫລາຍ ຄຳວ່າ ໄຂ້ ເປັນ ວິກະຕິກາຣົກປະກອບ ກິຣິຍາ ເປັນ.

“ສັ່ງ” ປະກອບຢູ່ນຳຄຳນາມທີ່ເປັນເຫຕຸກັດຕາອີກ ເຊິ່ງໃຊ້ເປັນບົດປະທານນັ້ນສເມີ ໂດຍຢ່າງ.

“ແມ່ ໃຫ້ລູກກິນນົມ. ຄຣູບອກນັກຮຽນຂຽນຫນັງສື, ຣັຖບານສັ່ງໃຫ້ປະຊາຊົນຕັ້ງຢູ່ໃນຄວາມສງົບ” ເປັນຕົ້ນ.

## ໓- ປໂຍກກັມ

ປໂຍກກັມ ຫມາຍເອົາປໂຍກຄຳເວົ້າທີ່ກ່າວເຖິງບົດກັມ ຫລືໂດກັມ ຄື ຜູ້ທີ່ຖືກທຳ ຂຶ້ນເປັນປະທານຂອງປໂຍກ ໂດຍຢ່າງດັ່ງນີ້:

ນັກຮຽນ ຖືກຄຣູຮ້າຍ, ນົກຖືກນາຍພານຍິງ, ປຶ້ມທີ່ຂ້າພະເຈົ້າອ່ານ, ຣົດຄັນເຈົ້າຂາຍ, ຄຳ “ນັກຮຽນ, ນົກ, ປຶ້ມ, ຣົດ” ໃນປໂຍກທີ່ກ່າວມານີ້ ເປັນໂດກັມ ແຕ່ເອົາມາໃຊ້ເປັນບົດປະທານຂອງປໂຍກ ຄືເວົ້າຂຶ້ນກ່ອນ ດັ່ງນັ້ນປໂຍກທີ່ເອົາໂດກັມເປັນບົດປະທານນີ້ ຈຶ່ງຮຽກວ່າປໂຍກກັມ.

## ໔- ປໂຍກກາຣິຕກັມ

ປໂຍກກາຣິຕກັມ ຫມາຍເອົາປໂຍກຄຳເວົ້າທີ່ກ່າວເຖິງຜູ້ຖືກໃຊ້ໃຫ້ທຳ ຄືໂດກາຣິຕກັມ ຂຶ້ນເປັນບົດປະທານຂອງປໂຍກ ໂດຍຢ່າງດັ່ງນີ້:

“ນັກຮຽນຖືກຄຣູໃຫ້ຂຽນຫນັງສື, ປະຊາຊົນຖືກຣັຖບານໃຫ້ເສັຽພາສີ, ນັກໂທດຖືກນາຍຄຸມໃຫ້ຫາບຂອງ” ຄຳວ່າ ນັກຮຽນ, ປະຊາຊົນ, ນັກໂທດ, ເປັນບົດກາຣິຕກັມ ຄືກັມທີ່ຖືກໃຊ້ໃຫ້ທຳ ແຕ່ເອົາມາເປັນບົດປະທານຂອງປໂຍກ ສ່ວນຄຳວ່າ ຄຣູ, ຣັຖບານ, ນາຍຄຸມ, ເປັນບົດເຫຕຸກັດຕາ ຄືເປັນຜູ້ໃຊ້ ແຕ່ບໍ່ໄດ້ເປັນບົດປະທານ ຄຳວ່າ ຂຽນ, ເສັຽ, ຫາບ,

ເປັນກິຣິຍາຂອງ ນັກຮຽນ, ປະຊາຊົນ, ນັກໂທດ, ສ່ວນຄຳວ່າ ຫນັງສື, ພາສີ, ຂອງ ເປັນບົດກັມຂອງກິຣິຍາ ຂຽນ, ເສັງ, ແລະຫາບ

ໃນປໂຍກ ກາຣິຕກັມນີ້ມີຄຳກິຣິຍານຸໂຍກ ຖືກໃຫ້ ປະກອບຢູ່ນຳເປັນສຳຄັນ.

## ໕– ປໂຍກກິຣິຍາ ຫລື ປໂຍກພາວະ

ປໂຍກກິຣິຍາ ຫມາຍເອົາປໂຍກຄຳເວົ້າທີ່ໃຊ້ຄຳກິຣິຍາ ເວົ້າຂຶ້ນກ່ອນແທນບົດປະທານ, ຄຳກິຣິຍາທີ່ໃຊ້ໃນປໂຍກກິຣິຍານີ້ ມີກຳນົດຈຳເພາະກິຣິຍາທີ່ມີຄວາມຫມາຍວ່າ: ເກີດ, ມີ, ເປັນ. ທັ່ງນັ້ນ ໂດຍຢ່າງດັ່ງຕໍ່ໄປນີ້:

ກິຣິຍາ ເກີດ: ເກີດສົງຄາມກາງເມືອງຂຶ້ນໃນປະເທດ.

ກິຣິຍາ ມີ : ມີເງິນປາກໄດ້, ມີໄມ້ເຮັດເຮືອນງາມ,

ກິຣິຍາ ເປັນ: ເປັນນາຍໃຫ້ຮັກຫມູ່, ເປັນປູ່ໃຫ້ຮັກຫລານ, ເປັນຂຸນກວານ ໃຫ້ຮັກລູກບ້ານ...

## ໂດຍຢ່າງຄຳຖາມໃນບົດທີ່ ໓

໑/ ຖ້ອຍຄຳ ກັບ ວະລີ ແລະ ປໂຍກ ຕ່າງກັນຢ່າງໃດ ຈົ່ງຫາໂດຍຢ່າງ ຖ້ອຍຄຳ, ວະລີ ປໂຍກ ມາປຽບທຽບກັນເບິ່ງ?

໒/ ປໂຍກຄຳເວົ້າແນວໃດ ຮຽກວ່າ ປໂຍກກັຕຕາ ຈົ່ງຫາໂດຍຢ່າງມາພ້ອມ?

໓/ ຄຳເວົ້າປໂຍກຕໍ່ໄປນີ້ຮຽກວ່າ ປໂຍກແນວໃດ ຄື "ທ້າວດີປ້ານຫາດ ຫລວງໄປຍິງນົກ. ນົກເປັດນ້ຳຖືກທ້າວດີຍິງຕາຍ, ທ້າວສອນຂຽນ

ຫນັງສືງາມຫລາຍ"

໔/ ປໂຍກກັດຕາ ກັບປໂຍກເຫຕຸກັດຕາ ຕ່າງກັບຢ່າງໃດ ຈົ່ງແຕ່ງຄຳ ວ່າ ຂຽນຫນັງສື ໃຫ້ເປັນປໂຍກກັດຕາ ແລະເຫຕຸກັດຕາ ລອງເບິ່ງ

໕/ ປໂຍກຄຳເວົ້າຢ່າງໃດ ຮຽກວ່າ ປໂຍກກັມ ຈົ່ງແຕ່ງປໂຍກກັດຕາຕໍ່ ໄປນີ້ ໃຫ້ເປັນປໂຍກກັມຈະໄດ້ບໍ່ ຄື ນົກບິນ, ຄວາຍນອນ, ຄົນຫາປາ, ກາກິນງູ?

໖/ ປໂຍກຄຳເວົ້າຊນິດໃດ ຮຽກວ່າ ປໂຍກກາຣິກກັມ ຫາໂຕຢ່າງມາເບິ່ງ?

໗/ ປໂຍກກິຣິຍາ ແມ່ນປໂຍກຊນິດໃດ ຈົ່ງຫາໂຕຢ່າງມາເບິ່ງ?

# ບົດທີ ໔

## ພາກຂອງປໂຍກ

ປໂຍກຄຳເວົ້າທີ່ແບ່ງອອກເປັນ ៥ ປໂຍກນັ້ນ ແຕ່ລະປໂຍກມີສ່ວນສຳຄັນຢູ່ ໒ ພາກ ຄືພາກປະທານແລະພາກກິຣິຍາ:

## ກ. ພາກປະທານ

ປະທານຫມາຍເອົາຄຳທີ່ເວົ້າຂຶ້ນກ່ອນໃນປໂຍກ ສະນັ້ນໃນພາກປະທານນີ້ ຈິ່ງມີບົດສຳຄັນຢູ່ ໒ ບົດ.

ຄື ບົດປະທານ ແລະ ບົດຊ່ອຍປະທານ.

໑- ບົດປະທານ ຄຳທີ່ໃຊ້ເປັນປະທານຫລືບົດປະທານນີ້ຕ້ອງແມ່ນຄຳນາມ ຄຳສັພນາມ ຫລືບົດອື່ນໆທັງທີ່ເປັນຄຳເປັນວະລີ ແລະ ປໂຍກດັ່ງຕໍ່ໄປນີ້:

ກ- ຄຳນາມ ຄຳນາມທັງຫລາຍໃຊ້ເປັນບົດປະທານ ໄດ້ທຸກປະເພດ ໂດຍຢ່າງດັ່ງນີ້:

ສາມັນນາມ: ນັກຮຽນ ຂຽນຫນັງສື

ວິສາມັນນາມ: ວຽງຈັນ ເປັນນະຄອນຫລວງ ຂອງປະເທດລາວ

ສມູຫະນາມ: ກອງທະຫານ ເດີນສວນສນາມ

ລັກສນະນາມ: ຄັນນີ້ (ຣົດຄັນນີ້) ແລ່ນດີ.

ອາການນາມ: ຄວາມດາບ ເປັນຂອງທ່ຽງແທ້.

໒- ຄຳສັພນາມ ຄຳສັພນາມທັງຫລາຍມີຫນ້າທີ່ໃຊ້ແທນນາມ ດັ່ງນັ້ນ ຄຳສັພນາມທຸກຫມວດຈິ່ງໃຊ້ເປັນບົດປະທານໄດ້ ໂດຍຢ່າງດັ່ງນີ້:

| | | |
|---|---|---|
| ບຸຣຸດສັພນາມ : | ເພິ່ນເຮັດດີ, | ຂ້າພະເຈົ້າອ່ານຫນັງສື |
| ສັມພັນສັພນາມ: | ທີ່ເປັນດີ: | ເຊິ່ງທຳດີ |
| ວິພາກສັພນາມ: | ຕ່າງ ດີໃຈ | ພ່ອງເຟ້ອນ, ພ່ອງຫົວ |
| ນິຍົມສັພນາມ : | ນັ້ນ ບໍ່ເປັນເອົາ | ນີ້ ບໍ່ດີ |
| ອະນິຍົມສັພນາມ | ຜູ້ໃດ ມາກໍໄດ້, ໃພງ ກໍເຮັດໄດ້, | |
| ປຸດສາສັພນາມ | ໃຜ ມາຫັ້ນ. | |

ຄ- ຄຳກິຣິຍາສະພາວະມາລາ ບົດກິຣິຍາສະພາວະມາລານີ້ ບໍ່ໃຊ້ເປັນກິຣິຍາຂອງປໂຍກໄດ້ ດັ່ງນັ້ນ ຈຶ່ງໃຊ້ເປັນບົດປະທານໄດ້ດັ່ງດຽວກັບຄຳນາມແຕ່ວ່າໃຊ້ໄດ້ແຕ່ ໒ ຫມວດ ຄື ອະກັມກິຣິຍາ ແລະ ສະກັມກິຣິຍາ ວິກະຕັຖກິຣິຍາ ສ່ວນຫມວດກິຣິຍາປຸໂຍກ ໃຊ້ເປັນບົດປະທານບໍ່ໄດ້ ເພາະກິຣິຍາປຸໂຍກນັ້ນ ສຳລັບຊ່ອຍກິຣິຍາອື່ນໆ ໂດຍ່າງ:

| | |
|---|---|
| ອະກັມກິຣິຍາ : | ນອນຫລາຍ ເປັນໄຂ້ |
| ສະກັມກິຣິຍາ : | ກິນອາຫານ ມີປໂຍດແກ່ຮ່າງກາຍ |
| ວິກະຕັຖກິຣິຍາ: | ເປັນນາຍ ໃຫ້ຮັກຫມູ່ ເປັນປູ່ໃຫ້ຮັກຫລານ |

ງ- ວະລີຕ່າງໆ ວະລີທັງຫລາຍ ຄືນາມວະລີ, ສັພນາມວະລີ, ເປັນຕົ້ນໃຊ້ເປັນບົດປະທານໄດ້ເຫມືອນກັນ ໂດຍ່າງຕໍ່ໄປນີ້:

| | |
|---|---|
| ນາມວະລີ | ວຽງຈັນນະຄອນຫລວງຂອງປະເທດລາວພວມຈະເຮີນ. |
| ສັພນາມວະລີ: | ຂ້າພະບາດເຈົ້າ ກະນີງຮ້ອນຮົ່ການ |
| ກິຣິຍາວະລີ | ກິນອາຫານທີ່ດີ ມີປໂຍດແກ່ຮ່າງກາຍ |
| ບຸພບົດວະລີ : | ໃນນໍ້າ ມີປາ, ໃນນາ ມີເຂົ້າ |

ສັນທານວະລີ: ເຖິງຈັ່ງໃດສາກໍວານນັ້ນແຫລ້ວ ພໍໃຈໄດ້ຮ່ວມ.

ຈ - ປໂຍກ ປໂຍກຕ່າງໆ ທີ່ກ່າວມາແລ້ວນັ້ນ ໃຊ້ເປັນບົດປະທານຂອງກັນແລະກັນໄດ້ ເວັ້ນແຕ່ມີຄຳ ສັນທານຂັ້ນ, ປໂຍກທີ່ມີຄຳສັນທານຂັ້ນແມ່ນປໂຍກຕໍ່ກັບປໂຍກດ້ວຍຄຳສັນທານ ຖ້າບໍ່ມີຄຳສັນທານແລ້ວແມ່ນປໂຍກເປັນບົດປະທານ ຫລືບົດຊ່ອຍປະທານ ແລະເປັນບົດກັມ ຂອງກັນແລະກັນດັ່ງນີ້:

ປໂຍກກັດຕາ : ເສືອໂດດກິນງົວ ຂົນຄົນຕາຍ

ປໂຍກກັມ : ນັກຮຽນທີ່ຄຣູບ້ອງບໍ່ ເປັນຄົນດີ

ປໂຍກເຫດຸກັດຕາ : ຄຣູໃຫ້ນັກຮຽນຂຽນຫນັງສື ລົງໃນກະດານດຳ

ປໂຍກກາຣິຕກັດຕາ : ກະດານດຳ ທີ່ນັກຮຽນຖືກຄຣູໃຫ້ຂຽນຫນັງສືຕົກລົງແຕກ

ປໂຍກກິຣິຍາ : ເປັນຄົນໃຫ້ທຳບຸນ ຄືນົກເຈົ້າ ບານເມື່ອແລ່ວຜ້າຍ ຂາວແຈ້ງກໍຈິງເຫັນ.

໖ - ບົດຊ່ອຍປະທານ ບົດຊ່ອຍປະທານນີ້ ແມ່ນບົດປະກອບກັບໂດປະທານເພື່ອຊ່ອຍໃຫ້ໄດ້ຄວາມແຈ່ມແຈ້ງ ບົດຊ່ອຍປະທານນີ້ ກໍໃຊ້ໄດ້ທັງຄຳວາແລະປໂຍກຕ່າງໆ ດັ່ງຕໍ່ໄປກັບບົດປະທານດັ່ງນີ້:

ກ - ຄຳວິເສດ ຄຳວິເສດທັງຫລາຍມີຫນ້າທີ່ຊ່ອຍຄຳນາມ ທີ່ເປັນປະທານໃຫ້ໄດ້ຄວາມແຈ່ມແຈ້ງ ດັ່ງນີ້:

ຄົນພານ ພາໄປຫານິດ, ຄົນຫມັ່ນ ຫາຊັບໄດ້

ຊາດຫນ້າ ຈຶ່ງພໍ້ກັນ, ຄົນໃນ ບໍ່ໃຫ້ອອກ

ຂ - ວະລີ ບົດວະລີຕ່າງໆ ໃຊ້ເປັນບົດຊ່ອຍປະທານໄດ້ ດັ່ງນີ້:

ຄ. ບົດວະລີຕ່າງ ໆ :  ຂ້າພະເຈົ້າເຫັນນົກບາງຂາສູງໂຖກເຖກ ( ຂາສູງໂຖກເຖກ ຊ່ອຍບົດກັບ ນົກບາງ )

ງ. ປໂຍກ :  ຂ້າພະເຈົ້າ  ເຫັນນົກບາງ ກິນປາ ( ກິນປາ ເປັນປໂຍກຊ່ອຍບົດກັບ ຄືນົກບາງ )

## ໂຕຢ່າງຄຳຖາມ ໃນບົດທີ່ ໔

໑/ ປໂຍກຄຳເວົ້າທັງຫລາຍ ທີ່ແບ່ງເປັນ ໕ ປໂຍກນັ້ນ ແຕ່ລະປໂຍກມີສ່ວນສຳຄັນແບ່ງອອກເປັນຈັກພາກ ຄື ພາກໃດແດ່ ?

໒/ ຄຳປະທານ ຫລືບົດປະທານແມ່ນຄຳມີຫນ້າທີ່ຢ່າງໃດ ແລະຄຳຊນິດໃດແດ່ໃຊ້ເປັນບົດປະທານໄດ້ ?

໓/ ຈົ່ງບອກຄຳໃນປໂຍກຕ່າງໆ ຕໍ່ໄປນີ້ວ່າ ຄຳໃດເປັນປະທານ ຄື ອັຄບານແຫ່ງຣາຊອານາຈັກລາວ ໄດ້ປະກາດໃຫ້ປະຊາຊົນມີຄວາມຂຍັນຫມັ່ນພຽນ, ນັກຮຽນດີ ຕ້ອງມີຄວາມດຸຫມັ່ນ, ຄຣູໃຫ້ນັກຮຽນຂຽນຫນັງສືໃນກະດານດຳ.

໔/ ໃນພາກບົດປະທານ ໃຊ້ຄຳຊນິດໃດ ຫລື ປະເພດໃດ ຊ່ອຍບົດປະທານໄດ້ ຈົ່ງຫາໂຕຢ່າງມາເບິ່ງຈັກ ໕ ປໂຍກ

໕/ ໃນພາກບົດກິຣິຍາ ມີບົດໃດແດ່ ເປັນບົດຊ່ອຍກິຣິຍາ ?

ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ

ໄວຍາກອນລາວ ພາກ ໔

# ສັນທະລັກສນະ

ຂອງ

ຣາຊບັນດິດສະພາລາວ

ພິມເທື່ອທີ່ ໔ ຈຳນວນ ໔.໐໐໐ ເຫຼັ້ມ

ທີ່ ໒໔ ເດືອນກັນຍາ ພ.ສ. ໒໕໑໓

໑໙໗໐

# ສ າ ຣ ະ ບ າ ນ

## ບົດທີ່ ໑ ຫຼັກເກນຂອງກອນລາວ


ກ. ຄຳອະທິບາຍ .......................... ໜ້າ ກ

໑. ຄຳເວົ້າ .......................... " ໑

໒. ວັກ ແລະ ບົດ .......................... " ໒

໓. ຄຳບຸພບົດ ແລະ ຄຳສ້ອຍ .............. " ໕

໔. ຄຳປະຈຳບ່ອນ .......................... " ໗

ບົດທີ່ ໒ ສັມຜັດ ........ " ໘

ກ. ສັມຜັດນອກ .......................... " ໘

໑. ລັກສນະກອນລຳ .......................... " ໘

໒. ລັກສນະກອນອ່ານວິດຊຸມາລີ .............. " ໙

໓. ລັກສນະກອນແປດແບບໄທ .............. " ໑໐

ຂ. ສັມຜັດໃນ .......................... " ໑໒

໑. ສັມຜັດສຣະ .......................... " ໑໒

໒. ສັມຜັດພຍັນຊນະ .......................... " ໑໓

ບົດທີ່ ໓ ປະເພດຂອງຄຳກອນລາວ " ໑໔

໑. ກອນກາບ .......................... " ໑໔

໒. ກອນລຳ .......................... " ໑໗

໓. ກອນອ່ານ .......................... " ໑໘

ກ. ກອນອ່ານທັມມະດາ .......................... " ໑໙

໓. ກອນອ່ານແບບວິດຊຸນາລີ ................ ໜ້າ ໔໐

໔. ກອນຮ່າຍ ........................... " ໔໘

ກ. ກອນຮ່າຍສູດຂວັນ .................... " ໔໙

ຂ. ກອນຮ່າຍສໍາລັບເທດ ................... " ໖໐

໕. ກອນຕຍາ ............................ " ໖໖

໖. ກອນໂຄງ ............................ " ໖໕

ກ. ກອນໂຄງ ໕ ......................... " ໖໗

ຂ. ກອນໂຄງ ໗ ......................... " ໖໘


--== ໐໐ ==--

26 JUIL. 1973

# ຄຳນຳຂອງຄນະກັມມະການວັນນະຄະດີ

ຄນະກັມມະການວັນນະຄະດີລາວ ໄດ້ຖືກແຕ່ງຕັ້ງຂື້ນແຕ່ປີ ກ.ສ. ໑໙໕໐ ຕາມດຳຣັດຂອງນາຍົກຣັຖມົນຕີ ສບັບເລກທີ່ ໒໐໗ ລົງວັນທີ່ ໒໗ ສິງຫາ (ອາອຸດ) ໂດຍອາສັຍພຣະຣາຊໂອງການສບັບເລກທີ່ ໑໓໒ ລົງວັນທີ່ ໑໔ ມິຖຸນາ (ຊວງ) ແລະ ເລກທີ່ ໓໔ ລົງວັນທີ່ ໒໘ ກຸມພາ (ເຟວຣີເຢ) ໑໙໕໐ ໃນມາດຕາ ໓ ແຫ່ງດຳຣັດທີ່ກ່າວນີ້ ໄດ້ກຳນົດຈຳນວນຄນະກັມມະການໄວ້ທັງໝົດ ໒໕ ທ່ານ ແຕ່ວ່າໃນຂັ້ນຕົ້ນນີ້ ໄດ້ແຕ່ງຕັ້ງຂື້ນກ່ອນແຕ່ພຽງ ໕ ທ່ານ ເພື່ອໃຫ້ເປັນປະຖົມສະມາຊິກ, ຄນະກັມມະການປະຖົມສະມາຊິກ ໕ ທ່ານນັ້ນຄື:

໑/ ພນະທ່ານ ກຸ ອະພັຍ ເປັນປະທານ (ເຖິງແກ່ກັມແລ້ວ)

໒/ ພນະທ່ານ ໜຸຍ ປັນຍາ ຮອງປະທານ

໓/ ພນະທ່ານ ບົງ ສຸວັນນະວົງ ເປັນກັມມະການ

໔/ ທ່ານ ສິນຈິນ ປີແອງິນ ກັມມະການ

໕/ ທ່ານ ມະຫາ ສີລາ ວີຣະວົງ ກັມມະການ

ຕໍ່ໆມາຈົນເຖິງປີ ກ.ສ. ໑໙໗໐ ມີທ່ານຜູ້ມີກຽດຫຼາຍທ່ານ ໄດ້ຮັບເຊີນເຂົ້າເປັນຄນະກັມມະການຕື່ມອີກຕາມລຳດັບຄືປັດຈຸບັນນີ້ ໄດ້ມີຄນະກັມມະການຢູ່ແລ້ວເຖິງ ໑໔ ທ່ານ:

໑/ ພນະທ່ານ ກຸ ອະພັຍ ປະທານກິດຕິມະສັກ

໒/ ພນະທ່ານ ໜຸຍ ປັນຍາ ຮອງປະທານກິດຕິມະສັກ

໓/ ທ່ານ ສິນຈິນ ປີແອງິນ ປະທານກັມມະການຈັດການປະຈຳປີ

໔/ ພຣະທ່ານ ບົງ ສຸວັນນະວົງ ຮອງປະທານກັມມະການ[illegible]ການ ປະຈຳປີ

໕/ ນະຕາ ສີລາ ວີຣະວົງ ກັມມະການແລະເລຂານຸການ (ລາອອກແລ້ວ)

໖/ ພຣະທ່ານ ຕຸຍ ອະພັຍ ກັມມະການ (ເຖິງແກ່ກັມແລ້ວ)

໗/ ທ່ານ ເກື້ອງ ປະທຸມຊາດ ກັມມະການ

໘/ ທ່ານ ຄູນ ພິລາວັນ ກັມມະການ

໙/ ທ່ານ ພູວົງ ພົມມະສອນ ກັມມະການ (ປັດຈຸບັນເປັນເລຂາທິການ)

໑໐/ ທ່ານ ໝູຫັກ ລິດທິນິຣະດາ ກັມມະການ (ເຖິງແກ່ກັມແລ້ວ)

໑໑/ ທ່ານ ນະຕາ ພູມີ ຈິດພົງ ກັມມະການ (ເຖິງແກ່ກັມແລ້ວ)

໑໒/ ທ່ານ ເກນ ກັມມະການ

໑໓/ ທ່ານ ໄດ ແກ້ວຫຼວງໂຄດ ກັມມະການ

໑໔/ ທ່ານ ສຸພັນ ບລັງຊາເດີລາບອິດ ກັມມະການ

ໃນມາດຕາ ໔ ແຫ່ງດຳຣັດຈັດຕັ້ງຄນະກັມມະການວັນນະຄະດີທີ່ກ່າວມາແລ້ວ ໄດ້ຊີ້ຈຸດໝາຍສຳຄັນແຫ່ງວຽກການຂອງກັມມະການໄວ້ດັ່ງນີ້:

໑– ພິຈາຣະນາຮ່າງແບບສອນອ່ານທັງປວງ ແລະ ວັນນະຄະດີເດີມກ່ຽວກັບການສຶກສາ

໒– ການສຶກສາກ່ຽວກັບໄວຍາກອນ, ພາສາ ແລະອັກສອນສາດ

໓– ຮຽບຮຽງເອົາວັນນະຄະດີຕ່າງປະເທດ

໔– ພິຈາຣະນາການພິມໜັງສືວັນນະຄະດີ ທີ່ກ່ຽວກັບພາສາ ແລະ ອັກສອນສາດລາວອອກຢາຍ

໕– ຈັດຕັ້ງລະບຽບການຂຽນອັກສອນລາວ

໖– ຈັດການແຕ່ງວັຈນານຸກົມຂຶ້ນ

໗– ກຳນົດຣາງວັນປະຈຳປີ ສຳລັບບຳເໜັດແກ່ຜູ້ແຕ່ງໜັງສືລາວໄດ້ດີ ຕາມຫົວຂໍ້ທີ່ຄນະກັມມະການກຳນົດໃຫ້. ຄນະກັມມະການຈັດການທີ່ໄດ້ຖືກຄັດເລືອກສຳລັບປີ ໑໙໕໐ ແລະ ໑໙໕໔ ນັ້ນຄື:

໑– ພນະທ່ານ ກຸ ອະພັຍ ເປັນປະທານ

໒– ພນະທ່ານ ຜຸຍ ປັນຍາ ຮອງປະທານ

໓– ທ່ານ ມະຫາ ສິລາ ວີຣະວົງ ເລຂານຸການ

ນັບແຕ່ປີ ໑໙໕໓ ເປັນຕົ້ນມາ ຄນະກັມມະການຈັດການທີ່ຖືກຄັດເລືອກໃຫ້ດຳເນີນງານ ຕໍ່ມາຈົນເຖິງປັດຈຸບັນນີ້ ແມ່ນ:

໑– ທ່ານ ສິນຈິນ ປິແອວິນ ເປັນປະທານ

໒– ພນະທ່ານ ບົງ ສຸວັນນະວົງ ຮອງປະທານ

໓– ທ່ານ ພູວົງ ພິມມະສອນ ເລຂານຸການ

ເພື່ອປະຕິບັດການໃຫ້ໄດ້ຜົນຕາມຈຸດໝາຍ ແຫ່ງດຳຣັດນີ້ ຄນະກັມມະການວັນນະຄະດີຈຶ່ງເຫັນດີພ້ອມກັນຢິບຍົກເອົາຂໍ້ທີ່ ໕ ແລະທີ່ ໖ ແຫ່ງມາດຕາ ໔ ຂອງດຳຣັດນີ້ຄື: ການຈັດຕັ້ງລະບຽບຂຽນອັກສອນລາວແລະການແຕ່ງວັຈນານຸກົມລາວ ຂຶ້ນມາພິຈາຣະນາກ່ອນເພາະເຫັນວ່າການຈັດແຕ່ງແບບຂຽນແບບອ່ານຕໍ່ໆໄປກໍດີ ການຊຳຣະແກ້ໄຂໜັງສືວັນນະຄະດີເກົ່າອອກມາພິມ ກໍດີ ຈຳເປັນຕ້ອງຂຽນແລະພິມໃຫ້ຖືກຕ້ອງເປັນລະບຽບ

ອັນນຶ່ງ ອັນດຽວກັບການສຶກສາໜັງສືລາວແລະພາສາລາວ ຈຶ່ງຈະດຳເນີນໄປໄດ້ສະນັ້ນຄນະກັມມະການຈຶ່ງໄດ້ຟື້ນຟູເອົາຣາຊໂອງການເລກທີ່ ໑໐ ລົງວັນທີ່ ໒໗ ມະກະຣາ ໑໙໔໙ ທີ່ກ່າວດ້ວຍຫຼັກການຂຽນໜັງສືລາວຂຶ້ນມາພິຈາຣະນາແກ້ໄຂແລ້ວພ້ອມກັນແຕ່ງໄວຍາກອນລາວ ພາກອັກຂຣະວິທີຂຶ້ນ , ເປັນສະບັບແຣກ ໜັງສືນີ້ກ່າວດ້ວຍອັກຂຣະວິທີລາວ ຄື: ສຣະ ພຍັນຊນະ ແລະ ວິທີຂຽນສະກົດຄຳຕລອດເຖິງບັນຍັດເຄື່ອງໝາຍຕ່າງໆ ໄວ້ຄົບຖ້ວນຕາມລັກສນະຂອງພາສາລາວ ແລະ ໜັງສືລາວ, ໜັງສືໄວຍາກອນລາວພາກອັກຂຣະວິທີນີ້ຄນະກັມມະການໄດ້ປະຊຸມກັນແຕ່ງເຖິງ ໑໐ ເທື່ອຈຶ່ງສຳເຣັດບໍຣະບວນ ແລະ ໄດ້ຈັດພິມຂຶ້ນແຈກຢາຍຄັ້ງແຣກ ແຕ່ປີ ກ.ສ ໑໙໕໔ ຕໍ່ນັ້ນມາກໍໄດ້ປະຊຸມກັນແກ້ໄຂຕື່ມແຖມ ແລະ ຈັດພິມຂຶ້ນໃໝ່ອີກໃນປີ ກ.ສ. ໑໙໗໐ ໃນຄນະເມື່ອແຕ່ງແບບໄວຍາກອນພາກອັກຂຣະວິທີຢູ່ນັ້ນຄນະກັມມະການກໍໄດ້ປະຊຸມກັນວາງຫຼັກເກນແຕ່ງໜັງສືວັຈນານຸກົມລາວຂຶ້ນພ້ອມໆກັນຄັ້ງແຣກແຕ່ປີ ໑໙໕໖ ເປັນຕົ້ນມາ ເມື່ອໄດ້ວາງຫຼັກເກນແຕ່ງ ແລະການລຽນລຳດັບໄວ້ແລ້ວ ຈຶ່ງມອບໃຫ້ມະຫາສິລາ ວີຣະວົງ ເຊິ່ງເປັນກັມມະການວັນນະຄະດີ ແລະ ຫົວໜ້າຫ້ອງການວັນນະຄະດີດ້ວຍເປັນຜູ້ທ້ອນໂຮມຄຳ ຈັດວິທີລຽນລຳດັບຄຳໄວ້ເປັນໝວດໆ ແລ້ວສເນີຕໍ່ຄນະກັມມະການໃຫ້ປະຊຸມພິຈາຣະນາແກ້ໄຂໃນການປະຊຸມທຸກເທື່ອ ແຕ່ວ່າ ເນື່ອງຈາກກັມມະການຫຼາຍທ່ານ ມີພາຣະໜ້າທີ່ການງານຢ່າງອື່ນໆມາກຫຼາຍທັງພາຍໃນປະເທດ ແລະ ນອກປະເທດການຈັດວັຈນານຸກົມອັນເປັນໜັງສືສຳຄັນ ແລະ ໃຫຍ່ຍິ່ງກໍຈະເປັນການລ້າຊ້າເສັຽເວລາບໍ່ທັນຄວາມຕ້ອງການ ແລະ ຄວາມຈຳເປັນໃນເວລານີ້ ດັ່ງນັ້ນ ຄນະກັມມະການຈຶ່ງໄດ້ມອບໝາຍໃຫ້ ມະຫາ ສິລາ ວີຣະ

ວົງ ຈັດທຳໄປ ພ້ອມກັບໃຫ້ແຕ່ງແບບໄວຍາກອນລາວ ພາກ ໒ ຄື ວະຈີ ວິພາກ ພາກ ໓ ວາກຍະສັມພັນ ພາກ ໔ ສັນທະລັກສນະ ໃຫ້ສຳເຣັດບໍຣະບອນ ເພື່ອໃຫ້ໃຊ້ເປັນຫຼັກໃນການຮຽນໄວຍາກອນລາວໄປຊານຊາກ່ອນ ບັດນີ້ມະຫາ ສີລາ ວີຣະວົງ ໄດ້ທ້ອນໂຮມຄຳ ຈັດທຳເປັນໜັງສືວັຈນານຸກົມຕັ້ງແຕ່ ກ. ເຖິງ ຮອ ພ້ອມທັງໜັງສືໄວຍາກອນລາວອີກ ໓ ພາກ ຄື ວະຈີວິພາກ ວາກຍະສັມພັນ ແລະ ສັນທະລັກສນະ ຂຶ້ນສຳເຣັດບໍຣະບອນ ແລ້ວ ຄນະກັມມະການຈຶ່ງໄດ້ເຂົ້າປະຊຸມກັນ ຄັ້ງວັນທີ່ ໑໗ ກຸມພາ ໑໙໗໑ ນີ້ ເພື່ອພິຈາຣະນາຮັບຮອງເອົາໜັງສືດັ່ງກ່າວນີ້ ແລ້ວໃຫ້ທາງຣາຊການ ກະຊວງສຶກສາພິມແຜ່ຫຼາຍໄດ້.

ໜັງສືວັຈນານຸກົມນີ້ ກໍດີ ຄນະກັມມະການເຊື່ອແນ່ວ່າ ຍັງມີບ່ອນຜິດພາດຂາດເຂີນຢູ່ເປັນອັນມາກຍິ່ງໜັກໜາ ເປັນການຊຳຮະສະສາງຄັ້ງແຣກ ແຕ່ເຖິງດັ່ງນັ້ນ ຄນະກັມມະການກໍຫວັງເຫັນວ່າ ຄົງຈະເປັນ ປໂຍດອັນຍິ່ງໃຫຍ່ແກ່ການສຶກສາ ແລະ ຄົ້ນຄວ້າຕໍ່ໄປ ຈຶ່ງໄດ້ພິມອອກແຜ່ຫຼາຍ ເພື່ອໃຫ້ທ່ານຜູ້ຮູ້ທັງຫຼາຍ ຊ່ວຍກັນພິຈາຣະນາແກ້ໃຫ້ບໍຣິບູນດີຂຶ້ນ ຄນະກັມມະການມີຄວາມຍິນດີສເມີໃນຄວາມຕຸກເຕືອນຂອງທ່ານຜູ້ຮູ້ ແລະຜູ້ສົນໃຈໃນການຈະແກ້ໄຂໜັງສືວັຈນານຸກົມລາວ ແລະ ໄວຍາກອນລາວນີ້ ໃຫ້ຖືກຕ້ອງ ແລະ ບໍຣິບູນດີໃນພາຍພາກໜ້າ.

ທ້າຍສຸດນີ້ ຄນະກັມມະການ ຂໍຂອບຄຸນທ່ານ ມະຫາ ສີລາ ວີຣະວົງ ກັມມະການວັນນະຄະດີ ແລະ ຫົວໜ້າຫ້ອງການວັນນະຄະດີຜູ້ໄດ້ພາກພຽນພຍາຍາມຈັດທຳໜັງສືວັຈນານຸກົມລາວ ແລະ ໄວຍາກອນລາວນີ້ຂຶ້ນ ຈົນເປັນຜົນສຳເຣັດ ອັນເປັນຄຸນ ປໂຍດແກ່ປະເທດຊາດບ້ານເມືອງຢ່າງ

ສຳຄັນຍິ່ງ ນອກນີ້ ຄນະກັມມະການຂໍຂອບຄຸນ ມ.ລ. ມານິດ ຈຸມສາຍ ຜູ້ອຳນວຍການສຶກສາແຫ່ງ ຢູເນສໂກ ປະຈຳພຣະຣາຊອານາຈັກລາວ ທີ່ໄດ້ຊ່ອຍຈັດການພິມໜັງສືເຫຼັ້ມນີ້ໃຫ້ເປັນຜົນສຳເຣັດດ້ວຍ. (ພິມຄັ້ງທີ່ນຶ່ງ)

## ຄນະກັມມະການປັດຈຸບັນ

ພຣະທ່ານ ຜຸຍ ປັນຍາ ຮອງປະທານກັມມະການກິດຕິມະສັກ

ທ່ານ ສົມຈິນ ປີແອງິນ ປະທານກັມມະການຈັດການປະຈຳປີ

ພຣະທ່ານ ບົງ ສຸວັນນະວົງ ຮອງປະທານກັມມະການຈັດການປະຈຳປີ

ທ່ານ ພູວົງ ພິມມະສອນ ເລຂາທິການ

ພຣະທ່ານ ໄດ ແກ້ວຫຼວງໂຄດ ກັມມະການ

ທ່ານ ສຸພັນ ບລັງຊາເດີລາບຣິດ ກັມມະການ

ທ່ານ ຄູນ ພິລາວັນ ກັມມະການ

ທ່ານ ເກື້ອງ ປະທຸມຊາດ ກັມມະການ

ທ່ານ ເກນ ກັມມະການ

ວຽງຈັນ, ວັນທີ່ ໑໕ ເດືອນ ກັນຍາ ໑໙໗໐

ປະທານຣາຊບັນດິດສະພາລາວ

26 JUIL. 197?

ສົມຈິນ ງິນ

## ຄຳນຳຂອງກະຊວງສຶກສາທິການ

---===OO===---

## ສຳລັບໜັງສືໄວຍາກອນລາວ

ເນື່ອງຈາກໄດ້ມີພຣະຣາຊໂອງການເລກທີ່ ໑໐ ລົງວັນທີ່ ໑໗ ມະກະຣາ (ຈັງວິເຢ) ໑໙໔໙ ກຳນົດການສະກົດຄຳໃນພາສາລາວໄວ້ ໂດຍໃຫ້ຂຽນການສຽງເວົ້າໃນພາສາລາວເປັນຫຼັກ ແຕ່ທີ່ທີ່ໄດ້ສັງເກດ ເບິ່ງການສະກົດຕົວໜັງສື ທີ່ພວກນາຍຄຣູໃຊ້ໃນການສັ່ງສອນນັກຣຽນແລະ ໃນແບບຣຽນຕ່າງໆ ຍັງບໍ່ເປັນແບບດຽວກັນເທື່ອ ດັ່ງນັ້ນ ຈຶ່ງໄດ້ສເນີ ເຣື່ອງນີ້ຕໍ່ຄນະກັມມະການວັນນະຄະດີ ເພື່ອຂໍໃຫ້ມອບໝາຍໃຫ້ຜູ້ໃດຜູ້ນຶ່ງ ຣຽບຣຽງໜັງສືໄວຍາກອນລາວຂຶ້ນເພື່ອໃຫ້ມີໃຊ້ໄປຊານຊາກ່ອນ ທີ່ປະຊຸມ ຄນະກັມມະການວັນນະຄະດີ ຈຶ່ງໄດ້ມອບໝາຍໃຫ້ ມະຫາສີລາ ວີຣະວົງ ເລຂານຸການຄນະກັມມະການວັນນະຄະດີ ຣຽບຣຽງໜັງສືໄວຍາກອນລາວ ນີ້ຂຶ້ນ.

ບັດນີ້ ມະຫາສີລາ ວີຣະວົງ ໄດ້ຣຽບຣຽງໄວຍາກອນລາວນີ້ສຳ ເຣັດຣຽບຮ້ອຍແລ້ວທັງ ໔ ພາກ ຄື: ໑ ອັກຂຣະວິທີ ໒. ວະຈີວິພາກ ໓. ວາກຍະສັມພັນ ໔. ສັນທະລັກສນະ ທາງກະຊວງສຶກສາທິການ ຈຶ່ງ ອະນຸຍາດໃຫ້ຄນະກັມມະການວັນນະຄະດີ ຈັດພິມຂຶ້ນ ເພື່ອໃຊ້ເປັນແບບ ຣຽນໃນໂຮງຣຽນຂອງກະຊວງສຶກສາຕໍ່ໄປ ກະຊວງສຶກສາ ຂໍຂອບຄຸນ ຄນະກັມມະການວັນນະຄະດີໄວ້ໃນທີ່ນີ້ດ້ວຍ.

ວຽງຈັນ, ວັນທີ່ ໑໙ ມະກະຣາ ໑໙໗໑

ຣັຖມົນຕີກະຊວງສຶກສາທິການ <u>ລາຍເຊັນ</u> ຫງຸຍອະພັຍ

# ຄຳອະທິບາຍ

--=== ooo ==---

ແຕ່ປາງບູຮານ ຫຼາຍພັນປີມາແລ້ວ ນັກປາດເພິ່ນໄດ້ຈັດຫຼັກວິຊາທີ່ກຸລບຸດຈະຕ້ອງສຶກສາໄວ້ເຖິງ ໑໘ ປະການ ຮຽກວ່າສິລປະສາດ ຫຼື ສາດສິນປີ ໑໘ ຢ່າງຄື:

໑. ຍຸທສາດ — ວິຊານັກຮົບ

໒. ອັຖສາດ — ວິຊາປົກຄອງປະເທດ

໓. ນິຕິສາດ — ວິຊາກົດໝາຍແລະຈາຮີດປະເພນີ

໔. ວານິຊຍະສາດ — ວິຊາການຄ້າ

໕. ນິຣຸກຕິສາດ — ວິຊາພາສາ ຄືຄວາມຮູ້ໃນພາສາຂອງຕົນ ແລະ ຕ່າງປະເທດ

໖. ອັກສອນສາດ — ວິຊາໜັງສື

໗. ຄະນິດສາດ — ວິຊາເລກ (ການຄຳນວນ)

໘. ໂຊຕິຍະສາດ — ວິຊາຄວາມຮູ້ໃນເຣື່ອງດວງດາວຕ່າງໆ

໙. ພູມິສາດ — ວິຊາຄວາມຮູ້ໃນເຣື່ອງພູມປະເທດ

໑໐. ໂຫຣາສາດ — ວິຊາໝໍດູ ຄືທວາຍເຫດການຕ່າງໆ ລ່ວງໜ້າ ແລະ ພາຍຫຼັງໄດ້

໑໑. ເວຊສາດ — ວິຊາໝໍຢາ

໑໒. ສັດວະສາດ — ຄວາມຮູ້ໃນເຣື່ອງສັດຕ່າງໆ

໑໓. ເຫຕຸສາດ — ວິຊາຄົ້ນຄ້ວາຫາເຫດຜົນ ( ວິທຍາສາດ )

| | | |
|---|---|---|
| ໑໔. | ໂຍຄະສາດ | ວິຊາຊ່າງເຄື່ອງຍົນກົນໄກ |
| ໑໕. | ສາສນະສາດ | ຄວາມຮູ້ໃນທາງສາສນາ |
| ໑໖. | ມາຍາສາດ | ຄວາມຮູ້ໃນທາງກົນອຸບາຍ |
| ໑໗. | ຄັນທັພສາດ | ວິຊາຟ້ອນລຳ ແລະ ດົນຕີ |
| ໑໘. | ສັນທະສາດ | ວິຊາຄວາມຮູ້ໃນທາງແຕ່ງກາບກອນ. |

ສາຕສິບ ໑໘ ປະການທີ່ກ່າວມານີ້ ເຫັນໄດ້ວ່າ ວິຊາຄວາມຮູ້ໃນທາງແຕ່ງກາບກອນ ຄື ສັນທະສາດ ເປັນວິຊາສຳຄັນປະເພດນຶ່ງແລະທຸກວັນນີ້ປະເທດທີ່ໂລກກໍນິຍົມຢູ່ວ່າວິຊາການປະພັນ ຄື ການແຕ່ງກາບກອນ ກໍເປັນສ່ວນສຳຄັນຢູ່ບໍ່ໜ້ອຍ ເພາະກາບກອນເປັນອັນນະສິນ ທີ່ອຳນວຍຄຸນປໂຍດໃຫ້ແກ່ປະເທດຊາດ ແລະສ່ວນບຸກຄົນທີ່ດີທີ່ກັບສິລປະອື່ນໆ-ດັ່ງດຽວກັນ ດ້ວຍເຫດນີ້ປະເທດທີ່ຈເຣີນແລ້ວທັງຫຼາຍໃນໂລກ ຈຶ່ງບັນຈຸວິຊາການປະພັນ ຄື ການແຕ່ງກາບກອນ ເຂົ້າໄວ້ໃນຫຼັກສູດແຫ່ງການສຶກສາເປັນວິຊານຶ່ງ ແລະ ນັບເປັນວິຊາຊັ້ນສູງດ້ວຍ.

ປະເທດລາວ ແລະ ປະຊາຊົນລາວ ແຕ່ກ່ອນເຄີຍເປັນປະເທດທີ່ຈເຣີນ ປະຊາຊົນຄົນລາວກໍເຄີຍມີຜູ້ຮູ້ ຜູ້ສຳນານໃນວິຊາການແຕ່ງກາບກອນນີ້ມາຫຼາຍແລ້ວ ຈົນມີຜູ້ເວົ້າວ່າ ຄົນລາວເປັນນັກປະພັນ ຫຼື ນັກກະວີເກືອບທຸກຄົນ; ແຕ່ວ່ານັກປະພັນລາວ ຫຼື ນັກກະວີລາວໃນສມັຍປັດຈຸບັນນີ້ເຖິງແມ່ນວ່າຈະແຕ່ງກາບກອນ ເປັນແລະລາງຄົນກໍແຕ່ງໄດ້ດີຢູ່ແຕ່ສ່ວນຫຼາຍບໍ່ສູ້ຈະຮູ້ຈັກກົດເກນຂອງກາບກອນຄັກແນ່ ເປັນແຕ່ແຕ່ງໄປຕາມຄວາມເຄີຍ ຫຼື ຕາມອາຣົມຂອງຕົນ ດັ່ງນັ້ນ ກາບກອນລາງບົດຈຶ່ງຂັດ

ເຂີນ ຟັງບໍ່ມ່ວນບໍ່ເປັນທີ່ຈັບໃຈ ອາສັຍເຫດດັ່ງກ່າວນີ້ ຂ້າພະເຈົ້າຈຶ່ງໄດ້ຣິຈນາແບບແຕ່ງກອນລາວນີ້ຂຶ້ນ ເພື່ອໃຫ້ເປັນແນວທາງການສຶກສາຂອງກຸລບຸດຜູ້ເກີດໃໝ່ໃຫຍ່ລຸນ ແລະ ທ່ານຜູ້ໃສ່ໃຈໃນການແຕ່ງກາບກອນແບບແຕ່ງກາບກອນທີ່ຂ້າພະເຈົ້າຣິຈນາຂຶ້ນນີ້ ຂ້າພະເຈົ້າຊອກຄົ້ນຫາຫຼັກຖານຕ່າງໆຈາກໜັງສືອັນນະຄະດີລາວທັງຫຼາຍເກືອບທຸກເຣື່ອງ ເປັນເວລາເຖິງນານມາແລ້ວກວ່າ ໖໐ ປີ ຈຶ່ງໄດ້ຫຼັກຖານທໍ່ທີ່ໄດ້ທ້ອນໂຮມມາໄວ້ໃນໜັງສືນີ້. ຂ້າພະເຈົ້າເຊື່ອວ່າແບບແຕ່ງກອນລາວບໍ່ແມ່ນຈະມີທໍ່ນີ້ ອາຈມີແບບອື່ນ ວາດອື່ນ ທຳນອງອື່ນອີກກໍໄດ້ ເຊິ່ງສຸດແລ້ວແຕ່ນັກປະພັນຈະຕັ້ງຂຶ້ນໃຫ້ເໝາະສົມກັບກາລະສມັຍແລະວາດຮ້ອງທຳນອງລຳ ສ່ວນແບບທີ່ຂ້າພະເຈົ້າຣິຈນານີ້ ໃຫ້ເຂົ້າໃຈວ່າ ເປັນແບບທີ່ເຄີຍມີມາແລ້ວແຕ່ບູຮານທໍ່ນັ້ນ.

---=== ໐໐໐ =====---

ແບບແຕ່ງກອນລາວ

--==OO==----

# ບົດທີ່ ໑

## ຫຼັກເກນຂອງກອນລາວ

ກ່ອນຈະຮຽນຮູ້ການແຕ່ງກອນລາວ ຫຼືທີ່ຮຽກເປັນສັບສູງວ່າ ກະວິນິພົນ ນັ້ນຕ້ອງຮູ້ຫຼັກເກນຕ່າງໆ ດັ່ງຕໍ່ໄປນີ້:

### ໑ ຄຳເວົ້າ

ຄຳເວົ້າຄຳນຶ່ງໃນກອນໝາຍເອົາ ສຽງທີ່ເວົ້າອອກມາເທື່ອນຶ່ງໆຫຼືໝາຍເອົາພຍັນຊນະກັບສຣະປະສົມກັນແລ້ວອ່ານອອກສຽງໄດ້ເທື່ອນຶ່ງ ເຊິ່ງຮຽກວ່າ ພຍາງ ເປັນຄຳນຶ່ງ ດັ່ງ ຄຳວ່າ ນົກ, ເນື້ອ, ບ້ານ, ເມືອງ ຄົນ, ເປັນຕົ້ນ ເວັ້ນແຕ່ຄຳຈຳພວກອັກສອນນຳທີ່ອ່ານອອກສຽງເປັນ ໒ ພຍາງ ແຕ່ພຍາງໜ້າເປັນສຽງ ອະ ສເມີ ດັ່ງ ສເບ, ສບາຍ, ຖແລງ, ຖນົນ, ຜຍາ, ທຣົງ ເປັນຕົ້ນ ຄຳຈຳພວກດັ່ງກ່າວນີ້ ເຖິງແມ່ນອອກສຽງເປັນ ໒ ພຍາງ ກໍນັບເປັນຄຳດຽວ, ຖ້າອອກສຽງເປັນ ໓ ພຍາງ ກໍນັບເປັນ ໒ ຄຳ ດັ່ງວິທຍາ, (ອ່ານວິດທະຍາ) ສາສນາ ພິສວົງ (ອ່ານພິດສະຫວົງ) ເປັນຕົ້ນ.

ລັກສນະຂອງຄຳ ໃນຫຼັກເກນຂອງກອນລາວນີ້ ແບ່ງອອກເປັນ ໔ ປະເພດ ຄື.

(໑) ຄຳຕາຍ ແມ່ນຄຳທີ່ຜັນສຽງໃຫ້ສູງຕ່ຳ ຕາມຮູບວັນນະຍຸດບໍ່ໄດ້ ຄຳຕາຍນີ້ແບ່ງອອກເປັນ ໒ ຈຸ ຄື:

- ຈຸທີ່ປະກອບດ້ວຍຣັດສະສຣະທັງໝົດ ຄື: ກະ, ກິ, ກຸ, ກຶ, ເກະ

ແກະ, ເປັນຕົ້ນ ເວັ້ນແຕ່ສະຣະ ໃ×, ໄ×, ເ×ົາ, ×ໍາ,

ຂ- ຈຸທີ່ສະກົດດ້ວຍຕົວ ກ, ດ, ບ, ດັ່ງ ເບີກ, ເກີດ, ເກີບ, ເປັນຕົ້ນ (ຈໍາພວກນີ້ນັບເປັນຄໍາ ເອກດ້ວຍ)

(໒) <u>ຄໍາເປັນ</u> ແມ່ນຄໍາທີ່ຜັນສຽງໄດ້ຄໍາເປັນນີ້ ຮຽກວ່າຄໍາສຸພາບກໍໄດ້ ແບ່ງເປັນ ໒ ຈຸ ຄື:

ກ- ຈຸທີ່ປະກອບດ້ວຍທີຄະສະຣະທັງໝົດ ດັ່ງ ກາ, ກີ, ກູ, ເກ, ແກ, ເປັນຕົ້ນ ແລະ ຄໍາທີ່ປະກອບດ້ວຍ ສຣະ ໃ×, ໄ×, ເ×ົາ, ×ໍາ,

ຂ- ຈຸທີ່ສະກົດດ້ວຍຕົວ ງ, ຍ, ນ, ມ, ວ, ດັ່ງ ນາງ, ສາຍ, ສິນ ສຸມ, ແສ່ວ ເປັນຕົ້ນ.

(໓) <u>ຄໍາເອກ</u> ແມ່ນຄໍາປະກອບດ້ວຍວັນນະຍຸດ ເອກ ແລະ ຄໍາທີ່ສະກົດດ້ວຍຕົວ ກ, ດ, ບ, ດັ່ງຢ່າງ ໄກ່, ປ່າ, ປ່ານ, ຜ່ານ, ເມກ, ເຕດ, ແບບ, ເປັນຕົ້ນ.

(໔) <u>ຄໍາໂທ</u> ແມ່ນຄໍາທີ່ປະກອບດ້ວຍວັນນະຍຸດໂທທັງໝົດ ດັ່ງ ໄມ້, ເບື້ອງ, ນ້ອງ, ບ້ານ, ນ້ໍາ, ເກົ້າ, ເປັນຕົ້ນ.

## ໒ ວັກແລະບົດ

ວັກແມ່ນລະຍະຂອງຄໍາກະວີ ຕອນນຶ່ງໆທີ່ສໍາພັດກັນ: ຖ້າເປັນ ກອນ ໒. ກອນ ໓. ຫຼື ກອນ ໔. ກອນ ໕. ກອນ ໗. ກອນ ໘. ກໍ ມີ ໒ ຄໍາ, ໓. ຄໍາ, ໔. ຄໍາ, ໕ ຄໍາ, ໗ ຄໍາ, ໘ ຄໍາ, ເປັນວັກ ຕາມລໍາດັບ ໂດຍຢ່າງດັ່ງນີ້:

### ສອງ ຄໍາເປັນວັກນຶ່ງ

ຊິກນິກ, ທິກກຽນ, ຕຽນແອ່ນ, ແບ່ນໂຕ, ໂສພາບ, ນາບຝານ,ຕານ ນ້ຳ, ຊ້ຳໂກນ (ໂຄງໂຕເພິ່ງຊ້າງ) ຊ້າງ ງົວ ຄຸດ ແມວ ຣາຊສີ ເສືອ ນາກ ໝູ

<u>ສາມ ຄຳເປັນອັກນຶ່ງ</u>

ສິຊົນຊື່ນ, ຊື່ນເມືອງພົມ, ສົມຢູ່ລ້າງ, ນ້າງສ້າງໂຄ, ໂພທິສັດ, ວັດ ພຣະເຈົ້າ, ເຕົ້າຄົບໂຮມ (ໂສກກອງ)

<u>ສີ່ ຄຳເປັນຄຳນຶ່ງ</u>

ກະຕູກກະຕູ້ນ, ພິກົນພິຢູ່, ຕັນຕູ້ຕັນຕາ, ກາເຝົ້າເຈົ້າຮັກ, ໆລໆ(ໂສກ ຜູ້ສາວ)

<u>ຫ້າ ຄຳເປັນຄຳນຶ່ງ</u>

ຫ້າງແຮ້ວຄືກຕົນສານ, ບໍ່ນານຂາດເປັນບັ້ນ, ຝ້າຂັ້ນຫ່ອນເປັນດິນ , ນົກຍູງບິນສູ່ໄມ້, (ໂຄງ ໕)

<u>ຫົກ ຄຳເປັນຄຳນຶ່ງ</u>

ຫົດເປັນຮາກເຕົ້າຫົວດີ, ຈັບເຄືອຍາວຮີບໍ່ນ້ອ, ຄານເປັນພ້ອໝາກດົກ ໝາ, ພຸດມີມາລາບໍ່ເສົ້າ, ພະຕັດໝາກແຕ່ເຄົ້າ ເຖິງປາຍສຸກເປືອກໝາຫຼາຍ ສຸດຍິ່ງ, ເສົາມີກ້ານກິ່ງລຳງາມ, (ໂຄງປູກຂອງຕານວັນ)

<u>ເຈັດ ຄຳເປັນຄຳນຶ່ງ</u>

ເມືອງວຽງຈັນງາມດີສະອາດ, ມີຕລາດຂາຍເຂົ້າຂາຍປາ, ທັງວັດວາຫໍ ໂຮງກໍໃຫຍ່, ດູບົນໄດ້ຕິດຕໍ່ເປັນສາຍ, ເກີນສະບາຍໄປມາບໍ່ຍາກມີຣົດ ລາກອິດແກ່ຣົດຍົນ, ຢູ່ທາງບົນເຮືອເຕາະບົນເວີນ, ລົງຈອດເດີນສນາມ

ວັດໃຕ.

ໆລໆ

ຄຳກອນແຕ່ພວກທີ່ມີແຕ່ ໗ ຄຳຂຶ້ນໄປຈັດເປັນວັກນຶ່ງນັ້ນ ຕ້ອງຈັດເຂົ້າເປັນບົດ ຄື ໔ ວັກໃດຈັດເປັນບົດນຶ່ງ (ເວັ້ນແຕ່ຄຳກາບຕ້ອງແຕ່ງເປັນວັກຕິດຕໍ່ກັນໄປເລື້ອຍບໍ່ຈັດເປັນບົດ) ດັ່ງນັ້ນຄຳກອນບົດນຶ່ງຈຶ່ງມີ ໔ ວັກ ຖ້າແຕ່ງບໍ່ຄົບ ໔ ວັກ ຄຳກອນບົດນັ້ນກໍເຂີນບໍ່ມ່ອນຫຼືຂັດຈັງຫວະໃນເວລາຮ້ອງລຳແລະອ່ານ (ເວັ້ນແຕ່ບົດຂຶ້ນຕົ້ນ) ວັກທັງ ໔ ນັ້ນຮຽກຊື່ດັ່ງນີ້:

| | | | | |
|---|---|---|---|---|
| ວັກທີ່ | ໑ | ຮຽກວ່າ | ວັກສະດັບ | ໂຮມ ໔ ວັກນີ້ເປັນບົດ ໑ |
| ວັກທີ່ | ໒ | –"– | ວັກຮັບ | |
| ວັກທີ່ | ໓ | –"– | ວັກຮອງ | |
| ວັກທີ່ | ໔ | –"– | ວັກສົ່ງ | |

ຕົວຢ່າງ

ກ– <u>ກອນອ່ານ</u>

໑– ວັກສະດັບ – ສັບພະກອດກັງວກອນເກົ່ານາຖແລງ

໒– ວັກຮັບ – ເທພາວະອາດພະນອມໄພກວ້າງ

໓– ວັກຮອງ – ບຸນຍອງຍັງ ເຊົາແຄນຄາວນຶ່ງ

໔– ວັກສົ່ງ – ສັງລ່ອງຜ້າຍຜັນບ້າກ່ອນບາ ໆ

ຂ– <u>ກອນລຳ</u>

໑– ວັກສະດັບ – ຄັບເຈົ້າເວົ້າຈັ່ງຊັ້ນກໍຮ້ອຍແມ່ນພັນທີ

໒– ວັກຮັບ – ຍາກຊີມີຄົນດີ ຜູ້ຍິງຫຼາຍລົ້ນ

ບົດ ໑
໓- ອັກຂອງ - ມີແຕ່ຄົນບຸໝົ້ນ ອຸປະຊົນຕົ້ນປ່າ
໔- ອັກສິ່ງ - ຕາເອົາດີຢ່າງເຈົ້າ ມີໜ້ອຍບໍ່ຫຼາຍ

ບົດ ໒
໑- ອັກສະດັບ - ຊິເວົ້າສ່ຳຂີ້ຮ້າຍ ຟັງກ່ອນກອນຖແລງ
໒- ອັກຮັບ - ຍິງຈັ່ງບື່ງບໍ່ຮູ້ຈັກແລງງາຍແຕ່ງບາຍອີ່ຫຽ້ງຊົ້ງ
໓- ອັກຂອງ - ໃຫ້ຜົວທຳປານແຫຼ້ງແລງງາຍບໍ່ຢາກແຕ່ງ
໔- ອັກສິ່ງ - ເພີ່ນສະແດງບອກໄວ້ວ່າອີງນັ້ນຊື່ອຊານ

<u>ໝາຍເຫດ</u> ເວລາແຕ່ງຂຶ້ນຕົ້ນເຣື່ອງທຳອິດ ບົດຕົ້ນຈະໃຊ້ແຕ່ອັກຂອງ ກັບອັກສິ່ງ ຄືອັກຖ້ອນ ໓ ແລະ ຖ້ອນ ໔ ກໍໄດ້ ສ່ວນບົດຕໍ່ໆໄປ ຕ້ອງແຕ່ງໃຫ້ຄົບທັງ ໔ ອັກ ຕົວຢ່າງ:

ບົດຕົ້ນ
໓- ອັກຂອງ - ນາງເຫັນນ້ອງຫອງເດົາເບົ້າລ່ຽນ
໔- ອັກສິ່ງ - ພີ່ກ້ອງນຢາກເວົ້ານຳເຈົ້າຕັ້ງແຕ່ດົນ

ບົດຕໍ່ໄປ
໑- ອັກສະດັບ - ແຕ່ພີ່ຄຸບຄ່ວາຄົ້ນ ໝົ້ນເຫຼົ່າກໍເລົາ
໒- ອັກຮັບ - ຫ່ຽວຕາປອງເອົານາງໄດ້ສີ່ປີປາຍເຂົ້າ
໓- ອັກຂອງ - ຈຶ່ງໄດ້ມາເຫັນເຈົ້າແພກະເຈົາບີ້ງປ່ຽງ
໔- ອັກສິ່ງ - ມາເຫັນເນື້ອກ່ຳກັ້ງງ ຢາກຂໍເວົ້າບ່ອນຈິງ

## ໓ <u>ຄຳບຸພບົດແລະຄຳສ້ອຍ</u>

ຕາມທັມມະດາຄຳກອນລາວທັງຫຼາຍທີ່ໃຊ້ລຳແລະອ່ານ ແກ່ນຂອງຄຳກອນແທ້ໆນັ້ນ ອັກນຶ່ງໆ ມີແຕ່ ໗ ຄຳ ນອກນັ້ນເປັນບຸພບົດແລະຄຳສ້ອຍ:

ກ- <u>ຄຳບຸພບົດ</u> ແມ່ນຄຳສຳລັບຕື່ມເຂົ້າທາງໜ້າຂອງຄຳກອນ ອັກໃດ ອັກ

ນຶ່ງ ເພື່ອໃຫ້ໄດ້ຄວາມຄັກແນ່ຂຶ້ນ ຄຳບຸພບົດນີ້ຢ່າງໜ້ອຍມີ ໔ ຄຳ ແລະ ຢ່າງຫຼາຍມີ ໔ ຄຳ ຕົວຢ່າງດັ່ງນີ້:

ເມື່ອນັ້ນ ລີນໄຊຫົວ ທຽວທາງດັ້ນດຸ່ງ <u>ນາງກໍ</u> ຟັງພາກພຽງດູແມ້ງແມ່ນ ຄືນ <u>ເມື່ອນັ້ນນາງກໍ</u> ທອຍມີນ້າວ ກະດານໜາໜັກພື້ນສອນສຽນຈົ້າ ກະແຈ ພົ້ງຫູດໃລ, ຄຳບຸພບົດນີ້ສ່ວນຫຼາຍແມ່ນຄຳຈຳພ່ອກຕໍ່ໄປນີ້:

"ແຕ່ນັ້ນ, ເມື່ອນັ້ນ, ບັດນີ້, ທ້າວກໍ, ນາງກໍ, ຍາມນຶ່ງ, ປາງເມື່ອ, ຟັງຍິນ, ຟັງເນີ!" ເປັນຕົ້ນ.

ຂ- <u>ຄຳສ້ອຍ</u> ແມ່ນຄຳສຳລັບຕໍ່ທ້າຍ ຄຳກອນ ວັກໃດວັກນຶ່ງ ເພື່ອເນັ້ນ ຄວາມໃຫ້ຄັກ ຄຳສ້ອຍ ສ່ວນຫຼາຍແມ່ນຄຳເຫຼົ່ານີ້ "ແລເຍີ ນ້ອງເອີຍ, ແທ້ແຫຼ້ວ, ແລນາ, ພຸ້ນເຍີ" ເປັນຕົ້ນແລະ ຄຳສ້ອຍນີ້ ສ່ວນຫຼາຍຕື່ມໃສ່ວັກທີ່ ໑ ແລະວັກທີ່ ໔ ຕົວຢ່າງດັ່ງນີ້:

<u>ພີ່ກໍ</u> ເຫັນຮູບນ້ອງນັ້ນແຕ່ໃນມະໂນ <u>ແລເດ</u>

<u>ເໝືອນໝ່ອນ</u> ແນມນຳອັກຮູບຂວັນແຂວນໄວ້ ໂອຍ ໂອຍໂອ້ ຮູບແຮງ ຮ້ອນສວາດ

<u>ເທື່ອນີ້</u> ອ້າຍຈາກເຈົ້າ ເຈັ່ງຈະຮ້າງຮູບໄກ <u>ແລນາ</u>

<u>ຄິດເມື່ອ</u> ຮຽງຮູບນ້ອງໃນອາຊພະສຸທາ <u>ທີ່ພຸ້ນ</u> ພັນພຍາຂາມຂາບມາ ຢຳຢ້ານ

<u>ເພິ່ງພີ່</u> ຍໍຍົກເຈົ້າຈອມປາງເປັນອາດ ແດນນາກນ້ອມເກັ້ງກ້ຳກີ່ງ ສະກຸນ <u>ພີ່ແລ້ວ</u>

## ໔. ຄຳປະຈຳບ່ອນ

ຄຳກອນບົດນຶ່ງ ມີ ໔ ວັກໆໃດກໍມີ ໗ ຄຳ (ບໍ່ນັບຄຳບຸພບົດແລະຄຳສ້ອຍເຂົ້ານຳ) ໂຮມຄຳກອນບົດນຶ່ງມີ ໒໘ ຄຳ ໃນຈຳນວນຄຳທັງໝົດ ໒໘ຄຳນີ້ ຕ້ອງມີຄຳເອກ ໗ ຄຳ ແລະຄຳໂທ ໕ ຄຳ ຢູ່ປະຈຳບ່ອນຂອງມັນຈະຍ້າຍໄປບ່ອນອື່ນບໍ່ໄດ້ ຕົວຢ່າງດັ່ງນີ້:

| | | | | | | | | | |
|---|---|---|---|---|---|---|---|---|---|
| ວັກທີ່ ໑ | – | ○ | ○່ | ○້ | \| | ○ | ○່ | ○ | ○ |
| ວັກທີ່ ໒ | – | ○ | ○ ່ | ○ | \| | ○່ | ○ | ○ | ○້ |
| ວັກທີ່ ໓ | – | ○ | ○ | ○້ | \| | ○ | ○ | ○ | ○່ |
| ວັກທີ່ ໔ | – | ○ | ○່ | ○້ | \| | ○ | ○້ | ○່ | ○ |

ວັກທີ່ ໑ – ສັບພະກອດ ກ້ຽວ ກ່ອນ ເກົ່າ ມາ ຖແລງ

ວັກທີ່ ໒ – ເຫ ພາ ອະ ວາດ ພນອນ ໃພ ກ້ວາງ

ວັກທີ່ ໓ – ບຸນ ຍອງ ຍັ້ງ ເຊົາ ແຄນ ຄາວ ບຶ່ງ

ວັກທີ່ ໔ – ສ້າງ ລ່ວງ ຕ້າຍ ຕ້ນ ບ້າ ກ່ອນ ບາ

໑ – ຫຼັງເຫັນ ໄມ້ ລ່າວ ລົ້ມ ລຽນ ຮ່ອນ ເຂົາ ຮອນ

໒ – ພູ ຫອນ ເລາະ ລຽບ ພະນອງ ນຳ ນ້ອ

໓ – ເຕັ້ນ ຕາ ກ້ວາງ ເຂົາ ຄຳ ຄ້ອຍ ຄ່ຳ

໔ - ດອຍນັ້ນ ອິນ ແຕ່ງ ຕັ້ງ ດູ ເອື້ອງ ຮຸ່ງ ເອືອງ

ບົດທີ່ ໒

## ສັມຜັດ

ສັມຜັດ ມາຈາກຄຳບາລີວ່າ "ສັມຜັສສະ" ແປວ່າ ການຖືກຕ້ອງ ຫຼື ຊຸມຕຳ ໃນທີ່ນີ້ໝາຍເອົາຄຳຕ່າງໆ ໃນບົດກອນທີ່ຖືກຕ້ອງຄ່ອງກັນ ຫຼື ເກາະກ່າຍກັນ ດັ່ງຕົວຢ່າງວ່າ:

ນາເຕັນ<u>ນ້ອງ</u> ອິນ<u>ຕອງ</u> ແຕ້ມ<u>ແຕ່ງ</u> ແຕ່ພີ່ <u>ແຍງ</u>ຢາກ<u>ເວົ້າ</u>ນຳນ້ອງ ຕັ້ງແຕ່ດົນ ຄຳທີ່ມີຂີດຢູ່ກ້ອງນັ້ນ ແມ່ນຄຳທີ່ສັມຜັດກັນຄື:

| | | |
|---|---|---|
| ນ້ອງ | ສັມຜັດ | ຕອງ |
| ແຕ່ງ | -"- | ແຍງ |
| ເວົ້າ | -"- | ເຈົ້າ |

ລັກສນະຂອງສັມຜັດນັ້ນ ມີ ໒ ຢ່າງ ຄື ສັມຜັດນອກ ແລະ ສັມຜັດໃນ.

## ກ. ສັມຜັດນອກ

ສັມຜັດນອກ ໝາຍເອົາຄຳໃນວັກທີ່ ໑ ໄປເກາະກ່າຍກັບຄຳໃນວັກ ທີ່ ໒ ໓-໔ ຕໍ່ໆໄປ ມີ ລັກສນະ ດັ່ງນີ້:

໑- <u>ລັກສນະກອນລຳ</u>: ຄຳສຸດທ້າຍຂອງວັກທີ່ ໑ ສັມຜັດກັບວັກທີ່ ໑ ຫຼືທີ່ ໒ ຫຼືທີ່ ໓ ຂອງວັກຖ້ອນ ໒ ຄຳສຸດທ້າຍຂອງວັກຖ້ອນ ໒ ສັມຜັດກັບຄຳທີ່ ໑-໒-໓ ຂອງວັກຖ້ອນ ໓: ຄຳສຸດທ້າຍຂອງວັກຖ້ອນ ໓ ສັມຜັດກັບວັກທີ່ ໑-໒-໓ ຂອງວັກຖ້ອນ ໒ ຄຳສຸດທ້າຍຂອງວັກຖ້ອນ ໒ ສັມຜັດກັບຄຳທີ່ ໑-໒-໓ ຂອງວັກທີ່ ໑ ຂອງບົດຕໍ່ໄປ ຕົວຢ່າງດັ່ງນີ້:

ແນວນ້ອງນີ້ ເກີດຢູ່ເຮືອນຝາ
ມານດາເອົາ ຝາກປູ່ຕາງແປນ
ກິນແດ່ ແລນເລັ້ນຈ້ອນ ນອນຜ້າງຝາກໄມ້ໄຜ່

ຈຶ່ງບໍ່ ໃສສ່ອງເຫຼື້ອມ ທຽນອ້າຍຢ່າຍງາມ ໆ
ນ້ຳບໍ່ລ້າງ ເປັນກະດ່າງດຳຂາວ
ບໍ່ຄື ສາວໃນວັງ ນັ່ງນອນໝອນແກ້ວ
ນ້ອງນີ້ ແນວນານເໝັ້ນ ເໝັນຄາວຮອດກະດູກ
ລູກຜູ້ໃດຢູ່ໃກ້ ຢ້ານຄືເໝັນກິ່ນເໝັນ

| | | | | | | | |
|---|---|---|---|---|---|---|---|
| ບົດຕົ້ນ | o | o່ | oັ | o | o່ . | o | o̲ |
| | o̲ | o̲ | o̲ | o | o່ | o | oັ |
| | o̲ | o̲ | o̲ັ | o | o | o | o່̲ |
| | o̲ | o່̲ | o̲ັ | o | oັ | o່ | o̲ |
| ບົດ ໒– | o̲ | o່̲ | o̲ັ | o | o່ | o | o̲ |
| | o̲ | o̲ | o̲ | o | o່ | o | o̲ັ |
| | o̲ | o̲ | o̲ັ | o | o | o | o່̲ |
| | o̲ | o່̲ | o̲ັ | o | oັ | o່ | o |

໒– <u>ລັກສນະກອນອ່ານກິດຊຸມະລິ</u> ມີຫຼັກດັ່ງນີ້ –

ກ– ຄຳສຸດທ້າຍຂອງວັກທີ່ ໑ ສົມຜັດກັບຄຳທີ່ ໑–໒ ຫຼື ໔–໕ຂອງ ວັກທີ່ ໓.

ຂ– ຄຳສຸດທ້າຍຂອງວັກທີ່ ໒ ສົມຜັດກັບຄຳທີ່ ໑–໓ ຫຼືທີ່ ໕ ຂອງ ວັກທີ່ ໔.

ຄ– ຄຳສຸດທ້າຍຂອງວັກທີ່ ໓ ສົມຜັດກັບຄຳທີ່ ໒ ຫຼືທີ່ ໔ ທີ່ ໕ ຂອງວັກທີ່ ໑ ໃນບົດທີ່ ໒ (ບົດຕໍ່ໄປ)

ງ– ຄຳສຸດທ້າຍຂອງວັກທີ່ ໔ ສົມຜັດກັບຄຳທີ່ ໑–໒ ຫຼື ໔–໕ຂອງ

ວັກທີ່ ໒ ໃນບົດທີ່ ໒ (ບົດຕໍ່ໄປ)

## ຕົວຢ່າງ

| | | | |
|---|---|---|---|
| ບົດທີ່ ໑ | ວັກທີ່ ໑ – | ເມື່ອນັ້ນ ພຼອະນາດທ້າວຢູ່ຜ່ານ | ຄວງ<u>ສວັນ</u> |
| | –"– ໒ – | ..... ປຸນຄໍາຄວນຄ່ອຍແໜ | ລອງນ້ອງ |
| | –"– ໓ – | ເຮົາກໍ ມາງັນຫຼີ້ນລວງສາວ | ສູ່ບ່າວ |
| | –"– ໔ – | ..... ຄ້າຍເພື່ອນພ້ອງພັນພ້ອມພ່ຳຫຼາຍ | |
| ບົດທີ່ ໒ | ວັກທີ່ ໑ – | ຈັກກ່າວໃຕ້ຊອບຊົ້ງ | ແບບສົນ |
| | –"– ໒ – | ໝໍໂຫນຫວາຍບອກມາ | ນວນພ້ອມ |
| | –"– ໓ – | ຮີນຮີນລ້ອຍສາວສີ | ສຸມບ່າວ |
| | –"– ໔ – | ເຍົາວະຣາດຜູ້ຄົງຄ້ອມ | ຄ່ຼຂຽນ |

| | | | | | | | | |
|---|---|---|---|---|---|---|---|---|
| ບົດທີ່ ໑ | ວັກທີ່ ໑ – | ○ | ○່ | ○້ | ○ | ○່ | ○ | <u>○</u> |
| | –"– ໒ – | ○ | ○ | ○ | ○່ | ○ | ○ | <u>○້</u> |
| | –"– ໓ – | <u>○</u> | <u>○</u> | ○້ | <u>○</u> | <u>○</u> | ○ | <u>○່</u> |
| | –"– ໔ – | <u>○</u> | ○່ | <u>○້</u> | ○ | <u>○້</u> | ○ | <u>○</u> |
| ບົດທີ່ ໒ | ວັກທີ່ ໑ – | ○ | <u>○່</u> | ○້ | <u>○</u> | <u>○່</u> | ○ | <u>○</u> |
| | –"– ໒ – | <u>○</u> | <u>○</u> | ○ | <u>○່</u> | <u>○</u> | ○ | <u>○້</u> |
| | –"– ໓ – | <u>○</u> | <u>○</u> | ○້ | <u>○</u> | <u>○</u> | ○ | ○່ |
| | –"– ໔ – | <u>○</u> | ○່ | <u>○້</u> | ○ | <u>○້</u> | <u>○່</u> | ○ |

໓– ລັກສນະກອນ ຊ (ໄທ) ໃຊ້ສັມຜັດນອກດັ່ງນີ້ –

ກ. ຄໍາສຸດທ້າຍຂອງວັກທີ່ ໑ ສັມຜັດກັບຄໍາທີ່ ໓ ຂອງວັກທີ່ ໒

ຂ. ຄຳສຸດທ້າຍຂອງວັກທີ່ ໒ ສັມຜັດກັບຄຳສຸດທ້າຍຂອງວັກທີ່ ໓

ຄ. ຄຳສຸດທ້າຍຂອງວັກທີ່ ໓ ສັມຜັດກັບຄຳທີ່ ໓ ຂອງວັກຖ້ອນ ໔

ງ. ຄຳສຸດທ້າຍຂອງວັກຖ້ອນ ໔ ສຳຜັດກັບຄຳສຸດທ້າຍຂອງວັກຖ້ອນ ໒ ໃນບົດຕໍ່ໄປ.

ບົດທີ່ ໑ ວັກທີ່ ໑ – ຈະຮ່ຳປາງບາງສອັນ ສເວີຍສຸກ
– " – ໒ – ຢູ່ປາງມຸກພິມານ ສະໂມສອນ
– " – ໓ – ເພີຍພະແກແລດູ ແຜ່ນດິນດອ
– " – ໔ – ເຕັນໄກຂອນຄອດລູກ ໃນທີ່ນະຄອງ
ບົດທີ່ ໒ ວັກທີ່ ໑ – ດິນກັນບຳຈິດ ໃຫ້ພິສວາດ
– " – ໒ – ບຸຊບາດຢາກນີ ໂອຣະສາ
– " – ໓ – ເຕັນພອະສຸຣິໂຍໄທ ເທີໃຊາ
– " – ໔ – ກັລຍານຶກໄປ ດັ່ງໃຈປອງ.

ບົດທີ່ ໑ ວັກທີ່ ໑ – o o o o o o o o
– " – ໒ – o o o o o o o o
– " – ໓ – o o o o o o o o
– " – ໔ – o o o o o o o o
ບົດທີ່ ໒ ວັກທີ່ ໑ – o o o o o o o o
– " – ໒ – o o o o o o o o
– " – ໓ – o o o o o o o o
– " – ໔ – o o o o o o o o

## ຂ. <u>ສັມຜັດໃນ</u>

ສັມຜັດໃນ ໝາຍເອົາຄຳຢູ່ໃນວັກດຽວກັນ ເກາະກ່າຍກັນເອງ ຫຼືສັມຜັດກັນເອງ ຈຳເພາະໃນວັກນັ້ນໆ ດັ່ງຕົວຢ່າງວ່າ -

ວັກທີ່ ໑ - ຫຼີງເຕັ້ນໄມ້ລ່າວລົ້ມ ລຽນ<u>ຮ່ອມ</u> ເຂົາ<u>ຮອມ</u>

-"- ໒ - ພູທອນ ເລາະ ລຽບ ພະ<u>ນອງ</u> ນຳ<u>ນ້ອງ</u>

-"- ໓ - ເຕັນຫາກອ້າງ ເຂົາ <u>ຄຳ</u> ຄ້ອຍ <u>ຄຳ</u>

-"- ໔ - ດອຍນັ້ນ ອິນແຕ່ງຕັ້ງ ດູ<u>ເຊື້ອງ</u> ຮຸ່ງ<u>ເຊື່ອງ</u>

ສັມຜັດໃນນີ້ ມີ ໒ ຢ່າງ ຄື ສັມຜັດສຣະ ແລະສັມຜັດພຍັນຊນະດັ່ງຕໍ່ໄປນີ້ -

໑- <u>ສັມຜັດສຣະ</u> ແມ່ນຄຳທີ່ເກາະກ່າຍກັນດ້ວຍສຽງສຣະດຽວກັນຢູ່ໃນວັກດຽວກັນມີ ໒ ຢ່າງ -

ກ- ສັມຜັດທຽມຄູ່ ແມ່ນຄຳສຣະດຽວກັນຮຽງກັນຢູ່ ໒ ຄຳໂດຍບໍ່ມີຄຳອື່ນຂັ້ນ ຕົວຢ່າງ-

ຟັງ ເດີ ນ້ອງ<u>ຫອງ</u> <u>ເຕົາເປົ້າ</u> ລ່ຽນ
ເຮົາຈັກ ຂຽນຂີດ <u>ຫ.ຕົມແຖມ</u> <u>ທ້າຍກ່າຍ</u>ກອນ
ເອົ້າ ບ່ອນ<u>ບັ້ນລັ້ນ</u> <u>ກ່ອນຕອນ</u> ຫຼັງ
ປາງແຕ່ ວຽງຈັນຍັງ ຢູ່<u>ດີມີ</u> ເຈົ້າ
ອັນວ່າ ສາລີເຂົ້າ ໃນ<u>ບາຟ້າ</u> ທ່ອງ
ພວກລາວເຮົາພີ່ນ້ອງ ສະບາຍ<u>ສ້າງ ຮ່າງ</u>ມີ

ຂ- ສັນຜັດທ່ຽນແອກ ແມ່ນຄຳສຣະດຽວກັນ ສອງຄຳມີ ຄຳສຣະອື່ນຂັ້ນຢູ່ເຄິ່ງຄຳນຶ່ງ ຕົວຢ່າງ-

ເຍື້ອນຍາກຫ້າວ ຫັງ<u>ແຮ່ງ</u> ໂຮຍ<u>ແຮງ</u>
ເດີນດົງຫຼວງ ກວ່າ <u>ໄກ</u> ລື <u>ໄກ້</u>
ເລີຍຂຽວຂຶ້ນ ເຂົາ <u>ງອນ</u> ເນື້ອ <u>ງ່ອນ</u>
ພຸອະນາດເຈົ້າ ໃຈ <u>ສລົ້ງ</u> ຮຸ່ງ <u>ຫຼັງ</u>

ໆລໆ

໒. <u>ສັນຜັດພຍັນຊນະ</u> ແມ່ນຄຳທີ່ໃຊ້ພຍັນຊນະຕົວດຽວກັນ ຫຼື ມີສຽງຄ້າຍຄືກັນ ລຽນກັນຢູ່ໃນວັກດຽວກັນຕັ້ງແຕ່ ໒ ຂຶ້ນໄປ ຫຼື ຈະມີພຍັນຊນະອື່ນຂັ້ນຢູ່ຄຳນຶ່ງກໍໄດ້ ມີລັກສນະດັ່ງນີ້:

ກ. ສັນຜັດລຽນອັກສອນ ແມ່ນຄຳພຍັນຊນະຕົວດຽວລຽນກັນຢູ່ຕັ້ງແຕ່ ໒ ຄຳສືບໄປໂດຍບໍ່ມີພຍັນຊນະອື່ນຂັ້ນດັ່ງນີ້:

ຟັງຍິນ ຟື່ງ <u>ສນັ່ນນ້າວ</u> <u>ເປີຍເປີກປິວ</u>ຣະພາ ພຸ້ນເຍີ
ນັບແຕ່ ພຸທອນຮຸນ ນະ<u>ຣາດລິງລາ</u>ໄທ້
ພຣະກິ ທອນພິນຜ້າຍ <u>ເວຕາຫຼາຍຫຼັ່ນ</u>
ມະ<u>ໂນນາດ</u> <u>ທ້າວທິງ</u> <u>ຢັ້ນຢ່າຍຫຼ້າງ</u>

ຂ- ສັນຜັດຂັ້ນອັກສອນ ແມ່ນຄຳພຍັນຊນະດຽວກັນ ໃຊ້ສຣະ ຫຼື ຕົວສະກົດດຽວກັນ. ລຽນກັນຢູ່ ໒. ຄຳ ແຕ່ມີພຍັນຊນະອື່ນ ຫຼື ສຣະອື່ນຂັ້ນຢູ່ຄຳນຶ່ງ ດັ່ງນີ້:

ເຕັນດອກໄມ້ <u>ກ້ານກ່າຍ</u>ນາງ<u>ກາຍ</u>
ກອງກັນສັບ ດອກຊ<u>ອນ</u>ແຊມຊ້<u>ອນ</u>

ພຸຫອນຫົວ ເດີນດຽວດັ້ນດ່ຽວ
ຂ້າມຂອບຂັ້ນ ເມືອຊັ້ນຊ່ອງຊັນ

ໆລໆ

## ບົດທີ່ ໓

### ຄຳປະເພດຂອງຄຳກອນລາວ

ຄຳກອນໝາຍເອົາຄຳເວົ້າທີ່ແຕ່ງໃຫ້ມີສັມຜັດເກາະກ່າຍກັນເປັນແຖວຖັນ ດັ່ງກອນເຮືອນ. ຄຳກອນລາວໝາຍເອົາຄຳປະພັນທີ່ເປັນກະວີນິພົນທຸກປະເພດໃນພາສາລາວ ດັ່ງນັ້ນຄຳວ່າ "ກອນ" ຈຶ່ງເປັນຊື່ໂຮມຂອງຄຳກະວີ ທີ່ມີຢູ່ໃນວັນນະຄະດີລາວທັງຫຼາຍດ້ວຍ ເຫດນີ້ ຈຶ່ງໄດ້ແບ່ງກອນລາວອອກເປັນຫຼາຍປະເພດ ຄື ກອນກາບ ກອນລຳ, ກອນອ່ານ, ກອນຮ່າຍ, ກອນພະຍາ, ກອນໂຄງ, ກອນສານ ກອນຂັບ, ກອນລ່ອງຂອງ ເປັນຕົ້ນ ຫຼັກເກນສ່ວນໃຫຍ່ຂອງກອນທັງຫຼາຍທີ່ກ່າວມານີ້ ມີລັກສນະຄືກັນດັ່ງກ່າວມາແລ້ວ ໃນບົດທີ່ ໑ ແລະທີ່ ໒ ໃນບົດທີ່ ໓ ນີ້ ຈະກ່າວເຖິງລັກສນະທີ່ແຕກຕ່າງກັນອັນເປັນສ່ວນຍ່ອຍຂອງກອນຕ່າງໆທີ່ນັ້ນ-

### ໑ - ກອນກາບ

ຄຳວ່າ "ກາບ" ຕາມຄວາມໝາຍເດີມວ່າ ມາຈາກພາສາສັນສະກຣິດວ່າ ກາວ຺ຍ ແປງຕົວ ວ ເປັນ ພ ຈຶ່ງເປັນກາພຍ ແປຕາມໂຕວ່າ ຄຳເວົ້າຂອງກະວີ ຄືຄຳເວົ້າຂອງຜູ້ສລາດນັ້ນເອງ ຫຼື ຈະໝາຍວ່າ ຄຳເວົ້າທີ່ໄດ້ຈັດແຈງໃຫ້ເປັນແຖວຖັນດີ ກໍໄດ້, ຖ້າໝາຍຕາມລັກສນະຂອງພາສາລາວ

"ຄຳກາບ" ກໍມີລັກສນະຄືສິ່ງເປັນກາບທັງຫຼາຍ ດັ່ງກາບກ້ວຍ ກາບອ້ອຍ ເປັນຕົ້ນ ເພາະມີລັກສນະຊ້ອນໂອບເຊິ່ງກັນແລະກັນ ຄຳກາບ ກໍເປັນຄຳທີ່ມີສັມຜັດສັບຊ້ອນກັນ ດັ່ງສິ່ງເປັນກາບດັ່ງກ່າວແລ້ວ.

ຄຳວ່າ ກອນກາບ ກໍໝາຍເອົາຄຳກາບດັ່ງນັ້ນເອງ ມີກຳນົດຫຼັກເກນການແຕ່ງ ດັ່ງນີ້ະ

໑ – ກອນວັກ ໑ ໃຫ້ມີແຕ່ ໗ ຄຳ

໒ – ຄຳສຸດທ້າຍຂອງວັກທີ່ ໑ ຫຼືຄຳທີ່ ໗ ໃຫ້ສັ. ຜັດກັບຄຳທີ່ ໑ ຫຼື ທີ່ ໒ ຫຼື ທີ່ ໓ ໃນວັກທີ່ ໒

໓ – ຄຳສຸດທ້າຍຂອງວັກທີ່ ໒ ໃຫ້ສັມຜັດກັບຄຳທີ່ ໑ ຫຼືທີ່ ໒ ຫຼືທີ່ ໓ ໃນວັກຖ້ອນ ໔, ແລະໃນວັກຕໍ່ໆໄປກໍໃຫ້ໃຊ້ສັມຜັດທຳນອງດຽວ-ກັນນີ້

ຕົວຢ່າງ–

| | |
|---|---|
| ສາທຸສາ | ຍໍມືໃສ່ເກົ້າ |
| ຂ້າພະເຈົ້າ | ຂໍກ່າວຄຳນານ |
| ເປັນນິທານ | ສືບມາແຕ່ກ່ອນ |
| ເອົ້າແຕ່ບ່ອນ | ປາງຂຸນບູຣົມ |
| ຄັ້ງປະຖົມ | ລົງເອົາກຳເນີດ |
| ລົງມາເກີດ | ໃນທີບຊຸມພູ |
| ຂຸນບູຣົມ | ກັບນາງເອກໃຄ້ |
| ໄດ້ເປັນໃຫຍ່ | ຊົງເຂດເມືອງລາວ |
| ຕັ້ງແຕ່ຄາວ | ຢູ່ເມືອງຢູນານ |

| | |
|---|---|
| ເປັນເຈົ້າຜ່ານ | ປະເທດໜອງແສ |
| ເພີ່ນດູແລ | ປົກຄອງໄພ່ຟ້າ |
| ໄດ້ລູກຫຼ້າ | ນາມໜໍ່ເຈັດຊາຍ |
| ເພີ່ນແຈກຢາຍ | ໃຫ້ໄປເປັນເຈົ້າ |
| ຜູ້ກົກເຄົ້າ | ຊື່ທ້າວຂຸນລໍ |
| ໄດ້ເປັນກໍ | ລາວເອົາລ້ານຊ້າງ |
| ລົງມາສ້າງ | ເມືອງໃຫຍ່ຊຽງທອງ |
| ຜູ້ຖ້ວນສອງ | ຊື່ຍີ່ຜາລ້ານ |
| ໃຫ້ໄປບ້ານ | ເມືອງໃຫຍ່ຫໍແຕ |
| ຝາກໜອງແສ | ໄປທາງທິເບດ |
| ປົກຄອງເຂດ | ເມືອງຫົວຂາວ ໆລໆ |

## ໒. ກອນລໍາ

ກອນລໍາ ໝາຍເອົາຄໍາທີ່ລໍາໃສ່ກັບແຄນ, ຄວາມຈິງຄໍາກອນລາວເກືອບທຸກປະເພດໃຊ້ລໍາໃສ່ແຄນໄດ້ທັງມວນ ແຕ່ປະເພດທີ່ຮຽກວ່າ ນີ້ ມີພິເສດກວ່າ ເພາະໃຊ້ສໍາລັບລໍາໃສ່ແຄນໄດ້ດີກວ່າຄໍາກອນປະເພດອື່ນໆ- ດັ່ງນີ້ ຈຶ່ງຮຽກວ່າ ກອນລໍາ.

ລັກສນະຂອງກອນລໍານີ້ ມີ ໒ ຢ່າງ ຄື: ກອນຕັດ ແລະ ກອນເຍີ້ນ.

ກ. <u>ກອນຕັດ</u> ແມ່ນຄໍາກອນປະເພດກອນກາບນັ້ນເອງ ແຕ່ຫາກໃຊ້ສັບຜັດໃນຕິດຕໍ່ໜໍ່ເນື່ອງກັນຫຼາຍ ແລະ ຕື່ມຄໍາບຸພບົດເຂົ້າໄດ້ອີກຕາມໃຈຈິນ ເປັນວັກລະ ໗ ຄໍາ ໘ ຄໍາ ໑໑ ຄໍາ ແລະ ໑໔ ຄໍາ ກໍໄດ້ດັ່ງຢ່າງຕໍ່ໄປ

ນີ້,

ຟັງເດີເຈົ້າ ເບົ້າລ່ຽນອິນຂຽນ
ພີ່ນາງອຽນ ຈົນທາງເປັນໂສກ
ທຽວຂ້າມໂຄກ ຈົນຕົວເຂົ່າຄອນ
ນັບແຕ່ ພີ່ນາງອອນ ນານ້ອມມາໜ່ຽວ
ນາງກໍ ເລີຍບໍ່ກ່ຽວ ຄວາມພົບສັນຍາ
ຕົວະໃຕ້ ເຄີກເວລາ ນາເສັ້ງດາຍດອກ
ຄັນບໍ່ມັກ ເປັນສັງນ້ອງບໍ່ບອກ ນາແຕ່ຕົວທີ
ອັນປີນາ ເວົ້າກັນມາຕັ້ງປີ ໝົດຢາຕັ້ງພື່ນ
ຈົນວ່າຂັ້ນໄດເນີ່ນ ທຽວຂຶ້ນທຽວລົງ
ເຊີນນ້ອງບອກກົງໆ ເອົາບໍ່ຫຼີ້
ຄັນຊິເວົ້າວ່າບໍ່ ກໍໃຫ້ວ່ານາລາ
ຊິໄດ້ໝົດສົງກາ ຄວາມຊາຍໝາຍມາດ
ເຊີນນ້ອງເວົ້າໃຫ້ຂາດ ຕັດທ່ອນຮອນສິນ ໆລໆ

໘. ກອນເຍັ້ນ ກອນລຳແບບນີ້ມີລັກສນະຄືກັນກັບກອນອ່ານ ຄື ຕ້ອງແຕ່ງໃຫ້ຄົບທັງ ໔ ວັກເປັນບົດນຶ່ງ ເວັ້ນແຕ່ບົດຂຶ້ນຕົ້ນ ແລະ ຕ້ອງໃຊ້ຄຳເອກ ຄຳໂທ ປະຈຳບ່ອນໃຫ້ຖືກຕາມຫຼັກດັ່ງກ່າວແລ້ວ ໃນບົດທີ່ ໑ ຂໍ້ ໒ ແລະ ຂໍ້ ໔ ນອກຈາກນີ້ກໍໃຊ້ຄຳບຸພບົດຕື່ມເຂົ້າໄດ້ຫຼາຍຄຳທັງຕ້ອງໃຊ້ສົມຜົດນອກແລະໃນໃຫ້ຕິດຕໍ່ກັນໄປທຸກໆບົດ ດັ່ງຢ່າງດັ່ງນີ້:

ບົດຂຶ້ນຕົ້ນ ວັກ ໓ ນາງເຕັ້ນໝ້າ ສາຍຕາຟ້າລ່ອງ
" ໔ ເຈົ້າຕູ້ຂາວຍອດດ້ອງ ຄີງສ້ອຍເກີ່ງສອຍ ໆ

ວັກ ໑ – ນັບແຕ່ ທຸກໂສກກັ້ນ ເກີນຍິ່ງສາມເດືອນ
ວັກ ໒ – ບໍ່ສເວີຍເພົາພໍ ຄາບຄາຍຄາແຄັ່ນ
ບົດ ໓
ວັກ ໓ – ອີງຍອມພັງງ ຕອງຕາຍເຫຼືອງຫຼ່າ
ວັກ ໔ – ເສເນດລ້ອມ ຫຼາຍຊັ້ນບໍ່ບານ.

ວັກ ໑ – ບໍ່ໃຄ່ ລູກຢູ່ສ້າງ ສເວີຍຮາດເປັນພຍາໄດ້ແລ້ວ
ວັກ ໒ – ເພື່ອຄະນິງນິງສີ ຊູ່ອັ້ນບໍ່ມີເອື້ອນ
ບົດ ໔
ວັກ ໓ – ກັນໃດໂອ້ ອະນຸຊາເຈົ້າພີ່ ແພງເອີຍ
ວັກ ໔ – ປານນີ້ ຍັກຂາເຈົ້າກິນແລ້ວຮູ້ວ່າຍັງ ພີ່ເດ.

ວັກ ໑ – ນັບແຕ່ ພີ່ຮ່ຳໄຫ້ ທຸກຄ່ຳວັນຄືນ
ວັກ ໒ – ຈັກວ່າ ເປັນຕາຍໃຜ ກໍບໍ່ມີນຳຮູ້
ບົດ ໕
ວັກ ໓ – ຄັນຈັກ ດອມພິນຫ້າຍ ນຳຊູຊີງຍາດເອົາມັນ
ວັກ ໔ – ກໍບໍ່ ຮູ້ແຕ່ງແກ້ວ ພຣະກູຄ້າງທີ່ໃດ

ວັກ ໑ – ຜີຈັກ ໄປຈອບຈ້າງ ພໍຮ່ຳຮຽນມົນ
ວັກ ໒ – ທຳຕິນໂດຍ ດັ່ງທອນທະຍານຫ້າຍ
ບົດ ໗
ວັກ ໓ – ດັ່ງນັ້ນ ວິລັຍຊາ ຍຽວເກີດການຊື່
ວັກ ໔ – ຜິດເຜົ່າເຊື້ອ ທອນເຄົ້າບໍ່ໃຄ່ຄອນ ໆ

ໆລໆ

ຂ. <u>ກອນອ່ານແບບນິດຊຸມາລີ</u> ກອນອ່ານແບບນີ້ກໍຄືກອນອ່ານແບບທັມມະດາ ດັ່ງກ່າວມາແລ້ວ ຕ່າງແຕ່ໃຊ້ສັມຜັດນອກໃຫ້ເກາະກ່າຍກັນໄປຕາມວັກແລະບົດ ຕລອດຈົນໃຊ້ຄຳເອກຄຳໂທໃຫ້ຖືກຕ້ອງຕາມນ່ອນ( ເບິ່ງຂໍ້) ລັກສນະກອນອ່ານແບບວິຊຸມາລີໜ້າ........)

(ກອນທ້າວຮຸ່ງຍົກທັບໄປຊ່ອຍລຸງທີ່ເມືອງເງິນຍາງ ແລ້ວຄິດຮອດຊູ້ພາຍຫຼັງ)

ພຸດຟ້າສວ່າງແຈ້ງເຮືອງຮຸ່ງ ປະກາຍກອງ ພຸ້ນເຍີ
ຮອງຮອງໃສສ່ອງງາມ ເງົາຊ້າຍ
ຟັງຍິນຍູງຫອງຮ້ອງເຮສຽງ ສູນເຖື່ອນ
ພຸວະນາດໜ້ອມຍິນຮ້າຍ ຮຸ່ງນາງ ໆ
ຜູງເພື່ອນພ້ອມນອນເນີ້ງ ນິດທາ
ດິແກ່ເໝືອຍຮ່ວາຍຮ້າຍອດຊາງ ຍິນຍ້ອຍ
ລອນວ່າໃສຍາເຍື້ອນເທຫອງ ທັງແປບ
ເມັງບື້ງ ເໝືອນພີ່ເຈົ້າຕື່ອລ້ອຍຊອນໃກ້ ກ່ອນອອນ ໆ

ຢັ່ນວ່າຊະແລບເນື້ອເພີ້ງພີ່ ປະຊິດຊິນ
ເໝືອນດັ່ງໂສນຄີງຄອນຮາບຮຽງ ອິນໜ້າ
ເທທອງເບື້ອງແຂນກົມ ເຍື້ອນໃກ້
ຢັ່ນວ່າ ອູ້ມກອດແກ້ວກ່ຳພ້າຈິງແຈ້ງ ດັ່ງເລີງ ໆ
ຂໍຮະໃໝ່ເນື້ອສວ່າຍລູບ ເກສາ
ຮັນເພີ້ງຊຸກຕື່ນຈອນ ໃຈຂ້ອງ
ວິນຍານຮ້ອນກ່ຳແດ ດານສວາດ
ເຍື້ອນຂວັ້ນຊ້ອງຊິນເສື້ອ ສວ່າງກະສັນ ໆ

ດິແກ່ ດາວດາດຂ້ອນແຜງຝ່າຍ ທັກຂີນ
ວາໂຍຍັ້ນເບີກບິນ ດາວຊ້າຍ

| | | | |
|---|---|---|---|
| | ສວາໆກ້ອງໂກກິນ | ແກມໄກ່ | |
| | ພຣະບາດໝ້ອມຍິນຮ້າຍ | ຮຸ່ງຈອນ | ໆ |
| | ເຈົ້າຖ່າຍຜ້າລູກອາບ | ສິງສີ | |
| | ຊຸບຄວາມຈັດຄາດປະໂຄນ | ຄຽນຊ້າງ | |
| | ຝູງຄິວຍ້າຍສາລີ | ລຽນແຈກ | |
| | ນ້ຳລູບປີ້ອມືລ້າງ | ລອດສເອີຍ | ໆ |
| | ອິລະແນກເນື້ອໃຕ້ຮຸ່ງ | ປະລິງນາງ | |
| ຈຽມແຕ່ | ມາຊິນສອງບໍ່ຫ່ອນເຄີຍ | ຄຳຮ້ອນ | |
| | ທິນທອງກົ້ນກອຍອາງ | ໄອ້ຢ່າ | |
| | ເຮວເຮ່ງຄ້ອນຮັບຄ້ອງ | ປ່າວໄປ | ໆ |
| | ສວ່າໆຍ້າຍແຜນທອກ | ດາວແຂງ | ພຸ້ນເຢີ |
| ບາໄທ | ຜາຍພານຄຳຄ່ອຍທິງ | ຄິງຄ້ອນ | |
| | ທວຍແຄງຊູ້ເອົາສວານ | ຫຽມທຸ່ນ | |
| | ຮັກຮູບງ້ອນຊິນເສື້ອ | ສວ່າງວອນ | ໆ |
| | ວິບາກໂອ້ໄກອຸ່ນ | ອິກກະສັນ | |
| | ຮອງໆຈີບຈອດນາງ | ໃນຕ້ອງ | |
| ເທື່ອນີ້ | ໄກກັນກີ່ປີເດືອນ | ຮູ້ຊ່າວ | |
| ມີຮ່າງ | ຄອນໂຄກໄອ້ດຽວນ້ອງ | ຕາກທິງ ຊ່ານລື | ໆ |
| ເມື່ອນັ້ນ | ຄ່າວາໆແສ້ຊະຄ້ອນເລີຍລ່ອງ | ດີງງອນ | |
| | ແສນດອຍດີງລະດາດບ້າງ | ເຂົາຂັ້ນ | |

ຄຽງທີ່ ນາໄກຊູ້ຮານຮຽນ ແຮນປ່າ
ເມີນຊ່ອງຊັ້ນມືໄມ້ ມືດຕຸ້ມ ໆ

ບໍ່ເຕັນ ພະຫຼີງລ້ອຍຍອຍຍອດ ຍັງຕາ ພູ້ນເຍີ
ອາໂຍລຽງດອກຮ້າງ ໂຮຍເຮົາ
ຟັງຍິນ ດາເວົາຮ້ອງເຮຽງ ສູນຄູ່
ຄຶດພີ່ເຈົ້າສິນລ້ານ ລອດດອນ ໆ

ຖ້າປີ້ ບຸນບໍ່ພ້ອມເຄີຍຄູ່ ຮຽງສອງ ແລບໍ
ກອຍຄີງນອນແຄ່ດີງ ດອນຮ້າ
ດີແກ່ ຫີນໆນ້ຳພານຕາ ລົນແກ່ວງ
ຟອງເບົ່າບ້າເພືອນຟັ້ງ ຟາດຕີນ ໆ

ແພ່ງໆເຫຼື້ອມສູນສ່ອງ ອູໄຫ
ຍິງເຫັນ ຕີນດອຍດີກດອກຈານ ຈູນແຈ້ງ
ຟັງຍິນ ຊະນີຮ້ອງແຄນດີງ ວ້ອນອ່ອນ
ເອີ້ນດັ່ງ ນ້ອງຈາກເຈົ້າຮຽນຮ້ອງ ຮຽກຂວັນ ໆ

ບໍ່ເຫັນ ຄ້າຍຍ່ອນໄມ້ເຮືອງເຮື່ອ ຮີນຕາ ພູ້ນເຍີ
ນາລາລຽນແຄ່ກີ ແກນກ້ານ
ເລັ້ງດູ ນາລາພ້ອມສິນພະລີ ງ້ອງ່າ
ຄຶດພີ່ຊູ້ບີງໝ້າ ໝ່ອງຫຼ້າ

ຊະພາດພ້ອມທອງເທດ ຈອງຈານ
ຮັ້ງຮອນດີກດອກຫອມ ໂຮຍເຮົາ

| | | | |
|---|---|---|---|
| ຄຶດເຖິງ | ສິຄານຄຸ້ມໃຈອອນ | ແອບມາກ | |
| | ນ້ອງໃຄ່ໄດ້ຊອນເກົ້າ | ພີ່ຕິນ | ໆ |
| ຄຽງດທີ່ | ມາຈາກແກ້ວກູຢູ່ | ຊຽງເຄືອ | ກີ່ເດ |
| | ຍິນກາງອິນຈິ່ນຈິງ | ປານບ້າ | |
| ເມື່ອນັ້ນ | ແພນເຜືອເທົ້າພະລານໄພ | ພຽງຮາບ | |
| ທ້າວກໍ | ແປປີ້ນໜ້າຫຼຽວຊູ້ | ຊ່ວໄກ | ໆ |
| | ຫຸກດາບຕ້ອຍຊ່ອງຊີ່ | ຊິນບານ | ພຸ້ນເຍີ |
| | ອີໄຣຈັບກິ່ງຮັງ | ເຣຮ້ອງ | |
| | ພຸທອນທ້າວດາບກະຕາຍ | ຕິວຕອດ | |
| | ມະໂນຄຽງດແຄັນຫີນຫ້ອງ | ປ່ຽວໃນ | ໆ |
| ລືຈັກ | ໄປຮອດລ້ຳລຸງຊື່ມ | ຊິມພາຍໄດ້ເດ | |
| ເພີງທີ່ | ຄືນໄຊສາວສ່ວງກະສັນ | ເສັງໄຂ້ | |
| ເມື່ອນັ້ນ | ນາຍຄວາມພ້ອມບາເຈືອງ | ຈອມຮາດ | |
| ຄອນທີ່ | ຂ້າມປ່າໄມ້ຍາມແລ້ວ | ຈິ່ງຄືນ ຊອບດາຍ | ໆ |
| ຖ້ານັ້ນ | ແອບຖ່ອຍຮ້ອນຮັດບາດ | ພຸບານ | |
| ບັດນີ້ | ຮິມອາລັຍຍ່ອມຍັງ | ຍິນຂ້ອງ | |
| ເມື່ອນັ້ນ | ເຮົ້ງໂຍຍ້າຍພານຄຳ | ຄືນໃຍ່ | |
| | ຝູງພວກພ້ອງເຊົ້ງຊ້ອຍ | ຍີ່ເຍັງ | ໆ |
| | ພວງໃສ່ຖ້ອຍເອີ້ນອ່ອນ | ແອງຄອນ | |
| ບັດນີ້ເຈືອງກໍ | ອາງເຮົາເສັງພາກຄືນ | ໄຊຊູ້ ແລທ່ານ | |

ເຮົາຄ່ອຍ ພາກັນດັ້ນລວງພອນ ເລີຍລ່ວງ ເຮອເຖີນ
ເມື່ອນັ້ນ ສອງຢູ່ຟູ້ຟັງຮ້າຍ ຮີບຄືນ ໆ
ພົ້ນຂ່ອງກວ້າງຫຼາຍທ່າ ວັງທອງ
ສະພັ້ນແພນງ່າງເງີຍ ສູນຕັ້ງ
ສະບອງໜ້າບາເຈືອງ ຄືດຄຽດ
ເຈົ້າຍີ່ຍັ້ງເຊົາຊ້າງ ຢູ່ຟັງ ໆ

ຄອນຜຽດຖ້ອຍແຂຊອບ ຊັກຄະດີ
ພຸທອນ ຄືນເມືອງຫຼັງສ່ອນໄທ ທານດ້ານ
ດູທີ່ ບາລີຜູ້ຜິນຄອນ ຄືດມາກ ເຮອເຖີນ
ບໍ່ໄຄ່ ຜ້າຍແຜ່ນລ້ານໄປໄດ້ ເພື່ອນພິນ ຊ່ານລື ໆ

ດູສ່ຳຂ້າຜຸ່ງຍາກ ມີຄືນງ່າຍແລ້ວ
ເປັນຄິນກິວກຽດອັນ ອາຍໜ້າ
ຄອນພືນຂໍ້ແຂແຂງ ຕ້ານແກ່
ເມື່ອນັ້ນ ຂ້າທ່ານເຈົ້າທອງລ້ານ ລວດດອນ ໆ

ຜູ້ວ່າ ຮັກພີ່ພັບພົ້ນແຕ່ ໃຈຈິງ ຊອບດາຍ
ພຸກອນ ຄືນເມືອຫຼັງສ່ອນອວາຍ ລຸງປ້າ
ຄັນວ່າ ປະສົງສີລ້ອຍໃສສັນ ງ້ອມມ່ອນ ຄອນແລ້ວ
ຄືດອອກພັບພາຍໜ້າ ຢ່າໄລ ຊອບເບີ ໆ
ດັ່ງນັ້ນ ແກວປ່ອນຊ້າງຊີງເກີບ ກອບບົວ ມາກແລ້ວ
ເທື່ ຮາວີໃສສິ່ງສາວ ເປັນຂ້ອຍ

ແຮງຍ່ອນ ປະສົງທຳແທ້ທຽມຕາມ ຄະດີໂລກ

ບໍ່ໂລບລ້ຽວລອງຊັ້ນ ແງ່ງອນ ໆ

ໃຜໂລກໄຮ້ລຸງອີບ ກຸບາ

ລອນຈັກ ພາງຫຼານແໜງສ່ອນອາຍ ເມືອງບ້ານ

ອັນວ່າ ໂສພາພົງງອິນຂຽນ ເຂັມແຂ່ງ

ຄອນຄ່າລ້ານຄຳສ້ອຍ ໃຊ່ປະມານ ໆ

ໃຈບໍ່ ຄຶດແຕ່ງຫ້ອງຫີນເພື່ອນ ກອຍມືວ ມາກແລ້ວ

ອັນຈັກ ລອນລາພານຢ່າຖໃນ ຂາເຈົ້າ

ທໍ່ວ່າ ຍັງກົວກ້ຳພາຍເຮົາ ກອນກິ່ງ ດີດາຍ

ເມື່ອນັ້ນ ຜູ້ທີ່ເຕົ້າຫາຍຊ້າງ ກ່ຽວເງີຍ ໆ

ອັນຈັກ ຫຽມແທບແທ້ສອງສິ່ງ ສເນຫາ ຍາກບໍ

ພຸທອນ ເລີຍພານຄຳຕ່າວປຸນ ໄປໜ້າ

ຄັບຄາເທົ້າເຄິງເຕວ ຫ້ອຍຕາດ

ດີແກ່ ຂ້າຢູ່ດ້າວດອຍແຈ້ງ ຜີ່ດຸ ໆ

ໆລໆ

## ໔ - ກອນຮ່າຍ

ກອນຮ່າຍ ແມ່ນຄຳກອນປະເພດນຶ່ງ ທີ່ນິຍົມຫຼາຍໃນໝູ່ປະຊາຊົນຄົນລາວ ບໍ່ດ່ຳຕ້ອຍນ້ອຍໜ້າກວ່າຄຳກອນປະເພດອື່ນໆ ກອນຮ່າຍນີ້ສ່ວນຫຼາຍໃຊ້ສຳລັບສູດຂວັນຫຼືເທດ ເພື່ອຄວາມວອນຊອນຊື່ນມ່ວນອັນເຈືອປົນ

ປະດ້ອຍຄຳສັ່ງສອນ ໃນຫຼັກສິນທັມແຫ່ງພຣະພຸທສາສນາ.

ຄຳວ່າ ຮ່າຍ ເຫັນຈະໄດ້ເຄົ້າມາຈາກຊະນິຮ້ອງ ແລະ ສຽງນົກເຄົ້າຮ້ອງດ້ວຍສຳນຽງ ວີ່ອອນ ທີ່ເຮົາຮຽກວ່າ ຊະນິຮ່າຍໄມ້ ຫຼືນົກເຄົ້າຮ່າຍກອນ ດັ່ງຄຳກອນໃນເຣື່ອງທ້າວຮຸ່ງບົດນຶ່ງວ່າ –

ພໍເມື່ອວັນສອດໄມ້ລົງລຸ່ມ ສຸນແສງ
ນາຍພົມມະບານໃສ່ໃຈ ຈຳໄວ້
ດີແກ່ວັນແຊງຊ້າຍພີຣກລາ ດ້ອງເດື່ອນ
ຊະນິຮ່າຍໄມ້ນອນຮ້ອງ ຮ່ຳຄອນ ໆ

ດັ່ງນີ້ ທຳນອງສູດຂວັນຫຼືທຳນອງເທດມະຫາຊາດ ຈຶ່ງຕ້ອງເອັດສຽງໃຫ້ຄືວອນດັ່ງຊະນິຮ່າຍໄມ້ແລະດ້ວຍເຫດນີ້ ຄຳກອນປະເພດນີ້ຈຶ່ງໄດ້ຮຽກວ່າ ກອນຮ່າຍ.

<u>ລັກສນະຂອງກອນຮ່າຍ</u>

ກອນຮ່າຍມີກຳນົດວັກ ໑ ຕັ້ງແຕ່ ໕ ຄຳຂຶ້ນໄປຈົນເຖິງ ໑໕ ຄຳ ການໃຊ້ສັມຜັດນັ້ນຄື ຄຳສຸດທ້າຍຂອງທຸກໆວັກ ໃຫ້ສັມຜັດກັບຄຳທີ່ ໑– ໒ ໓ ຫຼື ໔ ໃນວັກຮອງຕໍ່ໆກັນໄປທຸກໆວັກ ສ່ວນຄຳເອກຄຳໂທບໍ່ຈຳກັດ ຕົວຢ່າງດັ່ງຕໍ່ໄປນີ້:

**ກອນຮ່າຍສຳລັບສູດຂວັນ**

ສິສິ ສິດທິພຣະພອນ
ບໍວອນ ອະດິເຣກ
ອະເນກກະເຕຊາ
ໄຊຍະມັງຄະລາ

ນະຕາລິອິນັງຄະເລດ

ສາດຕະເພດພ້ອມອາຄົມ

ຂຸນບູຣົມ ປຸນແຕ່ງແລ້ວ

ໃຫ້ລູກແກ້ວ ອອກກິນເມືອງ

ຣິດທິເຣືອງທະຣົງແຫ່ນ

ມື້ປີແມ່ນນະຕາຄຸນ

ຂຸນແຖນດາແຕ່ງແລ້ວ

ໃຫ້ລູກແກ້ວ ກິ່ງລົງມາ

ເປັນອາຊາ ສືບສ້າງ

ເມືອງນິ່ງກວ້າງນາຄອງ

ຂຸນເຈືອງປອງເປັນໂຊກ

ໃຕ້ໂລກຍ່ອມ ລືຊາ

ທະຣົງອານຸພາວາ ຍອດຍິ່ງ

ເປັນເຈົ້າຈອມນິ່ງ ເມືອງແມນ

ແສນເມືອງມາຊ່ອຍຄ້ຳ

ມື້ປີ ຊ້ຳຄູນຄົງ

ພຍາຈັກທະຣົງທິສຣາດ

ພານນະນາດ ເລົ່າແຖມພອນ ໆລໆ

ຂ– ກອນຮ່າຍສຳລັບເທດ

ເຣື່ອງນະຕາຊາດບັ້ນກັນຕາຊາລີຣ່ຳໄຣ

ກຸມາຣາ ອັນອ່າ ເຈົ້າກຸມມານທັງສອງ

ປະນຸມຈິດຕາ ປ່ອຍຫູດຊຸດອອກຈາກນີພານ ຂາບໍ່ຊ້າ ຂວ່າງໜ້າດີ່ລາລາ
ນ້ຳຕົກຍ້ອຍຍົ່ງ ໄຫຼຫຼັ່ງອອກຍິນນະນາ

ປັກການຸງ ເຂົ້າໄປສູ່ເວດສັນດິອິຣະກະສັດ ອັສສັດຖະປັດຕັງ ນີຕິນອັນສະ
ບັ້ນສົ້ນສາຍໄປມາ ເໝືອນດັ່ງໄມ້ປ່າແປ້ງອັນຍັງອ່ອນປົ່ງຣະຮ່ອນໃບບາງເກີດ
ອີນທາງພິລາດ ລົມລ່ອງພາດສາຂາ ໃຫ້ຫວັ່ນໄຫວໄປມາ ໂຣທັນດາຮ້ອງ
ໄຫ້ ໄຫວ້ພີ່ແກ່ນໄຫ້ແຫ່ງຕົນວ່າ

ຕາຕະ ຂ້າໄຫວ້ພີ່ເປັນເຈົ້າ

ສາອັນນາ ແມ່ນະທີເພື່ອຂ້າ

ແມ່ກຳພ້າຍັງທົວຣະຫຽວ

ໃນໄພຂຽວປ່າໄມ້

ປະລຸກໄວ້ພາຍຫຼັງ

ສາຍັງ ແມ່ກີຍັງຈັກມາໃນກາລະຍາມເຢັນ

ຂໍໃຫ້ ເພື່ອຂ້າໄດ້ເຫັນໜ້າ ແມ່ກຳພ້າກິນນົມ

ພໍໃຫ້ແມ່ໄດ້ຊົມ ສິງຈູບ

ພໍໃຫ້ແມ່ໄດ້ລູບໄລ້ອາບສົງສີ

ນີທັງສູຣະພີພວງເພດ

ປະດັບເກດເກສາ

ກິນຜະລາມູນມາກ

ລູກໄມ້ຫຼາກອັນພາ

ສາອັນນາ ຂໍໃຫ້ເພື່ອຂ້າໄດ້ເຫັນໜ້າ ແມ່ກຳພ້າຍາມດຽວກ່ອນບໍ່ເປັນສັງ
ອະຍັງ ພຣາມໂນ ອັນວ່າ ພຣາມຜູ້ນີ້

ວິກີເນຍຸອະວາ   ແມ່ນວ່າມັນຈັກຂາຍກໍຈົ່ງໃຫ້ມັນຂາຍແລະເງິນຄຳ   ແລະ

ຊ້າງມ້າ   ຊ້າງມ້າ

ທະເນຍຸຍະວາ   ແມ່ນວ່າມັນຈັກຂ້າກໍໃຫ້ມັນຂ້າຕາມໃຈ   ທຸກອັນໃດຜອນຍິ່ງ

ອິດຊູ່ສິ່ງບໍ່ສິງກາ

ປັສສານະ   ຂໍໃຫ້ເຜືອຂ້າໄດ້ເຫັນໜ້າ   ແມ່ກຳພ້າຍານດຽວກໍຂ້າເຖີບ

ຕາຕະ   ຂ້າໄຫວ້ພໍ່ພຍາເປັນເຈົ້າ

ອະຍັງ   ພຣາມໂນ   ອັນວ່າ   ພຣາມຜູ້ນີ້

ພະລັງກະປາໂທ   ມີຜ່າຕີນອັນໃຫຍ່

ເລັບມັນໃຄ່ຫີນໜອງ

ໜັງມັນພອງຍານຢ່ອນ

ພອງຊີ້ນກ້ອນ   ຄືດັງ

ທີຄຸດຕະອຸຕໂດ   ມີຮີນສົບເບື້ອງເທິງຍາວຍື່ນ

ແຂ້ວພົ້ນລື່ນເປັນງາ

ເມື່ອມັນຈາອ້າປາກ

ນ້ຳລາຍຫາກໄຫຼດົກ

ພັຄຄະນາສະໂກ   ດັງຫັກທັງປູມໃຫຍ່

ທ້ອງມັນໃຄ່ທໍ່ໄຫໄພ

ພັຄຄະປິດຖິ   ຫຼັງມັນຂົດຄໍໂກ່ນ

ແຂວຫັກໂງ່ນຄືຜີ

ວິສະມະຈັກຂຸໂກ   ຕາບໍ່ດີນ້ອຍໃຫຍ່

ບໍ່ໃຊ້ດັ່ງຕາຄົນ   ຄືຕາແມວໂພງສັກລາດ   ທັນນະຊາດວ່າ

ແມ່ນພິຍັກໜັງໜຽວ ຫຽວໄປມາດູກລົ້ນ.

ໆ ລ ໆ

## ៥ - ກ ອ ນ ຜ ຍ າ

ຄຳວ່າ "ຜຍາ" ມາຈາກຄຳບາລີວ່າ "ປັນຍາ" ແລະຄຳສັນສະກຣິດ "ປຣັຊຍາ" ນັ້ນເອງ ຄຳວ່າປັນຍາແລະປຣັຊຍາແປວ່າ ຄວາມຮູ້ແຈ້ງ, ຄວາມຮອບຮູ້, ຄວາມສລາດຫຼັກແຫຼມແຕ່ປັດຈຸບັນນີ້ ຄຳ ປຣັຊຍາໝາຍເອົາວິຊາທີ່ກ່າວດ້ວຍຫຼັກແຫ່ງຄວາມຮູ້ແລະຄວາມຈິງ.

ຄຳກອນຜຍາສ່ວນຫຼາຍແມ່ນຄຳກອນທີ່ພວກບ່າວສາວຄິດຜຸກຂຶ້ນເວົ້າໃສ່ກັນໃນທັນທີທັນໃດແລະເປັນຄຳເວົ້າປຽບທຽບ ມີລຽນມີຄົມອັນພາໃຫ້ເກີດຄວາມນຶກຄິດຫຼືສລາດຫຼັກແຫຼມໃນການທີ່ຈະເວົ້າຕອບກັນ ດັ່ງນີ້ ຜຍາຈຶ່ງນັບວ່າເປັນບໍ່ເກີດແຫ່ງປະຕິພານ ຄື ພິບໄຫວແລະປັນຍາ.

ເນື່ອງຄຳກອນຜຍາ ເປັນຄຳທີ່ກ່າວຂຶ້ນທັນທີທັນໃດ ຕາມປັນຍາທີ່ຄິດໄດ້ໃນເວລານັ້ນ ດັ່ງນັ້ນ ຄຳກອນຜຍາ ຈຶ່ງບໍ່ມີລະບຽບແນ່ນອນ.

ສ່ວນຫຼາຍມັກເປັນກອນຜະສົມ ຄື ເອົາກາບແດ່ກອນແດ່ ຜະສົມກັນເຂົ້າໄປເປັນກອນຜຍາ ລາງເທື່ອກໍມີ ໖ ວັກ ໓ ວັກ ລາງເທື່ອກໍມີຄົບທັງ ໔ ວັກ ຄື ກອນອື່ນໆ ແຕ່ສ່ວນສຳຄັນແມ່ນສັມຜັດທີ່ນັ້ນ ຕົວຢ່າງດັ່ງຕໍ່ໄປນີ້:

- ຫາງພີ່ສ້າງ ຂໍແປັນນ້ອງບໍ່ນຳ ສານິ!

ຫາງພີ່ສ້າງ ຂໍຄຳ ນ້ອງບໍ່ໃດ່

ບາດຜູ້ບ່າວໄທໄກລ້າງ ແຕ່ຂືວໄມ້ຂີ້

ມີແຕ່ຕໍໄມ້ແດ້ ເປັນສັງບຊິຄ່ອຍຄານ ຊັ້ນບໍ່!

- ເຈົ້າຜູ້ຍາກພີ່ພ້ອນ ມັນຫາກລຸກຟາກນາ

ເຈົ້າຜູ້ຍາກພີ່ລາ ມັນຫາກລຸກຟາກນ້ຳ ກ້ານກ່ອງສເນຫາ

ບາດວ່າກາກິນແລ້ວບິນໜີຮ້ອຍໝູ່

ເຈົ້າຫາກມີພື້ນຊູ້ ຕາຂ້ອຍບໍ່ເຫັນດອກນາ,

- ນ້ອງນີ້ ປອດລ້ອຍຊ້ອຍ ສເນີອ້ອຍກາງກໍ ການກໍບໍ່ຕໍ່ ໝໍ່ນ້ອຍ

ກໍບໍ່ຊອນ ຊູ້ຊີຊ້ອນ ພິວແອ້ນ ກໍບໍ່ມີ

- ວ່າບໍ່ມີສອງຊ້ອນ ຂິນຄື້ວນ້ອງເປັນສ້ຽງມາລາ ວ່າບໍ່ມີສອງ

ຊ້ອນ ຂິນຫາສ້ຽງມາຫງ່ ຫຼື ນາງໄປດໍ່ຊູ້ແຄມຮົ້ວປ່າຫຍາກເຍົາ

- ເຈົ້າຜູ້ພູເຫຼືອຄ້າງ ອິດບິປັນນ້ອງແດ່ ນ້ອງນີ້ ມີແຕ່ຄ້າງ

ເຄືອຊິກ້ຽວກໍບໍ່ມີ.

- ວ່າບໍ່ມີເຄືອກ້ຽວ ສ້ຽງມາເປັນຍານຍ່າງ ວ່າໃຕ້ລ່າງເຈົ້າບໍ່

ກ້າງ ສ້ຽງມາໄດ້ແຫຼ່ງຄວາຍ.

- ນ້ອງນີ້ເປັນດັ່ງຈອກຢູ່ນ້ຳ ຮາກຢັ້ງບໍ່ເຖິງດິນ ໄຫຼເອີນໄປ

ເອີນມາ ໂລດບໍ່ມີເພື່ອຍຄ້າງ ອ້າຍພີ່ອິດພໍຕາຍເປັນກໍໃຄ່ໄຫຼ

ມາໃຫ້ຄ້າງແດ່ ອັນນີ້ມີແຕ່ໄຫຼຢູ່ເລື້ອຍຊິໄປຄ້າງບ່ອນຈັ່ງໃດ.

ໆລໆ

ລັກສນະດັ່ງຕົວຢ່າງທີ່ກ່າວມານີ້ ຮຽກວ່າ ກອນຜຍາ ກອນຜຍາ ດັ່ງກ່າວນີ້ບໍ່ແມ່ນແຕ່ສຳລັບໃຊ້ເວົ້າກັນສຽດສີກັນໃນທາງບ່າວສາວເທົ່ານັ້ນ ໃຊ້ເປັນຄຳສຸພາສິດສັ່ງສອນ ແລະ ໃຫ້ນຶກຄິດໄປໃນທາງການບ້ານເມືອງ

ກໍໄດ້ ດັ່ງຕົວຢ່າງຕໍ່ໄປນີ້ະ

- ກວາງກິນໝາກຂາມປ້ອມ ໄປຄາກົ້ນຂີ້ນັ້ງ ຄັນວ່ານັ້ງບໍ່ຂີ້ສາມ ມື້ກະຕາຍຕາຍ.
- ເພິ່ນວ່າຫີນແຜ່ນລ້ານ ກ້ອນໃຫຍ່ຄືຊິຫັກແຫ້ນໍ ບາດວ່າເອົາ ສະໂນບຕິດຊັ້ງຊາລັງມາໄດ້ ຜີວ່າຕາມຕາຄົວ ຄືສະໂນບຊິໜັກ ກວ່າ ຄັນແມ່ນຕາບໍ່ຄົ້ວຊິເບົາເບື້ອງຝ່າຍສະໂນ.
- ເປັນຍິງຢ່າລຸ້ຫາບຽນບ້ງແປນໂຕກາຊິຕອດກິນແລ້ວ ເຮັດໃຫ້ ເປັນດັ່ງນ້ອນໃຍທຸ້ມຕໍ່ໂຕໄວ້ເນີ.
- ອັນນຶ່ງໃຫ້ຄ່ອຍທັມນຽມພັງງ ລັກກຸບາບັກເຈົ້າ ຍາມເມື່ອບິນ ແອ່ວຍ້າຍຂາວແຈ້ງຈຶ່ງຄ່ອຍເຫັນ.

ໆລໆ

## ໗ - ກ ອ ນ ໂ ຄ ງ

ຄຳວ່າ ໂຄງ ເປັນພາສາລາວ ໝາຍເອົາ ຮ່າງ ຂອງສິ່ງຕ່າງໆ ແຕ່ຕາມທັມມະດາໝາຍເອົາຮ່າງກະດູກ ຮ່າງກະດູກມີກະດູກສັນຫຼັງເປັນ ແມ່ ແລ້ວມີກະດູກຂ້າງລຽນກັນອອກທັງສອງຂ້າງເປັນແຖວຖັນດັ່ງດຽວກັນ ກັບກອນເຮືອນອັນມີລັກສນະເປັນລະບຽບດີດັ່ງນີ້ ຄຳກອນປະເພດທີ່ແຕ່ງ ໃຫ້ມີລະບຽບເປັນແຖວຖັນດີດັ່ງໂຄງກະດູກຈຶ່ງຮຽກວ່າ ກອນໂຄງ ຫຼືໂຄງ ກອນ.

ກອນໂຄງຂອງລາວມີຫຼາຍຢ່າງ ຄື ມີໂຄງ ໒ ໂຄງ ໓ ໂຄງ ໔

ໂຄງ ໕ ໂຄງ ໗ ແລະໂຄງ ໗ ກອນໂຄງຕ່າງໆເຫຼົ່ານີ້ ແຕ່ບູຮານເພິ່ນນິຍົມໃຊ້ແຕ່ງໂສກຕ່າງໆ ດັ່ງໂສກຄ້ອງ ໂສກກອງ ໂສກປືນ ໂສກເຮືອເປັນຕົ້ນ ສ່ວນທີ່ແຕ່ງທາງການນາອົນນິແຕ່ ໂຄງ ໕ ແລະໂຄງ ໗ ສະນັ້ນຈຶ່ງຈະກ່າວແຕ່ ໒ ໂຄງ ທີ່ນີ້ ຄື:

ກ – ກອນໂຄງ ໕

ນອນໂຄງ ໕ ນີ້ໄດ້ຕົວຢ່າງມາຈາກກາບອິດຊຸນາລີ ໃນພາສາບາລີ ມີກຳໜົດ ວັກລະ ໕ ຄຳ ເປັນເກນ ໂຮມ ໔ ວັກເປັນບົດນຶ່ງ ແລະໂຄງແບບນີ້ລາວເຮົາຮຽກວ່າ ໂຄງ ໕ ດັ້ນ ມີຫຼັກເກນດັ່ງນີ້ :

໑ – ໂຄງວັກ ໑ ມີ ໕ ຄຳ ໂຮມ ໔ ວັກເປັນບົດ ໑

໒ – ຄຳສຸດທ້າຍຂອງວັກທີ່ ໑ (ຄືຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງວັກທີ່ ໓.

໓ – ຄຳສຸດທ້າຍຂອງວັກທີ່ ໒ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງວັກທີ່ ໔.

໔ – ຄຳສຸດທ້າຍຂອງວັກທີ່ ໓ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ໃນວັກທີ່ ໑ ຂອງບົດທີ່ ໒ ຕໍ່ໄປ.

໕ – ຄຳສຸດທ້າຍຂອງວັກທີ່ ໔ (ຄຳທີ່ ໕) ສັມຜັດກັບຄຳທີ່ ໑ ໒–ຫຼື ໓ ຂອງບົດທີ່ ໒ (ຕໍ່ໄປ).

ຕົວຢ່າງ

ບົດທີ່ ໑

○ ○ ○ ○ ○
○ ○ ○ ○ ○
○ ○ ○ ○ ○
○ ○ ○ ○ ○

ບົດທີ່ ໒

○ ○ ○ ○ ○
○ ○ ○ ○ ○
○ ○ ○ ○ ○

| | |
|---|---|
| ໄມ້ຄ່ອນເພື່ອ | ລົມອອນ |
| ລົມອອນພັດ | ກິ່ງລ້ອຍ |
| ຄອນຄອນໃຈ | ດ່ຳຄ້ອຍ |
| ຄຳນ້ອຍໃຜ | ບໍ່ເຕັມ ໆ |
| ນ້ຳຍ້ອຍຢາດ | ຕີນຕາ |
| ເຊັນເຊັນໄຫຼ | ຢ່າໃຄ້ |
| ກົນຊຽດອາ | ອື່ງຮ້ອງ |
| ທ່ານໃຫ້ຄ່ວາ | ຟັງສຽງ ໆ |
| ນ້ອງເນືອງລຸ່ນ | ຮັກໃຍ |
| ສອງຊຽງຕາກ | ເພິ່ງຮູ້ |
| ກົກໄກວໃບ | ຊີ້ຄ້ອນ |
| ນ້ອງພ້ອມພີ່ | ອອນກະສັນ ໆລໆ |

( ຈາກເຣື່ອງທ້າວຮຸ່ງ )

ໂຄງແບບນີ້ເມື່ອຖອດອອກຮຽງໃໝ່ ຄື ເອົາວັກທີ່ ໑ ຮຽງຕໍ່ວັກທີ່

໗ ແລະເອົາວັກທີ່ ໖ ຮຽງ ກັບວັກ ທີ່ ໔ ແລ້ວກໍເປັນໂຄງ ໕ ທັມນະ ໑໑ ດັ່ງນີ້:

ກ- ວັກ ໑ ກັບວັກ ໗

ໄມ້ຄ່ອນເພື່ອ ລົມອອນ
ຄອນຄອນໃຈ ຕໍ່ຄ້ອຍ
ບົວຍ້ອຍຢາດ ດິນຕາ
ກິບຂຽວຂອງ ອິ່ງຮ້ອງ
ນ້ອງເມືອງລຸ່ມ ຮັກໃຍ
ກິກໄກວໃບ ຊີ້ຄ້ອນ

ຂ- ວັກ ໖ ກັບວັກ ໔

ລົມອອນພັດ ກິ່ງລ້ອຍ
ຄຳນ້ອຍໃຜ ບໍ່ເຫັນ
ເຊັນເຊັນໃຫຼ ຕ່າໃຄ້
ທ່ານໃຫ້ຄວ່າ ຟັງສຽງ
ສອງຊຽງຕາກ ເພິ່ງຮູ້ ໆ

ຄ- ກອນໂຄງ ກ ຫຼື ໂຄງນະຕາລິນຫຸມາລີ

ໂຄງ ກ ນີ້ເຫັນຈະໄດ້ແບບຢ່າງມາຈາກ ກາບນະຕາລິນຫຸມາລີ ດັ່ງນັ້ນຈຶ່ງຮຽກວ່າ ໂຄງນະຕາລິນຫຸມາລີ ຫຼື ໂຄງ ໔ ສຸພາບ ກໍມີຫຼັກເກນແຕ່ງການແຕ່ງໂຄງແບບນີ້ມີດັ່ງນີ້:

໑– ໂຄງບົດນີ້ມີ ໔ ວັກ ໑–໒–໓ ມີວັກລະ ໗ ຄຳ ແຕ່ວັກທີ່ ໓ ຈະ
ຕື່ມສ້ອຍທ້າຍອີກ ໒ ຄຳກໍໄດ້ ສ່ວນວັກທີ່ ໔ ມີ ໙ ກໍ ໂຮມ ໔
ວັກ ມີ ໓໐ ຄຳ.

໒– ໃນຄຳໂຄງ ໓໐ ຄຳນີ້ມີຄຳປະຈຳບ່ອນຢູ່ ໑໐ ຄຳ ຄື ຄຳໂທ ໔
ແລະຄຳເອກ ໖ ດັ່ງແຜນດັ່ງໄປນີ້:

໐ ໐ ໐ ໐່ ໐້ ໐ ໐
໐ ໐່ ໐ ໐ ໐ ໐່ ໐້
໐ ໐ ໐ ໐ ໐ ໐ ໐່
໐ ໐່ ໐ ໐ ໐້ ໐່ ໐້ ໐ ໐

໓– ສັມພັດ ຄຳທີ່ ໒ ແລະວັກທີ່ ໓ ສັມພັດກັບຄຳທີ່ ໗ ຂອງວັກທີ່ ໑;
ຄຳທີ່ ໕ ຂອງວັກທີ່ ໔ ສັມພັດກັບຄຳທີ່ ໗ ຂອງວັກທີ່ ໒
ດັ່ງນີ້:



ດອກນຶ່ງເປັນສ່ຳດ້າວ ດາຣາ
ດອກບໍ່ເຫັນຫອມມາ ຮ່ອງເຮົ້າ
ດອກນຶ່ງເປັນຈອມຕາ ທັນງ່ອນ
ດອກສິ່ງໃດນັ້ນເຈົ້າ ຮ່ອນຕ້າຍ ເວທາ

ດອກນຶ່ງຫອມອ່ອນພົ້ງງ ໃນທອງ

ແດເດືອດແດແດດດອງ ເດືອດັ້ງ
ດອກບີ້ງຍ່ອມເປັນກອງ ລະນາດ
ໂຄອາດລີງລອຍຮັ້ງ ຈຶ່ງໄດ້ ເຊີຍຊົມ ໆ

ດອກບີ້ງເປັນຊາດເຊື້ອ ໃນໜອງ
ທັດບໍ່ເປັນລອນກອງ ກ່ງອກ້ານ
ດອກບີ້ງຄືວັນທອງ ທັງແທ່ງ
ທາດດອງມີໃນບ້ານ ສິ່ງນັ້ນ ລືລາຍ ໆ

( ຈາກໜັງສືເຈືອງ )

---== ຈົບ ==---